ທິດສະດີກົດໝາຍອາຍາ

(ພາກທົ່ວໄປ)

The Theory of Penal Code

(General Provision)

2023

ຄະນະຊີ້ນຳໂຄງການ

ທ່ານ ສຈ. ປອ. ຮຸ່ງເພັດ ຈັນທະວົງ	ຮອງອະທິການບໍດີ ມະຫາວິທະຍາໄລແຫ່ງຊາດ
ທ່ານ ຄຳເພັດ ສົມວໍລະຈິດ	ຮອງຫົວໜ້າ ອົງການໄອຍະການປະຊາຊົນສູງສຸດ
ທ່ານ ບຸນຂວາງ ທະວີສັກ	ຮອງປະທານ ສານປະຊາຊົນສູງສຸດ
ທ່ານ ເກດສະໜາ ພົມມະຈັນ	ຮອງລັດຖະມົນຕີກະຊວງຍຸຕິທາ

ຄະນະບໍລິຫານງານໂຄງການ

ທ່ານ ຮສ. ປອ. ວຽງວິໄລ ທ່ຽງຈັນໄຊ ຄະນະບໍດີ
ຄະນະນິຕິສາດ ແລະ ລັດຖະສາດ
ມະຫາວິທະຍາໄລແຫ່ງຊາດ

ທ່ານ ບົວລີ ເພັດມີໄຊ	ຫົວໜ້າກົມຕິດຕາມ ກວດກາການດຳເນີນຄະດີແພ່ງ, ອົງການໄອຍະການປະຊາຊົນສູງສຸດ
ທ່ານ ຈັນທະລີ ດວງວິໄລ	ຜູ້ພິພາກສາອາວຸ�โສ, ສານປະຊາຊົນສູງສຸດ
ທ່ານ ນະລິງລິດ ນໍລະສິງ	ຫົວໜ້າຫ້ອງການ, ກະຊວງຍຸຕິທາ

ຜູ້ເຂົ້າຮ່ວມໃຫ້ຄຳເຫັນຝ່າຍລາວ

ທ່ານ ສຈ. ເກດ ກຽດຕິສັກ	ທີ່ປຶກສາກົດໝາຍອາວຸໂສ
ທ່ານ ສຈ. ດາວອນ ຫວ່າງວິຈິດ	ທີ່ປຶກສາກົດໝາຍອາວຸໂສ

ຜູ້ເຂົ້າໃຫ້ຄຳເຫັນຝ່າຍຍີ່ປຸ່ນ

Prof. Dr. Makoto IDA	Chuo University Law School
Mr. Hayato YAOITA	JICA expert
Mr. Yoshiyuki MAEDA	JICA expert

ຄົ້ນຄ້ວາຮຽບຮຽງໂດຍ ກຸ່ມຄົ້ນຄ້ວາປະມວນກົດໝາຍອາຍາ

ທ່ານ ອຈ. ປທ. ແສງທະວີ ອິນທະວົງ	ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ
ທ່ານ ອຈ. ປທ. ກິດຕິສັກ ບຸດສາແສງ	ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ
ທ່ານ ປທ. ພອນໄຊ ປະພັດສະລາງ	ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ
ທ່ານ ເຂົ້ງຄຳ ສີຫາລາດ	ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ
ທ່ານ ປທ. ນ. ອູ່ຄຳ ໂສລະພົມ	ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ
ທ່ານ ປທ. ນ. ຈັນສີດາ ສີສຸລາດ	ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ

ທ່ານ ສຸພາສິດ ລໍວັນໄຊ	ອົງການໄອຍະການປະຊາຊົນ ແຂວງອັດຕະປື
ທ່ານ ຄຳໄພ ກຸມພົນພັກດີ	ອົງການໄອຍະການປະຊາຊົນພາກໃຕ້
ທ່ານ ທອງວັນ ແກ້ວວິໄລ	ອົງການໄອຍະການປະຊາຊົນສູງສຸດ
ທ່ານ ບຸນລ້ຳ ແສງມະນີ	ອົງການໄອຍະການປະຊາຊົນ ແຂວງວຽງຈັນ
ທ່ານ ນ. ຂັນມາລາ ແກ້ວບົວລາ	ອົງການໄອຍະການປະຊາຊົນ ນະຄອນຫຼວງວຽງຈັນ
ທ່ານ ນ. ເມັດມະນີ ວັນນະສີ	ອົງການໄອຍະການປະຊາຊົນສູງສຸດ
ທ່ານ ບຸນເຮັ່ງ ພິມມະນີວົງ	ສານປະຊາຊົນສູງສຸດ
ທ່ານ ທະນົງສັກ ຣາຊະພົນ	ສານປະຊາຊົນພາກກາງ
ທ່ານ ພອນສະຫວັນ ພວງພິດົກ	ສານປະຊາຊົນສູງສຸດ
ທ່ານ ມອນຄຳ ພັນຍານຸວົງ	ສານປະຊາຊົນສູງສຸດ
ທ່ານ ສຸລິເດດ ສໍອິນໄຊ	ສານປະຊາຊົນສູງສຸດ
ທ່ານ ພຸດສະຫວັນ ຈັນທະສິດ	ສານປະຊາຊົນສູງສຸດ
ທ່ານ ສັນຕິສຸກ ພັນທະນາໄລ	ກະຊວງຍຸຕິທຳ
ທ່ານ ກັນຫາ ມີໄຊບົວ	ກະຊວງຍຸຕິທຳ
ທ່ານ ໂຕນີ່ ແກ້ວວິໄລ	ກະຊວງຍຸຕິທຳ
ທ່ານ ນ. ຄຳພວງ ທິບພະວົງ	ສະຖາບັນຍຸຕິທຳແຫ່ງຊາດ, ກະຊວງຍຸຕິທຳ
ທ່ານ ພູວັນ ສົງຫານາດ	ສະຖາບັນຍຸຕິທຳແຫ່ງຊາດ, ກະຊວງຍຸຕິທຳ
ທ່ານ ສຸລິຍັນ ຈັນທະຈັກ	ສະຖາບັນຍຸຕິທຳແຫ່ງຊາດ, ກະຊວງຍຸຕິທຳ

ທ່ານ ນິວັນ ສົມແສງດີ	ສະພາທະນາຍຄວາມ
ທ່ານ ພັຕ. ສິງທອງ ອິນມານີ	ກະຊວງປ້ອງກັນຄວາມສະຫງົບ
ທ່ານ ຮອ. ຄຳສຸດໃຈ ຂຸນສີ	ກະຊວງປ້ອງກັນຄວາມສະຫງົບ

ຄຳນຳ

ທິດສະດີກົດໝາຍອາຍາ (ພາກທົ່ວໄປ) ເປັນໝາກຜົນແຫ່ງສະຕິປັນຍາ ແລະ ການປະກອບສ່ວນຢ່າງຕັ້ງໜ້າຂອງນັກວິຊາການລະດັບສູງທີ່ມາຈາກຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ, ອົງການໄວຍະການປະຊາຊົນ, ສານປະຊາຊົນ, ກະຊວງຍຸຕິທຳ, ສະຖາບັນຍຸຕິທຳແຫ່ງຊາດ, ກະຊວງປ້ອງກັນຄວາມສະຫງົບ ແລະ ສະພາທະນາຍຄວາມຂອງ ສປປ ລາວ ທີ່ໄດ້ປະກອບເຂົ້າເປັນຄະນະຄົ້ນຄວ້າປະມວນກົດໝາຍອາຍາຂອງໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳພາຍໃຕ້ການສະໜັບສະໜູນຂອງໂຄງການໄຈກາ (JICA) ຂອງປະເທດຍີ່ປຸ່ນທີ່ໄດ້ເອົາໃຈໃສ່ໃນການຄົ້ນຄວ້າທິດສະດີກົດໝາຍ, ລົງເກັບກຳຂໍ້ມູນ ແລະ ແລກປ່ຽນບົດຮຽນກັບນັກກົດໝາຍປະຕິບັດແລ້ວນຳມາຂຽນເປັນປຶ້ມເຫຼັ້ມນີ້ອອກສູ່ສັງຄົມ ແລະ ນຳໃຊ້ເຂົ້າໃນການປະຕິບັດວຽກງານຕົວຈິງ.

ປຶ້ມດັ່ງກ່າວແມ່ນຜົນງານທີ່ໄດ້ມາຈາກຄວາມສົນໃຈໃນການຄົ້ນຄວ້າລົງເລິກພາກທົ່ວໄປຂອງປະມວນກົດໝາຍອາຍາເປັນຕົ້ນແມ່ນມາດຕາ 5, ມາດຕາ 8, ມາດຕາ 9, ມາດຕາ 12, ມາດຕາ 14, ມາດຕາ 22, ມາດຕາ 23, ມາດຕາ 24, ມາດຕາ 26, ມາດຕາ 27, ມາດຕາ 28, ມາດຕາ 29, ມາດຕາ 30, ມາດຕາ 31, ມາດຕາ 36 ແລະ ມາດຕາ 37 ຂອງປະມວນກົດໝາຍອາຍາສະບັບເລກທີ 26/ສປຊ, ລົງວັນທີ 17 ພຶດສະພາ 2017 ເພື່ອໃຫ້ເຂົ້າໃຈເນື້ອໃນທິດສະດີຂອງກົດໝາຍອາຍາໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມຫຼັກວິຊາການ. ຄະນະຄົ້ນຄວ້າປະມວນກົດໝາຍອາຍານອກຈາກໄດ້ນຳສະເໜີທິດສະດີກົດໝາຍອາຍາແລ້ວຍັງໄດ້ສ້າງເປັນຮູບແບບຄຳຖາມ-ຄຳຕອບຂຶ້ນມາເພື່ອການສຶກສາຄົ້ນຄວ້າ ແລະ ລະດົມຄຳຄິດ

ຄຳເຫັນຂອງບັນດານັກກົດໝາຍທີ່ເຮັດວຽກງານຕົວຈິງຢູ່ທ້ອງຖິ່ນ, ຢູ່ພາຍໃນປະເທດ ແລະ ການເຄື່ອນໄຫວຝຶກອົບຮົມແລກປ່ຽນບົດຮຽນກັບອາຈານທີ່ສອນກົດໝາຍອາຍາຈາກປະເທດຍີ່ປຸ່ນ, ຄຳຄິດຄຳເຫັນຂອງຊ່ຽວຊານປະຈຳໂຄງການໄຈກາ (JICA) ແລະ ກອງປະຊຸມແລກປ່ຽນຄຳຄິດຄຳເຫັນໃນແຕ່ລະຄັ້ງຈົນກາຍເປັນປຶ້ມທິດສະດີກົດໝາຍອາຍາເຫຼັ້ມນີ້ອອກມາ.

ປຶ້ມທິດສະດີກົດໝາຍອາຍາ (ພາກທົ່ວໄປ) ເຫຼັ້ມນີ້ຈຶ່ງເປັນປະໂຫຍດ ແລະ ເໝາະສົມແກ່ຜູ້ທີ່ສົນໃຈສຶກສາທິດສະດີກົດໝາຍອາຍາບໍ່ວ່າຈະເປັນນັກຄົ້ນຄວ້າ, ນັກວິຊາການ, ນັກກົດໝາຍປະຕິບັດ, ນັກສຶກສາ ແລະ ຜູ້ທີ່ສົນໃຈຢາກສຶກສາກົດໝາຍອາຍາ. ພ້ອມກັນນີ້ກໍຫວັງຢ່າງຍິ່ງວ່າຈະໄດ້ຮັບຄຳຕຳນິຕິຊົມຈາກບັນດາທ່ານເພື່ອເປັນປະໂຫຍດໃນການປັບປຸງແກ້ໄຂໃນຕໍ່ໜ້າ.

ຄະນະຄົ້ນຄວ້າຂໍສະແດງຄວາມຂອບໃຈຢ່າງສູງມາຍັງລັດຖະບານຂອງ ສປປ ລາວ ແລະ ລັດຖະບານຂອງປະເທດຍີ່ປຸ່ນ, ອົງການໄຈກາ (JICA) ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງທີ່ໄດ້ໃຫ້ການສະໜັບສະໜູນ, ເອົາໃຈໃສ່ຊ່ວຍເຫຼືອຈົນສາມາດຂຽນປຶ້ມທິດສະດີກົດໝາຍອາຍາເຫຼັ້ມນີ້ອອກມາຈົນປະສົບຜົນສຳເລັດ.

ຮອງອະທິການບໍດີ ມະຫາວິທະຍາໄລແຫ່ງຊາດ
ຄະນະຊີ້ນຳໂຄງການ

ສຈ.ປອ ຮຸ່ງເພັດ ຈັນທະວົງ

ສາລະບານ

ເນື້ອໃນ ໜ້າ

ບົດທີ 1 ການຕີຄວາມໝາຍຂອງກົດໝາຍອາຍາ..... 1
ບົດທີ 2 ການກະທຳ ແລະ ຜົນຂອງການກະທຳໃນກົດໝາຍອາຍາ 7
ບົດທີ 3 ສາຍພົວພັນເຫດ ແລະ ຜົນ (ອົງປະກອບດ້ານພາວະວິໄສ)..... 13
ບົດທີ 4 ກະກຽມໃຫ້ແກ່ການກະທຳຜິດ ແລະ
ຄວາມພະຍາຍາມກໍ່ການກະທຳຜິດ 29
ບົດທີ 5 ການເລີກລົ້ມການກະທຳຜິດດ້ວຍຄວາມສະໝັກໃຈ..... 42
ບົດທີ 6 ການປ້ອງກັນຕົວ 48
ບົດທີ 7 ການກະທຳໃນສະພາວະທີ່ຈຳເປັນ 57
ບົດທີ 8 ຄວາມຍິນຍອມຂອງຜູ້ຖືກເສຍຫາຍ 63
ບົດທີ 9 ຫຼັກການໃຫ້ລົງໂທດແຕ່ການກະທຳຜິດໂດຍເຈດຕະນາ
ເປັນພື້ນຖານ 69
ບົດທີ 10 ການກະທຳຜິດໂດຍເຈດຕະນາ 77
ບົດທີ 11 ການກະທຳຜິດໂດຍຜິດພາດ 86
ບົດທີ 12 ການຮ່ວມກັນກະທຳຜິດ 95
ບົດທີ 13 ຂອບເຂດການນຳໃຊ້ກົດໝາຍອາຍາທາງດ້ານພື້ນທີ່..... 104
ບົດທີ 14 ອາຍຸຄວາມໃນການຮ້ອງຟ້ອງທາງອາຍາ 110

ບົດທີ 1
ການຕີຄວາມໝາຍຂອງກົດໝາຍອາຍາ

ການຕີຄວາມໝາຍຂອງກົດໝາຍອາຍານີ້ທຳອິດຈະຕ້ອງຕີຄວາມໝາຍຕາມຫຼັກການຂອງພາສາ ຫຼື ຕົວອັກສອນ ທັງນີ້ເນື່ອງຈາກວ່າປະມວນກົດໝາຍອາຍາທີ່ບັນຍັດເນື້ອໃນການກະທຳຜິດແຕ່ລະຢ່າງກໍລ້ວນແລ້ວແຕ່ບັນຍັດໂດຍໃຊ້ພາສາ ຫຼື ບັນຍັດຜ່ານຕົວອັກສອນອອກມາ.

ໃນການຕີຄວາມໝາຍຂອງກົດໝາຍອາຍາເຮົາຕ້ອງໄດ້ຕີຄວາມໝາຍຕາມຫຼັກການຂອງພາສາ ຫຼື ຕົວອັກສອນທີ່ໄດ້ບັນຍັດໃນກົດໝາຍອາຍານັ້ນກ່ອນ, ໝາຍຄວາມວ່າກົດໝາຍອາຍາທີ່ບັນຍັດຂຶ້ນນັ້ນຄຳສັບຕາມຕົວອັກສອນມັນສື່ຄວາມໝາຍເຖິງຫຍັງ ດັ່ງກໍລະນີຕົວຢ່າງຂ້າງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 1. A ໄປກິນເຂົ້າຢູ່ຮ້ານອາຫານແຫ່ງໜຶ່ງ. ຫຼັງຈາກກິນເຂົ້າແລ້ວໆ ຈຶ່ງຮູ້ວ່າຕົນເອງລືມກະເປົ່າເງິນ. A ຄິດຈະຫຼົບໜີອອກຈາກຮ້ານອາຫານໂດຍຈະບໍ່ຈ່າຍເງິນຄ່າອາຫານທີ່ຕົນໄດ້ກິນແລ້ວນັ້ນ, A ລໍຖ້າຈັງວະທີ່ພະນັກງານຮ້ານອາຫານບໍ່ເຫັນແລ້ວຈຶ່ງໄດ້ຫຼົບໜີອອກຈາກຮ້ານໄປເລີຍ. A ຈະມີຄວາມຜິດທາງອາຍາຖານລັກຊັບຕາມມາດຕາ 231 ຂອງປະມວນກົດໝາຍອາຍາ ຫຼື ບໍ່ ເພາະວ່າປະມວນກົດໝາຍອາຍາມາດຕາ 231 ກຳນົດການລັກຊັບໄວ້ວ່າ: ບຸກຄົນໃດຫາກໄດ້ເອົາຊັບຂອງຜູ້ອື່ນມາເປັນຂອງຕົນໂດຍບໍ່ຖືກຕ້ອງຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນຫາສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝແຕ່ 1.000.000 ກີບ ຫາ 5.000.000 ກີບ.

ໃນກໍລະນີນີ້ເຮົາຈະເຫັນວ່າປະມວນກົດໝາຍອາຍາກຳນົດການລັກເອົາຂອງຄົນອື່ນໄປໂດຍບໍ່ຖືກຕ້ອງຈະມີຄວາມຜິດທາງອາຍານັ້ນຕ້ອງແມ່ນ "*ຊັບ*" ຂອງບຸກຄົນອື່ນ ແຕ່ສິ່ງທີ່ຜູ້ກະທຳລັກເອົາຂອງຄົນອື່ນໄປໂດຍ

ບໍ່ຖືກຕ້ອງ ຫຼື ລັກເອົາສິ່ງທີ່ຜູ້ອື່ນບໍ່ອະນຸຍາດໃຫ້ເອົາໄປນັ້ນບໍ່ແມ່ນຊັບແຕ່ຢ່າງໃດ ແຕ່ແມ່ນຜົນປະໂຫຍດຄືບໍ່ໄດ້ຈ່ຍເງິນຄ່າອາຫານທີ່ຕົນໄດ້ກິນໄປແລ້ວນັ້ນ. ການລັກເອົາຜົນປະໂຫຍດຂອງຄົນອື່ນໄປ ປະມວນກົດໝາຍອາຍາບໍ່ໄດ້ກຳນົດເປັນການກະທຳຜິດໄວ້ແຕ່ຢ່າງໃດ. ດັ່ງນັ້ນ, ອີງຕາມການຕີຄວາມໝາຍຕາມຫຼັກການຂອງພາສາ ຫຼື ຫຼັກການຕົວອັກສອນດັ່ງທີ່ໄດ້ກ່າວມານັ້ນເຫັນວ່າໃນກໍລະນີການລັກເອົາຜົນປະໂຫຍດຈາກກໍລະນີສຶກສາຕົວຢ່າງຂ້າງເທິງນີ້ແລ້ວຈຶ່ງບໍ່ເປັນການກະທຳຜິດກົດໝາຍອາຍາຖານລັກຊັບແຕ່ຢ່າງໃດ.

ກໍລະນີສຶກສາຕົວຢ່າງທີ 2. A ໄປກິນເຂົ້າຢູ່ຮ້ານອາຫານໃນຫ້າງສັບພະສິນຄ້າແຫ່ງໜຶ່ງ. ຫຼັງຈາກກິນເຂົ້າແລ້ວ ຈຶ່ງຮູ້ວ່າຕົນເອງລືມກະເປົາເງິນ. A ຄິດຈະຫຼົບໜີອອກຈາກຮ້ານອາຫານໂດຍຈະບໍ່ຈ່ຍເງິນຄ່າອາຫານທີ່ຕົນໄດ້ກິນແລ້ວນັ້ນ, ຈຶ່ງໄດ້ຕົວະພະນັກງານຮ້ານອາຫານວ່າຈະຂໍໄປເຂົ້າຫ້ອງນ້ຳຢູ່ຂ້າງນອກແລ້ວຈະກັບມາຈ່າຍ. ພະນັກງານຮ້ານອາຫານຈຶ່ງອະນຸຍາດໃຫ້ອອກໄປແລ້ວຜູ້ກ່ຽວຢ່າງອອກຈາກຮ້ານອາຫານ, ຫຼັງຈາກນັ້ນກໍໜີໄປໂດຍບໍ່ຈ່ຍເງິນຄ່າອາຫານເລີຍ. A ຈະມີຄວາມຜິດທາງອາຍາຖານສໍ້ໂກງຊັບຕາມມາດຕາ 233 ຂອງປະມວນກົດໝາຍອາຍາ ຫຼື ບໍ່ ເພາະວ່າປະມວນກົດໝາຍອາຍາມາດຕາ 233 ກຳນົດການສໍ້ໂກງຊັບໄວ້ວ່າ: ບຸກຄົນໃດຫາກໄດ້ໃຊ້ເລ່ລ່ຽມຕົວະຍົວະຫຼອກລວງດ້ວຍວິທີໃດກໍຕາມ ເພື່ອໃຫ້ຜູ້ອື່ນເອົາຊັບໃຫ້ຕົນຈະຖືກລົງໂທດຕັດອິດສະລະພາບແຕ່ສາມເດືອນຫາສາມປີ ແລະ ຈະຖືກປັບໃໝແຕ່ 5.000.000 ກີບ ຫາ 20.000.000 ກີບ.

ກໍລະນີດັ່ງກ່າວນີ້ກໍຄືກັນກັບກໍລະນີສຶກສາຕົວຢ່າງທີ 1 ປະມວນກົດໝາຍອາຍາກຳນົດການໃຊ້ເລ່ລ່ຽມຕົວະຍົວະຫຼອກລວງດ້ວຍວິທີໃດກໍຕາມເພື່ອໃຫ້ຜູ້ອື່ນເອົາໃຫ້ຕົນນັ້ນຕ້ອງແມ່ນ "*ຊັບ*" ແຕ່ສິ່ງທີ່ຜູ້ກະທຳໃຊ້

ເລ່ລ່ຽມຕົວະຍົວະຫຼອກລວງເອົານີ້ບໍ່ແມ່ນຊັບແຕ່ຢ່າງໃດ ແຕ່ແມ່ນຜົນປະ�โຫຍດຄືບໍ່ໄດ້ຈ່ຍຄ່າອາຫານທີ່ຕົນໄດ້ກິນໄປແລ້ວນັ້ນ. ການໃຊ້ເລ່ລ່ຽມຕົວະຍົວະຫຼອກລວງເອົາຜົນປະ�โຫຍດຂອງຄົນອື່ນໄປ, ປະມວນກົດໝາຍອາຍາບໍ່ໄດ້ກຳນົດເປັນການກະທຳຜິດໄວ້ແຕ່ຢ່າງໃດ. ດັ່ງນັ້ນ, ອີງຕາມການຕີຄວາມໝາຍຕາມຫຼັກການຂອງພາສາ ຫຼື ຫຼັກຂອງຕົວອັກສອນດັ່ງກ່າວແລ້ວ ໃນກໍລະນີການໃຊ້ເລ່ລ່ຽມຕົວະຍົວະຫຼອກລວງເອົາຜົນປະ�โຫຍດຕາມກໍລະນີຕົວຢ່າງຂ້າງເທິງນີ້ຈຶ່ງບໍ່ເປັນການກະທຳຜິດກົດໝາຍອາຍາຖານສໍ້ໂກງຊັບແຕ່ຢ່າງໃດ.

ເຖິງຢ່າງໃດກໍຕາມຕົວອັກສອນທີ່ບັນຍັດໄວ້ໃນປະມວນກົດໝາຍອາຍານັ້ນບາງກໍລະນີກໍບໍ່ສາມາດບັນຍັດຄວບຄຸມໄດ້ທຸກເນື້ອໃນທີ່ກົດໝາຍອາຍາຕ້ອງການຢາກຈະສື່ເຖິງຄວາມໝາຍ ແລະ ຈຸດປະສົງທີ່ແທ້ຈິງຂອງກົດໝາຍໄດ້. ການຕີຄວາມໝາຍຕາມຕົວອັກສອນຈຶ່ງບໍ່ພຽງພໍທີ່ຈະຊອກຫາເຈດຈຳນົງທີ່ແທ້ຈິງຂອງກົດໝາຍອາຍາໄດ້. ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນຈະຕ້ອງໄດ້ຕີຄວາມໝາຍຕາມເຈດຕະນາລົມຂອງກົດໝາຍຈຶ່ງຈະສາມາດເຂົ້າໃຈເຖິງຄວາມໝາຍທີ່ແທ້ຈິງທີ່ກົດໝາຍອາຍານັ້ນໄດ້.

ການຕີຄວາມໝາຍຕາມເຈດຕະນາລົມຂອງກົດໝາຍນັ້ນໝາຍເຖິງການພິຈາລະນາຫາຄວາມມຸ່ງໝາຍທີ່ແທ້ຈິງຂອງປະມວນກົດໝາຍອາຍາທີ່ຕ້ອງການປົກປ້ອງ ແລະ ຄຸ້ມຄອງມາປະກອບການຕີຄວາມໝາຍດັ່ງກໍລະນີສຶກສາຕົວຢ່າງຂ້າງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 3. A ມີຄວາມຄຽດແຄ້ນໃຫ້ B ທີ່ເປັນນັກສຶກສາຍິງທີ່ອາໄສຢູ່ອາພາດເມັ້ນຫ້ອງຂ້າງກັບຫ້ອງຂອງຕົນ ແຕ່ຍ້ອນ B ເຮັດເມີນເສີຍ ແລະ ເຢັນຊາຕໍ່ຕົນ, ຈຶ່ງໄດ້ໄປປ່ອຍນົກທີ່ B ລ້ຽງໄວ້ຢູ່ກົງໃຫ້ບິນໜີໄປ. A ຈະມີຄວາມຜິດຖານທຳລາຍ ຫຼື ເຮັດໃຫ້ຊັບເປ່ເພໂດຍເຈດຕະນາຕາມມາດຕາ 236 ຫຼື ບໍ່ ເພາະວ່າປະມວນກົດໝາຍອາຍາ

ມາດຕາ 236 ກຳນົດການທຳລາຍ ຫຼື ການເຮັດໃຊຊັບເປ່ເພໂດຍເຈດຕະນາໄວ້ວ່າ: ບຸກຄົນໃດຫາກໄດ້ທຳລາຍ ຫຼື ເຮັດໃຫ້ຊັບຂອງຜູ້ອື່ນເປ່ເພໂດຍເຈດຕະນາດ້ວຍວິທີ ຫຼື ຮູບການໃດກໍຕາມຈະຖືກລົງໂທດຕັດອິດສະລະພາບແຕ່ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝແຕ່ 3.000.000 ກີບ ຫາ 15.000.000 ກີບ.

ຖ້າເຮົາຕີຄວາມໝາຍຕາມຫຼັກການຂອງພາສາ ຫຼື ຕົວອັກສອນ ເຮົາຈະເຫັນວ່າການທຳລາຍໝາຍເຖິງການເຮັດໃຫ້ສິ່ງໃດສິ່ງໜຶ່ງສູນຫາຍໄປ ຫຼື ເຮັດໃຫ້ສິ່ງນັ້ນສູນເສຍຮູບລັກສະນະເດີມຂອງມັນໄປຈົນບໍ່ສາມາດຮັກສາມູນຄ່າ ຫຼື ລາຄາຂອງສິ່ງນັ້ນໃຫ້ເໝືອນເດີມຄືເກົ່າໄດ້ ແລະ ຊັບໝາຍເຖິງວັດຖຸສິ່ງຂອງທຸກຢ່າງທີ່ມີຮູບຮ່າງຊຶ່ງປະກອບດ້ວຍສິ່ງທີ່ມີຊີວິດ ແລະ ບໍ່ມີຊີວິດ. ການທຳລາຍຊັບຈຶ່ງໝາຍເຖິງການເຮັດໃຫ້ສິ່ງຂອງຕ່າງໆ ທີ່ກ່າວມານັ້ນສູນຫາຍໄປ ຫຼື ສູນເສຍຮູບລັກສະນະເດີມຂອງສິ່ງນັ້ນໄປ ຊຶ່ງຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງຊັບບໍ່ສາມາດຄອບຄອງ ຫຼື ຫາຜົນປະໂຫຍດຈາກຊັບນັ້ນຕໍ່ໄປໄດ້ອີກ. ການປ່ອຍນົກໃຫ້ໜີໄປເປັນການເຮັດໃຫ້ຜູ້ເປັນເຈົ້າຂອງນົກເສຍສິດໃນການຄອບຄອງ, ຖ້າເອົານົກໄປຂາຍ ຫຼື ແລກປ່ຽນກັບວັດຖຸສິ່ງຂອງອື່ນກໍຈະໄດ້ຜົນປະ�โຫຍດ ຈຶ່ງເປັນການເຮັດໃຫ້ເຈົ້າຂອງນົກສູນເສຍສິ່ງທີ່ຕົນກຳລັງຄອບຄອງໄປ ແລະ ສູນເສຍຜົນປະໂຫຍດທີ່ຈະໄດ້ຮັບຈາກນົກທີ່ຕົນລ້ຽງໄວ້. ດັ່ງນັ້ນ, ຖ້າເຮົາຕີຄວາມໝາຍຕາມເຈດຕະນາລົມຂອງກົດໝາຍອາຍາແລ້ວເຮົາຈະເຫັນວ່າສິ່ງທີ່ກົດໝາຍອາຍາຕ້ອງການປົກປ້ອງ ແລະ ຄຸ້ມຄອງໃນກໍລະນີດັ່ງກ່າວແມ່ນສິດໃນການຄຸ້ມຄອງ ແລະ ຜົນປະ�โຫຍດທີ່ຈະໄດ້ຮັບຈາກການຄຸ້ມຄອງຊັບນັ້ນ, ຖ້າຖືກຄົນອື່ນປ່ອຍໄປກໍເທົ່າກັບຜູ້ເປັນເຈົ້າຂອງເສຍສິດໃນການຄອບຄອງ ແລະ ໄດ້ຮັບຜົນປະໂຫຍດຈາກສິ່ງນັ້ນຈຶ່ງມີຄວາມໝາຍດຽວ

ກັນກັບການທຳລາຍຊັບ. ດັ່ງນັ້ນ, ການປ່ອຍນົກທີ່ຄົນອື່ນລ້ຽງໄວ້ຈຶ່ງເປັນການກະທຳຜິດຖານທຳລາຍຊັບຂອງຜູ້ອື່ນນັ້ນເອງ.

ກໍລະນີສຶກສາຕົວຢ່າງທີ 4. A ມີຄວາມອິດສາ C ທີ່ອາໄສຢູ່ຫ້ອງຂ້າງກັບຕົນ ຍ້ອນ C ຢູ່ຫ້ອງເປີດແອເຢັນສະບາຍ, ສ່ວນຫ້ອງຂອງຕົນແມ່ນຮ້ອນຫຼາຍ ແຕ່ບໍ່ສາມາດຊື້ແອມາໃຊ້ໄດ້ຍ້ອນບໍ່ມີເງິນ. A ເກີດມີແນວຄິດຢາກເອົາລົມເຢັນຈາກຫ້ອງຂອງ C ໃຫ້ໄຫຼເຂົ້າມາຫ້ອງຂອງຕົນ ຈຶ່ງໄດ້ເຈາະຮູຢູ່ຝາຫ້ອງໂດຍບໍ່ໃຫ້ C ສັງເກດເຫັນເພື່ອໃຫ້ລົມເຢັນຈາກຫ້ອງຂອງ C ໄຫຼເຂົ້າມາຫ້ອງຂອງຕົນ. ໃນກໍລະນີນີ້ A ຈະມີຄວາມຜິດທາງອາຍາຖານລັກຊັບ ຫຼື ບໍ່, ອາຍເຢັນຖືວ່າເປັນຊັບ ຫຼື ບໍ່, ຊັບແມ່ນຫຍັງມີຄຸນລັກສະນະແນວໃດ ເພາະວ່າປະມວນກົດໝາຍອາຍາມາດຕາ 231 ກຳນົດການລັກຊັບໄວ້ວ່າ: ບຸກຄົນໃດຫາກໄດ້ເອົາຊັບຂອງຜູ້ອື່ນມາເປັນຂອງຕົນໂດຍບໍ່ຖືກຕ້ອງຈະຖືກລົງໂທດຕັດອິດສະລະພາບແຕ່ສາມເດືອນ ຫາສາມປີ ຫຼື ຄັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝແຕ່ 1.000.000 ກີບ ຫາ 5.000.000 ກີບ.

ໃນກໍລະນີດັ່ງກ່າວອາຍເຢັນເຖິງວ່າຈະບໍ່ມີຮູບຮ່າງແຕ່ກໍສາມາດສຳພັດໄດ້ເຖິງຄວາມເຢັນຂອງມັນ, ເມື່ອຖືກຄົນອື່ນໃຊ້ວິທີການໃດໜຶ່ງເພື່ອໃຫ້ອາຍເຢັນດັ່ງກ່າວຈາກຫ້ອງຂອງຄົນອື່ນໄຫຼເຂົ້າມາໃນຫ້ອງຂອງຕົນໂດຍທີ່ເຈົ້າຂອງຫ້ອງບໍ່ອະນຸຍາດໃຫ້ເອົາໄປ ເປັນການເຮັດໃຫ້ເຈົ້າຂອງຫ້ອງທີ່ໃຊ້ເຄື່ອງຜະລິດ ຫຼື ກຳເນີດອາຍເຢັນນັ້ນຕ້ອງໄດ້ເພີ່ມປະລິນານຂອງອາຍເຢັນຂຶ້ນອີກແຕ່ບໍ່ໄດ້ເກີດປະໂຫຍດໃຫ້ແກ່ເຈົ້າຂອງຫ້ອງແຕ່ຢ່າງໃດ, ກົງກັນຂ້າມຍິ່ງເຮັດໃຫ້ຜູ້ເປັນເຈົ້າຂອງຫ້ອງຕ້ອງໄດ້ປັບເຄື່ອງປັບອາກາດຂຶ້ນອີກ ແຕ່ຜົນໄດ້ຮັບຈາກອາຍເຢັນບໍ່ໄດ້ເພີ່ມຂຶ້ນຕາມມາ, ການກະທຳດັ່ງກ່າວຈຶ່ງເປັນການສ້າງຄວາມເສຍຫາຍທາງດ້ານຊັບສິນຄືຜູ້ເປັນເຈົ້າຂອງຫ້ອງຕ້ອງໄດ້ເສຍເງິນຈ່າຍຄ່າກະແສໄຟຟ້າເພີ່ມຂຶ້ນ. ດັ່ງນັ້ນ, ຖ້າເຮົາຕີ

ຄວາມໝາຍຕາມເຈດຕະນາລິມຂອງກົດໝາຍອາຍາແລ້ວເຮົາຈະເຫັນວ່າ ສິ່ງທີ່ກົດໝາຍອາຍາຕ້ອງການປົກປ້ອງ ແລະ ຄຸ້ມຄອງໃນກໍລະນີດັ່ງກ່າວ ແມ່ນຜົນປະໂຫຍດທີ່ຈະໄດ້ຮັບຈາກການຄຸ້ມຄອງຊັບ ແລະ ນຳໃຊ້ຊັບ ນັ້ນ, ຖ້າຖືກຄົນອື່ນລັກໄປກໍເທົ່າກັບຜູ້ເປັນເຈົ້າຂອງເສຍສິດໃນການທີ່ຈະ ໄດ້ຮັບຜົນປະໂຫຍດຈາກສິ່ງນັ້ນຈຶ່ງມີຄວາມໝາຍດຽວກັນກັບຜູ້ເປັນເຈົ້າ ຂອງແອເປັນເສຍຊັບຈາກການລັກເຈາະເອົາອາຍເປັນຈາກຫ້ອງຂອງຄົນ ອື່ນ. ດັ່ງນັ້ນ, ການລັກເຈາະຮູເອົາອາຍເປັນຈາກຫ້ອງຄົນອື່ນຈຶ່ງເປັນຄວາມ ຜິດທາງອາຍາຖານລັກຊັບໄດ້ເຊັ່ນກັນ.

ນອກຈາກການຕີຄວາມໝາຍຂອງກົດໝາຍອາຍາຕາມຫຼັກການ ຂອງພາສາ ຫຼື ຕົວອັກສອນ ແລະ ການຕີຄວາມໝາຍຕາມເຈດຈຳນົງຂອງ ກົດໝາຍແລ້ວ, ຫຼັກການຕີຄວາມໝາຍຂອງກົດໝາຍອາຍາອີກຫຼັກການ ໜຶ່ງທີ່ຂາດບໍ່ໄດ້ກໍຄືຫຼັກການຕີຄວາມໝາຍຕາມຄວາມສຳພັນຢ່າງເປັນ ລະບົບຂອງກົດໝາຍນັ້ນເອງ. ຫຼັກການຕີຄວາມໝາຍຕາມຄວາມສຳພັນ ຢ່າງເປັນລະບົບຂອງກົດໝາຍນີ້ໝາຍເຖິງການຕີຄວາມໝາຍໂດຍຄຳນຶງ ເຖິງຄວາມສອດຄ່ອງຢ່າງເປັນລະບົບຂອງກົດໝາຍເຖິງແມ່ນວ່າຄຳສັບໃນ ກົດໝາຍຈະຂຽນຄືກັນແຕ່ກໍຕ້ອງໄດ້ຕີຄວາມໝາຍແຕກຕ່າງກັນ ຊຶ່ງຄວາມ ແຕກຕ່າງນີ້ຂຶ້ນຢູ່ກັບຄວາມສຳພັນຢ່າງເປັນລະບົບຂອງກົດໝາຍນັ້ນເອງ ຫຼື ຈະເວົ້າໃນຄວາມໝາຍໜຶ່ງກໍໝາຍຄວາມວ່າຫຼັກການຕີຄວາມໝາຍຕາມ ຄວາມສຳພັນຢ່າງເປັນລະບົບຂອງກົດໝາຍນີ້ເປັນການຕີຄວາມໝາຍຂອງ ແຕ່ລະມາດຕາຂອງກົດໝາຍໃຫ້ມີຄວາມກ່ຽວຂ້ອງສຳພັນກັນ ຫຼື ບໍ່ໃຫ້ຂັດ ກັນນັ້ນເອງ. ການຕີຄວາມໝາຍຕາມຫຼັກການນີ້ນອກຈາກແຕ່ລະມາດຕາບໍ່ ໃຫ້ຂັດກັນໃນກົດໝາຍດຽວກັນແລ້ວຍັງຕ້ອງບໍ່ໃຫ້ຂັດກັນກັບກົດ ໝາຍອື່ນໆ ອີກດ້ວຍ.

ບົດທີ 2
ການກະທຳ ແລະ ຜົນຂອງການກະທຳໃນກົດໝາຍອາຍາ

ປະມວນກົດໝາຍອາຍາກຳນົດການລົງโทດຕໍ່ບຸກຄົນກໍເພື່ອປ້ອງກັນບໍ່ໃຫ້ມີການກະທຳ ຫຼື ປ້ອງກັນບໍ່ໃຫ້ເກີດຜົນນີ້ເປັນສິ່ງສຳຄັນທີ່ກົດໝາຍອາຍາຈະຕ້ອງໄດ້ກຳນົດໄວ້ ແຕ່ເຖິງຢ່າງໃດກໍຕາມການກຳນົດການກະທຳ ແລະ ຜົນທີ່ເກີດຂຶ້ນຈາກການກະທຳຂອງຄົນ ຊຶ່ງທັງສອງຢ່າງນີ້ເປັນສ່ວນປະກອບທີ່ສຳຄັນ ແລະ ຂາດບໍ່ໄດ້ໃນການບັນຍັດໄວ້ໃນປະມວນກົດໝາຍອາຍາ.

ການພິຈາລະນາການກະທຳໃດໜຶ່ງວ່າຈະມີຄວາມຜິດ ຫຼື ບໍ່ມີຄວາມຜິດທາງອາຍານັ້ນຈຳເປັນຈະຕ້ອງໄດ້ພິຈາລະນາເປັນແຕ່ລະກໍລະນີໄປ ໝາຍຄວາມວ່າຈະຕ້ອງໄດ້ພິຈາລະນາວ່າກະທຳນັ້ນມີຄວາມເປັນອັນຕະລາຍ ຫຼື ບໍ່ ຖ້າການກະທຳນັ້ນມີຄວາມເປັນອັນຕະລາຍ, ເປັນໄພຂົ່ມຂູ່ຕໍ່ສັງຄົມເຖິງຜົນເສຍຫາຍຈະຍັງບໍ່ທັນເກີດຂຶ້ນກໍ່ຕາມ, ຜູ້ກະທຳກໍ່ຕ້ອງມີຄວາມຜິດທາງອາຍາ ແລະ ມີຄວາມຮັບຜິດຊອບທາງອາຍາໄດ້. ເຖິງຢ່າງໃດກໍຕາມມີບາງກໍລະນີການສະແດງອອກທາງດ້ານການກະທຳຍັງບໍ່ທັນພຽງພໍທີ່ຈະໃຫ້ບຸກຄົນດັ່ງກ່າວຮັບโทດທາງອາຍາໄດ້ເທື່ອ ຊຶ່ງມີຄວາມຈຳເປັນຈະຕ້ອງໃຫ້ເກີດຜົນຂຶ້ນມາເສຍກ່ອນຈຶ່ງຈະໃຫ້ບຸກຄົນນັ້ນມີຄວາມຮັບຜິດຊອບທາງອາຍາໄດ້.

ການໃຫ້ບຸກຄົນຮັບຜິດຊອບທາງອາຍາຈາກກະທຳເຖິງວ່າຜົນຍັງບໍ່ເກີດຂຶ້ນກໍຕາມນີ້ແມ່ນພິຈາລະນາຕາມຫຼັກສາມັນສຳນຶກຂອງຄົນທົ່ວໄປໃນສັງຄົມວ່າການກະທຳໃດໜຶ່ງຂອງຄົນເປັນໄພອັນຕະລາຍ ຫຼື ເປັນໄພຂົ່ມຂູ່ຮ້າຍແຮງ ຫຼື ບໍ່ ທັງນີ້ກໍເພາະວ່າການກຳນົດການລົງโทດຕໍ່ການກະທຳ

ໃນກົດໝາຍອາຍາກໍເພື່ອປ້ອງກັນຫ້າມບໍ່ໃຫ້ບຸກຄົນມີການກະທຳທີ່ເປັນອັນຕະລາຍດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ.

ການພິຈາລະນາການລົງໂທດທາງອາຍາເພື່ອປ້ອງກັນບໍ່ໃຫ້ມີການກະທຳ ຫຼື ເພື່ອປ້ອງກັນບໍ່ໃຫ້ເກີດຜົນນີ້ມີກໍລະນີສຶກສາຕົວຢ່າງດັ່ງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 1. A ໄດ້ໄປຮ່ວມປະຊຸມສານໃນຖານະເປັນພະຍານໃນຄະດີອາຍາ ແຕ່ມີເຈດຕະນາໃຫ້ການຕໍ່ສານທີ່ມີເນື້ອໃນທີ່ແຕກຕ່າງຈາກຄວາມຈື່ຈຳຂອງຕົນຍ້ອນວ່າໄດ້ຕົກລົງກັນໄວ້ກັບ B ທີ່ເປັນຈຳເລີຍວ່າຈະໄດ້ຮັບເງິນຕອບແທນຈາກ B. ເຖິງຢ່າງໃດກໍ່ຕາມເນື້ອໃນທີ່ A ໄດ້ໃຫ້ການຕໍ່ສານໄປນັ້ນມີເນື້ອໃນສອດຄ່ອງກັບຄວາມຈິງທີ່ໄດ້ຮັບການພິສູດແລ້ວດ້ວຍຫຼັກຖານອື່ນ. ການກະທຳຂອງ A ຈະມີຄວາມຜິດໃນສະຖານໃຫ້ການເທັດ ຫຼື ບໍ່.

ຈາກກໍລະນີສຶກສາຕົວຢ່າງນີ້ຈະເຫັນວ່າການຈົງໃຈ ຫຼື ມີເຈດຕະນາໃຫ້ການທີ່ແຕກຕ່າງຈາກຄວາມຈື່ຈຳຂອງພະຍານຕໍ່ສານນີ້ຖືວ່າເປັນການໃຫ້ການເທັດ. ພຶດຕິກຳ ຫຼື ການກະທຳທີ່ເປັນການໃຫ້ການເທັດຕໍ່ສານຖືເປັນການກະທຳທີ່ເປັນອັນຕະລາຍ, ເປັນການກະທຳມີຄວາມສ່ຽງທີ່ຈະກໍ່ໃຫ້ເກີດຄວາມຜິດພາດໃນຂະບວນການຍຸຕິທຳ ຊຶ່ງເປັນຂະບວນການດຳເນີນຂອງອຳນາດຕຸລາການທີ່ຈະໃຫ້ຄວາມເປັນທຳ ແລະ ຄວາມຍຸຕິທຳແກ່ສັງຄົມ. ການກະທຳທີ່ຈົງໃຈ ຫຼື ມີເຈດຕະນາໃຫ້ການເທັດດັ່ງກ່າວເຖິງວ່າຄວາມເປັນຈິງແລ້ວເນື້ອໃນຈະໄປສອດຄ່ອງກັບຄວາມຈິງທີ່ພິສູດດ້ວຍຫຼັກຖານອື່ນກໍຕາມ ຫຼື ຈະເວົ້າໃນຄວາມໝາຍໜຶ່ງກໍໝາຍຄວາມວ່າເຖິງວ່າຜົນຈະຍັງບໍ່ເກີດຂຶ້ນກໍຕາມກໍຖືວ່າການກະທຳນີ້ມີຄວາມເປັນອັນຕະລາຍພໍສົມຄວນແລ້ວ, ປະມວນກົດໝາຍອາຍາກໍຕ້ອງໄດ້ລົງໂທດຕໍ່ການກະທຳຂອງບຸກຄົນດັ່ງກ່າວໄດ້. ດັ່ງນັ້ນ, ການໃຫ້ການເທັດຕາມທີ່ໄດ້ກຳນົດໄວ້ໃນ

ປະມວນກົດໝາຍອາຍາມາດຕາ 379 ຈຶ່ງເປັນເລື່ອງທີ່ກົດໝາຍລົງໂທດຕໍ່ການກະທຳນັ້ນເອງ.

ກໍລະນີສຶກສາຕົວຢ່າງທີ 2. A ໄດ້ພົບເຫັນວາລະສານລາມົກເດັກຢູ່ຫ້ອງນອນ B ລູກຊາຍຂອງຕົນຈຶ່ງຄິດຢ້ານວ່າຈະເຮັດໃຫ້ B ເສຍຜູ້ເສຍຄົນ ແລະ ບໍ່ຕັ້ງໃຈຮຽນໜັງສືທັງຢ້ານຕຳຫຼວດມາຈັບ, ຈຶ່ງໄດ້ເກັບເອົາວາລະສານລາມົກເດັກນັ້ນແລ້ວເກັບໄວ້ໃນລິ້ນສັກໂຕະໃນຫ້ອງຂອງຕົນເປັນເວລາຫຼາຍເດືອນ. ພຶດຕິກຳຂອງ A ຈະມີຄວາມຜິດທາງອາຍາໃນຖານຄອບຄອງສິ່ງລາມົກເດັກ ຫຼື ບໍ່.

ຈາກກໍລະນີສຶກສາຕົວຢ່າງນີ້ຈະເຫັນວ່າການກະທຳຂອງ A ເປັນການກະທຳທີ່ຮູ້ວ່າສິ່ງທີ່ຕົນເອງເອົາມາຈາກຫ້ອງນອນຂອງລູກນັ້ນເປັນວາລະສານລາມົກເດັກ ຊຶ່ງກົດໝາຍອາຍາຫ້າມບໍ່ໃຫ້ບຸກຄົນໃດຄອບຄອງ ຫຼື ມີໄວ້ ແຕ່ຜູ້ກ່າງວກໍຍັງຄອບຄອງ ແລະ ມີວາລະສານດັ່ງກ່າວໄວ້. ການກະທຳດັ່ງກ່າວຂອງ A ເຖິງວ່າຈະຍັງບໍ່ທັນໄດ້ເກີດຜົນ ຫຼື ຍັງບໍ່ໄດ້ອອກມາເຜີຍແພ່ກໍຕາມ ຖືວ່າການກະທຳນີ້ມີຄວາມເປັນອັນຕະລາຍແລ້ວ, ປະມວນກົດໝາຍອາຍາກໍຕ້ອງໄດ້ລົງໂທດຕໍ່ການກະທຳນັ້ນໄດ້. ດັ່ງນັ້ນ, ການຄອບຄອງສິ່ງລາມົກເດັກຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາມາດຕາ 257 ຈຶ່ງເປັນເລື່ອງທີ່ກົດໝາຍລົງໂທດຕໍ່ການກະທຳນັ້ນເຊັ່ນກັນ.

ກໍລະນີສຶກສາຕົວຢ່າງທີ 3. A ຮູ້ຈັກກັບ B, C, D ຊຶ່ງເປັນກຸ່ມແກ້ງໂຈນປຸ້ນຊັບ. ໃນຂະນະທີ່ A ໄດ້ຖືກ B ຮ້ອງຂໍໃຫ້ຊ່ວຍເຫຼືອໃນການກະທຳຜິດນັ້ນຈຶ່ງໄດ້ໃຫ້ຄຳໝັ້ນສັນຍາວ່າພາຍຫຼັງທີ່ພວກຂອງ B ກະທຳຜິດສຳເລັດແລ້ວຈະຊ່ວຍຊຸກເຊື່ອງ, ທາລາຍລົດ ແລະ ອຸປະກອນທີ່ນຳໃຊ້ເຂົ້າໃນການກະທຳຜິດ ແລະ ເກັບຮັກສາຊັບທີ່ໄດ້ມານັ້ນໄວ້ໄລຍະໜຶ່ງ, ແຕ່ໃນຕົວຈິງ, ຫຼັງຈາກທີ່ພວກຂອງ B, C, D ອອກໄປກະທຳຜິດແລ້ວ,

A ເກີດມີຄວາມຢ້ານກົວຂຶ້ນມາ ຈຶ່ງໄດ້ປ່ຽນໃຈ ແລະ ບໍ່ໃຫ້ການຊ່ວຍເຫຼືອໃດໆ ກັບແກ້ງນີ້ຕາມທີ່ໄດ້ຕົກລົງກັນໄວ້. A ຈະມີຄວາມຜິດໃນຖານະເປັນຜູ້ຮ່ວມກະທຳຜິດ ຫຼື ບໍ່.

ຈາກກໍລະນີສຶກສາຕົວຢ່າງຂ້າງເທິງນີ້ສາມາດແຍກອອກເປັນ 2 ກໍລະນີດັ່ງນີ້:

ກໍລະນີທີ 1. ການທີ່ A ໃຫ້ຄຳໝັ້ນສັນຍາ ແລະ ຕົກລົງຈະເຂົ້າຮ່ວມກະທຳຜິດໃນຖານະເປັນຜູ້ຊຸກເຊື່ອງ ຫຼື ປິດບັງການກະທຳຜິດນີ້ມັນໄດ້ເປັນແຮງກະຕຸ້ນ ຫຼື ເປັນແຮງພັກດັນໃຫ້ພັກພວກຂອງ B, C, D ໄດ້ມີຄວາມກ້າ ແລະ ມີຄວາມໝັ້ນໃຈສູງຕໍ່ການກະທຳຂອງພວກຕົນວ່າຖ້າພວກຕົນກະທຳສຳເລັດແລ້ວຈະມີບຸກຄົນອື່ນຊ່ວຍໃນການຊຸກເຊື່ອງຊັບສິ່ງຂອງທີ່ພວກຕົນໄດ້ກະທຳຜິດມາ ແລະ ຊ່ວຍປິດບັງການກະທຳຜິດຂອງພວກຕົນໄດ້. ການທີ່ A ໃຫ້ຄຳໝັ້ນສັນຍາລ່ວງໜ້າແລ້ວຈຶ່ງມີການຖອນຕົວອອກໃນພາຍຫຼັງທີ່ພັກພວກຂອງ B, C, D ໄດ້ໄປກະທຳຜິດສຳເລັດແລ້ວນັ້ນ ຈຶ່ງຖືວ່າ A ໄດ້ເປັນຮ່ວມກະທຳຢ່າງໜຶ່ງໃນທາງອາຍາແລ້ວ, ການກະທຳຂອງ A ກົດໝາຍອາຍາກໍຕ້ອງໄດ້ລົງໂທດ. ດັ່ງນັ້ນ, ການກະທຳຂອງ A ຈຶ່ງເປັນການກະທຳໃນຖານະເປັນຜູ້ສົມຮູ້ຮ່ວມຄິດໃນປະມວນກົດໝາຍອາຍາມາດຕາ 30 ຈຶ່ງເປັນເລື່ອງທີ່ກົດໝາຍລົງ�โທດຕໍ່ການກະທຳໄດ້ເຊັ່ນກັນ.

ກໍລະນີທີ 2. ໃນເບື້ອງຕົ້ນເຖິງວ່າ A ຈະໄດ້ຕົກລົງ ແລະ ໃຫ້ຄຳໝັ້ນສັນຍາລ່ວງໜ້າໄວ້ກັບພັກພວກຂອງ B, C, D ກໍຕາມ ແຕ່ຫາກຜູ້ກ່ຽວໄດ້ແຈ້ງຂໍຖອນຕົວອອກຈາກການກະທຳຜິດຄັ້ງນີ້ໃຫ້ແກ່ພັກພວກຂອງ B, C, D ຮັບຊາບກ່ອນລ່ວງໜ້າທີ່ພວກກ່ຽວຈະໄປລົງມືກະທຳຜິດແລ້ວ ແຕ່ພັກພວກຂອງ B, C, D ຍັງສືບຕໍ່ກະທຳຜິດຢູ່ກໍຖືວ່າ A ບໍ່ໄດ້ເປັນຜູ້ຮ່ວມກະທຳຜິດໃນຄັ້ງນີ້. ການໃຫ້ຄຳໝັ້ນສັນຍາໃນເບື້ອງຕົ້ນ ແລະ ໄດ້ຖອນຕົວ

ອອກຈາກການກະທຳຜິດກ່ອນການລົງມືກະທຳຂອງພັກພວກ B, C, D ຂອງ A ຈຶ່ງບໍ່ຖືວ່າເປັນຜູ້ຮ່ວມກະທຳຜິດໃນຄັ້ງນີ້. ດັ່ງນັ້ນ, ການກະທຳຂອງ A ຈຶ່ງບໍ່ເປັນການກະທຳໃນຖານະເປັນຜູ້ສົມຮູ້ຮ່ວມຄິດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 30 ຂອງປະມວນກົດໝາຍອາຍາແຕ່ຢ່າງໃດ.

ກໍລະນີສຶກສາຕົວຢ່າງທີ 4. X ມີຄວາມຄຽດແຄ້ນໃຫ້ A ແລະຄິດວ່າຖ້າມີໂອກາດຕົນຢາກຈະຂ້າ A ຖິ້ມສາ. ມື້ໜຶ່ງ X ໄດ້ຮັບຂ່າວວ່າ A ໄດ້ເສຍຊີວິດແລ້ວຍ້ອນການເຈັບປ່ວຍ, ແຕ່ X ບໍ່ເຊື່ອວ່າການຕາຍຂອງ A ຈະເປັນຈິງ. ດັ່ງນັ້ນ, X ຈຶ່ງໄດ້ນຳໄປເບິ່ງຕົວຈິງຢູ່ໂຮງໝໍ. ພໍເມື່ອໄດ້ໄປຮອດໂຮງໝໍຈຶ່ງເຫັນຊາກສົບຂອງ A ຖືກນຳໄປເກັບໄວ້ໃນຫ້ອງເກັບສົບ, ເຖິງແນວໃດ X ກໍຍັງເຊື່ອໝັ້ນວ່າ A ຍັງມີຊີວິດຢູ່ຈຶ່ງໄດ້ໃຊ້ມີດແທງບໍລິເວນຫົວໃຈຂອງ A ຫຼາຍຄັ້ງ. ການກະທຳຂອງ X ເປັນການຄາດຕະກຳ A ຫຼື ບໍ່.

ຈາກກໍລະນີສຶກສາຕົວຢ່າງຂ້າງເທິງນີ້ຈະເຫັນວ່າເຖິງວ່າ X ໃຊ້ມີດແທງ A ຫຼາຍຄັ້ງໂດຍຄິດວ່າ A ຍັງມີຊີວິດຢູ່ກໍຕາມ ແຕ່ໂດຍສຳນຶກທົ່ວໄປຂອງຄົນໃນສັງຄົມແລ້ວຈະເຫັນວ່າ A ທີ່ຖືກເກັບໄວ້ໃນຫ້ອງເກັບສົບຢູ່ໂຮງໝໍນັ້ນເຖິງແນວໃດກໍບໍ່ແມ່ນເປັນບຸກຄົນທີ່ຍັງມີຊີວິດໄດ້. ການກະທຳຂອງ X ທີ່ສະແດງອອກທາງດ້ານພາວະວິໄສເຖິງແນວໃດກໍບໍ່ເປັນອັນຕະລາຍແກ່ບຸກຄົນໄດ້, ການກະທຳຂອງ X ຈຶ່ງບໍ່ຕ້ອງຖືກລົງໂທດທາງອາຍາ. ດັ່ງນັ້ນ, ການກະທຳຂອງ X ຈຶ່ງບໍ່ເປັນການຄາດຕະກຳຕາມມາດຕາ 188 ຂອງປະມວນກົດໝາຍອາຍາແຕ່ຢ່າງໃດ.

ກໍລະນີສຶກສາຕົວຢ່າງທີ 5. X ຄິດຢາກຈະຂ້າ B, ເມື່ອເຫັນ B ຍ່າງຜ່ານມາພໍດີຈຶ່ງຍາດເອົາປືນຈາກແອວຂອງເຈົ້າໜ້າທີ່ຕຳຫຼວດ A ແລ້ວແນໃສ່ B ພ້ອມກັບລັ່ນໄກປືນໃສ່ທັນທີ. ເຖິງແນວໃດກໍ່ຕາມ, ມື້ນັ້ນບັງເອີນເຈົ້າໜ້າທີ່ຕຳຫຼວດ A ລືມບັນຈຸລູກກະສຸນໃສ່ໄວ້ໃນບັ້ງປືນຈຶ່ງເປັນ

ສາເຫດເຮັດໃຫ້ X ບໍ່ສາມາດຂ້າ B ໄດ້. X ຈະມີຄວາມຜິດຖານພະຍາຍາມຄາດຕະກຳ A ຫຼື ບໍ່.

ຈາກກໍລະນີສຶກສາຕົວຢ່າງນີ້ຈະເຫັນວ່າໂດຍພາວະວິໄສແລ້ວການກະທຳຂອງ X ຈະບໍ່ສາມາດເຮັດໃຫ້ A ເສຍຊີວິດໄດ້ເນື່ອງຈາກວ່າການໃຊ້ປືນບໍ່ມີລູກຍິງຄົນເຖິງແນວໃດກໍຈະບໍ່ສາມາດເຮັດໃຫ້ເກີດຜົນ ຫຼື ບໍ່ພາໃຫ້ຜົນຄືຄວາມຕາຍເກີດຂຶ້ນໄດ້ ແຕ່ໂດຍອີງຕາມສາມັນສຳນຶກໂດຍທົ່ວໄປຂອງສັງຄົມແລ້ວຈະເຫັນວ່າອາວຸດປືນປະຈຳກາຍຂອງເຈົ້າໜ້າທີ່ຕຳຫຼວດເພື່ອມີໄວ້ຮັກສາຄວາມສະຫງົບຮຽບຮ້ອຍຂອງສັງຄົມ ແລະ ຄວາມປອດໄພຂອງປະຊາຊົນກໍຕ້ອງມີລູກກະສຸນບັນຈຸໄວ້ໃນບັ້ງປືນສະເໝີ ເມື່ອມີຄົນໃຊ້ປືນນັ້ນຍິງແນ່ນອນຕ້ອງເກີດອັນຕະລາຍໄດ້. ການທີ່ X ຍາດເອົາປືນຂອງເຈົ້າໜ້າທີ່ຕຳຫຼວດເຖິງວ່າໃນເວລານັ້ນຄວາມຈິງແລ້ວບໍ່ມີລູກກະສຸນເນື່ອງຈາກເຈົ້າໜ້າທີ່ A ລືມບັນຈຸລູກກະສຸນໄວ້ໃນບັ້ງປືນກໍຕາມ ແຕ່ການກະທຳຂອງ X ຖືວ່າມີຄວາມເປັນອັນຕະລາຍສູງ, ການກະທຳຂອງ X ກົດໝາຍອາຍາຕ້ອງລົງໂທດ. ດັ່ງນັ້ນ, ການກະທຳຂອງ X ທີ່ມີເຈດຕະນາຂ້າ A ແຕ່ຜົນບໍ່ເກີດຕາມຈຸດປະສົງຂອງ X ຄື A ບໍ່ຕາຍກໍຖືວ່າ X ມີຄວາມຜິດສະຖານພະຍາຍາມຄາດຕະກຳນັ້ນເອງ.

ບົດທີ 3
ສາຍພົວພັນເຫດ ແລະ ຜົນ
(ອົງປະກອບດ້ານພາວະວິໄສ)

1. ການສະແດງອອກທາງດ້ານການກະທຳ

ການກະທຳຜິດໃດທີ່ກົດໝາຍບັນຍັດໄວ້ໃຫ້ຜູ້ກະທຳຜິດຕ້ອງໄດ້ຮັບຜິດຊອບໃນຜົນຂອງການກະທຳຈຳເປັນຕ້ອງໄດ້ພິຈາລະນາກ່ຽວກັບສາຍພົວພັນເຫດ ແລະ ຜົນ ເພື່ອຈະໄດ້ຮັບຮູ້ວ່າຜູ້ກະທຳເປັນເຫດໃຫ້ເກີດຜົນ ຫຼື ບໍ ແລະ ຄວນຮັບຜິດຊອບໃນຜົນນັ້ນເທົ່າໃດ ເພາະວ່າຖ້າຜົນທີ່ເກີດບໍ່ມີສາຍພົວພັນກັບການກະທຳ ຫຼື ບໍ່ແມ່ນຜົນໂດຍກົງແລ້ວຜູ້ກະທຳກໍບໍ່ຕ້ອງຮັບຜິດຊອບ. ຜົນໂດຍກົງນັ້ນໄດ້ແກ່ຜົນຕາມ "*ທິດສະດີເງື່ອນໄຂ*" ຊຶ່ງມີຄວາມໝາຍວ່າການກະທຳໃນທຸກກໍລະນີຍ່ອມເປັນເຫດທີ່ກໍ່ໃຫ້ເກີດຜົນຄືຫາກບໍ່ມີການກະທຳແລ້ວຜົນກໍຈະບໍ່ເກີດຂຶ້ນ ສະແດງວ່າຜົນເກີດຈາກການກະທຳ ເຖິງແມ່ນວ່າຈະມີເຫດອື່ນໆ ກໍ່ໃຫ້ເກີດຜົນນຳກໍຕາມ ເຊັ່ນ: ຫາກຜູ້ເສຍຫາຍມີຮ່າງກາຍອ່ອນແອ ຫຼື ສຸຂະພາບບໍ່ດີຢູ່ກ່ອນແລ້ວ, ແຕ່ຖ້າເປັນເຫດທີ່ເກີດຂຶ້ນໃໝ່ພາຍຫຼັງການກະທຳທີ່ເອີ້ນວ່າ "*ເຫດການແຊກຊ້ອນ*" ນັ້ນຜູ້ກະທາຈະຕ້ອງຮັບຜິດຊອບໃນຜົນສຸດທ້າຍທີ່ເກີດຂຶ້ນ ຫຼື ບໍ ຕ້ອງພິຈາລະນາໂດຍລະອຽດຕໍ່ໄປ.

ເຫດການແຊກຊ້ອນໝາຍເຖິງເຫດການທີ່ເກີດຂຶ້ນໃໝ່ພາຍຫຼັງຈາກການກະທຳຂອງຜູ້ກະທຳໃນຕອນຕົ້ນ ແລະ ເປັນເຫດທີ່ກໍ່ໃຫ້ເກີດຜົນສຸດທ້າຍຂຶ້ນ ໝາຍຄວາມວ່າເຫດການແຊກຊ້ອນມັນເປັນສາເຫດໂດຍກົງທີ່ພາໃຫ້ຜົນສະທ້ອນທີ່ເປັນອັນຕະລາຍເກີດຂຶ້ນ. ເຖິງຢ່າງໃດກໍຕາມຫາກການກະທຳນັ້ນມີຜົນຕໍ່ຜູ້ຖືກກະທຳໂດຍກົງແນວນີ້ບໍ່ຖືວ່າເປັນເຫດແຊກຊ້ອນ.

ເຫດການແຊກຊ້ອນອາດເກີດຈາກຫຼາຍກໍລະນີເປັນຕົ້ນ: ເຫດແຊກຊ້ອນຈາກທຳມະຊາດ, ເຫດແຊກຊ້ອນທີ່ເກີດຈາກການກະທຳຂອງຜູ້ກະທຳຜິດເອງ, ເຫດແຊກຊ້ອນທີ່ເກີດຈາກການກະທຳຂອງຜູ້ເສຍຫາຍເອງ ແລະ ເຫດແຊກຊ້ອນທີ່ເກີດຈາກບຸກຄົນອື່ນ.

ດັ່ງນັ້ນ, ບໍ່ວ່າເຫດການແຊກຊ້ອນໃດກໍຕາມທີ່ກ່າວມາແລ້ວນັ້ນມັນມີສາຍພົວພັນເຫດ ແລະ ຜົນແນວໃດ ຫຼື ບໍ ແມ່ນເຮົານຳໃຊ້ທິດສະດີດຽວກັນມາອະທິບາຍ ຊຶ່ງແມ່ນທິດສະດີໄພອັນຕະລາຍທີ່ມີໝາຍຄວາມວ່າໄພອັນຕະລາຍຂອງການກະທຳນັ້ນສຸດທ້າຍມັນປາກົດຜົນເປັນຈິງ ຫຼື ບໍ. ທິດສະດີໄພອັນຕະລາຍນີ້ບໍ່ໄດ້ເບິ່ງວ່າບຸກຄົນທົ່ວໄປຈະຮັບຮູ້ ຫຼື ບໍ່ຮັບຮູ້, ແຕ່ເບິ່ງວ່າໃນຕອນທີ່ກະທຳນັ້ນໄພອັນຕະລາຍຈາກການກະທຳມັນສາມາດກໍ່ໃຫ້ເກີດໄພອັນຕະລາຍເຮັດໃຫ້ຜູ້ຖືກກະທຳໄດ້ຮັບຜົນ ຫຼື ບໍ. ສະນັ້ນ, ຂໍ້ເທັດຈິງບໍ່ຄວນເອົາທິດສະດີສາມັນສຳນຶກບຸກຄົນທົ່ວໄປມາເປັນສ່ວນໜຶ່ງໃນການພິຈາລະນາໄພອັນຕະລາຍ ແລະ ໃນເມື່ອບໍ່ເອົາມາພິຈາລະນາໄພອັນຕະລາຍແລ້ວຕໍ່ກັບຜົນທີ່ເກີດຂຶ້ນນັ້ນເບິ່ງວ່າມັນສຳພັນກັບຜົນແນວໃດ ຫຼື ບໍ, ຖ້າຫາກຜົນເກີດມາຈາກສາເຫດອື່ນແລ້ວກໍບໍ່ຈຳເປັນຕ້ອງຮັບຜິດຊອບກັບຜົນທີ່ເກີດ.

ທິດສະດີໄພອັນຕະລາຍນີ້ແມ່ນນຳໄປພິຈາລະນາບັນດາກໍລະນີສຶກສາດັ່ງຕໍ່ໄປນີ້ທີ່ຈະຍົກໃຫ້ເຫັນສາຍພົວພັນເຫດ ແລະ ຜົນຂອງອົງປະກອບດ້ານພາວະວິໄສຂອງການກະທຳຜິດດັ່ງນີ້:

ກໍລະນີສຶກສາຕົວຢ່າງທີ 1. A ຄິດຢາກຂ້າ B ທີ່ພວມເຈັບປ່ວຍໜັກຢູ່ຈຶ່ງໄດ້ເອົາຢາພິດໃນປະລິມານທີ່ເຮັດໃຫ້ເສຍຊີວິດໄດ້ໃຫ້ B ກິນ ໂດຍໄດ້ຕົວະວ່າແມ່ນຢາດີ ແຕ່ພາຍຫຼັງທີ່ B ກິນຢາພິດແລ້ວພັດໄດ້ແຂວນຄໍຂ້າຕົວຕາຍເອງ. A ຈະມີຄວາມຮັບຜິດຊອບຕໍ່ການເສຍຊີວິດຂອງ B ຫຼື ບໍ່.

ໃນກໍລະນີສຶກສານີ້ເຫັນວ່າໄພອັນຕະລາຍຈາກການກະທຳຂອງ A ມັນຍັງບໍ່ທັນໄດ້ປາກົດຜົນເປັນຈິງຫຍັງເລີຍ ເຖິງແນ່ນອນວ່າ B ຜູ້ທີ່ໄດ້ກິນຢາພິດນັ້ນອາດຈະເສຍຊີວິດໄດ້ ແຕ່ຫາກຍັງບໍ່ທັນສົ່ງຜົນຫຍັງແລ້ວ B ຂ້າຕົວຕາຍກ່ອນ ຖືວ່າການກະທຳຂອງ B ເປັນເຫດການແຊກຊ້ອນທີ່ເກີດຈາກການກະທຳຂອງຕົນເອງ ຊຶ່ງມັນໄດ້ຕັດສາຍພົວພັນເຫດ ແລະ ຜົນທີ່ມີເງື່ອນໄຂຕໍ່ກັນກັບ A ໄປເຊັ່ນນີ້ແລ້ວຈະໃຫ້ A ຮັບຜິດຊອບຕໍ່ການເສຍຊີວິດຂອງ B ແມ່ນບໍ່ໄດ້ ເພາະວ່າ B ຂ້າຕົວຕາຍແມ່ນເກີດຈາກອາການເຈັບປ່ວຍໜັກຈຶ່ງເປັນສາເຫດໃຫ້ຕັດສິນໃຈບໍ່ແມ່ນຂ້າຕົວຕາຍຍ້ອນຮັບຮູ້ວ່າຖືກວາງຢາພິດ ຫຼື ກິນຢາພິດ. A ຈະຮັບຜິດຊອບພຽງແຕ່ຂັ້ນພະຍາຍາມຄາດຕະກຳເທົ່ານັ້ນ.

ຈາກກໍລະນີສຶກສາຕົວຢ່າງທີ 1 ທີ່ໄດ້ດັດປັບທີ 1. ຖ້າໃນກໍລະນີທີ A ເອົາຢາພິດໃຫ້ B ກິນ ແລະ ຢາພິດດັ່ງກ່າວຈະເຮັດໃຫ້ B ເສຍຊີວິດພາຍໃນ 24 ຊົ່ວໂມງ ແຕ່ບໍ່ໄດ້ບອກ B ວ່າເປັນຢາພິດ, ຫຼັງຈາກ B ກິນຢາພິດແລ້ວພັດຮູ້ດ້ວຍຕົນເອງ ແຕ່ເພື່ອບໍ່ຢາກຕາຍແບບທໍລະມານຈຶ່ງໄດ້ແຂວນຄໍຂ້າຕົວຕາຍ.

ໃນກໍລະນີດັດປັບທີ 1 ນີ້ການກະທາຄັ້ງທີສອງຂອງ B ຕໍ່ຈາກການກະທຳຄັ້ງທຳອິດຂອງ A ສົ່ງຜົນໃຫ້ຂ້າຕົວຕາຍນີ້ກໍຖືເປັນເຫດການແຊກຊ້ອນເນື່ອງຈາກ B ໄດ້ຮັບຮູ້ວ່າຕົນເອງໄດ້ກິນຢາພິດຈາກ A ໃຫ້ກິນເພື່ອບໍ່ຢາກຕາຍແບບທໍລະມານຈຶ່ງໄດ້ຕັດສິນໃຈຂ້າຕົວຕາຍ ແຕ່ເນື່ອງຈາກວ່າໄພອັນຕະລາຍຈາກການກະທຳຂອງ A ຍັງບໍ່ທັນໄດ້ສົ່ງຜົນຫຼາຍໃຫ້ B ໄປຂ້າຕົວຕາຍ ແຕ່ວ່າ B ເລືອກຂ້າຕົວຕາຍທັງທີ່ຮູ້ກ່ອນໜ້າແລ້ວວ່າຕົນກິນຢາພິດ ແລະ B ເອງກໍມີເງື່ອນໄຂຫຼາຍຢ່າງຫຼາຍທາງເລືອກທີ່ຈະບໍ່ຂ້າຕົວຕາຍເຊັ່ນ: ອາດຈະໄປປົ່ນປ້ວ ແລະ ອື່ນໆ ໃຫ້ຕົນເອງລອດ ແຕ່ພາຍໃຕ້ເງື່ອນໄຂຫຼາຍຢ່າງດັ່ງກ່າວ B ເລືອກເອງທີ່ຈະແຂວນຄໍຂ້າຕົວຕາຍ.

ດ້ວຍສາຍພົວພັນເຫດ ແລະ ຜົນດັ່ງກ່າວ A ຈະຮັບຜິດຊອບຕໍ່ການຕາຍຂອງ B ພຽງໃນຂັ້ນພະຍາຍາມຄາດຕະກາ.

ຈາກກໍລະນີສຶກສາຕົວຢ່າງທີ 1 ທີ່ໄດ້ດັດປັບທີ 2. ຖ້າໃນກໍລະນີທີ A ເອົາຢາພິດໃຫ້ B ກິນ ຊຶ່ງຢາພິດດັ່ງກ່າວຈະເຮັດໃຫ້ B ເສຍຊີວິດພາຍໃນ 24 ຊົ່ວໂມງ, ແຕ່ເມື່ອ B ກິນຢາພິດໄດ້ຮອດເວລາ 23 ຊົ່ວໂມງ ຫຼື ວ່າ 95% ແມ່ນເສຍຊີວິດແລ້ວ, ຍັງເຫຼືອອີກ 5% ຮູ້ສຶກທໍລະມານຫຼາຍ ແຕ່ເພື່ອບໍ່ໃຫ້ທໍລະມານນັ້ນຈຶ່ງຂ້າຕົວຕາຍເອງ.

ໃນກໍລະນີດັດປັບທີ 2 ນີ້ການຂ້າຕົວຕາຍຂອງ B ຖືວ່າເປັນເຫດການແຊກຊ້ອນທີ່ເກີດຈາກການກະທຳຂອງຕົນເອງ ແຕ່ການກະທຳດັ່ງກ່າວມັນບໍ່ໄດ້ຕັດສາຍສຳພັນເຫດ ແລະ ຜົນ ເພາະວ່າໄພອັນຕະລາຍຈາກການກະທຳຂອງ A ນັ້ນໄດ້ສົ່ງຜົນຫຼາຍຕໍ່ B ແລ້ວຈົນເຮັດໃຫ້ທໍລະມານ ແລະ ທົນທໍລະມານຕໍ່ໄປບໍ່ໄຫວແລ້ວກໍບໍ່ມີທາງເລືອກຈຶ່ງຈົບຊີວິດຕົນເອງດ້ວຍການຂ້າຕົວຕາຍ. ສະນັ້ນ, ການເສຍຊີວິດຂອງ B ຈຶ່ງເກີດມາຈາກການກະທຳຂອງ A ໃນເບື້ອງຕົ້ນຄືແນວນີ້ແລ້ວ A ຈະຕ້ອງຮັບຜິດຊອບຕໍ່ການເສຍຊີວິດຂອງ B ຄືຖານຄາດຕະກຳນັ້ນເອງ.

ຈາກກໍລະນີສຶກສາຕົວຢ່າງທີ 1 ທີ່ໄດ້ດັດປັບທີ 3. ຖ້າໃນກໍລະນີທີ A ເອົາຢາພິດໃຫ້ B ກິນ ຊຶ່ງຢາພິດດັ່ງກ່າວຈະເຮັດໃຫ້ B ເສຍຊີວິດພາຍໃນ 24 ຊົ່ວໂມງ ແຕ່ພາຍຫຼັງກິນແລ້ວ B ຢູ່ມາໄດ້ຮອດເວລາ 23 ຊົ່ວໂມງ ຈຶ່ງຮູ້ວ່າຕົນເອງຈະເສຍຊີວິດ ແຕ່ເພື່ອຢາກຕາຍແບບບໍ່ໃຫ້ທໍລະມານຈຶ່ງກິນຢາວິຕາມິນໃສ່ເພື່ອໃຫ້ຮູ້ສຶກຜ່ອນຄາຍ ແຕ່ພາຍຫຼັງກິນຢາວິຕາມິນແລ້ວບວກໃສ່ກັບຢາຜິດທີ່ມີຢູ່ໃນຮ່າງກາຍຈຶ່ງເປັນການເລັ່ງໃຫ້ B ເສຍຊີວິດໄວຂຶ້ນ.

ໃນກໍລະນີດັດປັບທີ 3 ນີ້ຖືວ່າເປັນເຫດການແຊກຊ້ອນທີ່ເກີດຈາກການກະທຳຂອງຕົນເອງເຊັ່ນກັນ ແຕ່ການກະທຳດັ່ງກ່າວມັນບໍ່ໄດ້ຕັດ

ສາຍສຳພັນເຫດ ແລະ ຜົນແຕ່ຢ່າງໃດ, ໄພອັນຕະລາຍຈາກການກະທຳ ຂອງ A ມັນໄດ້ສົ່ງຜົນຫຼາຍຕໍ່ B ແລ້ວ ສ່ວນວ່າການຕັດສິນໃຈກິນຢາ ວິຕາມິນນັ້ນກໍເພື່ອໃຫ້ຮູ້ສຶກຜ່ອນຄາຍ ແລະ ຕາຍແບບບໍ່ໃຫ້ທໍລະມານ ເຖິງມັນຈະເປັນຕົວເລັ່ງໃຫ້ເສຍຊີວິດໄວຂຶ້ນກໍຕາມຂໍ້ເທັດຈິງດັ່ງກ່າວບໍ່ໄດ້ ເອົາມາພິຈາລະນາໄພອັນຕະລາຍ ແລະ ໃນເມື່ອບໍ່ເອົາມາພິຈາລະນາ ໄພອັນຕະລາຍແລ້ວ, ການກະທຳຂອງ A ທີ່ໄດ້ເອົາຢາພິດໃຫ້ B ກິນນີ້ ໄພອັນຕະລາຍແມ່ນຈະເຮັດໃຫ້ເສຍຊີວິດແລ້ວເຊັ່ນນີ້ A ກໍຕ້ອງ ຮັບຜິດຊອບຕໍ່ການເສຍຊີວິດຂອງ B ຄືຖານຄາດຕະກາ.

ຈາກກໍລະນີສຶກສາຕົວຢ່າງທີ 1 ທີ່ໄດ້ດັດປັບທີ 4. ຖ້າໃນກໍລະນີ ທີ A ເອົາຢາພິດໃຫ້ B ກິນ ຊຶ່ງຈະເຮັດໃຫ້ B ເສຍຊີວິດພາຍໃນ 24 ຊົ່ວໂມງ ແຕ່ພາຍຫຼັງກິນແລ້ວ B ຢູ່ມາໄດ້ຮອດເວລາ 23 ຊົ່ວໂມງຈາກນັ້ນ ໄດ້ມີ C ມາພົບເຫັນແຕ່ຍ້ອນມີຄວາມແຄ້ນແຕ່ເກົ່າ C ຈຶ່ງໄດ້ຂ້າ B ເສຍຊີວິດ. A ແລະ C ຈະມີຄວາມຜິດໃນຂໍ້ຫາໃດ.

ໃນກໍລະນີດັດປັບທີ 4 ນີ້ຖືເປັນເຫດແຊກຊ້ອນທີ່ເກີດຈາກ ບຸກຄົນອື່ນ ເພາະວ່າໄພອັນຕະລາຍຈາກການກະທຳທີ່ສາມາດປາກົດຜົນ ເປັນຈິງໄດ້ສູງນັ້ນແມ່ນຈາກການກະທຳຂອງຜູ້ທີ່ສອງບໍ່ແມ່ນຈາກການ ກະທຳຂອງຜູ້ທຳອິດ ໝາຍຄວາມວ່າການກະທຳຂອງ C ແມ່ນເປັນໄພ ອັນຕະລາຍທີ່ໄດ້ສົ່ງຜົນຫຼາຍຕໍ່ B ເຮັດໃຫ້ເສຍຊີວິດທັນທີ ເຖິງຈະ ແນ່ນອນວ່າຫາກ C ບໍ່ມາຂ້າ B ກໍຈະເສຍຊີວິດຢູ່ແລ້ວກໍຕາມ ແຕ່ມັນຍັງບໍ່ ໄດ້ປາກົດຜົນເປັນຈິງຫຍັງຈາກໄພອັນຕະລາຍຈາກການເອົາຢາພິດໃຫ້ກິນ. ການທີ່ B ເສຍຊີວິດນັ້ນມັນມາຈາກສາເຫດອື່ນ. ເພາະສະນັ້ນ A ຈະຮັບ ຜິດຊອບພຽງຂັ້ນພະຍາຍາມຄາດຕະກຳ ແຕ່ສຳລັບ C ຕ້ອງຮັບຜິດຊອບ ຖານຄາດຕະກຳ.

ກໍລະນີສຶກສາຕົວຢ່າງທີ 2. C ໄດ້ຊົກຕ່ອຍຫົວຂອງ D ຈົນເຮັດໃຫ້ບາດເຈັບຍ້ອນອາການບາດເຈັບດັ່ງກ່າວຈຶ່ງເຮັດໃຫ້ D ໝົດສະຕິໄປ ເມື່ອເຫັນແນວນັ້ນຈຶ່ງເຮັດໃຫ້ C ມີຄວາມສຳນຶກຜິດແລ້ວໄດ້ເອີ້ນລົດໂຮງໝໍມາຮັບ ແຕ່ໃນລະຫວ່າງທີ່ນຳສົ່ງ D ໄປ�โรงໝໍນັ້ນລົດໂຮງໝໍຄັນດັ່ງກ່າວໄດ້ເກີດອຸບປະຕິເຫດຕຳກັບລົດບັນທຸກ. ຍ້ອນອຸບປະຕິເຫດດັ່ງກ່າວຈຶ່ງເຮັດໃຫ້ອາການບາດເຈັບຂອງ D ທີ່ຖືກ C ຊົກຕ່ອຍນັ້ນມີອາການຮ້າຍແຮງຂຶ້ນຈົນເຮັດໃຫ້ D ເສຍຊີວິດ. C ຈະມີຄວາມຮັບຜິດຊອບໃນຂໍ້ຫາໃດ.

ໃນກໍລະນີນີ້ການເສຍຊີວິດຂອງ D ແມ່ນຜົນເກີດຈາກອຸບປະຕິເຫດລົດ�โรงໝໍຕຳກັບລົດບັນທຸກອຸບປະຕິເຫດຖືເປັນເຫດການແຊກຊ້ອນທີ່ພາໃຫ້ເກີດຜົນ ແລະ ເປັນເຫດການທີ່ບໍ່ອາດຄາດຄະເນໄດ້. ສະນັ້ນ, ໄພອັນຕະລາຍທີ່ປາກົດຜົນເປັນຈິງສຸດທ້າຍແມ່ນຈາກອຸບປະຕິເຫດບໍ່ແມ່ນຈາກການຖືກຊົກຕ່ອຍຈຶ່ງຖືວ່າອຸບປະຕິເຫດເປັນເຫດການທີ່ຕັດສາຍພົວພັນຂອງການກະທຳເບື້ອງຕົ້ນກັບຜົນສຸດທ້າຍ, ສ່ວນໄພອັນຕະລາຍທີ່ປາກົດຜົນເປັນຈິງຈາກການກະທຳຂອງ C ແມ່ນຄວາມບາດເຈັບເທົ່ານັ້ນ ເຊັ່ນນີ້ C ຈະມີຄວາມຮັບຜິດຊອບຖານທຳຮ້າຍຮ່າງກາຍເທົ່ານັ້ນ.

ຈາກກໍລະນີສຶກສາຕົວຢ່າງທີ 2 ທີ່ໄດ້ດັດປັບທີ 1. ຖ້າໃນກໍລະນີທີ C ໄດ້ຊົກຕ່ອຍຫົວຂອງ D ຮຸນແຮງເຖິງຂັ້ນເຮັດໃຫ້ໄດ້ຮັບບາດເຈັບຫຼາຍພໍສົມຄວນຖ້າປະ D ໄວ້ແນວນັ້ນອາດເສຍຊີວິດໄດ້ ເມື່ອເຫັນແນວນັ້ນ C ຈຶ່ງໄດ້ເອີ້ນລົດ�โรงໝໍມາຮັບ ແຕ່ໃນລະຫວ່າງທີ່ນຳສົ່ງ D ໄປ�โรงໝໍນັ້ນລົດຄັນດັ່ງກ່າວໄດ້ຄາລົດຕິດເຮັດໃຫ້ນຳສົ່ງ D ໄປ�โรงໝໍບໍ່ທັນຈົນເຮັດໃຫ້ D ເສຍຊີວິດຄາລົດ ແຕ່ຖ້າໄປຮອດ�โรงໝໍທັນເວລາ D ກໍຈະບໍ່ເສຍຊີວິດ. C ຈະມີຄວາມຮັບຜິດຊອບໃນຂໍ້ຫາໃດ.

ໃນກໍລະນີດັດປັບທີ 1 ນີ້ການກະທາຂອງ C ເປັນໄພອັນຕະລາຍ ທີ່ກໍ່ໃຫ້ເກີດຜົນບາດເຈັບ ແລະ ເສຍຊີວິດໃນເວລາຕໍ່ມາ ຊຶ່ງຖືວ່າມີສາຍ ພົວພັນເຫດ ແລະ ຜົນທີ່ມີເງື່ອນໄຂຕໍ່ກັນ, ສ່ວນວ່າລົດຕົດຂະນະນໍາສິ່ງໄປ ໂຮງໝໍຈົນເຮັດໃຫ້ D ເສຍຊີວິດຄາລົດນັ້ນຖືເປັນເຫດການແຊກຊ້ອນແຕ່ ບໍ່ຕັດສາຍສໍາພັນເຫດ ແລະ ຜົນ ເຖິງຈະເວົ້າວ່າຫາກຮອດໂຮງໝໍທັນເວລາ ຈະບໍ່ເສຍຊີວິດກໍຕາມ ຂໍ້ເທັດຈິງດັ່ງກ່າວແມ່ນບໍ່ເອົາມາພິຈາລະນາໄພ ອັນຕະລາຍ, ຂໍ້ເທັດຈິງທີ່ຈະນໍາເອົາມາພິຈາລະນາໄພອັນຕະລາຍນັ້ນແມ່ນ ການກະທໍາຂອງ C ຫາກບໍ່ມີການຊົກຕ່ອຍຫົວຢ່າງຮຸນແຮງກໍຈະບໍ່ມີ ຄວາມເຈັບ ແລະ ເສຍຊີວິດ ຊຶ່ງເປັນສາເຫດໂດຍກົງທີ່ພາໃຫ້ຜົນເກີດຂຶ້ນ ເຊັ່ນນີ້ແລ້ວ C ຈະມີຄວາມຮັບຜິດຊອບຕໍ່ການເສຍຊີວິດຂອງ D ຄືການທໍາຮ້າຍຮ່າງກາຍພາໃຫ້ເສຍຊີວິດ.

ຈາກກໍລະນີສຶກສາຕົວຢ່າງທີ 2 ທີ່ໄດ້ດັດປັບທີ 2. ຖ້າໃນກໍລະນີ ທີ C ໄດ້ຊົກຕ່ອຍຫົວຂອງ D ຈົນເຮັດໃຫ້ບາດເຈັບຫຼາຍພໍສົມຄວນຖ້າປະ D ໄວ້ແນວນັ້ນອາດເສຍຊີວິດໄດ້ ເມື່ອເຫັນແນວນັ້ນ C ຈຶ່ງໄດ້ເອີ້ນລົດໂຮງ ໝໍມາຮັບ ແຕ່ໄປຮອດໂຮງໝໍແລ້ວແພດໝໍໄດ້ປິ່ນປົວຜິດພາດ ຫຼື ບໍ່ເອົາໃຈ ໃສ່ໃນການປິ່ນປົວຈຶ່ງເຮັດໃຫ້ D ເສຍຊີວິດ. C ຈະມີຄວາມຮັບຜິດຊອບ ໃນຂໍ້ຫາໃດ.

ໃນກໍລະນີດັດປັບທີ 2 ນີ້ຖືເປັນເຫດແຊກຊ້ອນທີ່ເກີດຈາກ ບຸກຄົນອື່ນ. ໄພອັນຕະລາຍທີ່ປາກົດຜົນເປັນຈິງສຸດທ້າຍນັ້ນແມ່ນເກີດຈາກ ການປິ່ນປົວທີ່ຂາດຄວາມເອົາໃຈໃສ່ ແລະ ການປິ່ນປົວທີ່ຜິດພາດຂອງ ແພດໝໍຈຶ່ງເຮັດໃຫ້ D ເສຍຊີວິດ ຊຶ່ງຖືວ່າເປັນເຫດທີ່ໄປຕັດສາຍພົວພັນ ເຫດ ແລະ ຜົນທີ່ມີເງື່ອນໄຂຕໍ່ກັນຂອງການກະທໍາ C ຕໍ່ກັບ D ໄປ. ສະນັ້ນ, C ບໍ່ຈາເປັນຕ້ອງຮັບຜິດຊອບກັບຜົນສຸດທ້າຍເພາະວ່າໄພ ອັນຕະລາຍເກີດຈາກການກະທໍາຂອງ C ພຽງແຕ່ບາດເຈັບຍັງບໍ່ທັນສົ່ງຜົນ

ທີ່ເປັນອັນຕະລາຍຫຼາຍເຊັ່ນນີ້ແລ້ວ C ຈະມີຄວາມຮັບຜິດຊອບຕໍ່ D ຖານທຳຮ້າຍຮ່າງກາຍເທົ່ານັ້ນ.

ກໍລະນີສຶກສາຕົວຢ່າງທີ 3. E ໄດ້ຜິດຖຽງກັບ F ຈຶ່ງໄດ້ໃຊ້ທ່ອນໄມ້ຕີບໍລິເວນຫົວ ແລະ ໜ້າຂອງ F ຈຳນວນຫຼາຍຄັ້ງເຮັດໃຫ້ F ໄດ້ຮັບບາດເຈັບສາຫັດ ເມື່ອເຫັນວ່າ F ໝົດສະຕິແລ້ວ E ຈຶ່ງໄດ້ເອົາ F ໄປຖິ້ມໄວ້ກາງປ່າບ່ອນທີ່ບໍ່ມີຄົນເຫັນແລ້ວຫຼົບໜີໄປ. ໃນເວລາທີ່ F ຍັງໝົດສະຕິຢູ່ກາງປ່ານັ້ນ G ບັງເອີນຍ່າງໄປພົບເຫັນ F ຊຶ່ງ G ກໍມີຄວາມຄຽດແຄ້ນຕໍ່ F ມາກ່ອນແລ້ວກໍເລີຍໃຊ້ໄມ້ສີ່ຫຼ່ຽມຕີຫົວ F ໜຶ່ງບາດແລ້ວຫຼົບໜີໄປ. ຫຼັງຈາກນັ້ນ F ກໍໄດ້ເສຍຊີວິດ, ແຕ່ເມື່ອໄດ້ຊັນນະສູດການເສຍຊີວິດແລ້ວຈຶ່ງຮູ້ວ່າສາເຫດຕົ້ນຕໍແມ່ນຍ້ອນອາການບາດເຈັບທີ່ຖືກ E ຕີເຮັດໃຫ້ເລືອດອອກໃນສະໝອງ, ສ່ວນການຖືກທຳຮ້າຍໂດຍ G ນັ້ນແມ່ນໄປເລັ່ງໃຫ້ເລືອດອອກໃນສະໝອງໄວຂຶ້ນ ແລະ ເຮັດໃຫ້ເສຍຊີວິດໄວຂຶ້ນກວ່າເກົ່າເລັກໜ້ອຍ. E ແລະ G ຈະມີຄວາມຮັບຜິດຊອບໃນຂໍ້ຫາໃດ.

ໃນກໍລະນີນີ້ການເສຍຊີວິດຂອງ F ແມ່ນເກີດຈາກການບາດເຈັບ ແລະ ເລືອດອອກໃນສະໝອງ ຊຶ່ງໄພອັນຕະລາຍໂດຍກົງເກີດຈາກ E ເອົາທ່ອນໄມ້ຕີບໍລິເວນຫົວ ແລະ ໜ້າຈຳນວນຫຼາຍຄັ້ງຈົນເຮັດໃຫ້ໄດ້ຮັບບາດເຈັບສາຫັດ ແລະ ໝົດສະຕິທັງຍັງຖືກນຳໄປຖິ້ມປະຢູ່ກາງປ່າບ່ອນທີ່ບໍ່ມີຄົນເຫັນ. ການກະທຳດັ່ງກ່າວຖືເປັນໄພອັນຕະລາຍທີ່ພາໃຫ້ເກີດຜົນເປັນຈິງສຸດທ້າຍ. ສະນັ້ນ, E ຈະຕ້ອງຮັບຜິດຊອບຕໍ່ການເສຍຊີວິດຂອງ F ຖານທຳຮ້າຍຮ່າງກາຍພາໃຫ້ເສຍຊີວິດ

ສຳລັບ G ທີ່ໄດ້ໃຊ້ໄມ້ສີ່ຫຼ່ຽມຕີຫົວ F ໜຶ່ງບາດນັ້ນເປັນໄພອັນຕະລາຍທີ່ບໍ່ສົ່ງຜົນຮ້າຍແຮງກໍ່ໃຫ້ເກີດຜົນສຸດທ້າຍໄດ້ ແມ່ນຢູ່ວ່າມັນໄປເລັ່ງໃຫ້ເລືອດອອກໃນສະໝອງໄວຂຶ້ນ ແລະ ເຮັດໃຫ້ເສຍຊີວິດໄວຂຶ້ນກວ່າເກົ່າເລັກໜ້ອຍນັ້ນ ຂໍ້ເທັດຈິງດັ່ງກ່າວບໍ່ເອົາມາເປັນສ່ວນໜຶ່ງໃນ

ການພິຈາລະນາໄພອັນຕະລາຍ ແຕ່ຖືວ່າການຕີພຽງຄັ້ງດຽວນີ້ບໍ່ພາໃຫ້ເສຍຊີວິດໄດ້ເຊັ່ນນີ້ແລ້ວ G ກໍບໍ່ຕ້ອງຮັບຜິດຊອບໃນຜົນສຸດທ້າຍ ແຕ່ຕ້ອງຮັບຜິດຊອບຜົນເທົ່າກັບການກະທຳຂອງຕົນຄືການທຳຮ້າຍຮ່າງກາຍເທົ່ານັ້ນ.

ກໍລະນີສຶກສາຕົວຢ່າງທີ 4. H ໄດ້ມີເລື່ອງຜິດຖຽງກັບ I (ອາຍຸ 58 ປີ) ຢູ່ເທິງຖະໜົນ H ໄດ້ຈັບຄໍເສື້ອຂອງ I ແລ້ວຊຸກອອກໄປ ເຮັດໃຫ້ I ລົ້ມລົງ ແຕ່ແຮງກະທົບຈາກການລົ້ມນັ້ນໄດ້ເຮັດໃຫ້ I ຊຶ່ງມີພະຍາດຫົວໃຈມາກ່ອນຢູ່ແລ້ວເກີດມີອາການກ້າມເນື້ອຫົວໃຈຕາຍກະທັນຫັນຈຶ່ງເຮັດໃຫ້ I ເສຍຊີວິດ. H ຈະມີຄວາມຮັບຜິດຊອບຕໍ່ການເສຍຊີວິດຂອງ I ຫຼື ບໍ່.

ໃນກໍລະນີນີ້ແມ່ນຢູ່ວ່າ I ມີພະຍາດຫົວໃຈ ແນວໃດກໍຕາມ ອາການດັ່ງກ່າວບຸກຄົນທົ່ວໄປບໍ່ສາມາດຮັບຮູ້ໄດ້ ສະນັ້ນຂໍ້ເທັດຈິງດັ່ງກ່າວບໍ່ຄວນເອົາມາເປັນສ່ວນໜຶ່ງໃນການພິຈາລະນາໄພອັນຕະລາຍ ໝາຍຄວາມວ່າ H ຊຸກ I ລົ້ມລົງຜູ້ທີ່ບໍ່ມີຄວາມຜິດປົກກະຕິຫຍັງພຽງແຕ່ຊຸກລົ້ມເທົ່ານີ້ໄພອັນຕະລາຍທີ່ເກີດຈາກການຊຸກບໍ່ຄວນຈະເຮັດໃຫ້ເສຍຊີວິດໄດ້ ການທີ່ລາວເສຍຊີວິດນັ້ນມັນມາຈາກສາເຫດອື່ນ. ສະນັ້ນ, ໄພອັນຕະລາຍທີ່ເກີດສຸດທ້າຍນັ້ນມັນຕັດສາຍສຳພັນເຫດກັບຜົນໃນເບື້ອງຕົ້ນເຊັ່ນນີ້ H ຈະຮັບຜິດຊອບພຽງທຳຮ້າຍຮ່າງກາຍເທົ່ານັ້ນ.

ກໍລະນີສຶກສາຕົວຢ່າງທີ 5. J ໄດ້ມີເລື່ອງຜິດຖຽງກັບ K (ອາຍຸ 26 ປີ) ຢູ່ເທິງຖະໜົນຈຶ່ງໄດ້ຊົກໜ້າ K ຈຳນວນ 1 ຄັ້ງ ແຕ່ອາການບາດເຈັບຂອງ K ນັ້ນໂດຍປົກກະຕິແລ້ວສາມາດຮັກສາໃຫ້ເຊົາໄດ້ພາຍໃນ 10 ວັນ, ແຕ່ເນື່ອງຈາກວ່າ K ມີຄວາມບົກພ່ອງທາງສະໝອງມາກ່ອນແລ້ວ (ຄວາມບົກພ່ອງທາງສະໝອງນັ້ນບໍ່ສາມາດຮູ້ໄດ້ຈາກພາຍນອກ) ຍ້ອນແຮງກະທົບຈາກການຖືກຊົກຕ່ອຍນັ້ນຈຶ່ງເຮັດໃຫ້ພະຍາດດັ່ງກ່າວ

ຮ້າຍແຮງຂຶ້ນ ແລະ ເຮັດໃຫ້ K ເສຍຊີວິດ. J ຈະມີຄວາມຮັບຜິດຊອບ ໃນຂໍ້ຫາໃດ.

ໃນກໍລະນີນີ້ເຫັນວ່າການກະທຳຂອງ J ມັນສາມາດກໍ່ໃຫ້ເກີດ ໄພອັນຕະລາຍເຮັດໃຫ້ K ເສຍຊີວິດໄດ້ ຫຼື ບໍ່ ແນ່ນອນຫາກ J ຊົກຕ່ອຍຜູ້ ທີ່ມີອາການເຈັບປ່ວຍກໍອາດຈະເສຍຊີວິດໄດ້ ແຕ່ຫາກຊົກຕ່ອຍຄົນ ແຂງແຮງພຽງຄັ້ງດຽວຄືຊິບໍ່ມີຜົນກະທົບຮ້າຍແຮງປານໃດ. ແມ່ນຢູ່ວ່າ K ມີອາການບົກຜ່ອງທາງສະໝອງ ແນວໃດກໍຕາມອາການດັ່ງກ່າວບຸກຄົນທົ່ວ ໄປບໍ່ສາມາດຮັບຮູ້ໄດ້. ສະນັ້ນ, ຂໍ້ເທັດຈິງດັ່ງກ່າວບໍ່ຄວນເອົາມາເປັນສ່ວນ ໜຶ່ງໃນການພິຈາລະນາໄພອັນຕະລາຍ ໝາຍຄວາມວ່າ J ຊົກຕ່ອຍ K ຜູ້ທີ່ ບໍ່ມີຄວາມຜິດປົກກະຕິຫຍັງພຽງແຕ່ຊົກໜຶ່ງຄັ້ງເທົ່ານີ້ໄພອັນຕະລາຍທີ່ເກີດ ຈາກການຊົກໜຶ່ງຄັ້ງນີ້ບໍ່ຄວນຈະເຮັດໃຫ້ເສຍຊີວິດໄດ້. ໃນເມື່ອເປັນແນວ ນີ້ມັນບໍ່ໄດ້ປາກົດຜົນເປັນຈິງຫຍັງຈາກໄພອັນຕະລາຍຈາກການຊົກຕ່ອຍ. ການທີ່ລາວເສຍຊີວິດນັ້ນມັນມາຈາກສາເຫດອື່ນເຊັ່ນນີ້ແລ້ວ J ກໍບໍ່ຕ້ອງ ຮັບຜິດຊອບກັບຜົນສຸດທ້າຍທີ່ເກີດຂຶ້ນ ແຕ່ຕ້ອງຮັບຜິດຊອບຖານທຳຮ້າຍ ຮ່າງກາຍເທົ່ານັ້ນ.

2. ການສະແດງອອກທາງດ້ານການເມີນເສີຍ

ການກະທຳຜິດດ້ວຍການເມີນເສີຍຖືເປັນການກະທຳຢ່າງໜຶ່ງ ຊຶ່ງຄວາມຮັບຜິດຊອບແມ່ນເທົ່າໆກັບການກະທຳ, ການເມີນເສີຍໃຫ້ເກີດ ຜົນນັ້ນເປັນການບົ່ງການໃຫ້ຮ່າງກາຍຢູ່ເສີຍໆ ທັງໆທີ່ມີໜ້າທີ່ຕ້ອງເຄື່ອນ ໄຫວໂດຍປົກກະຕິແລ້ວການກະທຳໝາຍເຖິງການເຄື່ອນໄຫວບາງຄັ້ງຈຶ່ງ ອາດຝືນຄວາມຮູ້ສຶກຢູ່ເພາະວ່າການບໍ່ເຄື່ອນໄຫວນັ້ນເປັນສິ່ງທີ່ເບິ່ງບໍ່ເຫັນ. ການເມີນເສີຍທີ່ຕ້ອງຮັບຜິດນັ້ນໄດ້ແກ່ການປ່ອຍໃຫ້ຜົນເສຍຫາຍເກີດຂຶ້ນ ໂດຍບໍ່ເຮັດຫຍັງທັງໆທີ່ມີໜ້າທີ່ປ້ອງກັນ, ເປັນການສະແດງໃຫ້ເຫັນ

ເຈດຕະນາຮ້າຍຢ່າງໜຶ່ງມີຄ່າເທົ່າກັບເປັນເງື່ອນໄຂໃຫ້ເກີດຜົນເສຍຫາຍຂຶ້ນ ຄືກັນກັບການກະທຳ ແຕ່ການຈະກຳນົດໃຫ້ຮັບຜິດຊອບເທົ່າໃດນັ້ນຕ້ອງມີການກຳນົດໄວ້ຊັດເຈນ, ຖ້າບໍ່ດັ່ງນັ້ນແລ້ວຄວາມຮັບຜິດຊອບຈະຂະຫຍາຍອອກໄປແບບບໍ່ມີຂອບເຂດເຊັ່ນ: ໃນເຮືອນຫຼັງໜຶ່ງມີເດັກນ້ອຍຜູ້ໜຶ່ງກຳລັງອົດອາຫານຍ້ອນຖືກພໍ່ແມ່ປະຖິ້ມ. ຄົນທີ່ຢູ່ເຮືອນໃກ້ຄຽງໃນບໍລິເວນບ້ານນັ້ນກໍຮູ້, ຄົນໃນເມືອງ, ໃນແຂວງກໍໄດ້ຍິນຂ່າວຕະຫຼອດຈົນຄົນທັງປະເທດ ແລະ ຂະຫຍາຍໄປຈົນເຖິງຄົນທົ່ວໂລກກໍຮູ້ວ່າເດັກນ້ອຍຜູ້ນີ້ອົດອາຫານ ແຕ່ບໍ່ມີໃຜເຂົ້າຊ່ວຍເຫຼືອໃຫ້ການລ້ຽງດູ. ບຸກຄົນທັງຫຼາຍດັ່ງກ່າວຈະຕ້ອງຮ່ວມຮັບຜິດຊອບທາງອາຍາຕໍ່ຄວາມຕາຍຂອງເດັກຍ້ອນການບໍ່ໃຫ້ຄວາມຊ່ວຍເຫຼືອຂອງແຕ່ລະຄົນແນວນັ້ນ ຫຼື ບໍ ຊຶ່ງເຫັນວ່າເປັນເລື່ອງທີ່ບໍສົມຄວນ. ໃນສະພາບແບບນີ້ໃນແງ່ຂອງກົດໝາຍຈຳກັດຄວາມສົນໃຈໃຫ້ແຄບລົງຢູ່ທີ່ການເມີນເສີຍຂອງພໍ່ແມ່ຂອງເດັກເທົ່ານັ້ນກໍຍ້ອນວ່າເປັນຜູ້ໃຫ້ກຳເນີດມາແລ້ວ, ໃນເມື່ອເດັກຍັງຊ່ວຍຕົນເອງບໍ່ໄດ້ ພໍ່ແມ່ກໍຕ້ອງຮັບຜິດຊອບຈົນກວ່າເດັກຈະຊ່ວຍຕົນເອງໄດ້. ດັ່ງນັ້ນ, ໜ້າທີ່ຈຶ່ງຕ້ອງກະທຳເພື່ອປ້ອງກັນຜົນໂດຍກົງປະກອບມີໜ້າທີ່ຕາມກົດໝາຍກັບສິນທຳ ແລະ ໜ້າທີ່ທີ່ຕ້ອງກະທຳເພື່ອປ້ອງກັນຜົນເຊັ່ນ: ໜ້າທີ່ຂອງຜູ້ທີ່ມີຄວາມສຳພັນສ່ວນຕົວ, ໜ້າທີ່ເກີດຍ້ອນຕົນເປັນຜູ້ກໍເຫດ, ໜ້າທີ່ທີ່ເກີດຕາມສັນຍາເປັນຕົ້ນ.

ການກະທຳດ້ວຍການເມີນເສີຍເປັນການກະທຳທີ່ບໍ່ໄດ້ປາກົດອອກມາພາຍນອກ ຊຶ່ງສະແດງເຖິງສະພາບຈິດໃຈຂອງຜູ້ກະທຳ, ເຫດຈູງໃຈໃນການລະເວັ້ນເນື່ອງມາຈາກແຮງກົດດັນພາຍໃນຫຼາຍຢ່າງຫຼາຍປະການມາບັງຄັບໃຫ້ຮ່າງກາຍຝືນຕໍ່ໜ້າທີ່ຈຶ່ງເປັນເລື່ອງຍາກທີ່ຈະພິສູດເຈດຕະນານັ້ນໄດ້. ການເມີນເສີຍຂອງບຸກຄົນອາດເນື່ອງມາຈາກການລະເວັ້ນ, ລະເລີຍ, ການເຜີ ແລະ ຜົນທີ່ເກີດຂຶ້ນເປັນຍ້ອນມີເຫດຕ່າງໆມາ

ປະກອບກັນໂດຍຜູ້ເມີນເສີຍບໍ່ໄດ້ກໍ່ຂຶ້ນ. ດັ່ງນັ້ນ, ການຄົ້ນຫາຄວາມຮັບຜິດຊອບຂອງຜູ້ເມີນເສີຍ ຫຼື ຈິດໃຈທີ່ຊົ່ວຮ້າຍຈຶ່ງຕ້ອງມີການວາງຫຼັກເກນກ່ຽວກັບໜ້າທີ່ໂດຍສະເພາະເຈາະຈົງ.

ການກຳນົດເຈດຕະນາຂອງຜູ້ເມີນເສີຍຕ້ອງເລີ່ມຈາກການທີ່ຜູ້ເມີນເສີຍມີການຮູ້ສຳນຶກ ຫຼື ຮູ້ຂໍ້ເທັດຈິງ ຫຼື ບໍ ໝາຍຄວາມວ່າຜູ້ນັ້ນຮູ້, ຄວນຈະຮູ້ ຫຼື ວ່າຮູ້ໃນເຫດການທີ່ຈະເກີດຂຶ້ນເນື່ອງຈາກການເມີນເສີຍຂອງຕົນ ແລະ ກໍຕ້ອງເບິ່ງອີກວ່າເຈດຕະນາຂອງຜູ້ເມີນເສີຍຕ້ອງການໃຫ້ມີຄົນຕາຍ, ບາດເຈັບ ຫຼື ບໍ ແຕ່ກໍໃຫ້ຖືວ່າຢ່າງໜ້ອຍຜູ້ນັ້ນເຫັນໄດ້ແລ້ວວ່າຕ້ອງມີຄວາມເສຍຫາຍເກີດຂຶ້ນ, ສ່ວນໃນກໍລະນີທີ່ຜູ້ເມີນເສີຍບໍ່ຍອມຮັບຮູ້ທັງໆທີ່ຕົນຕ້ອງຮູ້ກໍເທົ່າກັບວ່າຮູ້ແລ້ວ ແລະ ເນື່ອງຈາກຄວາມຍາກໃນການພິສູດເຈດຕະນາເມີນເສີຍແທ້ຈິງ ຊຶ່ງເປັນຂໍ້ເທັດຈິງໃນທາງຈິດຕະວິທະຍາຈຶ່ງຕ້ອງມີການຄາດຄະເນເອົາໂດຍສະເພາະລະດັບຂອງການເມີນເສີຍໂດຍເຈດຕະນາກັບປະໝາດ ເຖິງວ່າເຮົາບໍ່ອາດຈະເບິ່ງເຫັນວ່າຜູ້ນັ້ນຂ້າຜູ້ອື່ນຕາຍດ້ວຍການເມີນເສີຍ ແຕ່ຫາກມີຫຼັກຖານຊັດເຈນສະແດງວ່າຜູ້ນັ້ນຮູ້ເຖິງໜ້າທີ່ຂອງຕົນແລ້ວ ແລະ ຮູ້ເຖິງຜົນທີ່ອາດຈະເກີດຂຶ້ນຈາກການເມີນເສີຍຂອງຕົນ. ການເມີນເສີຍປ່ອຍໃຫ້ເງື່ອນໄຂຕ່າງໆເກີດຂຶ້ນຈົນບັນລຸຜົນໂດຍມີເຈດຕະນາໃຫ້ເກີດມີຜົນດັ່ງກ່າວເປັນເຈດຕະນາຂ້າຄົນໂດຍເມີນເສີຍ.

ທິດສະດີນີ້ແມ່ນນຳໃຊ້ພິຈາລະນາບັນດາກໍລະນີສຶກສາດັ່ງຕໍ່ໄປນີ້ ເພື່ອໄຈ້ແຍກໃຫ້ເຫັນການກະທຳທີ່ເປັນການເມີນເສີຍຢູ່ໃນລະດັບໃດ ແລະ ມີຄວາມເປັນອັນຕະລາຍທຽບເທົ່າກັບການກະທຳແນວໃດດັ່ງກໍລະນີສຶກສາຕົວຢ່າງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 6: A (ອາຍຸ 28 ປີ) ໄດ້ໄປຕັ້ງແຄ້ມຢູ່ແຄມໜອງນ້ຳກັບລູກຊາຍກໍຄື B (ອາຍຸ 6 ປີ) ແລະ ມີໝູ່ກໍຄື C (ອາຍຸ 25 ປີ),

ໃນຂະນະທີ່ B ພວມຫຼີ້ນຢູ່ເທິງຂົວຂ້າມໜອງຢູ່ນັ້ນໄດ້ພະລາດລົ້ມຕົກລົງໜອງ, A ຄິດຢາກລອຍນ້ຳໄປຊ່ວຍ B ແຕ່ຮູ້ສຶກຢ້ານຈົນຂາລ່ອຍ ແລະ ຕື່ນຕົກໃຈແຮງຈົນບໍ່ສາມາດຄຸມສະຕິໄດ້ຈຶ່ງບໍ່ສາມາດໄປຊ່ວຍ ແລະ ຮ້ອງຂໍຄວາມຊ່ວຍເຫຼືອໄດ້. C ເອງກໍເຫັນສະພາບ B ທີ່ພວມຈົມນ້ຳ ແຕ່ກໍບໍ່ສາມາດໄປຊ່ວຍໄດ້ເພາະລອຍນ້ຳບໍ່ເປັນຈຶ່ງໄດ້ຮ້ອງຂຶ້ນ 1 ຄັ້ງວ່າ "ຊ່ວຍແດ່ເດັກນ້ອຍຕົກນ້ຳ" ແຕ່ຫຼັງຈາກນັ້ນເມື່ອເຫັນ A ມີອາການຕື່ນຕົກໃຈຈຶ່ງເຮັດໃຫ້ C ເປັນຫ່ວງ ແລະ ສົນໃຈແຕ່ A ໂດຍບໍ່ໄດ້ຊ່ວຍເຫຼືອ B ຕື່ມອີກ. ພ້ອມກັນນັ້ນ D (ບໍ່ໄດ້ຮູ້ຈັກກັບ A, B ແລະ C) ຊຶ່ງຕັ້ງແຄ້ມຢູ່ບໍລິເວນໃກ້ຄຽງນັ້ນກໍເຫັນສະພາບຂອງ B ທີ່ພວມຈົມນ້ຳຢູ່ ແຕ່ບໍ່ໄດ້ໄປຊ່ວຍທັງບໍ່ໄດ້ຮ້ອງຂໍຄວາມຊ່ວຍເຫຼືອ. ພ້ອມກັນນັ້ນ E ຊຶ່ງໄດ້ຂັບລົດຜ່ານເຂດຕັ້ງແຄ້ມດັ່ງກ່າວກໍເຫັນສະພາບ B ທີ່ພວມຈົມນ້ຳຢູ່ ແຕ່ກໍຄິດວ່າບໍ່ກ່ຽວກັບຕົນ ຈຶ່ງໄດ້ຂັບລົດຜ່ານໄປເລີຍທັງບໍ່ໄດ້ຮ້ອງຂໍຄວາມຊ່ວຍເຫຼືອຈາກຜູ້ອື່ນ. A, C, D, E ຈະມີຄວາມຮັບຜິດຊອບທາງອາຍາ ຫຼື ບໍ່.

ໃນກໍລະນີສຶກສາຕົວຢ່າງນີ້ຈະເຫັນວ່າ A ແມ່ນບໍ່ມີເງື່ອນໄຂພໍທີ່ຈະຊ່ວຍໄດ້ແລ້ວຍ້ອນວ່າຕົນເອງຕື່ນຕົກໃຈແຮງຈົນບໍ່ສາມາດຄຸມສະຕິໄດ້ ແລະ ຂາກໍລ່ອຍຈຶ່ງບໍ່ມີຄວາມຮັບຜິດຊອບທາງອາຍາ. ສ່ວນ C ກໍແມ່ນໄດ້ປະຕິບັດເງື່ອນໄຂການຊ່ວຍເຫຼືອແລ້ວດ້ວຍການຮ້ອງຂຶ້ນ 1 ຄັ້ງ ແລະ ຜູ້ກ່ຽວກໍລອຍນ້ຳບໍ່ເປັນພ້ອມນັ້ນຜູ້ກ່ຽວຍັງໄດ້ໄປຊ່ວຍ A ທີ່ມີອາການຂາລ່ອຍຢູ່ນັ້ນຈຶ່ງບໍ່ມີຄວາມຮັບຜິດຊອບທາງອາຍາ.

ສຳລັບ D ຊຶ່ງຢູ່ບໍລິເວນໃກ້ຄຽງນັ້ນກໍໄດ້ຍິນ C ຮ້ອງຂໍຄວາມຊ່ວຍເຫຼືອ ແລະ ເຫັນສະພາບ B ພວມຈົມນ້ຳຢູ່ ແຕ່ບໍ່ໃຫ້ຄວາມຊ່ວຍເຫຼືອໃດໆ ນັ້ນຈຶ່ງມີຄວາມຮັບຜິດຊອບຖານບໍ່ໃຫ້ຄວາມຊ່ວຍເຫຼືອແກ່ບຸກຄົນອື່ນໃນເວລາຕົກຢູ່ໃນໄພອັນຕະລາຍເນື່ອງຈາກວ່າຜູ້ກ່ຽວບໍ່ໄດ້ມີໜ້າທີ່ປ້ອງກັນຜົນ ເປັນພຽງບຸກຄົນທົ່ວໄປທີ່ໄດ້ຮູ້ແລະເຫັນສະພາບ ແລະ ບໍ່ມີ

ອະຄະຕິ ຫຼື ເຈດຕະນາອື່ນໂດຍເຂົ້າໃຈວ່າບໍ່ກ່ຽວກັບຕົນເລີຍບໍ່ຊ່ວຍເທົ່ານັ້ນເອງ. ສ່ວນວ່າ E ຊຶ່ງໄດ້ຂັບຂີ່ລົດກາຍມາແຄ້ມນັ້ນກໍເຫັນສະພາບ B ພວມຈົມນ້ຳຢູ່ ແລະ ຍັງບໍ່ມີບຸກຄົນໃດເຂົ້າໄປຊ່ວຍເຫຼືອ ແຕ່ E ກໍບໍ່ໃຫ້ຄວາມຊ່ວຍເຫຼືອໃດໆ ຈຶ່ງມີຄວາມຮັບຜິດຊອບຖານບໍ່ໃຫ້ຄວາມຊ່ວຍເຫຼືອແກ່ບຸກຄົນອື່ນໃນເວລາຕົກຢູ່ໃນໄພອັນຕະລາຍເຊັ່ນກັນ.

ກໍລະນີສຶກສາຕົວຢ່າງທີ 7. E ໄດ້ເຂົ້າໄປເຮືອນຂອງ F ໃນເວລາກາງເດືກເພື່ອລັກຊັບຫຼັງຈາກທີ່ໄດ້ລັກເອົາຊັບສິ່ງຂອງແລ້ວໃນຂະນະທີ່ເອົາຕົວຫຼົບໜີນັ້ນໄດ້ຕົກລົງໄປໃນຂຸມກັບດັກທີ່ຖືກຂຸດໄວ້ຢູ່ເດີ່ນເຮືອນຂອງ F ຈຶ່ງເຮັດໃຫ້ໄດ້ຮັບບາດເຈັບ ແລະ ບໍ່ສາມາດເຄື່ອນເໜັງໄດ້. ຕອນເຊົ້າຂອງມື້ຕໍ່ມາ F ກໍໄດ້ພົບເຫັນ E ທີ່ຕົກລົງໄປໃນຂຸມ ແລະ ຂົດຕົວຢູ່ຍ້ອນໄດ້ຮັບບາດເຈັບ ແຕ່ຄິດຢາກລົງໂທດເພື່ອສັ່ງສອນ E ທີ່ເປັນໂຈນຈຶ່ງບໍ່ຊ່ວຍ ແລະ ທັງບໍ່ແຈ້ງເຈົ້າໜ້າທີ່. ຈາກນັ້ນ, ອາການບາດເຈັບຂອງ E ຮ້າຍແຮງຂຶ້ນເຮັດໃຫ້ E ເສຍຊີວິດໃນ 2 ມື້ຕໍ່ມາ. F ຈະມີຄວາມຮັບຜິດຊອບທາງອາຍາ ຫຼື ບໍ່.

ໃນກໍລະນີນີ້ເຫັນວ່າ F ມີເຈດຕະນາພຽງແຕ່ຕ້ອງການລົງໂທດເພື່ອສັ່ງສອນ E ເປັນໂຈນເທົ່ານັ້ນຈຶ່ງບໍ່ໃຫ້ການຊ່ວຍເຫຼືອໂດຍປະປ່ອຍໃຫ້ຢູ່ໃນຂຸມແບບນັ້ນ ແລະ ທັງບໍ່ແຈ້ງເຈົ້າໜ້າທີ່. ເມື່ອພິຈາລະນາຂໍ້ເທັດຈິງແລ້ວ E ບາດເຈັບຈົນບໍ່ສາມາດເຄື່ອນເໜັງໄດ້ ແລະ ຫາກໄດ້ຮັບການຊ່ວຍເຫຼືອ ຫຼື ແຈ້ງຕໍ່ເຈົ້າໜ້າທີ່ອາດຈະບໍ່ມີອັນຕະລາຍເຖິງແກ່ຊີວິດ. ສຸດທ້າຍ E ກໍເສຍຊີວິດໃນ 2 ວັນຕໍ່ມາເນື່ອງຈາກອາການບາດເຈັບແຮງຂຶ້ນເຊັ່ນນີ້ແລ້ວ F ຈະຕ້ອງຮັບຜິດຊອບຖານບໍ່ໃຫ້ຄວາມຊ່ວຍເຫຼືອແກ່ບຸກຄົນອື່ນໃນເວລາຕົກຢູ່ໃນໄພອັນຕະລາຍ.

ຈາກກໍລະນີສຶກສາຕົວຢ່າງທີ 7 ແຕ່ດັດປັບ. ໃນກໍລະນີ ຕອນເຊົ້າຂອງມື້ຕໍ່ມາ F ໄດ້ພົບເຫັນ E ທີ່ຕົກລົງໄປໃນຂຸມ ແລະ ຂົດຕົວຢູ່ຍ້ອນໄດ້

ຮັບບາດເຈັບ ແຕ່ F ຄິດວ່າບໍ່ຢາກຊ່ວຍ E ທັງຄິດວ່າເຖິງ E ຈະເສຍຊີວິດ ກໍບໍ່ເປັນຫຍັງຈຶ່ງໄດ້ເມີນເສີຍບໍ່ໃຫ້ການຊ່ວຍເຫຼືອໃດໆ ທັງບໍ່ໃຫ້ອາຫານ ແລະ ນ້ຳດື່ມ. ຫຼັງຈາກນັ້ນມາ 6 ວັນ E ຈຶ່ງໄດ້ເສຍຊີວິດຍ້ອນອາການບາດ ເຈັບ ແລະ ຂາດອາຫານ. F ຈະມີຄວາມຮັບຜິດຊອບທາງອາຍາສະຖານໃດ ຫຼື ບໍ່.

ໃນກໍລະນີນີ້ເຫັນວ່າ F ມີເຈດຕະນາບໍ່ຊ່ວຍເຫຼືອ E ແລະ ຍັງຄິດ ວ່າ E ເສຍຊີວິດກໍບໍ່ເປັນຫຍັງເຊັ່ນນີ້ກໍສະແດງໃຫ້ເຫັນເຈດຕະນາຮ້າຍທີ່ ເປັນເງື່ອນໄຂໃຫ້ເກີດຜົນເສຍຫາຍຄືກັນກັບການກະທຳແລ້ວ. ຜູ້ກ່າງວຣັບ ຮູ້ຂໍ້ເທັດຈິງວ່າການບໍ່ໃຫ້ການຊ່ວຍເຫຼືອໃດໆ ທັງບໍ່ໃຫ້ອາຫານ ແລະ ນ້ຳ ດື່ມເກີນ 5 ວັນແກ່ຄົນບາດເຈັບແບບນີ້ຈະເກີດຜົນອັນຕະລາຍແກ່ຊີວິດ ຂຶ້ນໄດ້, ສຸດທ້າຍແລ້ວ E ກໍໄດ້ເສຍຊີວິດແທ້ຍ້ອນອາການບາດເຈັບ ແລະ ຂາດອາຫານ. ການເມີນເສີຍທີ່ເປັນການປະປ່ອຍໃຫ້ຜົນເກີດຂຶ້ນຈົນບັນລຸ ຜົນແບບນີ້ຖືເປັນເຈດຕະນາຂ້າຄົນໂດຍເມີນເສີຍນັ້ນເອງ. F ຈະມີຄວາມ ຮັບຜິດຊອບຖານຄາດຕະກຳ.

ກໍລະນີສຶກສາຕົວຢ່າງທີ່ 8. G ພວມຂັບລົດຢູ່ໃນເວລາກາງເດືກ ນັ້ນໄດ້ໄປຕຳເອົາ H ທີ່ມຶນເມົາ ແລະ ຍ່າງເຊໄປເຊມາຢູ່ກາງຖະໜົນ, ເວລາ ນັ້ນ G ໄດ້ລົງຈາກລົດມາເບິ່ງສະພາບຂອງ H ເຫັນວ່າ H ໄດ້ຮັບບາດເຈັບ ສາຫັດ ແຕ່ເນື່ອງຈາກ G ບໍ່ຢາກໃຫ້ຄົນອື່ນຮູ້ເລື່ອງເກີດອຸບປະຕິເຫດຈຶ່ງ ໄດ້ເອົາ H ຂຶ້ນນັ່ງຕັ່ງດ້ານຫຼັງຂອງລົດແລ້ວຂັບພາ H ກັບເມືອເຮືອນຂອງ ຕົນແລ້ວເອົາ H ໄປປະໄວ້ສາງເຄື່ອງບ່ອນບໍ່ມີຄົນເຫັນ. ເວລານັ້ນ G ຄິດ ວ່າຖ້າປະຖິ້ມ H ໄວ້ແນວນັ້ນ H ກໍຄົງຈະເສຍຊີວິດ ແຕ່ເຖິງເປັນແນວນັ້ນ ກໍບໍ່ເປັນຫຍັງຖ້າຄົນອື່ນບໍ່ຮູ້. ດັ່ງນັ້ນ, ຈຶ່ງໄດ້ຖິ້ມ H ໄວ້ແນວນັ້ນ ໃນມື້ຕໍ່ມາ H ກໍໄດ້ເສຍຊີວິດຍ້ອນໄດ້ຮັບບາດເຈັບຈາກອຸບປະຕິເຫດ. G ຈະມີຄວາມ ຮັບຜິດຊອບທາງອາຍາສະຖານໃດ ຫຼື ບໍ່.

ໃນກໍລະນີນີ້ເຫັນວ່າ G ມີເຈດຕະນາຮ້າຍ ຊຶ່ງໄດ້ທຳລາຍຫຼັກຖານ ຂອງການກະທຳຜິດດ້ວຍການເອົາ H ທີ່ຖືກລົດຕົນຕຳໄປເຊື່ອງໄວ້ຢູ່ສາງ ເຄື່ອງເຮືອນຂອງຕົນບ່ອນບໍ່ມີຄົນເຫັນ ແລະ ກໍຄາດຄະເນໄດ້ວ່າຫາກປະ ຖິ້ມໄວ້ແນວນັ້ນໂດຍບໍ່ໃຫ້ການຊ່ວຍເຫຼືອໃດໆ H ອາດເສຍຊີວິດແນ່ນອນ ແຕ່ເຖິງເປັນແນວນັ້ນກໍບໍ່ເປັນຫຍັງຖ້າຄົນອື່ນບໍ່ຮູ້. ນີ້ກໍສະແດງໃຫ້ເຫັນ ແລ້ວວ່າ G ມີເຈດຕະນາປະປ່ອຍໃຫ້ຜົນເກີດ ຊຶ່ງມີຄ່າເທົ່າກັບເປັນ ເງື່ອນໄຂໃຫ້ເກີດຜົນເສຍຫາຍຂຶ້ນຄືກັນກັບການກະທຳແລ້ວ ແລະ ຖືວ່າ ເປັນເຈດຕະນາຂ້າຄົນດ້ວຍການເມີນເສີຍເຊັ່ນນີ້ G ຈະມີຄວາມ ຮັບຜິດຊອບຖານຄາດຕະກຳ.

ນອກຈາກນັ້ນ G ຍັງຕ້ອງໄດ້ຮັບຜິດຊອບຖານການລະເມີດ ກົດຈາລະຈອນທີ່ພາໃຫ້ເກີດອຸບປະຕິເຫດ ແລະ ການທຳລາຍຫຼັກຖານອີກ ດ້ວຍ.

ບົດທີ 4
ການກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມກໍ່ການກະທຳຜິດ

1. ການກະກຽມໃຫ້ແກ່ການກະທຳຜິດ

ປະມວນກົດໝາຍອາຍາໄດ້ໃຫ້ຄວາມໝາຍຂອງການກະກຽມໃຫ້ແກ່ການກະທຳຜິດໄວ້ວ່າການກະກຽມໃຫ້ແກ່ການກະທຳຜິດແມ່ນການຫ້າງຫາພາຫະນະ, ອຸປະກອນ, ການສ້າງເງື່ອນໄຂ ຫຼື ປັດໄຈອື່ນໃຫ້ແກ່ການກະທຳຜິດໂດຍເຈດຕະນາ ຜູ້ກະທຳຜິດຮູ້ດີວ່າການເຄື່ອນໄຫວຂອງຕົນໄດ້ຜ່ານການຄົ້ນຄິດ, ຮິ່ນຕອງ, ການວາງແຜນ, ຫາວິທີການກະທຳ ແລະ ຈະລົງມືກະທຳຕາມທີ່ຕົນໄດ້ຄິດວາງແຜນການເອົາໄວ້ເຊັ່ນ: ການກະກຽມຫ້າງຫາປັບປຸງອາວຸດ, ດັດແປງອຸປະກອນ, ເຄື່ອງມື, ພາຫະນະ, ຈຳນວນຄົນ, ເລືອກເຟັ້ນເປົ້າໝາຍ, ຈັດຫາສະຖານທີ່ ຫຼື ໄດ້ປະກົດຕົວໃນສະຖານທີ່ທີ່ໄດ້ຈັດຫາເອົາໄວ້ເພື່ອລໍຖ້າໂອກາດທີ່ເໝາະສົມແລ້ວຈຶ່ງລົງມືກະທຳຜິດ ແລະ ການກະທຳດັ່ງກ່າວໄດ້ກຳນົດເປັນການກະທຳຜິດໃນຖານການກະກຽມໃຫ້ແກ່ການກະທຳຜິດ. ເຖິງແມ່ນວ່າການເຄື່ອນໄຫວກະທຳຜິດຕົວຈິງນັ້ນຍັງບໍ່ທັນໄດ້ສະແດງອອກສູ່ພາຍນອກ ແລະ ຍັງບໍ່ທັນມີການປະພຶດໃດໆ ທີ່ເປັນອັນຕະລາຍໃຫ້ແກ່ສັງຄົມກໍ່ຕາມ ຖ້າຫາກການກະກຽມດັ່ງກ່າວເປັນການກະກຽມທີ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ ເຖິງວ່າຈະເປັນພຽງແຕ່ໄລຍະກະກຽມໃຫ້ແກ່ການກະທຳຜິດກໍມີຄວາມຮັບຜິດຊອບທາງອາຍາໄດ້.

ເມື່ອນຳເອົາຫຼັກການຂອງການກະກຽມໃຫ້ແກ່ການກະທຳຜິດມາພິຈາລະນາກັບກໍລະນີສຶກສາການປຸ້ນທະນະຄານຂອງ A ຊຶ່ງມີ 6 ຂັ້ນ

ຕອນ ແລະ ໄດ້ລົງມືປະຕິບັດຕາມແຜນການທີ່ວາງໄວ້ດັ່ງກໍລະນີສຶກສາ ຕົວຢ່າງດັ່ງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 1. A ຕັດສິນໃຈຈະປຸ້ນທະນາຄານແຫ່ງ ໜຶ່ງ ຊຶ່ງມີຂັ້ນຕອນດັ່ງນີ້:

- ຂັ້ນຕອນທີ 1. A ໄດ້ເລືອກເອົາເປົ້າໝາຍທີ່ສາຂາ C ຂອງ ທະນາຄານ B. ໄດ້ວາງແຜນໄວ້ວ່າຈະໃຊ້ປືນເພື່ອຂົ່ມຂູ່ພະນັກງານ ທະນາຄານ, ຈະມີການໃສ່ແວ່ນຕາດຳ, ໃສ່ໜ້າກາກເພື່ອບໍ່ໃຫ້ຄົນຈື່ໜ້າໄດ້;

- ຂັ້ນຕອນທີ 2. A ຄາດວ່າຈະລົງມືກະທຳຜິດໃນຊ່ວງເວລາທີ່ ລູກຄ້າບໍ່ຫຼາຍ, ຈົ່ງໄດ້ໄປເບິ່ງທາງໄປທາງມາທີ່ສາຂາ C;

- ຂັ້ນຕອນທີ 3. A ໄດ້ກະກຽມປືນ, ແວ່ນຕາດຳ ແລະ ໜ້າກາກ ເພື່ອຈະລົງມືດຳເນີນການຕາມແຜນທີ່ວາງໄວ້;

- ຂັ້ນຕອນທີ 4. ໃນມື້ກໍ່ເຫດ A ໄດ້ນຸ່ງເຄື່ອງຄືກັນກັບລູກຄ້າທົ່ວ ໄປ, ໃສ່ແວ່ນຕາດຳ ແລະ ໜ້າກາກແລ້ວເຂົ້າໄປໃນທະນາຄານສາຂາ C;

- ຂັ້ນຕອນທີ 5. A ເມື່ອເຂົ້າມາຮອດປ່ອງບໍລິການຂອງ ທະນາຄານແລ້ວຈົ່ງໄດ້ຈົກເອົາປືນອອກມາແລ້ວຈີ້ໄປທີ່ພະນັກງານ ທະນາຄານພ້ອມຮ້ອງຂຶ້ນວ່າ “ເອົາເງິນມາໃຫ້ໝົດ”;

- ຂັ້ນຕອນທີ 6. A ຫອບເອົາເງິນທີ່ພະນັກງານທະນາຄານຈັບມາ ໃຫ້ນັ້ນແລ້ວກໍໄດ້ອອກຈາກສາຂາ C ໄປ.

ຈາກກໍລະນີສຶກສາຕົວຢ່າງການກະກຽມໃຫ້ແກ່ການກະທຳຜິດ ໃນກໍລະນີການປຸ້ນທະນາຄານນີ້ຈະເຫັນວ່າຂັ້ນຕອນທີ 3 ຊຶ່ງເປັນຂັ້ນຕອນ ທີ່ A ໄດ້ກະກຽມປືນ, ແວ່ນຕາດຳ ແລະ ໜ້າກາກໄວ້ເພື່ອຈະລົງມືດຳເນີນ ການຕາມແຜນທີ່ວາງໄວ້ແລ້ວນັ້ນເປັນຂັ້ນຕອນຂອງການກະກຽມໃຫ້ແກ່ ການກະທຳຜິດນັ້ນເອງ.

2. ຄວາມພະຍາຍາມກໍ່ການກະທຳຜິດ

ປະມວນກົດໝາຍອາຍາມາດຕາ 23 ໄດ້ກຳນົດຄວາມພະຍາຍາມກໍ່ການກະທຳຜິດໄວ້ວ່າຄວາມພະຍາຍາມກໍ່ການກະທຳຜິດແມ່ນການລົງມືກະທຳຜິດສ່ວນໃດສ່ວນໜຶ່ງໂດຍເຈດຕະນາ ແຕ່ຍ້ອນມີສາເຫດນອກຕົວມາຂັດຂວາງ ຊຶ່ງພາໃຫ້ການກະທຳຜິດນັ້ນບໍ່ສຳເລັດຜົນ. ຈາກການກຳນົດຂອງກົດໝາຍຈະເຫັນວ່າໄລຍະພະຍາມກໍ່ການກະທຳຜິດນີ້ ແມ່ນໄລຍະທີ່ໄດ້ມີການລົງມືເຄື່ອນໄຫວກະທຳຜິດຕົວຈິງສ່ວນໃດສ່ວນໜຶ່ງ ຫຼື ສຳເລັດການເຄື່ອນໄຫວກະທຳຜິດຕົວຈິງສ່ວນໃດສ່ວນໜຶ່ງແລ້ວ ແຕ່ຜົນທີ່ຕ້ອງການບໍ່ໄດ້ຮັບຕາມຈຸດປະສົງຂອງຜູ້ກະທຳທີ່ວາງໄວ້ເນື່ອງຈາກວ່າມີອຸປະສັກນອກຕົວໃດໜຶ່ງມາຂັດຂວາງ. ນອກຈາກນີ້ໃນມາດຕາ 23 ວັກ 2 ຂອງປະມວນກົດໝາຍອາຍາຍັງໄດ້ກຳນົດຕື່ມອີກວ່າ ຄວາມພະຍາຍາມກໍ່ການກະທຳຜິດຈະຖືກລົງໂທດໄດ້ກໍຕໍ່ເມື່ອຫາກເປັນອັນຕະລາຍຕໍ່ສັງຄົມ ຊຶ່ງໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາເທົ່ານັ້ນ. ດັ່ງນັ້ນ, ຄວາມພະຍາຍາມກໍ່ການກະທຳຜິດຈຶ່ງສະແດງອອກໃນ 2 ດ້ານຄື:

ກ. ດ້ານອັດຕະວິໄສ ໝາຍຄວາມວ່າຜູ້ກະທຳຜິດຮູ້ດີວ່າຕົນໄດ້ລົງມືກະທຳຜິດແລ້ວ ແລະ ຕ້ອງການຢາກໃຫ້ການກະທຳຜິດຂອງຕົນສຳເລັດຜົນ ແລະ ຜູ້ກະທຳຜິດຮູ້ດີວ່າຜົນທີ່ຕົນຕ້ອງການບໍ່ສຳເລັດຍ້ອນມີອຸປະສັກນອກຕົວມາຂັດຂວາງນັ້ນເອງ;

ຂ.ດ້ານພາວະວິໄສ ໝາຍຄວາມວ່າຜູ້ກະທຳຜິດໄດ້ລົງມືເຄື່ອນໄຫວກະທຳຜິດແລ້ວສ່ວນໃດສ່ວນໜຶ່ງ ແຕ່ເກີດມີອຸປະສັກນອກຕົວມາຂັດຂວາງກ່ອນອັນເປັນເຫດໃຫ້ຕົນບໍ່ສາມາດເຄື່ອນໄຫວກະທຳຜິດຈົນສຳເລັດໄດ້ ແລະ ຜູ້ກະທຳຜິດໄດ້ເຄື່ອນໄຫວກະທຳຜິດສຳເລັດລົງແລ້ວ ແຕ່ບໍ່ໄດ້ຮັບຜົນຕາມທີ່ຕົນຕ້ອງການຈາກການກະທຳຜິດນັ້ນ.

ໂດຍທົ່ວໄປແລ້ວອີງຕາມທິດສະດີ ຫຼື ແນວຄວາມຄິດໃນການພິຈາລະນາອີງປະກອບທາງດ້ານພາວະວິໄສໃນຄວາມພະຍາຍາມກໍ່ການກະທຳຜິດປະກອບມີ 3 ທິດສະດີ ຫຼື ແນວຄວາມຄິດຄື:

1). ພິຈາລະນາໂດຍອີງຕາມແນວຄວາມຄິດທີເປັນອັນຕະລາຍ ໝາຍຄວາມວ່າການກະທຳນັ້ນມີຄວາມເປັນອັນຕະລາຍ ຫຼື ບໍ;

2). ພິຈາລະນາໂດຍອີງຕາມແນວຄວາມຄິດຂອງຜູ້ກະທຳຜິດ ໝາຍຄວາມວ່າຜົນຈະເກີດ ຫຼື ບໍ່ເກີດກໍ່ຕາມ, ຄວາມເຊື່ອຂອງຜູ້ກະທຳຜິດແມ່ນມີເຈດຕະນາກະທຳກໍ່ຖືເປັນຄວາມພະຍາຍາມແລ້ວ;

3). ພິຈາລະນາຕາມສາມັນສຳນຶກຂອງສັງຄົມ ໝາຍຄວາມວ່າອີງໃສ່ສາມັນສຳນຶກຂອງບຸກຄົນທົ່ວໄປເຫັນວ່າການກະທຳຜິດດັ່ງກ່າວແມ່ນໄດ້ສ້າງຄວາມເປັນອັນຕະລາຍທີ່ເປັນຮູບປະທຳໄດ້ ຫຼື ບໍ່. ຖ້າເປັນຄວາມພະຍາຍາມກໍ່ການກະທຳຜິດກໍໃຫ້ຮັບຜິດຊອບຕາມຄວາມເປັນຈິງໃນສະຖານການກະທຳຜິດດັ່ງກ່າວ.

ຈາກດ້ານອັດຕະວິໄສ ແລະ ດ້ານພາວະວິໄສດັ່ງທີ່ກ່າວຂ້າງເທິງນີ້ ຊຶ່ງເປັນສາຍພົວພັນທີ່ບໍ່ສາມາດຕັດແຍກອອກຈາກກັນໄດ້ຈຶ່ງຈຳແນກການພະຍາຍາມກໍ່ການກະທຳຜິດອອກເປັນ 2 ປະເພດຄື: ການພະຍາຍາມກໍ່ການກະທຳຜິດທີ່ບໍ່ທັນສຳເລັດ ແລະ ບໍ່ເກີດຜົນຕາມຈຸດປະສົງ ແລະ ການພະຍາຍາມກໍ່ການກະທຳຜິດທີ່ສຳເລັດແລ້ວ ແຕ່ຜົນບໍ່ເກີດຕາມຈຸດປະສົງ.

2.1. ການພະຍາຍາມກໍ່ການກະທຳຜິດທີ່ບໍ່ທັນສຳເລັດ ແລະ ບໍ່ເກີດຜົນຕາມຈຸດປະສົງ

ການພະຍາຍາມກໍ່ການກະທຳຜິດທີ່ບໍ່ທັນສຳເລັດ ແລະ ບໍ່ເກີດຜົນຕາມຈຸດປະສົງແມ່ນຜູ້ກະທຳຜິດໄດ້ເຄື່ອນໄຫວກະທຳຜິດພຽງສ່ວນໃດ

ສ່ວນໜຶ່ງ ແລະ ໄດ້ເກີດອຸປະສັກນອກຕົວມາຂັດຂວາງກ່ອນທີ່ຜູ້ກ່ຽວຈະ ສຳເລັດການກະທຳຜິດນັ້ນ.

ບຸກຄົນຜູ້ກະທຳຜິດພຽງສ່ວນໃດສ່ວນໜຶ່ງ ໝາຍຄວາມວ່າບຸກຄົນ ຜູ້ກະທຳຜິດນັ້ນໄດ້ມີແນວຄິດລິເລີ່ມ ແລະ ໄດ້ຕັດສິນໃຈກະທຳຜິດ ຈາກນັ້ນຜູ້ກ່ຽວໄດ້ວາງແຜນຂົນຂວາຍ, ຊອກຫາບ່ອນທີ່ຈະກະທຳຜິດ ຕະຫຼອດເຖິງເຄື່ອງມື, ວັດຖຸອຸປະກອນຕ່າງໆ ທີ່ຈະປະກອບນຳໃຊ້ເຂົ້າໃນ ການກະທຳຜິດກ້າວໄປເຖິງການລົງມືກະທຳຜິດຕົວຈິງ ແຕ່ບໍ່ທັນຄົບທຸກ ຂະບວນ, ເນື້ອໃນຂອງການກະທຳຜິດໄດ້ວາງຄາດໝາຍໄວ້ ຊຶ່ງການກະທຳ ດັ່ງກ່າວແມ່ນໃກ້ຈະເກີດຜົນແລ້ວ ແລະ ກໍຄິດວ່າຖ້າການກະທຳດັ່ງກ່າວ ນັ້ນຫາກສຳເລັດລົງແລ້ວຜົນກໍຈະປາກົດຂຶ້ນ ແຕ່ເນື່ອງຈາກວ່າມີອຸປະສັກ ມາຂັດຂວາງກ່ອນທີ່ຜູ້ກ່ຽວຈະສຳເລັດການກະທຳຜິດນັ້ນ.

ອຸປະສັກນອກຕົວ ໝາຍຄວາມວ່າມີສິ່ງວັດຖຸໃດໜຶ່ງມາກະຕຸ້ນຕໍ່ ຄວາມຮູ້ສຶກຈິດສຳນຶກຂອງຜູ້ກ່ຽວທີ່ໄດ້ລົງມືກະທຳຜິດ ຫຼື ອາດຈະແມ່ນ ບຸກຄົນຜູ້ອື່ນມາພົບເຫັນ ແລະ ບຸກຄົນຜູ້ນັ້ນໄດ້ຂັດຂວາງການກະທຳຜິດ ຂອງຜູ້ກ່ຽວ.

ຕົວຢ່າງ: A ໄດ້ເອົາຢາພິດໃສ່ຈອກນ້ຳແລ້ວຍື່ນໃຫ້ B ແຕ່ C ມາເຫັນການກະທຳດັ່ງກ່າວຈຶ່ງໄດ້ຍາດເອົາຈອກນ້ຳນັ້ນແລ້ວໂຍນຖິ້ມໂດຍ ທີ່ B ຍັງບໍ່ທັນດື່ມນ້ຳໃນຈອກນັ້ນເລີຍ.

ນອກຈາກຕົວຢ່າງຂ້າງເທິງນີ້ແລ້ວຍັງມີບາງກໍລະນີສຶກສາ ຕົວຢ່າງກ່ຽວກັບຄວາມພະຍາຍາມກ່ຳການກະທຳຜິດ ຊຶ່ງມີຂັ້ນ ຕອນຕ່າງໆ ທີ່ສະແດງໃຫ້ເຫັນຂັ້ນຕອນດັ່ງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 2. A ຕັດສິນໃຈບຸກລຸກເຂົ້າເຮືອນຂອງ B ເພື່ອລັກຊັບ ຊຶ່ງມີຂັ້ນຕອນດັ່ງນີ້:

- ຂັ້ນຕອນທີ 1. A ໄດ້ໄປສໍາຫຼວດເບິ່ງເຮືອນຂອງ B ໂດຍໄດ້ໄປເບິ່ງອ້ອມແອ້ມເຮືອນ ແລະ ສະພາບການປິດປະຕູຕ່າງໆ;

- ຂັ້ນຕອນທີ 2. A ກະວ່າຈະທຸບບານແກ້ວປ່ອງຢ້ຽມແລ້ວເຂົ້າໄປໃນເຮືອນ, ຈຶ່ງໄດ້ກຽມຄ້ອນຕີເພື່ອເອົາໄວ້ທຸບແວ່ນແກ້ວ;

- ຂັ້ນຕອນທີ 3. ໃນມື້ກໍ່ເຫດ A ໄດ້ໃຊ້ຄ້ອນຕີທຸບບານແກ້ວປ່ອງຢ້ຽມແລ້ວເຂົ້າໄປໃນເຮືອນ;

- ຂັ້ນຕອນທີ 4. ເພື່ອຊອກຫາຊັບສິນເງິນຄໍາ A ຈຶ່ງໄດ້ຊອກຄົ້ນໄປທົ່ວບໍ່ວ່າຈະເປັນໃນຊັ້ນວາງຂອງ ແລະ ລິ້ນຊັກໂຕະຕ່າງໆ ທີ່ຢູ່ໃນເຮືອນ;

- ຂັ້ນຕອນທີ 5. ເມື່ອພົບເຫັນເງິນສົດ ແລະ ວັດຖຸມີຄ່າໃນຂະນະທີ່ A ພວມຈະເອົາໃສ່ໃນກະເປົ່າທີ່ກຽມມານັ້ນ B ໄດ້ມາພົບເຫັນກ່ອນ, A ຈຶ່ງຫຼົບໜີໄປທາງປ່ອງຢ້ຽມທີ່ຕົນເຂົ້າມາໂດຍຍັງບໍ່ທັນໄດ້ເອົາຊັບສິ່ງຂອງນັ້ນເທື່ອ.

ຈາກຂັ້ນຕອນຕ່າງໆ ຂ້າງເທິງນີ້ເຫັນວ່າ A ຈະມີຄວາມຮັບຜິດຊອບໃນຖານການພະຍາຍາມລັກຊັບຕາມມາດຕາ 231 ແມ່ນໃນຂັ້ນທີ 4 ເນື່ອງຈາກວ່າ A ໄດ້ລົງມືກະທໍາສ່ວນໃດສ່ວນໜຶ່ງຊຶ່ງໃກ້ຈະໄດ້ຮັບຜົນຕາມຈຸດປະສົງແລ້ວໂດຍໄດ້ຊອກຄົ້ນເພື່ອຊອກຫາຊັບສິນຢູ່ໃນເຮືອນ ຊຶ່ງເຫັນວ່າເປັນການກະທໍາທີ່ແຕະຕ້ອງເຖິງຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ກົດໝາຍ.

2.2. ການພະຍາຍາມກໍ່ການກະທໍາຜິດທີ່ສໍາເລັດແລ້ວແຕ່ຜົນບໍ່ເກີດຕາມຈຸດປະສົງ

ການພະຍາຍາມກໍ່ການກະທໍາຜິດທີ່ສໍາເລັດແລ້ວແຕ່ຜົນບໍ່ເກີດຕາມຈຸດປະສົງແມ່ນກໍລະນີຜູ້ກະທໍາຜິດໄດ້ເຄື່ອນໄຫວກະທໍາຜິດສໍາເລັດ

ແລ້ວ ແຕ່ຜົນທີ່ຕ້ອງການບໍ່ທັນປະກົດຕົວຂຶ້ນຍ້ອນສາເຫດນອກຕົວມາຂັດຂວາງ.

ການພະຍາຍາມກໍ່ການກະທຳຜິດສຳເລັດແລ້ວ ໝາຍຄວາມວ່າຜູ້ກະທຳຜິດໄດ້ເຄື່ອນໄຫວກະທຳຜິດທຸກຂະບວນການ ແລະ ເນື້ອໃນກະທຳຜິດທີ່ຕົນຄາດໝາຍໄວ້ ຊຶ່ງການພະຍາຍາມກໍ່ການກະທຳຜິດທີ່ສຳເລັດແລ້ວແບ່ງອອກເປັນ 2 ປະເພດດັ່ງນີ້:

1). ການພະຍາຍາມກໍ່ການກະທຳຜິດທີ່ຜິດຄາດໝາຍ

ການພະຍາຍາມກໍ່ການກະທຳຜິດທີ່ຜິດຄາດໝາຍແມ່ນຜູ້ກະທຳຜິດໄດ້ເຄື່ອນໄຫວຄົບທຸກຂະບວນການທີ່ເປັນເນື້ອໃນຂອງການກະທຳຜິດນັ້ນແລ້ວ ແຕ່ຜົນທີ່ຕ້ອງການບໍ່ປະກົດຂຶ້ນຍ້ອນຜູ້ກ່ຽວຄາດຄະເນເປົ້າໝາຍຂອງການກະທຳຜິດບໍ່ຖືກຕ້ອງ.

ຕົວຢ່າງ: A ມີຈຸດປະສົງຈະຄາດຕະກຳ B; A ຈຶ່ງວາງແຜນລົງມືລັກເຂົ້າໄປໃນຫ້ອງນອນຂອງ B ຕອນເວລາກາງເດືກແລ້ວໃຊ້ມີດແທງ B ຫຼາຍຄັ້ງຈົນຄິດວ່າ B ໄດ້ເສຍຊີວິດແລ້ວຈຶ່ງລົບໜີໄປ. ຕື່ນເຊົ້າມາເມຍຂອງ B ຈຶ່ງໄປແຈ້ງຕໍ່ອານາດການປົກຄອງບ້ານ ແລະ ສະເໜີໃຫ້ທາງການແພດມາພິສູດຜ່ານການພິສູດຢ່າງລະອຽດຖີ່ຖ້ວນແລ້ວຈຶ່ງຮູ້ວ່າ B ໄດ້ເສຍຊີວິດກ່ອນທີ່ A ຈະໄດ້ລົງມືໃຊ້ມີດແທງຍ້ອນພະຍາດຜູ້ກ່ຽວ.

ຈາກຕົວຢ່າງຂ້າງເທິງນີ້ແລ້ວຍັງມີບາງກໍລະນີສຶກສາຕົວຢ່າງທີ່ຍົກມາໃຫ້ເຫັນກ່ຽວກັບຄວາມພະຍາຍາມກໍ່ການກະທຳຜິດ ຊຶ່ງມີການກະທຳ ແລະ ຂັ້ນຕອນຕ່າງໆ ດັ່ງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 3. A ຕັດສິນໃຈວ່າຈະຂ້າ B. ດັ່ງນັ້ນ A ຊຶ່ງມີຂັ້ນຕອນດັ່ງນີ້:

- ຂັ້ນຕອນທີ 1. A ກະວ່າຈະເອົາລະເບີດທີ່ຫໍ່ໃສ່ໃນພັດສະດຸຂະໜາດນ້ອຍແລ້ວສົ່ງໄປໃຫ້ B ເພື່ອຂ້າ ໂດຍໄດ້ກະກຽມວັດຖຸດິບແລ້ວກໍໄດ້ສ້າງລະເບີດດັ່ງກ່າວຂຶ້ນມາ;

- ຂັ້ນຕອນທີ 2. A ໄດ້ຝາກຫໍ່ພັດສະດຸຂະໜາດນ້ອຍດັ່ງກ່າວທີ່ມີລະເບີດນັ້ນນຳບໍລິສັດຂົນສົ່ງພັດສະດຸແຫ່ງໜຶ່ງເພື່ອສົ່ງໄປໃຫ້ B;

- ຂັ້ນຕອນທີ 3. ບໍລິສັດຂົນສົ່ງດັ່ງກ່າວໄດ້ນຳສົ່ງຫໍ່ພັດສະດຸທີ່ມີລະເບີດໄປໃຫ້ B ແລະ B ກໍໄດ້ຮັບຫໍ່ລະເບີດນັ້ນແລ້ວ;

- ຂັ້ນຕອນທີ 4. ໃນຂະນະທີ່ B ເປີດຫໍ່ພັດສະດຸດັ່ງກ່າວລະເບີດກໍແຕກຂຶ້ນແຕ່ບໍ່ຮຸນແຮງຈົ່ງເປັນເຫດເຮັດໃຫ້ B ໄດ້ຮັບບາດເຈັບແຕ່ບໍ່ເສຍຊີວິດ;

ຈາກກໍລະນີສຶກສາຕົວຢ່າງດັ່ງກ່າວຈະເຫັນວ່າການກະທຳຂອງ A ແມ່ນຂັ້ນຕອນທີ 2 ຊຶ່ງເປັນຂັ້ນຕອນຄວາມພະຍາຍາມກະທຳຜິດ. ການພິຈາລະນານີ້ແມ່ນອີງຕາມສາມັນສຳນຶກຂອງສັງຄົມທີ່ເຫັນວ່າວັດຖຸລະເບີດແມ່ນເປັນວັດຖຸທີ່ສ້າງຄວາມເປັນອັນຕະລາຍຮ້າຍແຮງຕໍ່ບຸກຄົນທີ່ຢູ່ອ້ອມຂ້າງທີ່ສັງຄົມເກືອດຫ້າມ ແລະ ກໍໄດ້ລົງມືສ້າງສຳເລັດເປັນທີ່ຮຽບຮ້ອຍແລ້ວ. ພ້ອມກັນນັ້ນຜູ້ກ່ຽວກໍຍັງໄດ້ຝາກນຳບໍລິສັດຂົນສົ່ງໄປໃຫ້ B ຊຶ່ງເຫັນວ່າມີຄວາມສ່ຽງທີ່ເປັນອັນຕະລາຍສູງຕໍ່ຜູ້ທີ່ໄດ້ສຳຜັດ ແລະ ຜູ້ກ່ຽວພຽງແຕ່ລໍຖ້າຜົນທີຈະເກີດຂຶ້ນແຕ່ຜົນທີ່ຕ້ອງການບໍ່ທັນປາກົດຕົວຂຶ້ນຍ້ອນສາເຫດນອກຕົວມາຂັດຂວາງ. ດັ່ງນັ້ນ. ການກະທຳຂອງ A ເປັນຄວາມພະຍາຍາມກະທຳຄວາມຜິດແມ່ນຂັ້ນຕອນທີ່ A ໄດ້ຝາກຫໍ່ພັດສະດຸຂະໜາດນ້ອຍດັ່ງກ່າວທີ່ມີລະເບີດນັ້ນນຳບໍລິສັດຂົນສົ່ງພັດສະດຸແຫ່ງໜຶ່ງເພື່ອສົ່ງໄປໃຫ້ B ແລ້ວ. A ຈົ່ງມີຄວາມຜິດຖານພະຍາຍາມຄາດຕະກຳ B ຕາມມາດຕາ 188 ຂອງປະມວນກົດໝາຍອາຍາໃນຂັ້ນຕອນທີ 2.

2). ການພະຍາຍາມກໍ່ການກະທຳຜິດເນື່ອງຈາກປັດໄຈທີ່ເປັນເຄື່ອງມື ແລະ ອຸປະກອນທີ່ນຳໃຊ້.

ການພະຍາຍາມກໍ່ການກະທຳຜິດເນື່ອງຈາກປັດໄຈທີ່ເປັນເຄື່ອງມື ແລະ ອຸປະກອນທີ່ນຳໃຊ້ແມ່ນກໍລະນີຜູ້ກະທຳຜິດໄດ້ເຄື່ອນໄຫວຄົບຖ້ວນທຸກຂະບວນການທີ່ເປັນເນື້ອໃນຂອງການກະທຳຜິດນັ້ນແລ້ວ ແຕ່ຜົນທີ່ຕ້ອງການບໍ່ປະກົດຂຶ້ນເນື່ອງຈາກສິ່ງທີ່ນຳໃຊ້ເຂົ້າໃນການກະທຳຜິດນັ້ນບໍ່ມີຄຸນນະພາບ ຫຼື ເຄື່ອງມືເສຍຄຸນນະພາບ ແລະ ອື່ນໆ.

ຕົວຢ່າງ: A ຢາກຄາດຕະກຳ B; A ຈຶ່ງຈັບປືນທີ່ກຽມມາຍິງໃສ່ B ແຕ່ປືນດັ່ງກ່າວຍິງບໍ່ອອກເພາະລູກປືນເສຍຄຸນນະພາບ ຫຼື ລູກປືນດ້ານ.

ນອກຈາກນີ້ແລ້ວຍັງມີບາງກໍລະນີສຶກສາຕົວຢ່າງທີ່ຍົກມາອະທິບາຍໃຫ້ເຫັນກ່ຽວກັບຄວາມພະຍາຍາມກໍ່ການກະທຳຜິດຕາມມາດຕາ 23 ຂອງປະມວນກົດໝາຍອາຍາດັ່ງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 4. A ເອົານ້ຳປະສົມນ້ຳຕານໃຫ້ B ກິນ ເພື່ອຫວັງຈະຂ້າ B.

A ຄຽດແຄ້ນໃຫ້ B ແລະ ຄິດຈະຂ້າຜູ້ກ່ຽວ. A ມີຄວາມເຊື່ອວ່າຖ້າ B ກິນນ້ຳຕານເຂົ້າໄປຈະເຮັດໃຫ້ເສຍຊີວິດ ຈຶ່ງໄດ້ລັກປະສົມນ້ຳຕານລົງໃນຈອກນ້ຳທີ່ B ດື່ມ. B ໄດ້ດື່ມນ້ຳທີ່ປະສົມນ້ຳຕານດັ່ງກ່າວໄປແລ້ວ ແຕ່ກໍບໍ່ເສຍຊີວິດແຕ່ຢ່າງໃດ.

ຈາກກໍລະນີສຶກສາຕົວຢ່າງຂ້າງເທິງນີ້ຈະເຫັນວ່າ A ບໍ່ມີຄວາມຜິດໃນຖານພະຍາຍາມຄາດຕະກຳເນື່ອງຈາກວ່າອີງໃສ່ສາມັນສຳນຶກຂອງບຸກຄົນທົ່ວໄປແລ້ວເຫັນວ່ານ້ຳຕານເປັນສິ່ງທີ່ມີຂາຍຢູ່ທົ່ວໄປທີ່ສັງຄົມບໍ່ໄດ້ເກືອດຫ້າມ ຊຶ່ງບໍ່ສາມາດສ້າງຄວາມເປັນອັນຕະລາຍ ແລະ ຄວາມເສຍຫາຍຕໍ່ B ໄດ້. ດັ່ງນັ້ນ, ການກະທຳດັ່ງກ່າວຈຶ່ງເປັນຄວາມເຊື່ອສ່ວນບຸກຄົນ ແລະ ບໍ່ມີຄວາມຜິດຕາມປະມວນກົດໝາຍອາຍາ.

ກໍລະນີສຶກສາຕົວຢ່າງທີ 5. A ສ້າງຕຸກກະຕາຄຳສາບໃສ່ B ເພື່ອຫວັງຈະຂ້າ B.

A ຄຽດແຄ້ນໃຫ້ B ແລະ ຄິດຈະຂ້າຜູ້ກ່ຽວ. A ຈຶ່ງຫຼົ້ນໄສຍະສາດໃສ່ B ໂດຍເຮັດຕຸກກະຕາເຟືອງແທນຕົວ B ແລ້ວໃຊ້ຕະປູແຫຼມແທງຕຸກກະຕາດັ່ງກ່າວ ແຕ່ B ກໍບໍ່ເສຍຊີວິດແຕ່ຢ່າງໃດ.

ຈາກກໍລະນີສຶກສາຕົວຢ່າງຂ້າງເທິງນີ້ຈະເຫັນວ່າ A ບໍ່ມີຄວາມຜິດ ໃນຖານພະຍາຍາມຄາດຕະກຳເນື່ອງຈາກວ່າອີງໃສ່ສາມັນສຳນຶກຂອງ ບຸກຄົນທົ່ວໄປແລ້ວເຫັນວ່າການກະທຳດັ່ງກ່າວເປັນຄວາມເຊື່ອສ່ວນ ບຸກຄົນ ແລະ ການກະທຳດັ່ງກ່າວຍັງບໍ່ໄດ້ສ້າງຄວາມເປັນອັນຕະລາຍ ແລະ ຄວາມເສຍຫາຍຕໍ່ B ແລະ ສັງຄົມເທື່ອ. ດັ່ງນັ້ນ, ການກະທຳດັ່ງກ່າວຈຶ່ງບໍ່ ເປັນຄວາມພະຍາຍາມກະທຳຄວາມຜິດຖານຄາດຕະກຳແຕ່ຢ່າງໃດ.

ກໍລະນີສຶກສາຕົວຢ່າງທີ 6. A ໃຊ້ປືນຍາວທີ່ໂຊໄວ້ໃນ ຫໍພິພິດຕະພັນຍິງ B ເພື່ອຫວັງຈະຂ້າ B.

A ໄດ້ໄປເຂົ້າຊົມພິພິດຕະພັນທີ່ວາງສະແດງອາວຸດປືນນາໆສະ ໝົດ. ພໍເຫັນປືນຍາວທີ່ວາງສະແດງຢູ່ບ່ອນນັ້ນຈຶ່ງມີແນວຄິດຢາກຂ້າ B. A ຄິດໄປເອງວ່າປືນຍາວທີ່ວາງສະແດງນັ້ນມີລູກປືນບັນຈຸຢູ່ໃນລຳກ້ອງປືນ ແລ້ວຈຶ່ງໄດ້ຈັບປືນດັ່ງກ່າວແລ້ວແນໄປໃສ່ B ທີ່ຢູ່ໃນພິພິດຕະພັນແຫ່ງ ນັ້ນແລ້ວກົດລັ່ນໄກປືນ ແຕ່ເນື່ອງຈາກປືນດັ່ງກ່າວບໍ່ມີລູກ B ຈຶ່ງບໍ່ເສຍຊີວິດ ແຕ່ຢ່າງໃດ.

ຈາກກໍລະນີສຶກສາຕົວຢ່າງຂ້າງເທິງນີ້ເຫັນວ່າໂດຍອີງຕາມ ສາມັນສຳນຶກຂອງບຸກຄົນທົ່ວໄປແລ້ວເຫັນວ່າປືນທີ່ວາງສະແດງໃນ ຫໍພິພິດຕະພັນທຸກໆສະໝົດແມ່ນບໍ່ມີລູກ ແລະ ໄດ້ຮັບປະກັນຄວາມປອດ ໄພໄວ້ແລ້ວ ຊຶ່ງບໍ່ສາມາດສ້າງຄວາມເປັນອັນຕະລາຍໄດ້ ແລະ A ກໍຄິດໄປ ເອງວ່າປືນດັ່ງກ່າວມີລູກ (ແທ້ທີຈິງແລ້ວປືນດັ່ງກ່າວກໍບໍ່ມີລູກ). ດັ່ງນັ້ນ,

ການກະທຳດັ່ງກ່າວຍັງບໍ່ທັນສ້າງຄວາມເສຍຫາຍ ແລະ ເປັນອັນຕະລາຍທີ່ເປັນຮູບປະທຳຕໍ່ B ແລະ ສັງຄົມເທື່ອ. ດັງນັ້ນ, ການກະທຳຂອງ A ບໍ່ມີຄວາມຜິດໃນຖານພະຍາຍາມຄາດຕະກຳ.

ກໍລະນີສຶກສາຕົວຢ່າງທີ 7. A ໃຊ້ປືນຂອງເຈົ້າໜ້າທີ່ຕຳຫຼວດຍິງ B ເພື່ອຫວັງຈະຂ້າ B.

A ລັກຊັບ ແລະ ໄດ້ເອົາຕົວຫຼົບໜີແຕ່ຖືກ B ທີ່ເປັນຕຳຫຼວດພົບເຫັນ ແລະ ພວມຈະຖືກຈັບຕົວໄດ້. A ຈຶ່ງຮີບຍາດຊິງເອົາປືນທີ່ B ຖືຢູ່ແລ້ວແນໃສ່ພ້ອມກັບລັ່ນໄກປືນເພື່ອຈະຂ້າ B ແຕ່ບັງເອີນປືນດັ່ງກ່າວບໍ່ມີລູກປືນບັນຈຸຢູ່ໃນລຳກ້ອງປືນ, A ຈຶ່ງບໍ່ສາມາດຂ້າ B ໄດ້.

ຈາກກໍລະນີສຶກສາຕົວຢ່າງຂ້າງເທິງນີ້ຈະເຫັນວ່າ A ໂດຍອີງໃສ່ທິດສະດີສາມັນສຳນຶກຂອງຄົນທົ່ວໄປໃນສັງຄົມແລ້ວ ປືນປະຈຳກາຍຂອງເຈົ້າໜ້າທີ່ຕຳຫຼວດກໍຕ້ອງມີລູກກະປືນແຕ່ປືນດັ່ງກ່າວບໍ່ມີລູກ ຊຶ່ງການກະທຳດັ່ງກ່າວມັນໄດ້ແຕະຕ້ອງເຖິງຄວາມເປັນອັນຕະລາຍຮ້າຍແຮງຕໍ່ຊີວິດຂອງບຸກຄົນອື່ນ. ດັ່ງນັ້ນ, A ມີຄວາມຜິດໃນຖານພະຍາຍາມຄາດຕະກຳ.

ກໍລະນີສຶກສາຕົວຢ່າງທີ 8. A ປະສົມເຄື່ອງປຸງລົດເພື່ອໃຫ້ກາຍເປັນຢາເສບຕິດ.

A ໄດ້ອ່ານບົດຄວາມທີ່ຂຽນໃນອິນເຕີເນັດທີ່ວ່າຖ້ານຳເອົາເຄື່ອງປຸງລົດທີ່ມີຂາຍທົ່ວໄປມາຕົ້ມປະສົມເຂົ້າກັນກໍຈະສາມາດເຮັດເປັນເຮໂລອິນຂຶ້ນມາໄດ້ ແລະ ຜູ້ກ່ຽວກໍເຊື່ອຢ່າງຕາຍໃຈຄືແນວນັ້ນ. A ໄດ້ປະຕິບັດຕາມຂັ້ນຕອນທີ່ບົດຄວາມດັ່ງກ່າວບອກໄວ້ ໂດຍໄດ້ນຳເອົາເຄື່ອງປຸງລົດທີ່ມີຂາຍທົ່ວໄປມາປະສົມແລ້ວຕົ້ມເຂົ້າກັນສິ່ງທີ່ໄດ້ມານອກຈາກບໍ່ເປັນເຮໂລອິນແລ້ວກໍຍັງບໍ່ເປັນພິດຫຍັງຕໍ່ຮ່າງກາຍຂອງຄົນແຕ່ຢ່າງໃດ.

ໃນກໍລະນີສຶກສາຕົວຢ່າງດັ່ງກ່າວຈະເຫັນວ່າ A ບໍ່ມີຄວາມຜິດໃນຖານພະຍາມຜະລິດຢາເສບຕິດເນື່ອງຈາກອີງໃສ່ສາມັນສຳນຶກຂອງບຸກຄົນທົ່ວໄປແລ້ວເຫັນວ່າການກະທຳດັ່ງກ່າວແມ່ນເປັນຄວາມເຊື່ອທາງດ້ານບຸກຄົນ ແລະ ເຄື່ອງທີ່ນຳໃຊ້ເຂົ້າໃນການຜະລິດກໍເປັນສິ່ງທີ່ມີຂາຍທົ່ວໄປທີ່ສັງຄົມບໍ່ໄດ້ເກືອດຫ້າມພ້ອມທັງຍັງບໍ່ທັນສ້າງຄວາມເສຍຫາຍຕໍ່ບຸກຄົນ ແລະ ສັງຄົມແຕ່ຢ່າງໃດ.

ກໍລະນີສຶກສາຕົວຢ່າງທີ 9. A ຜະລິດຢາເສບຕິດທີ່ຜິດພາດ.

A ຄິດວ່າຈະຜະລິດຢາເສບຕິດ (Methamphetamine)ຈາກສານຕັ້ງຕົ້ນ. ພາຍຫຼັງໄດ້ສານຕັ້ງຕົ້ນດັ່ງກ່າວມາແລ້ວຜູ້ກ່ຽວກໍໄດ້ເຮັດຕາມກຳມະວິທີສະເພາະ ແລະ ໄດ້ຜະລິດຢາທີ່ເບິ່ງຄ້າຍຄືຢາເສບຕິດ (Methamphetamine) ອອກມາ. ເນື່ອງຈາກໃນບັນດາສານຕັ້ງຕົ້ນດັ່ງກ່າວບາງສ່ວນບໍ່ແມ່ນທາດບໍລິສຸດ. ຈຶ່ງເຮັດໃຫ້ບໍ່ສາມາດຜະລິດຢາເສບຕິດ (Methamphetamine) ແທ້ອອກມາໄດ້ ແລະ ຢາທີ່ຜະລິດອອກມາດັ່ງກ່າວນັ້ນກໍບໍ່ໄດ້ສົ່ງຜົນເສຍຫາຍຫຍັງຕໍ່ຮ່າງກາຍຄົນເຮົາ.

ຈາກກໍລະນີສຶກສາຕົວຢ່າງຂ້າງເທິງນີ້ຈະເຫັນວ່າ A ຈະບໍ່ມີຄວາມຜິດໃນຖານພະຍາຍາມຜະລິດຜິດຢາບ້າ (Methamphetamine) ເນື່ອງຈາກວ່າກວດພິສູດແລ້ວບໍ່ມີສານເສບຕິດປະເພດຢາບ້າ (Methamphetamine) ເຈືອປົນ, ແຕ່ເຖິງຢ່າງໃດກໍຕາມ A ຈະມີຄວາມຜິດໃນຖານຜະລິດຢາເສບຕິດປອມ ເນື່ອງຈາກອີງໃສ່ສາມັນສຳນຶກຂອງບຸກຄົນທົ່ວໄປເບິ່ງແລ້ວເຫັນວ່າ A ແມ່ນມີເຈດຕະນາກະທຳຜິດ ແລະ ໄດ້ກະທຳສຳເລັດແລ້ວ ພ້ອມກັນນັ້ນຢາເສບຕິດຍັງເປັນສິ່ງທີ່ເປັນອັນຕະລາຍຮ້າຍແຮງທີ່ຜິດກົດໝາຍ ແລະ ສັງຄົມເກືອດຫ້າມ. ດັ່ງນັ້ນ, ການກະທຳ

ດັ່ງກ່າວຈຶ່ງມີຄວາມຜິດຖານຜະລິດຢາເສບຕິດປອມຕາມມາດຕາ 319 ຂອງປະມວນກົດໝາຍອາຍາ.

ບົດທີ 5
ການເລີກລົ້ມການກະທຳຜິດດ້ວຍຄວາມສະໝັກໃຈ

ມາດຕາ 24 ຂອງປະມວນກົດໝາຍອາຍາໄດ້ກຳນົດໄວ້ວ່າການເລີກລົ້ມການກະທຳຜິດດ້ວຍຄວາມສະໝັກໃຈ ແມ່ນກໍລະນີຂອງບຸກຄົນໃດຫາກໄດ້ຢຸດເຊົາການກະທຳຜິດຂອງຕົນດ້ວຍຄວາມສະໝັກໃຈ ໂດຍບໍ່ສືບຕໍ່ການກະທຳຜິດນັ້ນໃຫ້ສຳເລັດຜົນ ຈະຢູ່ໃນໄລຍະຂອງການກະກຽມ ຫຼື ຄວາມພະຍາຍາມກໍຕາມບຸກຄົນນັ້ນກໍຈະບໍ່ມີຄວາມຮັບຜິດຊອບທາງອາຍາ ເວັ້ນເສຍແຕ່ການກະທຳນັ້ນຫາກເປັນການກະທຳຜິດອື່ນ.

ຈະຖືວ່າເປັນການເລີກລົ້ມການກະທຳຜິດດ້ວຍຄວາມສະໝັກໃຈ ຖ້າຫາກຜູ້ກະທຳຜິດໄດ້ລົງມືເຄື່ອນໄຫວກະທຳຜິດແລ້ວສ່ວນໃດສ່ວນໜຶ່ງ. ການເລີກລົ້ມການກະທຳຜິດດ້ວຍຄວາມສະໝັກໃຈຈະມີໄດ້ສະເພາະແຕ່ໃນກໍລະນີຂອງການກະທຳຜິດໂດຍເຈດຕະນາເທົ່ານັ້ນ ຊຶ່ງຜູ້ກະທຳຜິດໄດ້ມີການກະກຽມໃຫ້ແກ່ການກະທຳຜິດຢ່າງຄົບຖ້ວນແລ້ວ ແລະ ເລີ່ມເຂົ້າສູ່ຄວາມພະຍາຍາມກ່ຳການກະທຳຜິດແຕ່ໄດ້ຢຸດເຊົາບໍ່ເຄື່ອນໄຫວໃຫ້ການກະທຳຜິດຂອງຕົນໃຫ້ສິ້ນສຸດ. ການເລີກລົ້ມການກະທຳຜິດດ້ວຍຄວາມສະໝັກໃຈສະແດງອອກດັ່ງນີ້:

1). ຜູ້ກະທຳຜິດໄດ້ຢຸດເຊົາການກະທຳຜິດຂອງຕົນດ້ວຍຄວາມສະໝັກໃຈ ຈະຖືວ່າເປັນຄວາມສະໝັກໃຈຢຸດເຊົາບໍ່ສືບຕໍ່ເຄື່ອນໄຫວໃຫ້ການກະທຳຜິດນັ້ນສິ້ນສຸດລົງກ່ຳຕໍ່ເມື່ອການຕັດສິນໃຈຫາກເກີດຂຶ້ນຢ່າງອັດຕະວິໄສ ໝາຍຄວາມວ່າຜູ້ກະທຳຜິດປະຕິເສດບໍ່ສືບຕໍ່ເຄື່ອນໄຫວກະທຳຜິດດ້ວຍຈິດສຳນຶກຂອງຕົນເອງໂດຍອິດສະລະ ຫຼື ບໍ່ຖືກບັງຄັບຈາກພາຍນອກ.

ສາເຫດທີ່ພາໃຫ້ຜູ້ກະທຳຜິດສະໝັກໃຈເລີກລົ້ມການກະທຳຜິດ ຂອງຕົນອາດຈະມາຈາກຄວາມຮູ້ສຶກຕ່າງໆ ເຊັ່ນ: ຢ້ານມີບາບກຳ, ອິດ ສົງສານຜູ້ຖືກເຄາະຮ້າຍ ຫຼື ຄອບຄົວຂອງຜູ້ກ່ຽວ, ຢ້ານຖືກລົງໂທດ ແລະ ອື່ນໆ.

ເຖິງຢ່າງໃດກໍຕາມຈະບໍ່ຖືເປັນສາເຫດທີ່ພາໃຫ້ມີການເລີກລົ້ມ ການກະທຳຜິດດ້ວຍຄວາມສະໝັກໃຈຖ້າຜູ້ກະທຳຜິດຫາກຢຸດເຊົາບໍ່ສືບຕໍ່ ການກະທຳຜິດຂອງຕົນໃຫ້ສຳເລັດຍ້ອນຜູ້ກ່ຽວຮູ້ສຶກວ່າ ການເຄື່ອນໄຫວ ກະທຳຜິດຂອງຕົນໄດ້ຖືກຕິດຕາມຈາກຜູ້ອື່ນຢ່າງໃກ້ຊິດ ຫຼື ບໍ່ສາມາດຈະ ທັບມ້າງອຸປະສັກທີ່ກີດຂວາງການເຄື່ອນໄຫວກະທຳຜິດຂອງຕົນໄດ້ ຫຼື ໂອກາດບໍ່ເອື້ອອຳນວຍໃຫ້ກະທຳຜິດ ຫຼື ຍ້ອນຜູ້ກ່ຽວໄດ້ຖືກອຳນາດການ ປົກຄອງນຳໄປຕັກເຕືອນສຶກສາອົບຮົມແລ້ວ.

2). ຜູ້ກະທຳຜິດບໍ່ສືບຕໍ່ການກະທຳຜິດນັ້ນໃຫ້ສຳເລັດຜົນ ຄວາມ ເດັດຂາດບໍ່ສືບຕໍ່ເຄື່ອນໄຫວກະທຳຜິດສະແດງອອກຢູ່ບ່ອນວ່າຜູ້ກະທຳຜິດ ໄດ້ປ່ຽນໃຈ, ປ່ຽນທັດສະນະທ່າທີຈາກຄວາມຕັ້ງໃຈກະທຳຜິດທີ່ມີມາແລ້ວ (ສາລະພາບຕົນເອງ, ທຳລາຍວັດຖຸ, ພາຫະນະທີ່ຕົນເອງໄດ້ຫ້າງຫາ ກະກຽມຜ່ານມາ, ປະພຶດຕົນສຸພາບ, ໂອບເອື້ອອາລີຕໍ່ຜູ້ຖືກເຄາະຮ້າຍ). ການບໍ່ສືບຕໍ່ເຄື່ອນໄຫວກະທຳຜິດ ໝາຍເຖິງກໍລະນີທີ່ຜູ້ກະທຳຜິດໄດ້ມີ ການກະກຽມ ຫຼື ໄດ້ລົງມືເຄື່ອນໄຫວກະທຳຜິດມາແລ້ວສ່ວນໃດສ່ວນ ໜຶ່ງ. ດັ່ງນັ້ນ, ການກະທຳຜິດຂອງຜູ້ກ່ຽວຈຶ່ງຍັງບໍ່ທັນສິ້ນສຸດ ແລະ ຜົນ ສະທ້ອນທີ່ເປັນອັນຕະລາຍຈຶ່ງຍັງບໍ່ທັນໄດ້ເກີດຂຶ້ນແຕ່ຜູ້ກ່ຽວໄດ້ຢຸດເຊົາບໍ່ ສືບຕໍ່ເຄື່ອນໄຫວໃຫ້ການກະທຳຜິດນັ້ນສິ້ນສຸດລົງທັງໆທີ່ຜູ້ກ່ຽວມີເງື່ອນໄຂ ພຽງພໍ, ມີໂອກາດເໝາະສົມ ແລະ ສະພາບແວດລ້ອມທຸກຢ່າງອຳນວຍ ຄວາມສະດວກໃຫ້ເປັນຢ່າງດີ.

ຈາກທີ່ກ່າວມານັ້ນການເຄື່ອນໄຫວກະທຳຜິດໂດຍລວມແລ້ວ ແມ່ນຍັງຢູ່ໃນໄລຍະກະກຽມໃຫ້ແກ່ການກະທຳຜິດ ຫຼື ຄວາມພະຍາຍາມກໍ່ການກະທຳຜິດ ຊຶ່ງອາດແມ່ນການພະຍາຍາມກໍ່ການກະທຳຜິດທີ່ບໍ່ທັນສິ້ນສຸດເຊັ່ນ: ຍິກປືນຈະຍິງໃສ່ຜູ້ເຄາະຮ້າຍແຕ່ໃນທີ່ສຸດເລີຍປ່ຽນໃຈບໍ່ຍິງທັງໆ ທີ່ບໍ່ມີສະພາບແວດລ້ອມໃດໆມາຂັດຂວາງ ຫຼື ການພະຍາຍາມກໍ່ການກະທຳຜິດທີ່ສິ້ນສຸດແລ້ວເຊັ່ນ: ຍິກປືນຂຶ້ນຍິງແລ້ວແຕ່ບໍ່ຖືກເປົ້າໝາຍ ແທນທີ່ຈະຍິງຊ້ຳຕື່ມທັງໆທີ່ລູກປືນຍັງມີ, ເປົ້າໝາຍຍັງຢູ່ໃນສະຖານທີ່ຢ່າງເໝາະສົມ, ຜູ້ກະທຳຜິດກໍບໍ່ຍິງຊ້ຳ ແຕ່ຫາກຕັດສິນໃຈອອກຈາກສະຖານທີ່ຢ່າງສະຫງົບ.

ໃນທາງກົງກັນຂ້າມຈະບໍ່ຖືວ່າເປັນການເລີກລົ້ມການກະທຳຜິດດ້ວຍຄວາມສະໝັກໃຈຖ້າຜົນສະທ້ອນຂອງການປະພຶດຫາກປະກົດຕົວຂຶ້ນແລ້ວສ່ວນໃດສ່ວນໜຶ່ງ ຫຼື ທັງໝົດແລ້ວຜູ້ກະທຳຜິດຈຶ່ງສຳນຶກຕົວໄດ້ ແລະ ໄດ້ເອົາໃຈໃສ່ສະກັດກັ້ນຜົນສະທ້ອນນັ້ນແຕ່ໃນທີ່ສຸດກໍບໍ່ສາມາດກອບກູ້ເອົາຜົນເສຍຫາຍໄວ້ໄດ້. ການສະແດງອອກຂອງຜູ້ກະທຳຜິດໃນກໍລະນີດັ່ງກ່າວແມ່ນຄວາມກົນແໜງແຄງໃຈ ຊຶ່ງເປັນເຫດພາໃຫ້ຫຼຸດຜ່ອນຄວາມຮັບຜິດຊອບທາງອາຍາ.

ຕົວຢ່າງ: A ເອົາຢາພິດໃຫ້ B ກິນຈາກນັ້ນຈຶ່ງເກີດຄວາມສົງສານ B, A ເລີຍຕັດສິນໃຈພາ B ໄປສົ່ງໂຮງໝໍ, ແຕ່ໃນທີ່ສຸດແພດບໍ່ສາມາດກອບກູ້ເອົາຊີວິດຂອງ B ໄວ້ໄດ້.

ການເລີກລົ້ມການກະທຳຜິດດ້ວຍຄວາມສະໝັກໃຈຈະບໍ່ພາໃຫ້ມີຄວາມຮັບຜິດຊອບທາງອາຍາ ແຕ່ຖ້າໃນການເຄື່ອນໄຫວຂອງຜູ້ກ່ຽວຫາກມີການກະທຳຜິດໃນສະຖານອື່ນຊ້ອນຢູ່ນັ້ນ ຄວາມຮັບຜິດຊອບທາງອາຍາກໍຈະມີສະເພາະແຕ່ໃນການກະທຳຜິດທີ່ກ່ຽວຂ້ອງເທົ່ານັ້ນ.

ເມື່ອນຳມາພິຈາລະນາກັບກໍລະນີສຶກສາຕົວຢ່າງການເລີກລົ້ມການກະທຳຜິດດ້ວຍຄວາມສະໝັກໃຈແລ້ວເຮົາຈະເຫັນແຕ່ລະກໍລະນີດັ່ງນີ້:

ກໍລະນີສຶກສາຕົວຢ່າງທີ 1. A ຕັດສິນໃຈເຂົ້າໄປໃນເຮືອນຂອງ V ເພື່ອລັກຊັບ. A ຈຶ່ງໄດ້ປະຕິບັດຕາມຂັ້ນຕອນດັ່ງນີ້:

- ຂັ້ນຕອນທີ 1. A ໄດ້ໄປສຳຫຼວດເບິ່ງເຮືອນຂອງ V ໂດຍໄດ້ໄປເບິ່ງອ້ອມແອ້ມເຮືອນ ແລະ ສະພາບການປິດປະຕູຕ່າງໆ;

- ຂັ້ນຕອນທີ 2. A ຄິດວ່າຈະທຸບປ່ອງຢ້ຽມບານແກ້ວແລ້ວເຂົ້າໄປໃນເຮືອນ, ຈຶ່ງໄດ້ກຽມຄ້ອນຕີເພື່ອເອົາໄວ້ທຸບແກ້ວ;

- ຂັ້ນຕອນທີ 3. ໃນມື້ກໍ່ເຫດ A ໄດ້ໃຊ້ຄ້ອນຕີທຸບປ່ອງຢ້ຽມແກ້ວແລ້ວເຂົ້າໄປໃນເຮືອນຂອງ V;

- ຂັ້ນຕອນທີ 4. ເພື່ອຊອກຫາຊັບສິນ A ຈຶ່ງໄດ້ຊອກຄົ້ນໄປທົ່ວບໍ່ວ່າຈະເປັນໃນຖ້ານວາງເຄື່ອງ ແລະ ລິ້ນຊັກຂອງໂຕະຕ່າງໆ ທີ່ຢູ່ໃນເຮືອນ;

- ຂັ້ນຕອນທີ 5. ໃນເວລາທີ່ A ພວມຊອກຄົ້ນໄປທົ່ວນັ້ນ, ກໍໄດ້ຍິນສຽງຫວໍ່ລົດຂອງລົດຕຳຫຼວດຂີ່ໃກ້ເຂົ້າມາ;

- ຂັ້ນຕອນທີ 6. A ຈຶ່ງໄດ້ຢຸດເຊົາການຊອກຄົ້ນການລັກແລ້ວຮີບໜີອອກໄປຈາກປະຕູຫຼັງ.

ຈາກກໍລະນີສຶກສາຕົວຢ່າງທີ່ກ່າວມາຂ້າງເທິງນີ້ເຫັນວ່າ A ຈະບໍ່ຖືວ່າເປັນການເລີກລົ້ມການກະທຳຜິດດ້ວຍຄວາມສະໝັກໃຈຕາມມາດຕາ 24 ຂອງປະມວນກົດໝາຍອາຍາເນື່ອງຈາກວ່າການທີ່ A ໄດ້ຢຸດເຊົາການລັກຊັບນັ້ນບໍ່ແມ່ນມາຈາກຄວາມສະໝັກໃຈຂອງຜູ້ກ່ຽວ ແຕ່ເປັນຍ້ອນ A ຢ້ານຖືກຕຳຫຼວດຈັບໄດ້ຈຶ່ງໄດ້ໜີໄປຈາກສະຖານທີ່ດັ່ງກ່າວ.

ກໍລະນີສຶກສາຕົວຢ່າງທີ 2. A ຕັດສິນໃຈຂ້າ B ໂດຍການເອົາມີດແທງ. A ຈຶ່ງໄດ້ປະຕິບັດຕາມຂັ້ນຕອນດັ່ງນີ້:

- ຂັ້ນຕອນທີ 1. A ໄດ້ເອົາມີດທີ່ຈັບມາແທງເຂົ້າທີ່ທ້ອງຂອງ B ແລ້ວຈຶ່ງຖອດມີດດັ່ງກ່າວອອກ;

- ຂັ້ນຕອນທີ 2. A ໄດ້ເຫັນວ່າເລືອດໄຫຼອອກມາຫຼາຍກ່ວາທີ່ຄິດໄວ້;

- ຂັ້ນຕອນທີ 3. A ຕົກໃຈຈຶ່ງຖິ້ມມີດໄວ້ບ່ອນນັ້ນແລ້ວໜີອອກໄປຈາກສະຖານທີ່ດັ່ງກ່າວ;

- ຂັ້ນຕອນທີ 4. ຍ້ອນມີຄົນກາຍມາແຖວນັ້ນພໍດີແລ້ວໄດ້ເອີ້ນລົດສຸກເສີນມາຮັບ B ຈຶ່ງລອດຕາຍ.

ຈາກກໍລະນີສຶກສາຕົວຢ່າງທີ່ກ່າວມາຂ້າງເທິງນີ້ເຫັນວ່າ A ຈະບໍ່ຖືວ່າເປັນການເລີກລົ້ມການກະທຳຜິດດ້ວຍຄວາມສະໝັກໃຈຕາມມາດຕາ 24 ຂອງປະມວນກົດໝາຍອາຍາ. ການທີ່ A ບໍ່ສືບຕໍ່ຄາດຕະກຳ B ໃຫ້ສຳເລັດນັ້ນບໍ່ໄດ້ຖືວ່າເປັນການເລີກລົ້ມການກະທຳຜິດດ້ວຍຄວາມສະໝັກໃຈ ແຕ່ເປັນຍ້ອນ A ຕົກໃຈຈຶ່ງເຮັດໃຫ້ການກະທຳຜິດນັ້ນບໍ່ສຳເລັດຜົນ.

ກໍລະນີສຶກສາຕົວຢ່າງທີ 3. A ຕັດສິນໃຈວ່າຈະຂົ່ມຂືນທຳຊຳເລົາ B ແລະ A ໄດ້ໃຊ້ມີດຈີ້ B ແລ້ວຂູ່ວ່າຖ້າຂັດຂືນຈະຂ້າຖິ້ມ. A ໄດ້ຖອດເສື້ອຜ້າຂອງ B ອອກທັງໝົດທັງໆທີ່ B ໄດ້ມີການຂັດຂືນຈົນຮ່າງກາຍຂອງ B ເປື້ອຍເປົ່າເປັນເຫດໃຫ້ B ເກີດຄວາມຢ້ານກົວແຮງຈົນຂົນໝາວລຸກໄປທົ່ວຮ່າງກາຍ ແລະ ເມື່ອ A ເຫັນແນວນັ້ນກໍໝົດອາລົມແລ້ວຢຸດເຊົາທີ່ຈະຂົ່ມຂືນ B.

ຈາກກໍລະນີສຶກສາທີ່ກ່າວມາຂ້າງເທິງນີ້ເຫັນວ່າ A ຈະບໍ່ຖືວ່າເປັນການເລີກລົ້ມການກະທຳຜິດດ້ວຍຄວາມສະໝັກໃຈຕາມມາດຕາ 24 ຂອງປະມວນກົດໝາຍອາຍາ. ການທີ່ A ບໍ່ສາມາດເຮັດໃຫ້ການກະທຳຜິດນັ້ນສຳເລັດລົງໄດ້ຍ້ອນ A ໝົດອາລົມ. ເຖິງວ່າ A ຢາກສືບຕໍ່ໃຫ້ການກະທຳຜິດນັ້ນສຳເລັດປານໃດກໍຕາມ ແຕ່ກໍບໍ່ສາມາດເຮັດໃຫ້ການກະທຳຜິດນັ້ນ

ສຳເລັດລົງໄດ້. ສະນັ້ນ, ການທີ່ A ໝົດອາລົມນັ້ນຈະບໍ່ຖືວ່າເປັນການເລີກລົ້ມການກະທຳຜິດດ້ວຍຄວາມສະໝັກໃຈ.

ກໍລະນີສຶກສາຕົວຢ່າງທີ 4. A ແລະ B ວາງແຜນລັກພາໂຕ C ໄປຂົ່ມຂືນ. ດັ່ງນັ້ນ, ໃນຂະນະທີ່ C ພວມຍ່າງຢູ່ນັ້ນ, A ກັບ B ຈຶ່ງໄດ້ຊ່ວຍກັນໃຊ້ເຊືອກມັດ C ແລ້ວເອົາຂຶ້ນລົດຂອງ B ໄປ ແລ້ວຂັບລົດອອກໄປຫາສະຖານທີ່ທີ່ເຫັນວ່າເໝາະ ແລະ ບໍ່ມີຜູ້ຄົນ. ໃນລະຫວ່າງທາງນັ້ນ A ໄດ້ເຫັນ C ຮ້ອງໄຫ້ເຮັດໃຫ້ຮູ້ສຶກອິດເມື່ອຍສົງສານຈຶ່ງໄດ້ເວົ້າກັບ B ວ່າ “ເຊົາເຮັດເລື່ອງນີ້ສາເທາະ”, ແລ້ວກໍລົງລົດໄປ. ເຖິງແນວໃດກໍຕາມ B ກໍຍັງໄດ້ເອົາ C ໄປຂົ່ມຂືນຕາມແຜນທີ່ວາງໄວ້ຄືເກົ່າຈົນສຳເລັດ. A ຈະຖືກລົງ�โทດໃນຂໍ້ຫາຂົ່ມຂືນທຳຊຳເລົາຕາມມາດຕາ 248 ຂອງປະມວນກົດໝາຍອາຍາໃນຖານະເປັນຜູ້ລົງມື ຫຼື ຜູ້ຮ່ວມກັນກະທຳຜິດ ຫຼື ບໍ່.

ຈາກກໍລະນີສຶກສາຕົວຢ່າງທີ່ກ່າວມາຂ້າງເທິງນີ້ຈະເຫັນໄດ້ວ່າ A ເປັນຜູ້ຮ່ວມກັນກະທຳຜິດໃນຂໍ້ຫາຂົ່ມຂືນທຳຊຳເລົາຕາມມາດຕາ 248 ຂອງປະມວນກົດໝາຍອາຍາ. ຈະບໍ່ຖືວ່າເປັນການເລີກລົ້ມການກະທຳຜິດດ້ວຍຄວາມສະໝັກໃຈຕາມມາດຕາ 24 ຂອງປະມວນກົດໝາຍອາຍາ ເຖິງວ່າ A ບໍ່ໄດ້ຂົ່ມຂືນທຳຊຳເລົາ C ກໍຕາມ ແຕ່ A ກໍບໍ່ໄດ້ໃຫ້ການຊ່ວຍເຫຼືອ C ແຕ່ຢ່າງໃດຈຶ່ງເຮັດໃຫ້ C ຖືກຂົ່ມຂື່ນ.

ຖ້າຫາກວ່າ A ລົງຈາກລົດໄປແລ້ວໄດ້ໄປແຈ້ງຕໍ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຫຼື ບຸກຄົນອື່ນເພື່ອໃຫ້ການຊ່ວຍເຫຼືອ C ຫຼື ໄດ້ມີການຂັດຂວາງທຸກວິທີເພື່ອບໍ່ໃຫ້ B ຂົ່ມຂືນ C ແລ້ວ ແຕ່ກໍບໍ່ສາມາດຊ່ວຍ C ໃຫ້ຫຼຸດພົ້ນຈາກການຂົ່ມຂືນຂອງ B ໄດ້ ຈຶ່ງຈະຖືວ່າເປັນການເລີກລົ້ມການກະທຳຜິດດ້ວຍຄວາມສະໝັກໃຈຕາມມາດຕາ 24 ຂອງປະມວນກົດໝາຍອາຍາ.

ບົດທີ 6
ການປ້ອງກັນຕົວ

ການປ້ອງກັນຕົວແມ່ນການກະທຳທີ່ຄົບສີ່ອົງປະກອບຂອງການກະທຳຜິດທາງອາຍາ ແຕ່ປະມວນກົດໝາຍອາຍາໃຫ້ຖືວ່າຜູ້ກະທຳບໍ່ຕ້ອງຮັບຜິດຊອບທາງອາຍາອັນເນື່ອງມາຈາກການປ້ອງກັນຕົວນັ້ນ ແລະ ກົດໝາຍຖືວ່າເປັນການກະທຳທີ່ຖືກຕ້ອງຕາມກົດໝາຍ.

ປະມວນກົດໝາຍອາຍາມາດຕາ 36 ໄດ້ບັນຍັດຄວາມໝາຍຂອງການປ້ອງກັນຕົວໄວ້ວ່າການປ້ອງກັນຕົວແມ່ນການກະທຳຂອງບຸກຄົນໃດໜຶ່ງທີ່ກໍ່ຂຶ້ນເພື່ອປົກປ້ອງຜົນປະ�โຫຍດຂອງລັດ ຫຼື ຂອງສັງຄົມ, ຊີວິດ, ສຸຂະພາບ, ສິດ ແລະ ຜົນປະโຫຍດອັນຊອບທຳຂອງຕົນເອງ ຫຼື ຂອງບຸກຄົນອື່ນ, ເພື່ອຕ້ານການບຸກລຸກທີ່ເປັນອັນຕະລາຍຕໍ່ສັງຄົມ ແຕ່ການບຸກລຸກນັ້ນຕ້ອງມີຈິງ ແລະ ເປັນອັນຕະລາຍແທ້. ການປ້ອງກັນຕົວຕ້ອງກະທຳໃນເວລາທີ່ມີການບຸກລຸກ ແລະ ບໍ່ໃຫ້ເກີນຂອບເຂດຂອງການບຸກລຸກນັ້ນ.

ຈາກເນື້ອໃນຂອງມາດຕາ 36 ທີ່ໄດ້ກ່າວມາຂ້າງເທິງນັ້ນຈະເຫັນວ່າການກະທຳຂອງບຸກຄົນໃດໜຶ່ງທີ່ຄົບສີ່ອົງປະກອບຂອງການກະທຳຜິດທາງອາຍາ ແຕ່ຈະຖືວ່າເປັນການປ້ອງກັນຕົວຈະຕ້ອງຄົບຕາມເນື້ອໃນ ແລະ ບັນດາເງື່ອນໄຂ 6 ຂໍ້ດັ່ງລຸ່ມນີ້:

1). ເປັນການກະທຳເພື່ອຕອບ�โต້ການກະທຳທີ່ບໍ່ຖືກຕ້ອງຕາມກົດໝາຍຂອງບຸກຄົນໃດໜຶ່ງເພື່ອປົກປ້ອງຜົນປະโຫຍດຂອງລັດ ຫຼື ຂອງສັງຄົມ, ຊີວິດ, ສຸຂະພາບ, ສິດ ແລະ ຜົນປະโຫຍດອັນຊອບທຳຂອງຕົນເອງ ແລະ ຂອງບຸກຄົນອື່ນເຊັ່ນ: A ໃຊ້ໄມ້ຕີ B ທີ່ກຳລັງຖືມີດຍາວປະມານ 20 ຊັງຕີແມັດແລ່ນເຂົ້າມາຈະແທງຕົນ.

2). ເປັນການກະທຳເພື່ອປ້ອງກັນສິດ ແລະ ຜົນປະໂຫຍດຂອງຕົນ ຫຼື ຂອງບຸກຄົນອື່ນ ໝາຍຄວາມວ່າແມ່ນການກະທຳຂອງບຸກຄົນໃດໜຶ່ງ ເພື່ອປົກປ້ອງບໍ່ໃຫ້ການກະທຳຂອງບຸກຄົນອື່ນມາທຳລາຍ ຫຼື ມາລ່ວງລະເມີດຕໍ່ສິດ ແລະ ຜົນປະໂຫຍດຂອງຕົນເອງເຊັ່ນ: A ໃຊ້ກຳປັ້ນຕີ B ທີ່ພວມຖືມີດຈະແທງ C. ການກະທຳຂອງ A ເພື່ອປົກປ້ອງຊີວິດສຸຂະພາບຂອງ B ນັ້ນເອງ.

3). ການກະທຳເພື່ອຕ້ານການບຸກລຸກທີ່ເປັນອັນຕະລາຍ ໝາຍຄວາມວ່າເປັນການກະທຳເພື່ອຕ້ານການບຸກລຸກທີ່ເປັນອັນຕະລາຍ ແລະ ບໍ່ຖືກຕ້ອງຕາມກົດໝາຍຂອງບຸກຄົນໃດໜຶ່ງທີ່ຈະເຂົ້າເຖິງຕົວ ຫຼື ໄດ້ເຂົ້າເຖິງຕົວແລ້ວ ຊຶ່ງການກະທຳນັ້ນຕ້ອງຕອບ�โต້ໂດຍກົງໃສ່ການບຸກລຸກນັ້ນ ແລະ ການຕອບโต້ນັ້ນບໍ່ໃຫ້ກະທຳເພື່ອຫວັງປະໂຫຍດຢ່າງອື່ນທີ່ນອກ ເໜືອຈາກການບຸກລຸກເຊັ່ນ: A ໃຊ້ກຳປັ້ນຕີ B ທີ່ພວມຖືມີດແລ່ນມາຈະແທງຕົນ ເພື່ອໃຫ້ B ຢຸດເຊົາການກະທຳນັ້ນ.

4). ການບຸກລຸກນັ້ນຕ້ອງມີຈິງ ແລະ ເປັນອັນຕະລາຍແທ້ ໝາຍເຖິງການກະທຳທີ່ເປັນອັນຕະລາຍ ແລະ ບໍ່ຖືກຕ້ອງຕາມກົດໝາຍຂອງບຸກຄົນໃດບຸກຄົນໜຶ່ງນັ້ນເກີດຂຶ້ນຈິງ, ເປັນໄພອັນຕະລາຍແທ້, ໃກ້ຈະເຖິງຕົວ ແລະ ກຳລັງມາເຖິງຕົວແລ້ວ ໝາຍຄວາມວ່າບໍ່ມີການຄາດເດົາ ຫຼື ຄາດຄິດເອົາເອງຂອງຜູ້ຕອບโต້ວ່າຈະເກີດຂຶ້ນ ຫຼື ອາດຈະເກີດຂຶ້ນເຊັ່ນ: A ໃຊ້ໄມ້ຕີແຂນ B ທີ່ພວມຈັບມີດ ແລະ ເງື້ອມມືຈະແທງຕົນເອງ. ຖ້າ A ບໍ່ໃຊ້ໄມ້ຕີແຂນກ່ອນຈະຖືກ B ໃຊ້ມີດແທງຕົນແນ່ນອນ.

5). ການປ້ອງກັນຕົວຕ້ອງກະທຳໃນເວລາທີ່ມີການບຸກລຸກ ໝາຍຄວາມວ່າການຕອບโต້ນັ້ນຕ້ອງຢູ່ໃນເວລາ ຫຼື ໃນຂະນະທີ່ມີການບຸກລຸກຈະເຂົ້າເຖິງຕົວ ຫຼື ການບຸກລຸກໄດ້ເຂົ້າເຖິງຕົວແລ້ວເທົ່ານັ້ນ. ຖ້າມີການຕອບโต້ກ່ອນການບຸກລຸກຈະບໍ່ຖືວ່າແມ່ນການປ້ອງກັນຕົວເຊັ່ນ:

A ໃຊ້ກຳປັ້ນຕີ B ກ່ອນໂດຍຄິດວ່າ B ຈະໃຊ້ໄມ້ມາຕີຕົນ. ກໍລະນີດັ່ງກ່າວ ຈະບໍ່ຖືວ່າເປັນການປ້ອງກັນຕົວ.

6). ການກະທຳບໍ່ໃຫ້ເກີນຂອບເຂດຂອງການບຸກລຸກ ໝາຍຄວາມ ວ່າການຕອບ�โต້ຕ້ອງຢູ່ໃນຂອບເຂດ ແລະ ສົມເຫດສົມຜົນ ຫຼື ມີຄວາມ ສົມດຸນກັບໄພອັນຕະລາຍຈາກການກະທຳທີ່ບໍ່ຖືກຕ້ອງຕາມກົດໝາຍຂອງ ບຸກຄົນທີ່ມີການບຸກລຸກນັ້ນເຊັ່ນ: A ໃຊ້ປືນຍິງ B ທີ່ກຳລັງຈະໃຊ້ກຳປັ້ນ ຕີ C. ກໍລະນີດັ່ງກ່າວຖືວ່າບໍ່ຢູ່ໃນເງື່ອນໄຂຂອງການປ້ອງກັນຕົວເພາະການ ກະທຳເກີນຂອບເຂດຂອງການບຸກລຸກ.

ຈາກເນື້ອໃນຂອງປະມວນກົດໝາຍອາຍາມາດຕາ 36 ແລະ ເງື່ອນໄຂຂອງການຕອບ�โต້ແລ້ວຖ້າເຮົານຳມາພິຈາລະນາກັບກໍລະນີສຶກສາ ຕົວຢ່າງແຕ່ລະກໍລະນີລຸ່ມນີ້ແລ້ວເຮົາຈະເຫັນວ່າ:

ກໍລະນີສຶກສາຕົວຢ່າງທີ 1.

1.1: A ມີຄວາມຄຽດແຄ້ນໃຫ້ B ມາແຕ່ດົນຈຶ່ງໄດ້ໂທລະສັບໄປ ຫາ B ແລ້ວເກີດມີການຜິດຖຽງກັນຂຶ້ນ ແລະ ໃນເວລານັ້ນ B ໄດ້ເວົ້າຂຶ້ນ ວ່າ: “ກູຊິໄປຂ້າມຶງຖິ້ມຢູ່ເຮືອນດຽວນີ້”. A ເອງກໍຄິດວ່າໃນອີກບໍ່ດົນ B ຄົງຈະມາຫາຕົນ ແລະ ເກີດເຫດຮ້າຍຂຶ້ນກັບຕົນແນ່ນອນ ແຕ່ກໍຄິດວ່າບໍ່ຈຳ ເປັນຕ້ອງໜີອອກຈາກເຮືອນກໍໄດ້ ຈຶ່ງໄດ້ກະກຽມດາບໄມ້ເພື່ອໄວ້ຕໍ່ສູ້ກັບ ການຈູ່ໂຈມຂອງ B. ຫຼັງຈາກນັ້ນບໍ່ດົນ B ກໍຖືພ້າບຸກເຂົ້າມາເຮືອນຂອງ A ແລະ ຈະຟັນ A ແທ້, A ຈຶ່ງໃຊ້ດາບໄມ້ທີ່ກະກຽມໄວ້ນັ້ນຕອບ�โต້ຄືນ ຈຶ່ງເຮັດໃຫ້ B ໄດ້ຮັບບາດເຈັບສາຫັດ. ໃນກໍລະນີນີ້ການກະທຳຂອງ A ຈະຖືວ່າເປັນການປ້ອງກັນຕົວ ຫຼື ບໍ່.

ຈາກກໍລະນີສຶກສາຕົວຢ່າງດັ່ງກ່າວເມື່ອນຳມາພິຈາລະນາປະກອບ ກັບເງື່ອນໄຂຂອງການປ້ອງກັນຕົວແລ້ວເຫັນວ່າການທີ B ໄດ້ຖືພ້າເຂົ້າໄປ ເຮືອນເພື່ອຫວັງຈະທຳຮ້າຍຮ່າງກາຍຂອງ A ຖືວ່າເປັນການບຸກລຸກເກີດ

ຂຶ້ນກ່ອນແລ້ວ ແລະ ໄພອັນຕະລາຍກໍ່ຈະເກີດຂຶ້ນແລ້ວ ຊຶ່ງ A ແມ່ນຢູ່ສະຖານທີ່ເຮືອນຂອງຕົນເອງຈຶ່ງບໍ່ຈຳເປັນຕ້ອງລົບໜີໄປທາງອື່ນ ຊຶ່ງການບຸກລຸກກໍເກີດຂຶ້ນແບບທັນທີທັນໃດ, ໄພອັນຕະລາຍກໍຈະເຂົ້າເຖິງຕົວ ແລ້ວອຸປະກອນນຳໃຊ້ກໍສົມດູນກັນ ແລະ ການກະທຳດັ່ງກ່າວກໍບໍ່ໄດ້ກະທຳເກີນຂອບເຂດຂອງການບຸກລຸກແຕ່ຢ່າງໃດ. ການທີ່ A ໄດ້ໃຊ້ດາບໄມ້ແທງ B ເຮັດໃຫ້ໄດ້ຮັບບາດເຈັບນັ້ນຈຶ່ງຖືວ່າເປັນການຕອບ�โต້ທີ່ຖືກຕ້ອງ. ສະນັ້ນ, ການກະທຳຂອງ A ຈຶ່ງຖືວ່າເປັນການປ້ອງກັນຕົວໄດ້.

1.2: ໃນກໍລະນີທີ່ A ຮູ້ລ່ວງໜ້າວ່າ B ຈະມາທຳຮ້າຍຕົວເອງ ເວລານີ້ຈະຖືວ່າການກະທຳຂອງ A ນັ້ນເປັນການປ້ອງກັນຕົວໄດ້ ຫຼື ບໍ່.

ໃນກໍລະນີນີ້ເຖິງແມ່ນວ່າ A ຈະສາມາດຄາດຄະເນ ຫຼື ຮັບຮູ້ລ່ວງໜ້າວ່າ B ຈະມາທຳຮ້າຍຕົວເອງກໍຕາມ ແຕ່ວ່າ B ເປັນຜູ້ໄປບຸກລຸກໂຈມຕີ A ຢູ່ທີ່ເຮືອນກ່ອນ ແລະ ການກະທຳຂອງ B ມັນກໍເກີດຂຶ້ນແບບກະທັນຫັນ. ສະນັ້ນ, ການຕອບ�โต້ຂອງ A ຈຶ່ງຖືວ່າເປັນການປ້ອງກັນຕົວເຊັ່ນກັນ.

1.3: ຖ້າວ່າໃນກໍລະນີ A ນອກຈາກຮູ້ລ່ວງໜ້າວ່າ B ຈະມາຕີຕົນເອງແລ້ວ A ບໍ່ພຽງແຕ່ຄິດຈະປ້ອງກັນຕົວເທົ່ານັ້ນ ແຕ່ຄິດສວຍໃຊ້ໂອກາດນີ້ຈະຕີ B ຄືນຈະເປັນການປ້ອງກັນຕົວ ຫຼື ບໍ່.

ກໍລະນີນີ້ເຫັນວ່າຖ້າວ່າ B ຫາກຍັງບໍ່ທັນໄດ້ເຂົ້າບຸກລຸກ ແລະ ໄພອັນຕະລາຍກໍຍັງຢູ່ຫ່າງໄກ, ແຕ່ A ໄດ້ໃຊ້ດາບໄມ້ທີ່ກະກຽມໄວ້ນັ້ນແທງ B ກ່ອນເພາະຄິດໄປເອງວ່າ B ຈະມາບຸກລຸກເພື່ອທຳຮ້າຍຕົນເອງນັ້ນ ຫຼື ໃນກໍລະນີທີ່ B ໄດ້ຢຸດເຊົາການບຸກລຸກແລ້ວ ແຕ່ A ຫາກຍັງມີເຈດຕະນາທຳຮ້າຍຮ່າງກາຍ B ດ້ວຍການສວຍໃຊ້ໂອກາດທີ່ມາບຸກລຸກ ແລະ ເປັນການກະທຳເພື່ອຫວັງເອົາສຸຂະພາບຂອງຜູ້ອື່ນເກີນການບຸກລຸກແລ້ວ ເມື່ອພິຈາລະນາກັບເງື່ອນໄຂທີ່ໄດ້ກ່າວມາຂ້າງເທິງເຫັນວ່າການກະທຳຂອງ

A ບໍ່ຄົບຕາມເງື່ອນໄຂຂອງການປ້ອງກັນຕົວແຕ່ຢ່າງໃດ. ສະນັ້ນ, ການກະທຳຂອງ A ຈະບໍ່ເປັນການປ້ອງກັນຕົວ.

ກໍລະນີສຶກສາຕົວຢ່າງທີ 2. A ມີຄວາມຄຽດແຄ້ນໃຫ້ C ມາແຕ່ດົນແລ້ວ ແລະ ຄິດມາຕະຫຼອດວ່າຖ້າມີໂອກາດຢາກທຳຮ້າຍໃຫ້ C ບາດເຈັບ. ມື້ໜຶ່ງ A ບັງເອີນໄປພົບເຫັນ C ຢູ່ໃນເມືອງແລ້ວໃນຂະນະນັ້ນ C ເປັນຜູ້ບຸກເຂົ້າມາຈະທຳຮ້າຍ A ກ່ອນ. A ກໍຄິດວ່າຈະໃຊ້ໂອກາດດັ່ງກ່າວທຳຮ້າຍ C ເໝືອນກັນ ຈຶ່ງໄດ້ໃຊ້ກຳປັ້ນຊົກຕ່ອຍເຮັດໃຫ້ C ໄດ້ຮັບບາດເຈັບ. ກໍລະນີນີ້ການກະທຳຂອງ A ຖືວ່າເປັນການປ້ອງກັນຕົວ ຫຼື ບໍ່.

ຈາກກໍລະນີສຶກສາຕົວຢ່າງນີ້ຈະເຫັນວ່າການທີ່ C ໄດ້ແລ່ນເຂົ້າໄປເພື່ອຈະຊົກຕ່ອຍ A ກ່ອນນັ້ນຖືວ່າ C ໄດ້ເລີ່ມມີການບຸກລຸກ ແລະ ໄພອັນຕະລາຍກຳເຂົ້າເຖິງຕົວຂອງ A ແລ້ວ ແຕ່ການທີ່ A ໄດ້ຊົກຕ່ອຍຄືນພຽງໜຶ່ງ ຫຼື ສອງຄັ້ງກໍບໍ່ໄດ້ເກີນການບຸກລຸກ. ເຖິງແມ່ນວ່າ A ຈະຄິດໃຊ້ໂອກາດນີ້ຊົກຕ່ອຍ C ກໍຕາມ ແຕ່ການຊົກຕ່ອຍນັ້ນໄດ້ສ້າງຄວາມເສຍຫາຍໜ້ອຍກວ່າ ຫຼື ເກີນກວ່າພຽງເລັກໜ້ອຍເທົ່ານັ້ນ. ສະນັ້ນ, ເມື່ອນຳມາປຽບທຽບກັບເງື່ອນໄຂຂອງການປ້ອງກັນຕົວແລ້ວຈຶ່ງຖືວ່າການກະທຳຂອງ A ເປັນການປ້ອງກັນຕົວນັ້ນເອງ.

ກໍລະນີສຶກສາຕົວຢ່າງທີ 3.

3.1: A ມີຄວາມຄຽດຊັງໃຫ້ D ຍ້ອນວ່າ D ສະແດງພຶດຕິກຳທີ່ເສຍມາລະຍາດໃສ່ຕົນ ຈຶ່ງໄດ້ຈັບແຂນເບື້ອງໜຶ່ງຂອງ D ແລ້ວງັດໄປທາງຫຼັງ. ເພື່ອໃຫ້ໂຕໃຫ້ຫຼຸດອອກ D ຈຶ່ງໄດ້ໃຊ້ມືເບື້ອງໜຶ່ງບີບຄໍ A ໄວ້, ເມື່ອເປັນແນວນັ້ນ A ຈຶ່ງໄດ້ໃຊ້ກຳປັ້ນຊົກຕ່ອຍ D ເຮັດໃຫ້ D ໄດ້ຮັບບາດເຈັບ. ກໍລະນີສຶກສານີ້ການກະທຳຂອງ A ຖືວ່າເປັນການປ້ອງກັນຕົວ ຫຼື ບໍ່.

ຈາກກໍລະນີສຶກສາຕົວຢ່າງດັ່ງກ່າວເຫັນວ່າການທີ່ A ໄດ້ຈັບແຂນຂອງ D ງັດໄປທາງຫຼັງນັ້ນຖືວ່າເປັນການບຸກລຸກແລ້ວ ແຕ່ການທີ່ D ໄດ້ໃຊ້ມືບີບຄໍຂອງ A ນັ້ນຄວາມເປັນໄພອັນຕະລາຍກໍບໍ່ໄດ້ຫ່າງໄກກັນຫຼາຍ. ເມື່ອມາປຽບທຽບກັບເງື່ອນໄຂແລ້ວຈຶ່ງຖືວ່າການກະທຳຂອງ D ເປັນການປ້ອງກັນຕົວ. ເຖິງຢ່າງໃດກໍຕາມການທີ່ A ໃຊ້ກຳປັ້ນຊົກຕ່ອຍ D ຄືນນັ້ນ ເມື່ອນຳມາພິຈາລະນາກັບເງື່ອນໄຂແລ້ວບໍ່ຄົບຕາມເງື່ອນໄຂຂອງການປ້ອງກັນຕົວ. ດັ່ງນັ້ນ, ການກະທຳຂອງ A ຈຶ່ງບໍ່ເປັນການປ້ອງກັນຕົວແຕ່ຢ່າງໃດ.

3.2: ຖ້າເປັນກໍລະນີທີ່ A ຫາກໄດ້ໃຊ້ຄຳເວົ້າທ້າທາຍທີ່ກະທົບເຖິງຈິດໃຈຊື່ໆ ແຕ່ຍັງບໍ່ໄດ້ລົງມືທຳຮ້າຍ D ແຕ່ຢ່າງໃດ ແຕ່ເປັນ D ທີ່ໃຈຮ້າຍຍ້ອນຄຳເວົ້ານັ້ນແລ້ວເຂົ້າມາຕີ A ກ່ອນຈຶ່ງເຮັດໃຫ້ A ຕີຕອບ�โต้ຄືນ, ການກະທຳຂອງ A ຈະຖືວ່າເປັນການປ້ອງກັນຕົວ ຫຼື ບໍ່.

ໃນກໍລະນີນີ້ເຮົາຕ້ອງພິຈາລະນາເຈດຕະນາ ແລະ ການກະທຳຂອງ A ທີ່ເວົ້າທ້າທາຍ D ນັ້ນວ່າມັນໄດ້ແຕະຕ້ອງທາງດ້ານຈິດໃຈໃນ ລະດັບ ໃດ, ຖ້າວ່າໃຊ້ຄຳເວົ້າແບບທຳມະດາທົ່ວໄປກໍຖືວ່າການກະທຳຂອງ A ຍັງບໍ່ເປັນການບຸກລຸກເທື່ອ, ແຕ່ການທີ່ D ໄດ້ໄປລົງມືຕີ A ກ່ອນນັ້ນຈຶ່ງຖືວ່າເປັນການບຸກລຸກກ່ອນແລ້ວ ແລະ ການທີ່ A ໄດ້ຕີຕອບโต้ຄືນຕໍ່ກັບການບຸກລຸກນັ້ນ ເມື່ອນຳມາພິຈາລະນາປະກອບກັບເງື່ອນໄຂຂອງການປ້ອງກັນຕົວແລ້ວຈຶ່ງຖືວ່າການກະທຳຂອງ A ເປັນການປ້ອງກັນຕົວໄດ້.

ກໍລະນີສຶກສາຕົວຢ່າງທີ 4. A ໄດ້ຜິດຖຽງກັບ B ຢູ່ກາງຖະໜົນ ຈົນເຖິງຂັ້ນລົງມືໃຊ້ກຳປັ້ນຊົກຕ່ອຍກັນ. ຜ່ານການຊົກຕ່ອຍກັນປາກົດວ່າ B ສູ້ A ບໍ່ໄດ້, A ຈຶ່ງໃຊ້ກຳປັ້ນຊົກໜ້າ B ຢ່າງແຮງຈົນເຮັດໃຫ້ B ລົ້ມລົງ. ຈາກນັ້ນ A ຮູ້ສຶກໃຈເຢັນລົງຈຶ່ງກຽມຈະຍ່າງໜີໄປ. ໃນຂະນະນັ້ນ B ເຫັນ

ວ່າຈະສູ້ A ດ້ວຍມືເປົ່າບໍ່ໄດ້ຈຶ່ງໄດ້ຈົກມີດອອກມາພ້ອມທັງຕັ້ງທ່າແລ່ນເຂົ້າຫາ A, ແຕ່ A ເຫັນວ່າ B ຕັ້ງທ່າທີ່ຖືມີດຈະແລ່ນເຂົ້າມາຫາຕົນເຮັດໃຫ້ຕົນຮູ້ສຶກໄດ້ເຖິງໄພອັນຕະລາຍທີ່ຈະເກີດຂຶ້ນຈຶ່ງໄດ້ຈັບເອົາທໍ່ເຫຼັກທີ່ຕົກຢູ່ບໍລິເວນນັ້ນຍົກຂຶ້ນ ແລະ ຕັ້ງທ່າແນໄປທາງ B. ໃນຂະນະທີ່ B ແລ່ນມາທາງ A ດ້ວຍຄວາມໄວຈຶ່ງບໍ່ສາມາດຫຼົບຫຼີກທໍ່ເຫຼັກໄດ້ ເປັນເຫດເຮັດໃຫ້ B ຖືກທໍ່ເຫຼັກແທງເຂົ້າບໍລິເວນທ້ອງ. ບາດແຜຖືກເຫຼັກແທງເຮັດໃຫ້ B ເສຍຊີວິດ. ການກະທຳຂອງ A ເປັນການປ້ອງກັນຕົວໄດ້ ຫຼື ບໍ່.

ກໍລະນີສຶກສາຕົວຢ່າງດັ່ງກ່າວເຫັນວ່າການຕີກັນລະຫວ່າງ A ແລະ B ໃນເບື້ອງຕົ້ນແມ່ນໃຊ້ມືເປົ່າກໍຖືວ່າສົມດຸນກັນແລ້ວ ແລະ ຖືວ່າເປັນການທຳຮ້າຍຮ່າງກາຍເຊິ່ງກັນ ແລະ ກັນ. ເຖິງຢ່າງໃດກໍຕາມໃນເມື່ອ A ຫາກໄດ້ຢຸດເຊົາໄປແລ້ວກໍຖືວ່າເຫດການນັ້ນໄດ້ສິ້ນສຸດລົງແລ້ວ, ການທີ່ B ໄດ້ໃຊ້ມີດທີ່ເປັນອຸປະກອນອັນຕະລາຍແລ່ນເຂົ້າຈະທຳຮ້າຍ A ຄັ້ງໃໝ່ຖືວ່າເປັນການບຸກລຸກ ແລະ ເປັນໄພອັນຕະລາຍຮ້າຍແຮງກວ່າເກົ່າ. ໃນເວລານີ້ A ກໍໄດ້ໃຊ້ອຸປະກອນອັນຕະລາຍຕອບໂຕ້ຄືນເຫັນວ່າລະດັບຄວາມເປັນອັນຕະລາຍແມ່ນເໝາະສົມກັນລະຫວ່າງເຫຼັກກັບມີດ, ເມື່ອນຳເອົາເງື່ອນໄຂຂອງການປ້ອງກັນຕົວມາພິຈາລະນາແລ້ວເຫັນວ່າຄົບຕາມເງື່ອນໄຂທຸກປະການ. ສະນັ້ນ, ການກະທຳຂອງ A ຈຶ່ງເປັນການປ້ອງກັນຕົວໄດ້ເຊັ່ນກັນ.

ກໍລະນີສຶກສາຕົວຢ່າງທີ 5. A ຖືກ D ຊຶ່ງຢູ່ໃນສະພາບມຶນເມົາເຂົ້າມາວິນວາຍຫາເລື່ອງຢູ່ທາງຍ່າງຂ້າງຖະໜົນ. A ຖືກ D ດຶງຄໍເສື້ອ ແລະ ມີທ່າທີວ່າຈະທຳຮ້າຍຮ່າງກາຍ A, ເມື່ອເປັນແນວນັ້ນ A ຈຶ່ງພະຍາຍາມຈະຍ່າງໜີດ້ວຍການໃຊ້ສອງມືຍູ້ບໍລິເວນເອິກຂອງ D ອອກໄປ. ດ້ວຍແຮງຍູ້ເຮັດໃຫ້ D ເຊອອກໄປກາງຖະໜົນແລ້ວລົ້ມ, ໃນເວລານັ້ນມີລົດແລ່ນມາ

ພໍດີ D ຈຶ່ງຖືກລົດຕຳເສຍຊີວິດ. ການກະທຳຂອງ A ເປັນການປ້ອງກັນຕົວ ໄດ້ ຫຼື ບໍ່.

ໃນກໍລະນີສຶກສາຕົວຢ່າງນີ້ເຫັນວ່າເຖິງແມ່ນວ່າ D ຈະເປັນຜູ້ບຸກລຸກກ່ອນກໍຕາມ ແຕ່ການທີ່ A ໃຊ້ມືຍູ້ D ອອກໄປທາງຖະໜົນນັ້ນ ແມ່ນມີຄວາມເປັນອັນຕະລາຍສູງທີ່ຈະຖືກລົດຕຳ ຈຶ່ງຖືວ່າເປັນການຕອບ�โต້ນັ້ນເກີນການບຸກລຸກ ແລະ ຜົນເສຍຫາຍກໍຫ່າງໄກກັນຫຼາຍເກີນໄປ ຊຶ່ງເປັນການບໍ່ສົມດຸນກັນລະຫວ່າງການບຸກລຸກກັບການຕອບโต້, ເມື່ອນຳເອົາເງື່ອນໄຂຂອງການປ້ອງກັນຕົວມາພິຈາລະນາແລ້ວເຫັນວ່າການກະທຳດັ່ງກ່າວບໍ່ຄົບຕາມເງື່ອນໄຂຂອງການປ້ອງກັນຕົວແຕ່ຢ່າງໃດ. ດັ້ງນັ້ນ, ການກະທຳຂອງ A ຈຶ່ງເປັນການປ້ອງກັນຕົວເກີນຂອບເຂດ.

ກໍລະນີສຶກສາຕົວຢ່າງທີ 6. X ໄດ້ຍິນສຽງຮ້ອງດັງຂຶ້ນຈຶ່ງແນມໄປເບິ່ງທາງສຽງດັ່ງກ່າວແລ້ວເຫັນວ່າຢູ່ເດີ່ນໜ້າບ້ານຂອງເຮືອນຫຼັງໜຶ່ງເຫັນ A ຮ້ອງຂຶ້ນວ່າ "ມົງຕາຍຊະ" ພ້ອມທັງມີທ່າທາງຈະຍິງປືນໃສ່ B. ໃນເວລານັ້ນ X ໄດ້ຮ້ອງໃສ່ວ່າ "ຢ່າເຮັດ" ແຕ່ A ກໍຍັງຄົງເຮັດທ່າທີຈະຍິງປືນໃສ່ B ຢູ່ຄືເກົ່າ. ເພື່ອຢາກຊ່ວຍ B ນັ້ນ X ຈຶ່ງໄດ້ແກ່ງກ້ອນຫິນໃສ່ A ເຮັດໃຫ້ A ໄດ້ຮັບບາດເຈັບໜັກ ແຕ່ຄວາມຈິງແລ້ວ A ແລະ B ແມ່ນສະມາຊິກຂອງຄະນະນັກສະແດງ ແລະ ພວມໃຊ້ປືນຂອງຫຼິ້ນຝຶກຊ້ອມການສະແດງລະຄອນຢູ່. ການກະທຳຂອງ X ເປັນການປ້ອງກັນຕົວ ຫຼື ບໍ່.

ໃນກໍລະນີສຶກສາຕົວຢ່າງນີ້ເຫັນວ່າ ຖ້າວ່າ X ບໍ່ສາມາດຮູ້ໄດ້ວ່າ A ແລະ B ກຳລັງຝຶກຊ້ອມການສະແດງລະຄອນຢູ່ ແລະ ບຸກຄົນທົ່ວໄປກໍບໍ່ສາມາດຮູ້ໄດ້ເຊັ່ນກັນວ່າເປັນການສະແດງລະຄອນ, X ກໍໄດ້ຮ້ອງໃສ່ A ແລະ B ແລ້ວ ແຕ່ກໍບໍ່ຢຸດເຊົາ ຊຶ່ງເຮັດໃຫ້ X ເຂົ້າໃຈຜິດຄິດວ່າການກະທຳຂອງ A ເປັນການກະທຳທີ່ເປັນໄພອັນຕະລາຍຕໍ່ B ແຕ່ເພື່ອປ້ອງກັນສິດ ແລະ ຜົນປະໂຫຍດຂອງບຸກຄົນອື່ນນັ້ນ ເມື່ອນຳເອົາເງື່ອນໄຂຂອງການ

ປ້ອງກັນຕົວມາພິຈາລະນາແລ້ວເຫັນວ່າຄົບຕາມເງື່ອນໄຂທຸກປະການຈຶ່ງ ເຫັນວ່າການກະທຳຂອງ X ເປັນການປ້ອງກັນຕົວນັ້ນເອງ. ເຖິງຢ່າງໃດ ກໍຕາມຖ້າບຸກຄົນທົ່ວໄປກໍສາມາດຮັບຮູ້ໄດ້ວ່າ A ແລະ B ກຳລັງສະແດງ ລະຄອນ ແລະ X ກໍບໍ່ແນ່ໃຈວ່າ A ກຳລັງຈະຍິງ B ແທ້ ຫຼື ບໍ່ນັ້ນ ເມື່ອນຳ ເອົາເງື່ອນໄຂຂອງການປ້ອງກັນຕົວມາພິຈາລະນາແລ້ວເຫັນວ່າບໍ່ຄົບຕາມ ເງື່ອນໄຂແຕ່ຢ່າງໃດ. ດັ່ງນັ້ນ, ການກະທຳຂອງ X ຈະບໍ່ເປັນການປ້ອງກັນ ຕົວແຕ່ຢ່າງໃດ.

ບົດທີ 7
ການກະທຳໃນສະພາວະທີ່ຈຳເປັນ

ການກະທຳໃນສະພາວະທີ່ຈຳເປັນແມ່ນການກະທຳຂອງບຸກຄົນໃດໜຶ່ງເພື່ອປົກປ້ອງ ຫຼື ຊ່ວຍໃຫ້ຫຼຸດພົ້ນຈາກໄພອັນຕະລາຍທີ່ກຳລັງເກີດຂຶ້ນນັ້ນບໍ່ໃຫ້ສ້າງຄວາມເສຍຫາຍຫຼາຍຂຶ້ນກວ່າເກົ່າ. ເຖິງແມ່ນວ່າການກະທຳດັ່ງກ່າວຈະຄົບສີ່ອົງປະກອບຂອງການກະທຳຜິດທາງອາຍາກໍຕາມ ແຕ່ປະມວນກົດໝາຍອາຍາກໍໄດ້ຍົກເວັ້ນບໍ່ໃຫ້ມີຄວາມຮັບຜິດຊອບທາງອາຍາ ແລະ ຖືວ່າການກະທຳດັ່ງກ່າວເປັນການກະທຳທີ່ຖືກຕ້ອງຕາມກົດໝາຍ.

ຕາມປະມວນກົດໝາຍອາຍາມາດຕາ 37 ໄດ້ກຳນົດໄວ້ວ່າ ສະພາວະທີ່ຈຳເປັນແມ່ນການກະທຳດ້ວຍຄວາມຈຳເປັນຂອງບຸກຄົນໃດໜຶ່ງເພື່ອຫຼີກເວັ້ນໄພອັນຕະລາຍທີ່ຂົ່ມຂູ່ຕໍ່ຜົນປະ�โຫຍດຂອງລັດ ຫຼື ຂອງສັງຄົມ, ຊີວິດ, ສຸຂະພາບ, ສິດ ແລະ ຜົນປະโຫຍດອັນຊອບທຳຂອງຕົນເອງ ຫຼື ຂອງບຸກຄົນອື່ນ ແລະ ເມື່ອໄພອັນຕະລາຍດັ່ງກ່າວຫາກບໍ່ສາມາດຫຼີກເວັ້ນໄດ້ດ້ວຍວິທີການອື່ນ ແລະ ບໍ່ເກີດຈາກການກະທຳຂອງຕົນເອງ ແຕ່ຜົນເສຍຫາຍທີ່ເກີດຂຶ້ນຈາກການກະທຳນັ້ນຕ້ອງໜ້ອຍກວ່າຜົນເສຍຫາຍທີ່ຈະເກີດຂຶ້ນຈາກໄພອັນຕະລາຍ.

ຈາກເນື້ອໃນຂອງມາດຕາ 37 ສະພາວະທີ່ຈຳເປັນທີ່ໄດ້ກ່າວມາຂ້າງເທິງນັ້ນການກະທຳຂອງບຸກຄົນໃດໜຶ່ງຈະຖືວ່າເປັນການກະທຳສະພາວະທີ່ຈຳເປັນໄດ້ນັ້ນຕ້ອງມີຄົບເງື່ອນໄຂ 6 ຂໍ້ດັ່ງລຸ່ມນີ້:

1). ມີໄພອັນຕະລາຍທີ່ຂົ່ມຂູ່ຕໍ່ກັບຜົນປະโຫຍດໃດໜຶ່ງ ໝາຍເຖິງໄດ້ມີເຫດການໃດໜຶ່ງທີ່ເປັນອັນຕະລາຍກຳລັງສ້າງ ຫຼື ໄດ້ສ້າງຄວາມເສຍຫາຍຕໍ່ຊີວິດ, ສຸຂະພາບ, ສິດ ແລະ ຜົນປະโຫຍດອັນຊອບທຳ

ຂອງຕົນເອງ ຫຼື ຂອງບຸກຄົນອື່ນເຊັ່ນ: ໃນຄະນະທີ່ເຮືອໂດຍສານກຳລັງແລ່ນຢູ່ນັ້ນໄດ້ເກີດມີພະຍຸລົມແຮງພັດມາແບບກະທັນຫັນຈຶ່ງເຮັດໃຫ້ນ້ຳໄຫຼເຂົ້າເຮືອ ແຕ່ເພື່ອປົກປ້ອງຊີວິດຂອງຜູ້ໂດຍສານນັ້ນເຈົ້າຂອງເຮືອເລີຍຂົນເຄື່ອງທີ່ຢູ່ໃນເຮືອຖິ້ມລົງນ້ຳໝົດ. ສະນັ້ນ, ພະຍຸລົມແຮງພັດນ້ຳເຂົ້າເຮືອນັ້ນຖືວ່າເປັນໄພອັນຕະລາຍຂົ່ມຂູ່ແລ້ວ.

2). ເປັນການກະທຳດ້ວຍຄວາມຈຳເປັນເພື່ອຫຼີກເວັ້ນໄພອັນຕະລາຍ ໝາຍເຖິງການກະທຳຂອງບຸກຄົນໃດໜຶ່ງ ຊຶ່ງໄດ້ພົບເຫັນເຫດການທີ່ມີໄພອັນຕະລາຍຂົ່ມຂູ່ຕໍ່ຜົນປະ�โຫຍດໃດໜຶ່ງ ຊຶ່ງຜູ້ກ່ຽວບໍ່ສາມາດຄາດຄະເນໄດ້ລ່ວງໜ້າວ່າຈະມີເຫດການດັ່ງກ່າວເກີດຂຶ້ນຈຶ່ງມີຄວາມຈຳເປັນຕ້ອງໄດ້ກະທຳເພື່ອຊ່ວຍເຫຼືອບໍ່ໃຫ້ໄພອັນຕະລາຍນັ້ນສ້າງຜົນເສຍຫາຍຫຼາຍຂຶ້ນກວ່າເກົ່າ ແລະ ການກະທຳຕ້ອງມີຈຸດປະສົງເພື່ອປົກປ້ອງຜົນປະ�โຫຍດໃດໜຶ່ງຈາກໄພອັນຕະລາຍດັ່ງກ່າວ. ບໍ່ໃຫ້ກະທຳເພື່ອສວຍໂອກາດ ຫຼື ຄິດເອົາເອງວ່າຈະເກີດມີເຫດການໄພອັນຕະລາຍ ເຊັ່ນ: A ກຳລັງຕັດຕົ້ນໄມ້ໃກ້ຈະຫັກແລ້ວ ແຕ່ໃນຄະນະດຽວກັນກໍໄດ້ມີ B ກຳລັງຍ່າງມາບ່ອນດັ່ງກ່າວ C ໄດ້ແນມເຫັນຕົ້ນໄມ້ກຳລັງຈະຫັກ ແລະ ລົ້ມມາທາງ B, C ຈຶ່ງໄດ້ແລ່ນໄປດຶງແຂນ B ອອກມາໄດ້ຮັບບາດເຈັບ. ສະນັ້ນ, ການທີ່ C ໄປດຶງເອົາແຂນຂອງ B ອອກມານັ້ນເປັນການກະທຳດ້ວຍຄວາມຈຳເປັນເພື່ອປົກປ້ອງສຸຂະພາບຂອງ B.

3). ເປັນການກະທຳເພື່ອຫຼີກເວັ້ນໄພອັນຕະລາຍທີ່ຂົ່ມຂູ່ຜົນປະ�โຫຍດ ໝາຍເຖິງການກະທຳຂອງບຸກຄົນໃດໜຶ່ງເພື່ອເຮັດໃຫ້ຜົນປະ�โຫຍດນັ້ນຫຼຸດພົ້ນອອກຈາກໄພອັນຕະລາຍທີ່ກຳລັງເກີດຂຶ້ນນັ້ນ ແລະ ເພື່ອປ້ອງກັນບໍ່ໃຫ້ຜົນປະ�โຫຍດນັ້ນຖືກໄພອັນຕະລາຍສ້າງຄວາມເສຍຫາຍຫຼາຍຂຶ້ນກວ່າເກົ່າເຊັ່ນ: A ຖືກຄົນບໍ່ດີໄລ່ທຳຮ້າຍຮ່າງກາຍ ແຕ່ເພື່ອເອົາຕົວລອດນັ້ນ A ຈຶ່ງໄດ້ແລ່ນໄປຍູ້ B ໄດ້ຮັບບາດເຈັບ. ສະນັ້ນ,

ການທີ່ A ໄດ້ແລ່ນໄປຍູ້ B ໄດ້ຮັບບາດເຈັບເລັກໜ້ອຍນັ້ນຖືວ່າເປັນການກະທຳເພື່ອຫຼີກເວັ້ນໄພອັນຕະລາຍທີ່ຂົ່ມຂູ່.

4). ເປັນການກະທຳທີ່ບໍ່ສາມາດຫຼີກເວັ້ນໄດ້ດ້ວຍວິທີການອື່ນ ໝາຍເຖິງເມື່ອມີເຫດການໄພອັນຕະລາຍ ຊຶ່ງຈະສ້າງຄວາມເສຍຫາຍຕໍ່ຊີວິດ, ສຸຂະພາບ, ສິດ ແລະ ຜົນປະ�โຫຍດອັນຊອບທຳຂອງຕົນເອງ ຫຼື ຂອງບຸກຄົນອື່ນ ແຕ່ຊອກຫາການກະທຳດ້ວຍວິທີອື່ນເພື່ອຫຼີກເວັ້ນບໍ່ໄດ້ແລ້ວ ຈຶ່ງກະທຳລົງໄປເພື່ອປົກປ້ອງຜົນປະ�โຫຍດດັ່ງກ່າວເຊັ່ນ: A ໃຊ້ຄ້ອນທຸບແວ່ນລົດທີ່ກຳລັງໄຫຼມາຈະຕຳເດັກນ້ອຍເພື່ອໃຫ້ລົດຢຸດ. ສະນັ້ນ, ການທີ່ລົດໄຫຼມາຫາເດັກນ້ອຍນັ້ນແມ່ນມີໄພອັນຕະລາຍທີ່ຂົ່ມຂູ່ແລ້ວ, ແຕ່ຍ້ອນມີເດັກນ້ອຍຫຼາຍຄົນການທີ່ຈະອູ້ມເອົາເດັກນ້ອຍອອກມາໝົດນັ້ນກໍຈະບໍ່ທັນແລ້ວ A ຈຶ່ງບໍ່ມີວິທີອື່ນນອກຈາກໃຊ້ຄ້ອນທຸບແວ່ນລົດເພື່ອຢຸດ. ການກະທຳດັ່ງກ່າວຈຶ່ງຖືວ່າເປັນການທຳທີ່ບໍ່ສາມາດຫຼີກເວັ້ນໄດ້ດ້ວຍວິທີອື່ນ.

5). ໄພອັນຕະລາຍນັ້ນຕ້ອງບໍ່ເກີດມາຈາກການກະທຳຂອງຕົນເອງ ໝາຍເຖິງເຫດການທີ່ມີໄພອັນຕະລາຍນັ້ນ ແມ່ນເກີດມາຈາກການກະທຳຂອງບຸກຄົນອື່ນ, ຈາກສັດ, ຈາກທຳມະຊາດ ແລະ ຈາກວັດຖຸສິ່ງຂອງຕ່າງໆຂອງບຸກຄົນອື່ນເຊັ່ນ: A ໃຊ້ປືນຍິງໃສ່ຊ້າງປ່າທີ່ກຳລັງເຂົ້າມາທຳລາຍເຄື່ອງປູກຂອງຕົນເອງ. ສະນັ້ນ, ການທຳລາຍເຄື່ອງປູກນັ້ນແມ່ນບໍ່ເກີດມາຈາກການກະທຳຂອງ A.

6). ຜົນເສຍຫາຍທີ່ເກີດຂຶ້ນຈາກການກະທຳນັ້ນຕ້ອງໜ້ອຍກວ່າຜົນເສຍຫາຍທີ່ຈະເກີດຂຶ້ນຈາກໄພອັນຕະລາຍ ໝາຍເຖິງໃນເວລາກະທຳເພື່ອປົກປ້ອງຜົນປະ�โຫຍດໃດໜຶ່ງນັ້ນຜົນເສຍຫາຍທີ່ເກີດຂຶ້ນຈາກການກະທຳດັ່ງກ່າວຕ້ອງໃຫ້ມີຄວາມເສຍຫາຍໜ້ອຍກວ່າຜົນເສຍຫາຍທີ່ຈະເກີດຂຶ້ນຈາກໄພອັນຕະລາຍເຊັ່ນ: A ໃຊ້ໄມ້ຄ້ອນທຸບແວ່ນລົດເພື່ອ

ຊ່ວຍເຫຼືອເດັກນ້ອຍທີ່ກຳລັງຕິດໃນລົດທີ່ມີສະພາບອ່ອນແອງ ແລະ ບໍ່ສາມາດເປີດປະຕູລົດອອກມາໄດ້, ການທີ່ A ໃຊ້ໄມ້ທຸບແວ່ນລົດນັ້ນ ແມ່ນມີຄວາມເສຍຫາຍໜ້ອຍກວ່າການທີ່ເດັກນ້ອຍຈະເສຍຊີວິດ. ສະນັ້ນ, ຈຶ່ງຖືວ່າການກະທຳຂອງ A ແມ່ນມີຄວາມເສຍຫາຍໜ້ອຍກວ່າ ໄພອັນຕະລາຍ.

ຈາກເນື້ອໃນຂອງປະມວນກົດໝາຍອາຍາມາດຕາ 37 ແລະ ເງື່ອນໄຂຕ່າງໆ ທີ່ກ່າວມາຂ້າງເທິງນັ້ນເມື່ອນຳມາພິຈາລະນາກັບກໍລະນີສຶກສາຕົວຢ່າງແລ້ວຈະໄດ້ຂໍ້ສະຫຼຸບດັ່ງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 1. ໃນຂະນະທີ່ A ພວມພາໝາຍ່າງຫຼິ້ນ ຢູ່ນັ້ນໄດ້ຖືກ B ເຂົ້າມາວິນວາຍຫາເລື່ອງແຕ່ກໍພະຍາຍາມບໍ່ສົນໃຈ, ເມື່ອ ເປັນແນວນັ້ນ B ຈຶ່ງໄດ້ປົດສາຍຄໍໝາ (ໝາພັນໂຕໃຫຍ່) ຂອງ C ຊຶ່ງຖືກ ມັດໄວ້ຢູ່ເຮືອນຂອງ C ຢູ່ໃກ້ໆນັ້ນແລ້ວຄວບຄຸມໃຫ້ໝາດັ່ງກ່າວແລ່ນໄປ ກັດ A. ເພື່ອບໍ່ໃຫ້ໝາທຳຮ້າຍນັ້ນ A ຈຶ່ງໃຊ້ທ່ອນໄມ້ຊຶ່ງຕົກຢູ່ບໍລິເວນນັ້ນ ຕີໃສ່ໝາຂອງ C ໄດ້ຮັບບາດເຈັບ. ການກະທຳຂອງ A ຈະເປັນການກະທຳ ໃນສະພາວະທີ່ຈຳເປັນ ຫຼື ບໍ່.

ຈາກກໍລະນີສຶກສາຕົວຢ່າງດັ່ງກ່າວຈະເຫັນວ່າການທີ່ B ໄປປ່ອຍໝາຂອງ C ທີ່ຖືກມັດໄວ້ຢູ່ເຮືອນແລ້ວຄວບຄຸມໃຫ້ໄປກັດ A ເພື່ອຫວັງທຳຮ້າຍຮ່າງກາຍນັ້ນຖືວ່າເປັນການໃຊ້ໝາຂອງບຸກຄົນອື່ນເປັນ ເຄື່ອງມື ແລະ ໄພອັນຕະລາຍກໍເກີດຂຶ້ນແລ້ວ, ບໍ່ມີວິທີອື່ນຈະຫຼີກເວັ້ນໄດ້ ແລ້ວ ແລະ ກະທຳເພື່ອປົກປ້ອງສຸຂະພາບຂອງຜູ້ກ່ຽວເອງ. ຖ້າພິຈາລະນາ ຕາມເງື່ອນໄຂຂອງສະພາວະທີ່ຈຳເປັນແລ້ວ, ການກະທຳຂອງ A ຖືວ່າ ເປັນການກະທຳໃນສະພາວະທີ່ຈຳເປັນ.

ກໍລະນີສຶກສາຕົວຢ່າງທີ 2. ສຳລັບກໍລະນີສຶກສາ 1 ຂ້າງເທິງ ນີ້, ໃນກໍລະນີ B ບໍ່ໄດ້ຄວບຄຸມໝາໃຫ້ແລ່ນໄປກັດ A ແຕ່ຄວບຄຸມໃຫ້ໄປ

ກັດໝາຂອງ A ແຕ່ເພື່ອປົກປ້ອງໝາຂອງຕົນ A ຈຶ່ງໄດ້ທຳຮ້າຍ ໝາ ຂອງ C ເຮັດໃຫ້ໝາໄດ້ຮັບບາດເຈັບ. ການກະທຳຂອງ A ຈະເປັນ ການກະທຳໃນສະພາວະທີ່ຈຳເປັນ ຫຼື ບໍ່.

ຈາກກໍລະນີສຶກສາຕົວຢ່າງດັ່ງກ່າວຈະເຫັນວ່າການທີ່ B ໄດ້ປ່ອຍ ໝາຂອງ C ແລ້ວຄວບຄຸມໃຫ້ໄປກັດໝາຂອງ A ກໍເພື່ອຫວັງທຳຮ້າຍ ໝາຂອງ A ແຕ່ໃຊ້ໝາເປັນເຄື່ອງມືເທົ່ານັ້ນ ແຕ່ເພື່ອປ້ອງກັນບໍ່ໃຫ້ເກີດໄພ ອັນຕະລາຍຕໍ່ກັບໝາຂອງຜູ້ກ່ຽວ A ຈຶ່ງໄດ້ໃຊ້ຄ້ອນຕີໝາຂອງ C. ຖ້າພິຈາລະນາຕາມເງື່ອນໄຂແລ້ວຈະເຫັນວ່າໄພອັນຕະລາຍໄດ້ເກີດຂຶ້ນ ແລ້ວ, ການກະທຳກໍເພື່ອປົກປ້ອງກັນໝາຂອງຜູ້ກ່ຽວ ຊຶ່ງບໍ່ສາມາດ ຫຼີກເວັ້ນດ້ວຍວິທີອື່ນໄດ້ແລ້ວ ແລະ ຄວາມເສຍຫາຍກໍໜ້ອຍກວ່າ. ສະນັ້ນ, ການກະທຳຂອງ A ຈຶ່ງຖືວ່າເປັນການກະທຳໃນສະພາວະທີ່ຈຳ ເປັນໄດ້ເຊັ່ນກັນ.

ກໍລະນີສຶກສາຕົວຢ່າງທີ 3. ໃນຂະນະທີ່ A ພວມຍ່າງຫຼິ້ນຢູ່ນັ້ນ ໄດ້ຖືກ B ເຂົ້າມາວິນວາຍຫາເລື່ອງ ແຕ່ກໍພະຍາຍາມບໍ່ສົນໃຈ, ເມື່ອເປັນແນວນັ້ນ B ຈຶ່ງໄດ້ໄປຫາ E (ອາຍຸ 10 ປີ) ຊຶ່ງພວມຂີ່ລົດຖີບ ຫຼິ້ນຢູ່ແຖວນັ້ນແລ້ວຍູ້ລົດຖີບໂດຍທີ່ E ຍັງນັ່ງຢູ່ເພື່ອໃຫ້ໄປຕຳ A; A ຈຶ່ງ ໄດ້ຍູ້ລົດຖີບໂດຍ E ຍັງນັ່ງຢູ່ນັ້ນກັບຄືນເຮັດໃຫ້ລົດຖີບລົ້ມລົງ ແລະ ໄດ້ ຮັບບາດເຈັບ. ການກະທຳຂອງ A ຈະຖືວ່າເປັນການກະທຳໃນສະພາວະ ທີ່ຈຳເປັນ ຫຼື ບໍ່.

ຈາກກໍລະນີສຶກສາຕົວຢ່າງດັ່ງກ່າວຈະເຫັນວ່າການທີ່ B ໄດ້ຍູ້ລົດ ຖີບຂອງ E ແລະ ບັງຄັບທິດທາງໃຫ້ໄປຫາ A ກໍເພື່ອຫວັງທຳຮ້າຍ ຮ່າງກາຍໂດຍການຍູ້ລົດຖີບ E ເປັນເຄື່ອງມື. ຖ້າພິຈາລະນາຕາມເງື່ອນໄຂ ແລ້ວເຫັນວ່າລົດຖີບຖືກຍູ້ມາໃສ່ນັ້ນແມ່ນມີໄພອັນຕະລາຍແລ້ວ. ການທີ່ A ໄດ້ຍູ້ລົດຖີບອອກນັ້ນກໍເພື່ອບໍ່ໃຫ້ຕົນເອງໄດ້ຮັບບາດເຈັບ ຊຶ່ງກໍ

ເປັນເວລາກະທັນຫັນບໍ່ສາມາດຫຼົບຫຼີກໄດ້ແລ້ວ ແລະ ການທີ່ຍູ້ລົດຖີບ ອອກນັ້ນກໍໄດ້ສ້າງຄວາມເສຍຫາຍພຽງເລັກໜ້ອຍເທົ່ານັ້ນ. ສະນັ້ນ, ການກະທຳຂອງ A ຈຶ່ງຖືວ່າເປັນການກະທຳໃນສະພາວະທີ່ຈຳເປັນໄດ້ເຊັ່ນກັນ.

ບົດທີ 8
ຄວາມຍິນຍອມຂອງຜູ້ຖືກເສຍຫາຍ

ຄວາມຍິນຍອມຂອງຜູ້ຖືກເສຍຫາຍແມ່ນການຍອມເສຍສະຫຼະໃຫ້ການກະທຳໃດໜຶ່ງຂອງບຸກຄົນອື່ນເກີດຂຶ້ນແກ່ຕົນດ້ວຍຄວາມສະໝັກໃຈຂອງຜູ້ຍິນຍອມເອງ ຫຼື ຈະເວົ້າໃນຄວາມໝາຍໜຶ່ງກໍໝາຍຄວາມວ່າຄວາມຍິນຍອມຂອງຜູ້ຖືກເສຍຫາຍໝາຍເຖິງການທີ່ບຸກຄົນໃດບຸກຄົນໜຶ່ງຍິນຍອມໃຫ້ບຸກຄົນອື່ນກະທຳຕໍ່ຕົນເອງບໍ່ວ່າຈະເປັນທາງດ້ານຊີວິດ, ຮ່າງກາຍ, ຊັບສິ່ງຂອງ, ກຽດສັກສີຊື່ສຽງ ຫຼື ອື່ນໆ ຂອງຜູ້ຍິນຍອມ.

ໂດຍທົ່ວໄປແລ້ວຖ້າຫາກມີຄວາມຍິນຍອມໃຫ້ຄວາມເສຍຫາຍເກີດຂຶ້ນແກ່ຕົນແລ້ວ, ຜູ້ກະທຳກໍຈະບໍ່ມີຄວາມຜິດທາງອາຍາ ແລະ ບໍ່ມີຄວາມຮັບຜິດຊອບທາງອາຍາ. ແຕ່ເຖິງຢ່າງໃດກໍຕາມຄວາມຍິນຍອມຂອງຜູ້ຖືກເສຍຫາຍບໍ່ໄດ້ໝາຍຄວາມວ່າຈະເຮັດໃຫ້ຜູ້ກະທຳບໍ່ມີຄວາມຜິດທາງອາຍາ ແລະ ບໍ່ມີຄວາມຮັບຜິດຊອບທາງອາຍາທຸກກໍລະນີສະເໝີໄປ ໝາຍຄວາມວ່າການຍອມເສຍສະຫຼະຂອງບຸກຄົນໃດໜຶ່ງມັນມີຂອບເຂດ ແລະ ບາງກໍລະນີຖ້າມີຄວາມເສຍສະຫຼະ ຫຼື ຍິນຍອມໃຫ້ຄວາມເສຍຫາຍນັ້ນເກີດຂຶ້ນກັບຕົນແລ້ວຈະເຮັດໃຫ້ຜູ້ກະທຳບໍ່ມີຄວາມຜິດທາງອາຍາ ແລະ ບໍ່ມີຄວາມຮັບຜິດຊອບທາງອາຍາສະເໝີໄປ.

ຄວາມຍິນຍອມຂອງບຸກຄົນໃດໜຶ່ງຈະບໍ່ພາໃຫ້ຜູ້ກະທຳມີຄວາມຜິດທາງອາຍາ ແລະ ບໍ່ມີຄວາມຮັບຜິດຊອບທາງອາຍານັ້ນຕ້ອງເປັນຄວາມຍິນຍອມທີ່ເປັນສ່ວນຕົວຂອງບຸກຄົນເທົ່ານັ້ນເຊັ່ນ: ວັດຖຸສິ່ງຂອງທີ່ເປັນກຳມະສິດສ່ວນຕົວຂອງບຸກຄົນຖ້າຫາກຜູ້ເປັນເຈົ້າຂອງຍິນຍອມໃຫ້ບຸກຄົນອື່ນເອົາໄປແລ້ວ ບຸກຄົນຜູ້ນັ້ນຈະບໍ່ຖືວ່າເປັນຜູ້ກະທຳຜິດຖານລັກຊັບ ຍົກເວັ້ນແຕ່ວ່າຄວາມຍິນຍອມໃຫ້ເອົາຊັບນັ້ນໄປຍ້ອນເກີດຈາກຄວາມຫຼົງ

ຜິດ ຫຼື ເຂົ້າໃຈຜິດຂອງຜູ້ຍິນຍອມເອງ, ຜູ້ກະທຳຈະມີຄວາມຜິດຖານສໍ້ໂກງຊັບໄດ້, ສ່ວນຄວາມຍິນຍອມອັນໃດເຖິງວ່າຈະຢູ່ໃນຮ່າງກາຍຂອງຜູ້ຍິນຍອມກໍຕາມ ແຕ່ຖ້າຫາກສິ່ງນັ້ນເປັນສ່ວນໜຶ່ງຂອງສັງຄົມ ຫຼື ຂອງສ່ວນລວມແລ້ວ, ບຸກຄົນຜູ້ນັ້ນຈະບໍ່ສາມາດເສຍສະຫຼະ ຫຼື ຍິນຍອມໄດ້ເຊັ່ນ: ຍິນຍອມໃຫ້ຄົນອື່ນຂ້າຕົນເອງ, ຍິນຍອມໃຫ້ຄົນອື່ນທຳຮ້າຍຮ່າງກາຍຕົນເອງ. ຄວາມຍິນຍອມເຫຼົ່ານີ້ເຖິງວ່າຊີວິດ ແລະ ຮ່າງກາຍຈະເປັນຂອງບຸກຄົນກໍຕາມ ແຕ່ສິ່ງເຫຼົ່ານີ້ມັນເປັນສ່ວນໜຶ່ງຂອງສັງຄົມໂດຍສ່ວນລວມ ຊຶ່ງຜູ້ເປັນເຈົ້າຂອງຮ່າງກາຍ ຫຼື ເຈົ້າຂອງຊີວິດບໍ່ສາມາດເສຍສະຫຼະ ຫຼື ຍິນຍອມໃຫ້ຄົນອື່ນກະທຳຕໍ່ຕົນໄດ້. ຖ້າຫາກມີຄວາມຍິນຍອມຂຶ້ນມາຜູ້ກະທຳກໍມີຄວາມຜິດທາງອາຍາ ແລະ ມີຮັບຜິດຊອບທາງອາຍາໄດ້ເຊັ່ນກັນ.

ເຖິງຢ່າງໃດກໍຕາມຄວາມຍິນຍອມໃຫ້ກະທຳຕໍ່ຮ່າງກາຍຂອງຕົນບາງກໍລະນີຈະບໍ່ມີຄວາມຜິດທາງອາຍາ ແລະ ມີຄວາມຮັບຜິດຊອບທາງອາຍາເຊັ່ນ: ຍິນຍອມໃຫ້ຄົນອື່ນທຳຊຳເລົາຕົນເອງ, ຜູ້ກະທຳຈະບໍ່ມີຄວາມຜິດທາງອາຍາຖານຂົ່ມຂືນທຳຊຳເລົາເພາະສັງຄົມໂດຍສ່ວນລວມໄດ້ມອບອຳນາດໃນການຕັດສິນໃຈໃຫ້ແກ່ບຸກຄົນນັ້ນແລ້ວວ່າບຸກຄົນເມື່ອເຖິງກະສຽນອາຍຸຈະມີເພດສຳພັນກັບໃຜເປັນເລື່ອງເສລີພາບໃນທາງເພດຂອງບຸກຄົນນັ້ນ ຍົກເວັ້ນແຕ່ວ່າຄວາມຍິນຍອມຂອງບຸກຄົນໃນເລື່ອງດັ່ງກ່າວຫາກຍັງບໍ່ທັນບັນລຸນິຕິພາວະ ຫຼື ອາຍຸຍັງບໍ່ຮອດ 18 ປີ, ຜູ້ກະທຳຖືວ່າມີຄວາມຜິດທາງອາຍາເນື່ອງຈາກວ່າສັງຄົມໂດຍສ່ວນລວມຍັງບໍ່ທັນມອບອຳນາດການຕັດສິນໃຈໃຫ້ບຸກຄົນເຫຼົ່ານີ້ເທື່ອ. ດັ່ງນັ້ນ, ກະສຽນອາຍຸຈຶ່ງເປັນເລື່ອງຂອງສັງລວມໂດຍສ່ວນລວມ ແລະ ກົດໝາຍຈະເປັນຜູ້ມອບອຳນາດໃຫ້.

ນອກຈາກນັ້ນຄວາມຍິນຍອມຂອງຜູ້ຖືກເສຍຫາຍທີ່ເປັນເລື່ອງສ່ວນຕົວຂອງບຸກຄົນທີ່ຈະບໍ່ມີຄວາມຜິດທາງອາຍາ ແລະ ມີຄວາມ

ຮັບຜິດຊອບທາງອາຍາອີກອັນໜຶ່ງໄດ້ແກ່ຍິນຍອມໃຫ້ທຳຮ້າຍຮ່າງກາຍ ຈາກການແຂ່ງຂັນກີລາ, ຍິນຍອມໃຫ້ແພດຜ່າຕັດຮ່າງກາຍເພື່ອການປິ່ນປົວ, ຍິນຍອມໃຫ້ຄົນອື່ນຕັດຜົມຕົນເອງເພື່ອຄວາມສວຍງາມ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງຮ່າງກາຍ. ຄວາມຍິນຍອມເຫຼົ່ານີ້ຖືວ່າ ສັງຄົມໂດຍສ່ວນລວມໄດ້ມອບອຳນາດໃຫ້ບຸກຄົນຕັດສິນໃຈເອງໄດ້ແລ້ວ ແລະ ການຕັດສິນໃຈ ຫຼື ຄວາມຍິນຍອມເຫຼົ່ານີ້ເປັນຄວາມຍິນຍອມຂອງ ສັງຄົມນັ້ນເອງ.

ເມື່ອນຳຫຼັກການຄວາມຍິນຍອມຂອງຜູ້ຖືກເສຍຫາຍນີ້ມາສຶກສາ ມາພິຈາລະນາກັບກໍລະນີສຶກສາຕົວຢ່າງໃນແຕ່ລະກໍລະນີແລ້ວເຮົາຈະເຫັນ ດັ່ງນີ້:

ກໍລະນີສຶກສາຕົວຢ່າງທີ 1. A ຖືກ B ຮ້ອງຂໍໃຫ້ທຳຮ້າຍຮ່າງກາຍ ຕົນເອງດ້ວຍການຕີໃຫ້ໄດ້ຮັບບາດເຈັບເລັກໜ້ອຍເພາະວ່າມື້ອື່ນ B ບໍ່ຢາກ ໄປເຮັດວຽກຈຶ່ງຂໍຍອມເຈັບ. ເມື່ອເປັນແນວນັ້ນ A ຈຶ່ງໃຊ້ໄມ້ເບສບອນຕີ ໃສ່ຫົວຂອງ B ເຮັດໃຫ້ B ຫົວແຕກຈົນໄດ້ເຂົ້າຮັບປິ່ນປົວຢູ່ໂຮງໝໍເປັນ ເວລາໜຶ່ງເດືອນ. A ຈະມີຄວາມຜິດຖານທຳຮ້າຍຮ່າງກາຍ ຫຼື ບໍ່ ເພາະວ່າ ປະມວນກົດໝາຍອາຍາມາດຕາ 194 ກຳນົດໄວ້ວ່າ: ບຸກຄົນໃດຫາກເຮັດ ໃຫ້ຜູ້ອື່ນບາດເຈັບໂດຍເຈດຕະນາຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນຫາສາມປີ ແລະ ຈະຖືກປັບໃໝແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີສຶກສາຕົວຢ່າງນີ້ຈະເຫັນວ່າການທີ່ A ໃຊ້ໄມ້ເບສບອນ ຕີໃສ່ຫົວຂອງ B ນີ້ເນື່ອງມາຈາກ B ເປັນຜູ້ຍິນຍອມໃຫ້ຄວາມເສຍຫາຍ ເກີດຂຶ້ນກັບຕົນຄືຍິນຍອມໃຫ້ A ຕີຫົວຕົນເອງ, ຄວາມຍິນຍອມນີ້ເຖິງວ່າ ຈະເປັນຄວາມຍິນຍອມໃຫ້ກະທຳຕໍ່ຮ່າງກາຍຂອງຕົນເອງກໍຕາມ ແຕ່ຮ່າງກາຍຂອງບຸກຄົນເປັນສ່ວນໜຶ່ງຂອງສັງຄົມໂດຍສ່ວນລວມ ຊຶ່ງ B

ບໍ່ສາມາດເສຍສະຫຼະ ຫຼື ຍິນຍອມດ້ວຍຕົນເອງໄດ້. ດັ່ງນັ້ນ, ເຖິງວ່າການກະທຳຂອງ A ຈະໄດ້ຮັບຄວາມຍິນຍອມກໍຕາມຖືວ່າ A ມີຄວາມຜິດທາງອາຍາ ແລະ ມີຄວາມຮັບຜິດຊອບທາງອາຍາໄດ້. ການກະທຳຂອງ A ເປັນການກະທຳໂດຍເຈດຕະນາຈຶ່ງມີຄວາມຜິດຖານທຳຮ້າຍຮ່າງກາຍນັ້ນເອງ.

ກໍລະນີສຶກສາຕົວຢ່າງທີ 2. C ກັບ D ສັງກັດຢູ່ໃນແກ້ງຂອງມາເຟຍດຽວກັນ, ໃນນີ້ C ມີຕຳແໜ່ງສູງກວ່າ. ມື້ ໜຶ່ງ D ໄດ້ເຮັດເງິນສິດຈຳນວນ 1 ຕື້ກີບເສຍ, ເງິນຈຳນວນນີ້ເປັນເງິນທີ່ໄດ້ມາຈາກການຄ້າຂາຍຢາເສບຕິດຂອງແກ້ງດັ່ງກ່າວຊຶ່ງໄດ້ມອບໝາຍໃຫ້ D ເປັນຜູ້ຮັກສາໄວ້. ສະນັ້ນ, ເພື່ອເປັນການໄຖ່ໂທດໃນຄວາມຜິດຂອງຕົນໃນຄັ້ງນີ້, C ຈຶ່ງສັ່ງໃຫ້ D ຫັກແຂນຂອງຕົວເອງ. D ຍອມຮັບປະຕິບັດຕາມຄຳສັ່ງຂອງ C ແລະ ພວມຈະຫັກແຂນຕົນເອງ ແຕ່ບໍ່ກ້າເຮັດຈຶ່ງໄດ້ຮ້ອງຂໍໃຫ້ຄົນໃນແກ້ງດຽວກັນຄື E ມາຫັກແຂນຂອງຕົນໃຫ້. ດັ່ງນັ້ນ, E ຈຶ່ງໄດ້ໃຊ້ໄມ້ເບສບອນຟາດໄປທີ່ແຂນຊ້າຍຂອງ D ຈົນເຮັດໃຫ້ແຂນຊ້າຍຂອງ D ຫັກ. C ມີຄວາມຜິດຖານເປັນຕົວການ ຫຼື ບໍ່, E ມີຄວາມຜິດຖານທຳຮ້າຍຮ່າງກາຍໃນຖານະເປັນຜູ້ປະຕິບັດ ຫຼື ບໍ່ ເພາະວ່າປະມວນກົດໝາຍອາຍາມາດຕາ 27 ກຳນົດຜູ້ເປັນຕົວການໄວ້ວ່າ: ຕົວການແມ່ນຜູ້ວາງແຜນ, ຈັດຕັ້ງ ແລະ ບັນຊາການກະທຳຜິດ, ມາດຕາ 28 ກຳນົດຜູ້ປະຕິບັດໄວ້ວ່າ: ຜູ້ປະຕິບັດແມ່ນຜູ້ລົງມືກະທຳຜິດໂດຍກົງ.

ກໍລະນີສຶກສາຕົວຢ່າງດັ່ງກ່າວນີ້ເຫັນວ່າການກະທຳຂອງ E ຄືໃຊ້ໄມ້ເບສບອນຕີແຂນຂອງ D ເກີດມາຈາກຄວາມຍິນຍອມຂອງ D ເອງ ແລະ D ເອງກໍຍິນຍອມທີ່ຈະຫັກແຂນຂອງຕົນໃນເບື້ອງຕົ້ນນັ້ນກໍເນື່ອງຈາກຍິນຍອມປະຕິບັດຕາມຄຳສັ່ງຂອງ C ໝາຍຄວາມວ່າການກະທຳຂອງ D ແລະ E ກໍລ້ວນແລ້ວແຕ່ເກີດຈາກຄວາມຍິນຍອມທັງນັ້ນ. ກໍລະນີສຶກສາຕົວຢ່າງນີ້ກໍຄືກໍລະນີສຶກສາຕົວຢ່າງທີ່ 1 ຂ້າງເທິງນັ້ນວ່າຄວາມຍິນຍອມ

ນີ້ເຖິງວ່າຈະເປັນຄວາມຍິນຍອມໃຫ້ກະທຳຕໍ່ຮ່າງກາຍຂອງຕົນເອງກໍຕາມ ແຕ່ຮ່າງກາຍຂອງບຸກຄົນເປັນສ່ວນໜຶ່ງຂອງສັງຄົມໂດຍສ່ວນລວມເຖິງວ່າ ບຸກຄົນດັ່ງກ່າວຈະສັງກັດໃນແກ້ງຂອງອົງກອນອາຊະຍາກຳກໍຕາມ ຊຶ່ງ D ບໍ່ສາມາດເສຍສະຫຼະ ຫຼື ຍິນຍອມດ້ວຍຕົນເອງໄດ້. ດັ່ງນັ້ນ, ເຖິງວ່າການກະທຳຂອງ E ຈະໄດ້ຮັບຄວາມຍິນຍອມກໍຕາມຖືວ່າ E ມີຄວາມຜິດທາງອາຍາ ແລະ ມີຄວາມຮັບຜິດຊອບທາງອາຍາໃນຖານະເປັນຜູ້ປະຕິບັດໄດ້ ແລະ ໃນເມື່ອການກະທຳຂອງ E ເປັນຄວາມຜິດທາງອາຍາໃນຖານະຜູ້ປະຕິບັດແລ້ວ, ການສັ່ງການຂອງ C ຊຶ່ງເປັນການກະທຳໃນຖານະຂອງຜູ້ເປັນຫົວໜ້ານັ້ນ ຈຶ່ງຖືວ່າການກະທຳຂອງ C ເປັນການກະທຳໃນຖານະຜູ້ເປັນຕົວການໄດ້ເຊັ່ນກັນ.

ກໍລະນີສຶກສາຕົວຢ່າງທີ 3. F ຮູ້ວ່າ G ໂສກເສົ້າເນື່ອງຈາກສູນເສຍຄອບຄົວຈາກໄຟໄໝ້. ມື້ໜຶ່ງ G ເວົ້າສູ່ F ຟັງວ່າຊີວິດຕົນບໍ່ເຫຼືອຫຍັງແລ້ວ ແລະ ຄິດຢາກຕາຍໃຫ້ມັນແລ້ວໄປສາ ຈຶ່ງຂໍຮ້ອງໃຫ້ F ຊ່ວຍຂ້າຕົນເອງໃຫ້ຕາຍແດ່. F ຄິດວ່າ G ເປັນຄົນໜ້າສົງສານເລີຍຄິດວ່າສົ່ງຊ່ວຍຈົບຊີວິດຜູ້ກ່ຽວໃຫ້, ຈຶ່ງໄດ້ໃຊ້ມີດຍາວແທງທີ່ຫົວໃຈຂອງ G ຈົນເຮັດໃຫ້ G ເສຍຊີວິດ. F ມີຄວາມຜິດຖານຄາດຕະກຳ ຫຼື ບໍ່ ເພາະວ່າປະມວນກົດໝາຍອາຍາມາດຕາ 188 ກຳນົດໄວ້ວ່າ: ບຸກຄົນໃດຫາກໄດ້ເຮັດໃຫ້ຜູ້ອື່ນເສຍຊີວິດໂດຍເຈດຕະນາຈະຖືກລົງໂທດຕັດອິດສະລະພາບແຕ່ ສິບປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝແຕ່ 5.000.000 ກີບ ຫາ 50.000.000 ກີບ.

ຈາກກໍລະນີສຶກສາຕົວຢ່ງນີ້ຈະເຫັນວ່າການກະທຳຂອງ F ເກີດ ຈາກຄວາມຍິນຍອມຂອງ G. ກໍລະນີສຶກສານີ້ກໍຄືກັນກັບ 2 ກໍລະນີສຶກສາຕົວຢ່າງຂ້າງເທິງວ່າ G ເອງເປັນຜູ້ຍິນຍອມໃຫ້ຄວາມເສຍຫາຍນັ້ນເກີດຂຶ້ນກັບຕົນ ໝາຍຄວາມວ່າ G ເປັນຜູ້ຍິນຍອມໃຫ້ F ຂ້າຕົນເອງຕາຍ

ເພື່ອໜີຈາກຄວາມໂສກເສົ້າຂອງຕົນເອງ. ຄວາມຍິນຍອມນີ້ເຖິງວ່າຈະ ເປັນຄວາມຍິນຍອມໃຫ້ກະທຳຕໍ່ຊີວິດຂອງຕົນເອງກໍຕາມ ແຕ່ຊີວິດຂອງ ບຸກຄົນເປັນສ່ວນໜຶ່ງຂອງສັງຄົມໂດຍສ່ວນລວມ ຊຶ່ງ G ບໍ່ສາມາດ ເສຍສະຫຼະ ຫຼື ຍິນຍອມດ້ວຍຕົນເອງໄດ້. ດັ່ງນັ້ນ, ເຖິງວ່າການກະທຳຂອງ F ຈະເກີດຂຶ້ນຈາກຄວາມຍິນຍອມກໍຕາມຖືວ່າ F ມີຄວາມຜິດທາງອາຍາ ແລະ ມີຄວາມຮັບຜິດຊອບທາງອາຍາໄດ້. ການກະທຳຂອງ F ເປັນການ ກະທຳໂດຍເຈດຕະນາຈຶ່ງມີຄວາມຜິດຖານຄາດຕະກຳນັ້ນເອງ.

ບົດທີ 9
ຫຼັກການໃຫ້ລົງໂທດແຕ່ການກະທຳຜິດ ໂດຍເຈດຕະນາເປັນພື້ນຖານ

ໂດຍທົ່ວໄປແລ້ວການລົງໂທດການກະທຳຜິດໂດຍເຈດຕະນາ ເປັນຫຼັກການພື້ນຖານຂອງກົດໝາຍອາຍາວ່າ ບຸກຄົນໃດຈະໄດ້ຮັບການ ລົງໂທດທາງອາຍາກໍຕໍ່ເມື່ອໄດ້ກະທຳຜິດໂດຍເຈດຕະນາ ຍົກເວັ້ນແຕ່ວ່າ ບຸກຄົນໃດຫາກໄດ້ກະທຳຜິດໂດຍບໍ່ເຈດຕະນາ ຫຼື ດ້ວຍຄວາມບໍ່ ລະມັດລະວັງນັ້ນ, ກົດໝາຍກໍຕ້ອງໄດ້ກຳນົດໄວ້ຢ່າງຈະແຈ້ງວ່າການກະທຳ ນັ້ນເປັນຄວາມຜິດ ແລະ ມີໂທດທາງອາຍາ. ການລົງໂທດຕໍ່ການກະທຳຜິດ ໂດຍເຈດຕະນາເປັນຫຼັກການພື້ນຖານນີ້ ໝາຍຄວາມວ່າການກະທຳຜິດໃດ ຜູ້ກະທຳຕ້ອງຮັບໂທດໂດຍເຈດຕະນາ ຫຼື ການກະທຳຜິດໃດຜູ້ກະທຳຕ້ອງ ຮັບໂທດໂດຍບໍ່ເຈດຕະນາ ຫຼື ດ້ວຍຄວາມປະໝາດ ຫຼື ດ້ວຍຄວາມບໍ່ລະ ມັດລະວັງນັ້ນ, ປະມວນກົດໝາຍອາຍາກໍຕ້ອງໄດ້ກຳນົດ ຫຼື ບັນຍັດເປັນ ຫຼັກການໄວ້ໃນກົດໝາຍຢ່າງຈະແຈ້ງ.

ເຖິງຢ່າງໃດກໍຕາມຖ້າເຮົາສຶກສາຈາກປະມວນກົດໝາຍອາຍາ ພາກທົ່ວໄປຂອງ ສປປ ລາວ ແລ້ວຈະເຫັນວ່າປະມວນກົດໝາຍອາຍາຍຶດ ຖືຫຼັກການນີ້ເຊັ່ນກັນ ພຽງແຕ່ກົດໝາຍອາຍາບໍ່ໄດ້ກຳນົດຫຼັກການນີ້ໄວ້ ເປັນລາຍລັກອັກສອນເທົ່ານັ້ນ. ໃນປະມວນກົດໝາຍອາຍາພຽງແຕ່ໄດ້ກຳ ນົດຄວາມໝາຍຂອງການກະທຳຜິດໂດຍເຈດຕະນາໄວ້ວ່າ: ການກະທຳຜິດ ໂດຍເຈດຕະນາແມ່ນການກະທຳ ຫຼື ການເມີນເສີຍ ຊຶ່ງຜູ້ກະທຳຜິດຮູ້ວ່າ ການກະທຳ ຫຼື ການເມີນເສີຍຂອງຕົນເປັນອັນຕະລາຍຕໍ່ສັງຄົມ ແລະ ກໍ ຄາດຄະເນໄດ້ເຖິງຜົນສະທ້ອນຂອງມັນແຕ່ຈົງໃຈເຮັດ ຫຼື ປະປ່ອຍໃຫ້ມັນ ເກີດຂຶ້ນ.

ຖ້າເຮົາສຶກສາປະມວນກົດໝາຍອາຍາພາກສະເພາະທີ່ກຳນົດການກະທຳຜິດສະຖານຕ່າງໆໄວ້ນັ້ນແລ້ວຈະເຫັນວ່າມີບາງມາດຕາກຳນົດການກະທຳຜິດໂດຍເຈດຕະນາໄວ້ເຊັ່ນ: ມາດຕາ 110 ການທໍລະຍົດຕໍ່ຊາດ, ມາດຕາ 236 ການທຳລາຍ ຫຼື ການເຮັດໃຫ້ຊັບເປ່ເພໂດຍເຈດຕະນາ, ມາດຕາ 265 ການປະຖິ້ມເດັກ ແລະ ສະຖານການກະທຳຜິດອື່ນໆ. ພ້ອມກັນນັ້ນໃນກົດໝາຍອາຍາພາກສະເພາະມີບາງມາດຕາບໍ່ໄດ້ກຳນົດເປັນການກະທຳຜິດໂດຍເຈດຕະນາໄວ້ເລີຍເຊັ່ນ: ມາດຕາ 111 ການກະບົດ, ມາດຕາ 112 ການເປັນນັກສືບສອດແນມ ແລະ ສະຖານອື່ນໆ. ດັ່ງນັ້ນ, ຈາກທີ່ປະມວນກົດໝາຍອາຍາພາກທົ່ວໄປບໍ່ໄດ້ກຳນົດເປັນລາຍລັກອັກສອນການລົງໂທດຕໍ່ການກະທຳຜິດໂດຍເຈດຕະນາເປັນຫຼັກການພື້ນຖານໄວ້ນັ້ນ, ໃນການພິຈາລະນາການລົງໂທດຕໍ່ກັບການກະທຳຜິດວ່າຈະລົງໂທດໂດຍເຈດຕະນາເປັນຫຼັກການຂອງກົດໝາຍ ຫຼື ເປັນຫຼັກປະຕິບັດນັ້ນ ຫຼື ບໍ່ ຈະຕ້ອງໄດ້ພິຈາລະນາການກະທຳຜິດເປັນແຕ່ລະສະຖານໄປ ດັ່ງຈະເຫັນໄດ້ຈາກກໍລະນີສຶກສາຕົວຢ່າງດັ່ງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 1. ໃນກໍລະນີທີ່ບຸກຄົນໃດໜຶ່ງຫາກກະທຳຜິດໂດຍບໍ່ເຈດຕະນາໃນຂໍ້ຫາລັກຊັບ ຈະຖືວ່າເປັນການກະທຳຜິດທາງອາຍາຕາມມາດຕາ 231 ຂອງປະມວນກົດໝາຍອາຍາ ຫຼື ບໍ່ ເພາະວ່າມາດຕານີ້, ປະມວນກົດໝາຍອາຍາບໍ່ໄດ້ກຳນົດວ່າເປັນການກະທຳຜິດໂດຍເຈດຕະນາແຕ່ຢ່າງໃດ ຊຶ່ງປະມວນກົດໝາຍອາຍາມາດຕາ 231 ກຳນົດການລັກຊັບໄວ້ວ່າ: ບຸກຄົນໃດຫາກໄດ້ເອົາຊັບຂອງຜູ້ອື່ນມາເປັນຂອງຕົນໂດຍບໍ່ຖືກຕ້ອງ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

ກໍລະນີສຶກສາຕົວຢ່າງທີ 2. ໃນກໍລະນີທີ່ບຸກຄົນໃດໜຶ່ງຫາກກະທຳຜິດໂດຍບໍ່ເຈດຕະນາໃນຂໍ້ຫາການທຳລາຍວັດຖຸບູຮານ ຫຼື ສິ່ງກໍ່ສ້າງແຫ່ງສິລະປະວັນນະກຳ ຈະຖືວ່າເປັນການກະທຳຜິດທາງອາຍາຕາມມາດຕາ 237 ຂອງປະມວນກົດໝາຍອາຍາ ຫຼື ບໍ່ ເພາະວ່າມາດຕານີ້, ປະມວນກົດໝາຍອາຍາກໍບໍ່ໄດ້ກຳນົດວ່າເປັນການກະທຳຜິດໂດຍເຈດຕະນາໄວ້ແຕ່ຢ່າງໃດເຊັ່ນດຽວກັນ ຊຶ່ງປະມວນກົດໝາຍອາຍາມາດຕາ 237 ກຳນົດການທຳລາຍວັດຖຸບູຮານ ຫຼື ສິ່ງກໍ່ສ້າງແຫ່ງສິລະປະວັນນະກຳໄວ້ວ່າ: ບຸກຄົນໃດຫາກໄດ້ທຳລາຍ, ມ້າງເພພະທາດເຈດີ, ສະຖານທີ່ ແລະ ເຄື່ອງສັກການະບູຊາອື່ນ ຫຼື ໄດ້ຂຸດຄົ້ນເອົາບົສິມ ຫຼື ໄດ້ນຳເອົາພະພຸດທະຮູບ ຫຼື ເຄື່ອງສັກການະບູຊາອື່ນໄປທຳລາຍ ຫຼື ຂາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ສອງປີ ຫາ ເຈັດປີ ແລະ ຈະຖືກປັບໃໝແຕ່ 10.000.000 ກີບ ຫາ 50.000.000 ກີບ.

ກໍລະນີສຶກສາຕົວຢ່າງທີ 3. ໃນກໍລະນີທີ່ບຸກຄົນໃດໜຶ່ງຫາກກະທຳຜິດໂດຍບໍ່ເຈດຕະນາ ຫຼື ບໍ່ໄດ້ຕັ້ງໃຈຂົນສົ່ງ, ມີໄວ້ຄອບຄອງ ຫຼື ນຳເຂົ້າ ຢາ ຫຼື ວັດຖຸອອກລິດຕໍ່ຈິດປະສາດ ຈະຖືວ່າເປັນການກະທຳຜິດທາງອາຍາຕາມມາດຕາ 315 ຂອງປະມວນກົດໝາຍອາຍາ ຫຼື ບໍ່ ເພາະວ່າມາດຕານີ້, ປະມວນກົດໝາຍອາຍາກໍບໍ່ໄດ້ກຳນົດວ່າເປັນການກະທຳຜິດໂດຍເຈດຕະນາໄວ້ແຕ່ຢ່າງໃດເຊັ່ນດຽວກັນ ຊຶ່ງປະມວນກົດໝາຍອາຍາມາດຕາ 315 ກຳນົດການຂົນສົ່ງ, ມີໄວ້ຄອບຄອງ ຫຼື ນຳເຂົ້າຢາເສບຕິດໄວ້ວ່າ: ບຸກຄົນໃດຫາກຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳຢາອີ, ຢາບ້າ, ຢາໄອສ໌ (Ice) ຫຼື ມີວັດຖຸອອກລິດຕໍ່ຈິດປະສາດຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕ່ຳກວ່າໜຶ່ງຮ້ອຍກຣາມຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ສິບ

ປີ ແລະ ຈະຖືກປັບໃໝແຕ່ 10.000.000 ກີບ ຫາ 100.000.000 ກີບ ແລະ ຈະຖືກຮິບຊັບ.

ກໍລະນີສຶກສາຕົວຢ່າງທີ 4. ໃນກໍລະນີທີ່ບຸກຄົນໃດໜຶ່ງຫາກໄດ້ແຕ່ງດອງກັບເດັກທີ່ມີອາຍຸຕ່ຳກ່ວາ 18 ປີ ຈະຖືວ່າເປັນການກະທຳຜິດທາງອາຍາໃນຂໍ້ຫາແຕ່ງງານດອງກັບເດັກຕາມມາດຕາ 269 ຂອງປະມວນກົດໝາຍອາຍາ ຫຼື ບໍ່ ເພາະວ່າມາດຕານີ້, ປະມວນກົດໝາຍອາຍາກໍບໍ່ໄດ້ກຳນົດວ່າເປັນການກະທຳຜິດໂດຍເຈດຕະນາໄວ້ແຕ່ຢ່າງໃດເຊັ່ນດຽວກັນ ຊຶ່ງປະມວນກົດໝາຍອາຍາມາດຕາ 269 ກຳນົດການແຕ່ງດອງກັບເດັກໄວ້ວ່າ: ບຸກຄົນໃດຫາກໄດ້ແຕ່ງດອງກັບເດັກທີ່ມີອາຍຸຕ່ຳກວ່າ 18 ປີລົງມາຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ຄັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝແຕ່ 2.000.000 ກີບ ຫາ 5.000.000 ກີບ.

ນອກຈາກນັ້ນໃນບາງມາດຕາທີ່ມີຫຼາຍວັກ, ບາງວັກໃນມາດຕາດຽວກັນກຳນົດວ່າເປັນການກະທຳຜິດໂດຍເຈດຕະນາ ແຕ່ບາງວັກບໍ່ໄດ້ກຳນົດເປັນການກະທຳຜິດໂດຍເຈດຕະນາໄວ້ເລີຍເຊັ່ນ: ມາດຕາ 199 ການແພ່ເຊື້ອພະຍາດທີ່ຮ້າຍແຮງ ຈົ່ງເປັນປະເດັນພິຈາລະນາວ່າຖ້າບຸກຄົນໃດຫາກໄດ້ກະທຳຜິດໃນມາດຕານີ້ຈະມີຄວາມຜິດທາງອາຍາໂດຍເຈດຕະນາໄດ້ສະເພາະໃນວັກທີ່ກຳນົດວ່າເປັນການກະທຳຜິດໂດຍເຈດຕະນາເທົ່ານັ້ນບໍ, ສ່ວນວັກອື່ນທີ່ບໍ່ໄດ້ກຳນົດວ່າເປັນການກະທຳຜິດໂດຍເຈດຕະນາແລ້ວຈະຮັບໂທດທາງອາຍາທີ່ເປັນການກະທຳຜິດໂດຍເຈດຕະນາ ຫຼື ບໍ່, ດັ່ງຈະເຫັນໄດ້ຈາກກໍລະນີສຶກສາຕົວຢ່າງດັ່ງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 5. ໃນກໍລະນີທີ່ບຸກຄົນໃດໜຶ່ງໂດຍບໍ່ເຈດຕະນາຫາກໄດ້ແພ່ເຊື້ອພະຍາດທີ່ຮ້າຍແຮງຈະຖືວ່າເປັນການກະທຳຜິດທາງອາຍາຕາມມາດຕາ 199 ວັກ 3 ຂອງປະມວນກົດໝາຍອາຍາ ຫຼື ບໍ່

ເພາະວ່າມາດຕາ 199 ນີ້, ປະມວນກົດໝາຍອາຍາກໍບໍ່ໄດ້ກຳນົດວ່າເປັນການກະທຳຜິດໂດຍເຈດຕະນາໄວ້ເຊັ່ນດຽວກັນ ຊຶ່ງປະມວນກົດໝາຍອາຍາມາດຕາ 199 ວັກ 3 ກຳນົດການແພ່ເຊື້ອພະຍາດທີ່ຮ້າຍແຮງໄວ້ວ່າ: ໃນກໍລະນີຜູ້ກະທຳຜິດຫາກໄດ້ນຳເອົາເຊື້ອພະຍາດທີ່ຮ້າຍແຮງໄປແພ່ຂະຫຍາຍສູ່ບຸກຄົນອື່ນເປັນອາຈິນ ຫຼື ມີການຈັດຕັ້ງເປັນກຸ່ມຈະຖືກລົງໂທດຕັດອິດສະລະພາບແຕ່ເຈັດປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝແຕ່ 50.000.000 ກີບ ຫາ 70.000.000 ກີບ.

ເຖິງວ່າປະມວນກົດໝາຍອາຍາຈະບໍ່ໄດ້ກຳນົດການກະທຳຜິດໂດຍເຈດຕະນາໄວ້ຢ່າງຊັດເຈນກໍຕາມ ແຕ່ການລົງໂທດຜູ້ກະທຳຜິດວ່າໄດ້ກະທຳຜິດໂດຍເຈດຕະນາ ຫຼື ບໍ່ນັ້ນແມ່ນອີງຕາມການພິຈາລະນາແຕ່ລະກໍລະນີໄປ. ດັ່ງນັ້ນ, ໃນປະມວນກົດໝາຍອາຍາໃນມາດຕາໃດທີ່ບໍ່ໄດ້ກຳນົດວ່າເປັນການກະທຳຜິດໂດຍເຈດຕະນາກໍຈຳເປັນຕ້ອງໄດ້ພິຈາລະນາຈາກຄຳສັບ ແລະ ສ່ວນປະກອບອື່ນມາພິຈາລະນາເປັນແຕ່ລະກໍລະນີໄປ ດັ່ງລຸ່ມນີ້:

1). ການພິຈາລະນາຈາກຄຳສັບທີ່ບັນຍັດໃນກົດໝາຍອາຍານັ້ນ ໝາຍຄວາມວ່າໃນປະມວນກົດໝາຍອາຍາພາກສະເພາະມາດຕາໃດທີ່ບໍ່ໄດ້ກຳນົດວ່າເປັນການກະທຳຜິດໂດຍເຈດຕະນາ ຫຼື ບາງມາດຕາທີ່ມີຫຼາຍວັກ ແຕ່ບາງວັກບໍ່ໄດ້ກຳນົດວ່າເປັນການກະທຳຜິດໂດຍເຈດຕະນາໄວ້ເຮົາກໍຕ້ອງພິຈາລະນາໃນມາດຕານັ້ນ ຫຼື ວັກນັ້ນຕາມທີ່ກົດໝາຍກຳນົດຈາກຄຳສັບວ່າ "***ຫາກ*** " ແລະ ຈາກຄຳສັບວ່າ "***ເພື່ອ***" ເປັນບ່ອນອີງໃນການພິຈາລະນາວ່າການກະທຳຜິດນັ້ນເປັນການກະທຳຜິດໂດຍເຈດຕະນາ.

ຕົວຢ່າງ 1. ມາດຕາ 111 ການກະບົດວ່າ ພົນລະເມືອງລາວ ຜູ້ໃດ***ຫາກ*** ໄດ້ຈັດຕັ້ງ ຫຼື ເຂົ້າຮ່ວມການເຄື່ອນໄຫວກໍ່ຄວາມວຸ້ນວາຍ ***ເພື່ອ*** ຄົ້ນລົ້ມອຳນາດການປົກຄອງ ຫຼື ***ເພື່ອ*** ໃຫ້ອຳນາດການປົກຄອງອ່ອນເພຍຈະ

ຖືກລົງโທດຕັດອິດສະລະພາບ ແຕ່ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 500.000.000 ກີບ, ອາດຈະຖືກຮິບຊັບ ແລະ ອາດຈະຖືກຈຳກັດທີ່ຢູ່ ຫຼື ຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກ ປັບໃໝແຕ່ 50.000.000 ກີບ ຫາ 700.000.000 ກີບ ຫຼື ປະຫານຊີວິດ.

ຕົວຢ່າງ 2. ມາດຕາ 140 ການເປັນແພດເຖື່ອນວ່າ ບຸກຄົນໃດທີ່ ບໍ່ໄດ້ຮັບອະນຸຍາດໃຫ້ປິ່ນປົວຢ່າງຖືກຕ້ອງຕາມກົດໝາຍ *ຫາກ* ໄດ້ປິ່ນປົວ ຄົນເຈັບ *ເພື່ອ* ຫາລາຍໄດ້ຈະຖືກປັບໃໝແຕ່ 3.000.000 ກີບ ຫາ 10.000.000 ກີບ.

ການພິຈາລະນາຄຳສັບວ່າ "*ຫາກ* " ແລະ ຄຳສັບວ່າ "*ເພື່ອ* " ເປັນ ການກະທຳຜິດໂດຍເຈດຕະນານັ້ນກໍເພາະວ່າຄຳສັບວ່າ *ຫາກ* ນັ້ນໝາຍເຖິງ ຜູ້ກະທຳຜິດຮູ້ເຖິງການກະທຳຂອງຕົນ ແລະ ຄຳສັບວ່າ *ເພື່ອ* ໝາຍເຖິງ ຈຸດປະສົງຂອງຜູ້ກະທຳ ຫຼື ເອີ້ນວ່າຄວາມຕ້ອງການຂອງຜູ້ກະທຳ ຫຼື ຄວາມ ປະສົງຕໍ່ຜົນຂອງຜູ້ກະທຳນັ້ນເອງ. ເມື່ອພິຈາລະນາຄຳສັບນີ້ແລ້ວຈະເຫັນວ່າ ເມື່ອຜູ້ກະທຳຮູ້ເຖິງການກະທຳຂອງຕົນ ແລະ ມີຄວາມຕ້ອງການຕໍ່ຜົນ ຫຼື ປະສົງຕໍ່ຜົນຈາກການກະທຳນັ້ນຈຶ່ງມີຄວາມໝາຍວ່າການກະທຳນັ້ນເປັນ ການກະທຳໂດຍເຈດຕະນານັ້ນເອງ.

ນອກຈາກນີ້ການພິຈາລະນາການກະທຳຜິດແຕ່ລະສະຖານໃນ ມາດຕາອື່ນໆ ວ່າເປັນການກະທຳຜິດໂດຍເຈດຕະນາ ຫຼື ບໍ່ກໍຕ້ອງ ພິຈາລະນາທຳນອງດຽວກັນ.

2). ພິຈາລະນາສ່ວນປະກອບອື່ນທີ່ບັນຍັດໃນປະມວນກົດໝາຍ ອາຍາ ໝາຍຄວາມວ່າໃນປະມວນກົດໝາຍອາຍາພາກສະເພາະມາດຕາໃດ ທີ່ບໍ່ໄດ້ກຳນົດວ່າເປັນການກະທຳຜິດໂດຍເຈດຕະນາໄວ້ໂດຍກົງເຮົາກໍຕ້ອງ ພິຈາລະນາວ່າມາດຕານັ້ນໄດ້ກຳນົດການກະກຽມໃຫ້ແກ່ການກະທຳຜິດ ຫຼື ຄວາມພະຍາຍາມກ່ຳການກະທຳຜິດໄວ້ໃນມາດຕານັ້ນ ຫຼື ບໍ່ ເພາະວ່າສ່ວນ

ປະກອບທີ່ເປັນການກະກຽມ ຫຼື ຄວາມພະຍາຍາມຈະມີໄດ້ກໍຕໍ່ເມື່ອການກະທຳນັ້ນເປັນການກະທຳຜິດໂດຍເຈດຕະນາເທົ່ານັ້ນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ໄດ້ກຳນົດການກະກຽມໃຫ້ແກ່ການກະທຳຜິດໄວ້ວ່າ ການກະກຽມໃຫ້ແກ່ການກະທຳຜິດແມ່ນການຫ້າງຫາພາຫະນະ, ອຸປະກອນ, ການສ້າງເງື່ອນໄຂ ຫຼື ປັດໄຈອື່ນໃຫ້ແກ່ການກະທຳຜິດ "*ໂດຍເຈດຕະນາ*" ແລະ ມາດຕາ 23 ໄດ້ກຳນົດຄວາມພະຍາຍາມກໍ່ການກະທຳຜິດໄວ້ວ່າ ຄວາມພະຍາຍາມກໍ່ການກະທຳຜິດແມ່ນການລົງມືກະທຳຜິດສ່ວນໃດສ່ວນໜຶ່ງ "*ໂດຍເຈດຕະນາ*" ແຕ່ຍ້ອນມີສາເຫດນອກຕົວມາຂັດຂວາງ ຊຶ່ງພາໃຫ້ການກະທຳຜິດນັ້ນບໍ່ສຳເລັດຜົນ. ດັ່ງກໍລະນີຕົວຢ່າງດັ່ງລຸ່ມນີ້:

ຕົວຢ່າງ 1 ການກະກຽມໃຫ້ແກ່ການກະທຳຜິດ: ມາດຕາ 114 ການປອງຮ້າຍ, ມາດຕາ 115 ການທຳລາຍມ້າງເພ, ມາດຕາ 120 ການກໍ່ການຮ້າຍ, ມາດຕາ 129 ການປອມແປງເງິນ ຫຼື ການໃຊ້ເງິນປອມ, ມາດຕາ 130 ການຟອກເງິນ ແລະ ມາດຕາອື່ນໆ.

ຕົວຢ່າງ 2 ຄວາມພະຍາຍາມກໍ່ການກະທຳຜິດ: ມາດຕາ 146 ການຫຼົບໜີຈາກອຸບປະຕິເຫດ, ມາດຕາ 190 ການຄາດຕະກຳຍ້ອນຖືກກະທົບທາງດ້ານຈິດໃຈ, ມາດຕາ 194 ການທຳຮ້າຍຮ່າງກາຍ, ມາດຕາ 201 ການຫຼູລູກໂດຍບໍ່ຖືກຕ້ອງຕາມກົດໝາຍ, ມາດຕາ 213 ການຂາຍຄົນ, ມາດຕາ 214 ການຂາຍ ຫຼື ລັກອະໄວຍະວະເນື້ອເຫຍື່ອຂອງຄົນ ແລະ ມາດຕາອື່ນໆ.

ເຖິງຢ່າງໃດກໍຕາມ ເຖິງວ່າຈະພິຈາລະນາການຮັບໂທດທາງອາຍາໂດຍເຈດຕະນາຂອງບຸກຄົນຈຳເປັນຈະຕ້ອງໄດ້ພິຈາລະນາຄຳສັບ ແລະ ສ່ວນປະກອບອື່ນມາເປັນບ່ອນອີງໃນການພິຈາລະນາກໍຕາມ ແຕ່ໃນການປະຕິບັດຕົວຈິງກໍອາດຈະພົບຄວາມຫຍຸ້ງຍາກ ແລະ ອາດຈະເກີດຂໍ້

ຜິດພາດຂຶ້ນໄດ້. ດັ່ງນັ້ນ, ກຸ່ມຄົ້ນຄວ້າປະມວນກົດໝາຍອາຍາຈຶ່ງສະເໜີ ໃຫ້ອົງການທີ່ກ່ຽວຂ້ອງໃນການປັບປຸງແກ້ໄຂກົດໝາຍໄດ້ເປັນບ່ອນອີງໃນ ການປັບປຸງແກ້ໄຂປະມວນກົດໝາຍອາຍາໃນອະນາຄົດວ່າ ການກະທຳຜິດ ໃດທີ່ຜູ້ກະທຳຕ້ອງຮັບໂທດທາງອາຍາໂດຍເຈດຕະນາ ຫຼື ການກະທຳຜິດ ໃດຜູ້ກະທຳຕ້ອງຮັບໂທດໂດຍບໍ່ເຈດຕະນາ ຫຼື ດ້ວຍຄວາມບໍ່ລະມັດລະວັງ ນັ້ນ, ປະມວນກົດໝາຍອາຍາຄວນກຳນົດເປັນຫຼັກການໃຫ້ລົງໂທດການ ກະທຳຜິດໂດຍເຈດຕະນາເປັນພື້ນຖານໄວ້ຢ່າງຈະແຈ້ງຊັດເຈນເລີຍ.

ບົດທີ 10
ການກະທຳຜິດໂດຍເຈດຕະນາ

1. ຄວາມໝາຍຂອງການກະທຳຜິດໂດຍເຈດຕະນາ

ເຈດຕະນາເປັນອົງປະກອບທາງດ້ານອັດຕະວິໄສຂອງການກະທຳຜິດທາງອາຍາ ຊຶ່ງອົງປະກອບດັ່ງກ່າວນີ້ມີຄວາມສຳຄັນຕໍ່ກັບການພິຈາລະນາວ່າການກະທຳໃດຂອງຄົນເປັນການກະທຳຜິດໂດຍເຈດຕະນາ ຫຼື ບໍ່.

ປະມວນກົດໝາຍອາຍາໄດ້ກຳນົດຄວາມໝາຍຂອງການກະທຳຜິດໂດຍເຈດຕະນາໄວ້ໃນມາດຕາ 14 ວ່າ ການກະທາຜິດໂດຍເຈດຕະນາ ແມ່ນການກະທຳ ຫຼື ການເມີນເສີຍ ຊຶ່ງຜູ້ກະທຳຜິດຮູ້ວ່າການກະທຳ ຫຼື ການເມີນເສີຍຂອງຕົນເປັນອັນຕະລາຍຕໍ່ສັງຄົມ ແລະ ກໍຄາດຄະເນໄດ້ເຖິງຜົນສະທ້ອນຂອງມັນແຕ່ຈິງໃຈເຮັດ ຫຼື ປະປ່ອຍໃຫ້ເກີດຂຶ້ນ.

ຈາກການໃຫ້ຄວາມໝາຍຂອງປະມວນກົດໝາຍອາຍາມາດຕາ 14 ຂ້າງເທິງນີ້ ຈຶ່ງສາມາດສະຫຼຸບໄດ້ວ່າການກະທຳຜິດໂດຍເຈດຕະນາປະກອບດ້ວຍ 2 ສ່ວນຄື: ສ່ວນຄວາມຮັບຮູ້ການກະທຳ ແລະ ສ່ວນຄວາມຕ້ອງການຜົນຈາກການກະທຳ.

ຄວາມຮັບຮູ້ຂອງການກະທຳໝາຍເຖິງຜູ້ກະທຳຮັບຮູ້ວ່າການກະທຳຂອງຕົນເປັນການກະທຳຜິດ, ເປັນການກະທຳທີ່ສ້າງຄວາມເສຍຫາຍ ຫຼື ເປັນອັນຕະລາຍຄືແນວໃດ ແລະ ກໍຄາດຄະເນໄດ້ເຖິງຜົນສະທ້ອນທີ່ຈະເກີດຂຶ້ນຈາກການກະທຳຂອງຕົນນັ້ນ ໝາຍຄວາມວ່າຜູ້ກະທຳຮູ້ວ່າການກະທຳຂອງຕົນນັ້ນເປັນການກະທຳທີ່ຜິດກົດໝາຍ ຫຼື ບໍ່ຜິດກົດໝາຍ ແລະ ຜູ້ກະທຳຮູ້ວ່າຕົນເອງມີສິດທີ່ຈະກະທຳ ຫຼື ບໍ່ກະທຳສິ່ງນັ້ນ ຫຼື ບໍ່ແນວໃດ.

ສ່ວນຄວາມຕ້ອງການຜົນຈາກການກະທຳ ໝາຍເຖິງຜູ້ກະທຳຕ້ອງການຜົນທີ່ເກີດຂຶ້ນຈາກການກະທຳຂອງຕົນນັ້ນວ່າຕ້ອງເກີດຂຶ້ນແນ່ນອນ ຫຼື ອາດຈະເກີດຂຶ້ນ ແຕ່ກໍຍອມຮັບຜົນທີ່ຈະເກີດຂຶ້ນຈາກການກະທຳນັ້ນ.

2. ລະດັບຄວາມຮັບຮູ້ ແລະ ລະດັບຄວາມຕ້ອງການ

ລະດັບຂອງຄວາມຮັບຮູ້ການກະທຳ ແລະ ລະດັບຄວາມຕ້ອງການຜົນຈາກການກະທຳນັ້ນມີລະດັບໜ້ອຍຫຼາຍປານໃດຈຶ່ງຖືວ່າການກະທຳນັ້ນເປັນການກະທຳຜິດໂດຍເຈດຕະນາໄດ້ ເຮົາສາມາດພິຈາລະນາເປັນ 4 ຮູບແບບດັ່ງນີ້:

2.1. ລະດັບຄວາມຮັບຮູ້ສູງ ແລະ ລະດັບຄວາມຕ້ອງການສູງ

ລະດັບຄວາມຮັບຮູ້ສູງ ແລະ ລະດັບຄວາມຕ້ອງການສູງ ໝາຍເຖິງຜູ້ກະທຳນັ້ນມີຄວາມຮັບຮູ້ການກະທຳຂອງຕົນໃນລະດັບສູງ ແລະ ມີຄວາມຕ້ອງການຜົນຈາກການກະທຳນັ້ນໃນລະດັບທີ່ສູງ ໝາຍ ຄວາມວ່າຜູ້ກະທຳຮັບຮູ້ດີໃນສິ່ງທີ່ຕົນໄດ້ກະທຳ, ຮູ້ຜົນທີ່ຈະເກີດຂຶ້ນ ກໍຄືຮູ້ຜົນຈາກການກະທຳຂອງຕົນ ແລະ ມີການຄວາມຕ້ອງການຜົນຈາກການກະທຳຂອງຕົນຢ່າງເຕັມສ່ວນກໍຖືວ່າການກະທຳນັ້ນເປັນການກະທຳຜິດໂດຍເຈດນະນາ ດັ່ງກໍລະນີສຶກສາດັ່ງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 1. ນາງ X ຕັດສິນໃຈຈະຂ້າ A ຊຶ່ງເປັນລູກຂອງເມຍເກົ່າຂອງຜົວຕົນຈຶ່ງໄດ້ໃຊ້ເຊືອກຮັດຄໍ A ໃນເວລາທີ່ A ນອນຫຼັບ. ເມື່ອເຫັນ A ບໍ່ເໜັງຕີງ X ໄດ້ຄິດວ່າ A ໄດ້ເສຍຊີວິດແລ້ວຈຶ່ງໄດ້ຍົກຮ່າງຂອງ A ໄປຖິ້ມໄວ້ຢູ່ຫາດຊາຍແຄມທະເລ ຊຶ່ງຢູ່ຫ່າງອອກໄປຫຼາຍກິໂລແມັດເພື່ອປົກປິດການກະທຳຜິດຂອງຕົນແລ້ວຈຶ່ງກັບມາເຮືອນ ແຕ່ໃນຄວາມຈິງແລ້ວໃນເວລາທີ່ A ຖືກຮັດຄໍນັ້ນແມ່ນຍັງບໍ່ໄດ້ເສຍຊີວິດ

ເທື່ອ, ແຕ່ໄປເສຍຊີວິດຍ້ອນສູບກົນເອົາເມັດຊາຍເຂົ້າໄປອຸດຕັນໃນຫຼອດປອດ. ໃນກໍລະນີນີ້ X ຈະມີຄວາມຜິດໃນສະຖານຄາດຕະກຳ ຫຼື ບໍ່ ເພາະວ່າປະມວນກົດໝາຍອາຍາມາດຕາ 188 ການິດການຄາດຕະກາໄວ້ວ່າ: ບຸກຄົນໃດຫາກໄດ້ເຮັດໃຫ້ຜູ້ອື່ນເສຍຊີວິດໂດຍເຈດຕະນາຈະຖືກລົງໂທດ ແຕ່ສິບປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝແຕ່ 5.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີສຶກສາຕົວຢ່າງນີ້ຈະເຫັນວ່າ X ມີຄວາມຮັບຮູ້ໃນການກະທຳຂອງຕົນວ່າການເອົາເຊືອກຮັດຄໍ A ນັ້ນເປັນການຂ້າຄົນ ແລະ ຜົນທີ່ X ຕ້ອງການຢາກໃຫ້ມັນເກີດຂຶ້ນນັ້ນແມ່ນຄວາມຕາຍຂອງ A. ເຖິງແມ່ນວ່າ X ໃນເວລານັ້ນບໍ່ຮູ້ວ່າ A ຍັງບໍ່ທັນໄດ້ເສຍຊີວິດກໍຕາມ ແຕ່ຜົນກໍຄື A ກໍເສຍຊີວິດຕາມຄວາມຕ້ອງການຂອງ X ທຸກປະການແລ້ວ. ດັ່ງນັ້ນ, ຈຶ່ງເວົ້າໄດ້ວ່າຄວາມຮັບຮູ້ດ້ານການກະທຳຂອງ X ມີໃນລະດັບສູງ ແລະ ຄວາມຕ້ອງການຜົນຈາກການກະທຳກໍມີໃນລະດັບສູງເຊັ່ນກັນຈຶ່ງຖືວ່າການກະທຳຂອງ X ເປັນການກະທຳຜິດໂດຍເຈດຕະນານັ້ນເອງ. X ຈຶ່ງມີຄວາມຜິດຖານຄາດຕະກຳ A.

2.2. ລະດັບຄວາມຮັບຮູ້ສູງ ແລະ ລະດັບຄວາມຕ້ອງການຕ່ຳ

ລະດັບຄວາມຮັບຮູ້ສູງ ແລະ ລະດັບຄວາມຕ້ອງການຕ່ຳ ໝາຍເຖິງຜູ້ກະທຳນັ້ນມີຄວາມຮັບຮູ້ການກະທຳຂອງຕົນໃນລະດັບທີ່ສູງ ແລະ ມີຄວາມຕ້ອງການຜົນຈາກການກະທຳໃນລະດັບຕ່ຳ ໝາຍຄວາມວ່າ ຜູ້ກະທຳຮັບຮູ້ດີໃນສິ່ງທີ່ຕົນໄດ້ກະທຳ, ຮູ້ຜົນທີ່ຈະເກີດຂຶ້ນກໍຄືຮູ້ຜົນຈາກການກະທຳຂອງຕົນ ແຕ່ມີຄວາມຕ້ອງການຜົນດັ່ງກ່າວນັ້ນວ່າອາດຈະເກີດຂຶ້ນ ຫຼື ບໍ່ເກີດຂຶ້ນກໍໄດ້ຈາກການກະທຳຂອງຕົນ, ຖ້າເກີດຜົນຂຶ້ນຈາກການກະທຳຂອງຕົນກໍຖືວ່າຍອມຮັບເອົາຜົນທີ່ເກີດຂຶ້ນນັ້ນ ຫຼື ຈະເວົ້າໃນຄວາມ

ໝາຍໝຶ່ງກໍໝາຍຄວາມວ່າຄວາມຮັບຮູ້ຂອງຜູ້ກະທຳມີລະດັບສູງ ແຕ່ລະດັບຄວາມຕ້ອງການຜິນຫຼຸດລົງ, ກໍລະນີນີ້ກໍຖືວ່າການກະທຳນັ້ນເປັນການກະທຳຜິດໂດຍເຈດນະນານັ້ນເອງດັ່ງກໍລະນີສຶກສາດັ່ງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 2. X ເປີດຮ້ານຂາຍປຶ້ມ ແລະ ມີປຶ້ມທີ່ກົງກັບປະເພດສິ່ງລາມົກເດັກຄອບຄອງໄວ້ເພື່ອຈຳໜ່າຍ ແຕ່ X ໄດ້ອ່ານເບິ່ງປຶ້ມດັ່ງກ່າວແລ້ວກໍຮູ້ສຶກວ່າເປັນປຶ້ມທີ່ເນື້ອໃນມີລັກສະນະ "ຫຼູ່ແຫຼມທາງເພດ" ແທ້ແຕ່ກໍຄິດວ່າເນື້ອໃນຂອງປຶ້ມບໍ່ຮຸນແຮງ ແລະ ບໍ່ເຖິງຂັ້ນເປັນ "ສິ່ງລາມົກເດັກ" ຕາມທີ່ກຳນົດໄວ້ໃນກົດໝາຍອາຍາ. ໃນກໍລະນີນີ້ X ຈະມີຄວາມຜິດໃນສະຖານຄອບຄອງສິ່ງລາມົກເດັກ ຫຼື ບໍ່ ເພາະວ່າປະມວນກົດໝາຍອາຍາມາດຕາ 257 ການົດໄວ້ວ່າ ບຸກຄົນໃດຫາກຄອບຄອງໜັງສື, ຮູບ, ຟິມວີດີໂອ, ວີຊີດີ, ດີວີດີ ແລະ ສິ່ງອື່ນໆ ທີ່ລາມົກກ່ຽວກັບເດັກຈະຖືກລົງໂທດ ແຕ່ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝແຕ່ 1.000.000 ກີບ ຫາ 3.000.000 ກີບ.

ໃນກໍລະນີສຶກສາຕົວຢ່າງດັ່ງກ່າວນີ້ຈະເຫັນວ່າຄວາມຮັບຮູ້ຂອງ X ມີຄວາມຮັບຮູ້ໃນລະດັບສູງເນື່ອງຈາກວ່າມີຄວາມຮັບຮູ້ວ່າປຶ້ມທີ່ຕົນເອງກຳລັງຄອບຄອງຢູ່ນີ້ເປັນປຶ້ມລາມົກເດັກ ແລະ ໄດ້ມີຄວາມຕ້ອງການຄອບຄອງໄວ້ເພື່ອຈຳໜ່າຍ ແຕ່ເຖິງແມ່ນວ່າຈະບໍ່ທັນໄດ້ເອົາມາວາງໄວ້ຖ້ານຂາຍປຶ້ມກໍຖືວ່າຄວາມຕ້ອງການຂອງ X ມີຢູ່ແລ້ວແຕ່ມີໃນລະດັບຕ່ຳ. ດັ່ງນັ້ນ, ການກະທຳຂອງ X ມີເຈດຕະນາຄອບຄອງສິ່ງລາມົກເດັກ ແລະ ຖືວ່າການກະທຳຂອງ X ເປັນການກະທຳຜິດໂດຍເຈດຕະນາ, X ມີຄວາມຜິດໃນສະຖານຄອບຄອງສິ່ງລາມົກເດັກນັ້ນເອງ.

2.3. ລະດັບຄວາມຮັບຮູ້ຕ່ຳ ແລະ ລະດັບຄວາມຕ້ອງການສູງ

ລະດັບຄວາມຮັບຮູ້ຕ່ຳ ແລະ ລະດັບຄວາມຕ້ອງການສູງ ໝາຍເຖິງຜູ້ກະທຳນັ້ນມີຄວາມຮັບຮູ້ໃນລະດັບທີ່ຕ່ຳ ແລະ ໃນຂະນະດຽວກັນຜູ້ກະທຳມີຄວາມຕ້ອງການຜົນທີ່ເກີດຂຶ້ນໃນລະດັບທີ່ສູງ ໝາຍຄວາມວ່າຜູ້ກະທຳອາດຮັບຮູ້ກ່ຽວກັບເຫດການທີ່ຈະເກີດຂຶ້ນ ແຕ່ຜູ້ກະທຳມີຄວາມຕ້ອງການໃຫ້ຜົນມັນເກີດຂຶ້ນກໍຖືວ່າການກະທຳດັ່ງກ່າວເປັນການກະທຳຜິດ ໂດຍເຈດຕະນາໄດ້ເຊັ່ນກັນ ດັ່ງກໍລະນີສຶກສາຕົວຢ່າງດັ່ງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 3. X ໄດ້ຮັບຄຳສັ່ງຈາກ A ໃຫ້ຂົນລົດຈາກປະເທດຈີນໂດຍໄດ້ຊຸກເຊື່ອງຢາບ້າຈຳນວນ 300 ກຣາມ ໄວ້ໃນເຄື່ອງນຸ່ງແລ້ວລັກລອບນຳເຂົ້າມາປະເທດລາວ. ຄວາມຈິງແລ້ວ X ກໍບໍ່ຮູ້ຢ່າງຈະແຈ້ງວ່າສິ່ງທີ່ຕົນໄດ້ນຳເຂົ້າມານັ້ນແມ່ນຢາບ້າ ແຕ່ກໍຄິດວ່າ "ຄົງຈະແມ່ນຢາເສບຕິດຜິດກົດໝາຍທີ່ປະເທດລາວຫ້າມນຳເຂົ້າ" ເພາະອີງຕາມຮູບລັກສະນະຂອງຢາ ແລະ ຈຳນວນເງິນຕອບແທນໃຫ້ຕົນນັ້ນມີຈຳນວນຫຼາຍ. ໃນກໍລະນີນີ້ X ຈະມີຄວາມຜິດໃນສະຖານການຂົນສົ່ງຢາເສບຕິດ (ປະເພດຢາບ້າ) ຕາມມາດຕາ 315 ຂອງປະມວນກົດໝາຍອາຍາ ຫຼື ບໍ່ ເພາະວ່າປະມວນກົດໝາຍອາຍາມາດຕາ 315 ກຳນົດວ່າ ບຸກຄົນໃດຫາກ ຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳຢາອີ, ຢາບ້າ, ຢາໄອສ໌ (Ice) ຫຼື ວັດຖຸອອກລິດຕໍ່ຈິດປະສາດຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕ່ຳກວ່າໜຶ່ງຮ້ອຍ (100) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ຫ້າປີ ຫາ ສິບ ປີ ແລະ ຈະຖືກປັບໃໝແຕ່ 10.000.000 ກີບ ຫາ 100.000.000 ກີບ ແລະ ຈະຖືກຣິບຊັບ.

ໃນກໍລະນີສຶກສາຕົວຢ່າງດັ່ງກ່າວນີ້ຈະເຫັນວ່າ X ມີຄວາມຮັບຮູ້ວ່າສິ່ງທີ່ຕົນນຳເຂົ້າມານັ້ນແມ່ນຢາເສບຕິດເທົ່ານັ້ນກໍພຽງພໍແລ້ວ ເຖິງວ່າ X

ຈະບໍ່ຮູ້ຢ່າງແນ່ນອນວ່າສິ່ງທີ່ຕົນນຳເຂົ້າມານັ້ນແມ່ນຢາເສບຕິດປະເພດໃດກໍ ຕາມ ແຕ່ຜູ້ກ່ຽວກໍມີຄວາມຕ້ອງການລັກລອບເອົາສິ່ງເສບຕິດທີ່ຜິດກົດ ໝາຍເຂົ້າປະເທດລາວ ກໍຖືວ່າ X ມີຄວາມຕ້ອງການຜົນທີ່ເກີດຂຶ້ນ ໝາຍຄວາມວ່າຕ້ອງການຈະນຳເອົາສິ່ງນັ້ນເຂົ້າມາລາວແລ້ວ. ດັ່ງນັ້ນ, ຈຶ່ງຖື ວ່າການກະທຳຂອງ X ເປັນການກະທຳຜິດໂດຍເຈດຕະນານຳເຂົ້າຢາບ້າເຂົ້າ ມາ ສປປ ລາວ ນັ້ນເອງ.

ກໍລະນີສຶກສາຕົວຢ່າງທີ 4. X ໄດ້ເປີດຮ້ານຂາຍວັດຖຸມີຄ່າໄດ້ຊື້ ເອົາເພັດນຳ A ທີ່ເອົາມາຂາຍໃຫ້. ໃນເວລາທີ່ຊື້ນັ້ນ X ເຫັນວ່າ A ຍັງເປັນ ຄົນໜຸ່ມນ້ອຍອາຍຸພຽງແຕ່ 18 ຫາ 19 ປີ ບໍ່ໜ້າຈະເປັນເຈົ້າຂອງເພັດ ດັ່ງກ່າວໄດ້, ນອກຈາກນັ້ນ A ກໍມີທ່າທີຫຼົບລີ້ສາຍຕາຜູ້ຄົນໃນເວລາເອົາ ເພັດມາຂາຍ ແລະ ເພັດດັ່ງກ່າວກໍບໍ່ມີໜັງສືຮັບປະກັນ ຫຼື ໜັງສືຢັ້ງຢືນຫຍັງ ເລີຍ ຈຶ່ງຄິດສົງໄສວ່າເພັດທີ່ A ເອົາມາຂາຍນັ້ນອາດຈະແມ່ນຂອງທີ່ຖືກ ລັກມາ. ແນວໃດກໍຕາມ X ກໍບໍ່ໄດ້ໝັ້ນໃຈວ່າເພັດດັ່ງກ່າວແມ່ນຂອງທີ່ຖືກ ລັກມາແທ້ ຫຼື ບໍ່. ທັງນີ້ X ເຫັນວ່າຖ້າຊື້ເພັດດັ່ງກ່າວໄວ້ຂາຍກໍຈະສາມາດ ຂາຍຕໍ່ໄດ້ງ່າຍ ແລະ ມີກຳໄລສູງຈຶ່ງໄດ້ຊື້ເພັດນຳ A ໃນລາຄາຖືກກວ່າລາຄາ ທ້ອງຕະຫຼາດ. ໃນຄວາມຈິງແລ້ວເພັດທີ່ A ນຳມາຂາຍນັ້ນແມ່ນເພັດທີ່ A ລັກມາແທ້. ໃນກໍລະນີນີ້ X ຈະມີຄວາມຜິດໃນສະຖານ ຊື້-ຂາຍຊັບຜິດ ກົດໝາຍ ຫຼື ບໍ່ ເພາະວ່າປະມວນກົດໝາຍອາຍາມາດຕາ 244 ໄດ້ການົດ ໄວ້ວ່າ ບຸກຄົນໃດຫາກຮູ້ວ່າຊັບທີ່ຜູ້ອື່ນໄດ້ມາຈາກການປຸ້ນ, ການລັກ, ການ ຍາດຊິງ, ການສໍ້ໂກງ, ການຍັກຍອກ ຫຼື ດ້ວຍວິທີອື່ນທີ່ຜິດກົດໝາຍແລ້ວ ຮັບເອົາ, ຊື້ເອົາ, ເກັບຮັກສາ, ຊຸກເຊື່ອງ ຫຼື ນຳໄປຂາຍຈະຖືກລົງໂທດຕັດ ອິດສະລະພາບແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີສຶກສາຕົວຢ່າງດັ່ງກ່າວນີ້ຈະເຫັນວ່າ X ມີຄວາມຮັບຮູ້

ໃນລະດັບສົງໄສວ່າເພັດທີ່ A ນຳມາຂາຍໃຫ້ຕົນນັ້ນເປັນເພັດທີ່ຖືກລັກມາ, ສະແດງໃຫ້ເຫັນວ່າຄວາມຮັບຮູ້ຂອງ X ມີຄວາມຮັບຮູ້ໃນລະດັບຕ່ຳ ແຕ່ກໍຍັງມີຄວາມຕ້ອງການທີ່ຈະຮັບຊື້ເອົາໄວ້ເພື່ອຈະຂາຍຕໍ່ເພາະເຫັນວ່າຈະໄດ້ກຳໄລດີນັ້ນເຫັນວ່າເປັນຄວາມຕ້ອງການໃນລະດັບທີ່ສູງ ຈຶ່ງຖືວ່າ X ມີເຈດຕະນາຮັບຊື້ເອົາເພັດດັ່ງກ່າວໄວ້. ດັ່ງນັ້ນ, ການກະທຳຂອງ X ຈຶ່ງເປັນການກະທຳຜິດໂດຍເຈດຕະນາ. X ຈຶ່ງມີຄວາມຜິດສະຖານການຊຸກເຊື່ອງ, ການຊື້-ຂາຍຊັບຢ່າງຜິດກົດໝາຍໄດ້ເຊັ່ນກັນ.

2.4. ລະດັບຄວາມຮັບຮູ້ຕ່ຳ ແລະ ລະດັບຄວາມຕ້ອງການຕ່ຳ

ລະດັບຄວາມຮັບຮູ້ຕ່ຳ ແລະ ລະດັບຄວາມຕ້ອງການຕ່ຳ ໝາຍເຖິງຜູ້ກະທຳນັ້ນມີຄວາມຮັບຮູ້ໃນລະດັບທີ່ຕ່ຳ ແລະ ມີຄວາມຕ້ອງການຜົນຈາກການກະທຳນັ້ນໃນລະດັບທີ່ຕ່ຳເຊັ່ນກັນ ໝາຍຄວາມວ່າ ຜູ້ກະທຳຮັບຮູ້ວ່າການກະທຳຂອງຕົນອາດຈະເກີດຂຶ້ນ ຫຼື ບໍ່ເກີດຂຶ້ນ ແລະ ມີຄວາມຕ້ອງການໃຫ້ເກີດຂຶ້ນ ຫຼື ບໍ່ໃຫ້ເກີດຂຶ້ນກໍໄດ້, ຖ້າຫາກການກະທຳ ມີຜົນເກີດຂຶ້ນ, ຜູ້ກະທຳກໍຍອມຮັບເອົາຜົນທີ່ເກີດຂຶ້ນນັ້ນ. ກໍລະນີນີ້ກໍຖືວ່າການກະທຳດັ່ງກ່າວເປັນການກະທຳຜິດໂດຍເຈດຕະນາໄດ້ເໝືອນກັນ.

ກໍລະນີສຶກສາຕົວຢ່າງທີ 5. X ຢາກໄດ້ໝາກມ່ວງສຸກຈາກຕົ້ນໝາກມ່ວງສູງຈຶ່ງຄິດຈະໃຊ້ກ້ອນຫິນແກວ່ງໃສ່ງ່າໄມ້ໃຫ້ຫັກເພື່ອເອົາໝາກມ່ວງດັ່ງກ່າວ. ເວລານັ້ນ, X ຮູ້ວ່າຢູ່ດ້ານຫຼັງຂອງກົກໝາກມ່ວງນັ້ນມີຫົນທາງສັນຈອນຂອງບ້ານ ຊຶ່ງປະຊາຊົນໃນບ້ານກໍໃຊ້ສັນຈອນໄປມາເປັນປະຈຳ, ຖ້າຫາກແກວ່ງກ້ອນຫິນໄປກໍອາດຈະຕົກໄປຮອດຫົນທາງ ແລະ ຖືກຄົນທີ່ສັນຈອນໄປມາໄດ້, ແຕ່ຍ້ອນຄວາມຢາກໄດ້ໝາກມ່ວງ, X ຈຶ່ງໄດ້ເກັບເອົາຫິນກ້ອນໃຫຍ່ກ້ອນໜຶ່ງແລ້ວແກວ່ງໃສ່ງ່າຕົ້ນໝາກມ່ວງ, ແຕ່ກ້ອນຫິນດັ່ງກ່າວໄປຕຳໃສ່ງ່າຕົ້ນມ່ວງແລ້ວກະເດັນໄປຫົນທາງ ແລະ

ຕົກໃສ່ຫົວຂອງ A ທີ່ກຳລັງຍ່າງຜ່ານເສັ້ນທາງນັ້ນເປັນເຫດເຮັດໃຫ້ A ໄດ້ຮັບບາດເຈັບ. ໃນກໍລະນີນີ້ X ຈະມີຄວາມຜິດຕາມມາດຕາ 194 ຂອງ ປະມວນກົດໝາຍອາຍາໃນສະຖານການທຳຮ້າຍຮ່າງກາຍ ຫຼື ບໍ່ ເພາະວ່າ ມາດຕາ 194 ກຳນົດວ່າ ບຸກຄົນໃດຫາກເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບໂດຍ ເຈດຕະນາຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີສຶກສາຕົວຢ່າງນີ້ຈະເຫັນວ່າ X ມີຄວາມຮັບຮູ້ພຽງແຕ່ ວ່າການກະທຳຂອງຕົນນັ້ນເປັນການແກວ່ງກ້ອນຫີນໃສ່ໝາກມ່ວງ ແລະ ຮູ້ ວ່າທິດທາງທີ່ຕົນແກວ່ງກ້ອນຫີນໄປນັ້ນມີຫີນທາງ ຊຶ່ງອາດຈະມີຄົນຍ່າງໄປ ມາຈຶ່ງຖືໄດ້ວ່າຄວາມຮັບຮູ້ຂອງ X ເປັນຄວາມຮັບຮູ້ໃນລະດັບທີ່ຕ່ຳ ແຕ່ຖ້າຫາກແກວ່ງກ້ອນຫີນໄປອາດຈະຖືກຄົນ ຫຼື ບໍ່ຖືກຄົນທີ່ສັນຈອນໄປ ມານັ້ນກໍໄດ້. ເຖິງວ່າການກະທຳຂອງ X ຈະບໍ່ມີຄວາມຕ້ອງການໃຫ້ຄົນ ສັນຈອນໄປມາໄດ້ຮັບບາດເຈດກໍຕາມ ແຕ່ຫາກຜົນມັນເກີດຂຶ້ນແທ້ໆ ຜູ້ກະທຳກໍຍິນດີຮັບເອົາຜົນທີ່ຈະເກີດຂຶ້ນນັ້ນກໍຖືວ່າຜູ້ກະທຳມີຄວາມ ຕ້ອງການຜົນໃນລະດັບທີ່ຕ່ຳເຊັ່ນກັນ, ກໍລະນີນີ້ຖືວ່າການກະທຳຂອງ X ເປັນການກະທຳຜິດໂດຍເຈດຕະນາ. X ຈຶ່ງມີຄວາມຜິດສະຖານທຳຮ້າຍ ຮ່າງກາຍນັ້ນເອງ.

ເຖິງຢ່າງໃດກໍຕາມຖ້າຫາກວ່າຜູ້ກະທຳບໍ່ມີຄວາມຮັບຮູ້ການກະທຳ ຂອງຕົນນັ້ນເລີຍ ແລະ ບໍ່ມີຄວາມຄວາມຕ້ອງການຜົນຈາກການກະທຳນັ້ນ ແຕ່ຢ່າງໃດກໍຖືວ່າການກະທຳນັ້ນບໍ່ແມ່ນການກະທຳໂດຍເຈດຕະນາ ດັ່ງກໍລະນີຕົວຢ່າງດັ່ງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 6. X ເປີດຮ້ານຂາຍປຶ້ມ ແລະ ມີປຶ້ມທີ່ ກົງກັບປະເພດສິ່ງລາມົກເດັກຄອບຄອງໄວ້ເພື່ອຈຳໜ່າຍ ແຕ່ຍັງບໍ່ທັນໄດ້

ເອົາອອກມາວາງໄວ້ຖ້ານປຶ້ມເພື່ອຂາຍ ແຕ່ X ຄິດວ່າປຶ້ມທີ່ຕົນເອງກຳລັງ ຄອບຄອງຢູ່ນັ້ນແມ່ນປຶ້ມນິທານເດັກ.

ໃນກໍລະນີສຶກສາຕົວຢ່າງດັ່ງກ່າວນີ້ຈະເຫັນວ່າຄວາມຮັບຮູ້ຂອງ X ບໍ່ຮູ້ເລີຍວ່າປຶ້ມທີ່ຕົນກຳລັງຄອບຄອງຢູ່ນັ້ນເປັນປຶ້ມລາມົກເດັກ ແລະ X ກໍບໍ່ມີຄວາມຕ້ອງການຄອບຄອງສິ່ງລະມົກເດັກນັ້ນແຕ່ຢ່າງໃດ ຫຼື ຈະເວົ້າ ໃນຄວາມໝາຍໜຶ່ງກໍໝາຍຄວາມວ່າ X ບໍ່ມີຄວາມຮັບຮູ້ການກະທຳຂອງ ຕົນ ແລະ ໃນຂະນະດຽວກັນຜູ້ກ່ຽວກໍບໍ່ມີຄວາມຕ້ອງການຜົນຈາກການ ກະທຳນັ້ນ. ດັ່ງນັ້ນ, ຈຶ່ງບໍ່ຖືວ່າ X ມີເຈດຕະນາຄອບຄອງສິ່ງລາມົກເດັກ ນັ້ນ. X ບໍ່ມີຄວາມຜິດສະຖານຄອບຄອງສິ່ງລາມົກເດັກແຕ່ຢ່າງໃດ.

ບົດທີ 11
ການກະທຳຜິດໂດຍຜິດພາດ

ການກະທຳຜິດໂດຍຜິດພາດ ໝາຍເຖິງການກະທຳທີ່ເກີດຂຶ້ນດ້ວຍຄວາມບໍ່ກົງກັນລະຫວ່າງຄວາມຮັບຮູ້ຂອງຜູ້ກະທຳກັບເຫດການຕົວຈິງພາວະວິໄສ ຫຼື ຈະເວົ້າໃນຄວາມໝາຍຄວາມໝົ່ງກໍໝາຍຄວາມວ່າ ຜູ້ກະທຳມີເຈດຕະນາຈະກະທຳຕໍ່ສິ່ງໜຶ່ງ ແຕ່ຜົນຂອງການກະທຳພັດເກີດກັບອີກສິ່ງໜຶ່ງ ຊຶ່ງເກີດຈາກຄວາມຜິດພາດຂອງຜູ້ກະທຳ.

ປະມວນກົດໝາຍອາຍາຂອງ ສປປ ລາວ ບໍ່ໄດ້ກຳນົດຫຼັກການຂອງການກະທຳໂດຍຜິດພາດໄວ້ແຕ່ຢ່າງໃດ ແຕ່ເຖິງຢ່າງໃດກໍຕາມຖ້າຫາກການກະທຳຂອງບຸກຄົນຫາກເກີດຈາກຄວາມຜິດພາດຕາມກໍລະນີດັ່ງທີ່ໄດ້ກ່າວມານັ້ນຈະນຳໃຊ້ຫຼັກການຂອງກົດໝາຍຄືແນວໃດມາພິຈາລະນາ. ດັ່ງນັ້ນ, ການພິຈາລະນາຄວາມຮັບຜິດຊອບທາງອາຍາຂອງບຸກຄົນທີ່ເກີດຈາກການກະທຳດ້ວຍຄວາມຜິດພາດຈຶ່ງເປັນບັນຫາສຳຄັນທາງກົດໝາຍທີ່ຈຳເປັນຈະຕ້ອງໄດ້ທຳການສຶກສາໃຫ້ເຫັນຢ່າງຊັດເຈນ.

ໂດຍທົ່ວໄປແລ້ວການກະທຳຜິດດ້ວຍຄວາມຜິດພາດແບ່ງອອກເປັນ 2 ກໍລະນີຄື: ການກະທາຜິດດ້ວຍຄວາມຜິດພາດທາງດ້ານກົດໝາຍ ແລະ ການກະທຳດ້ວຍຄວາມຜິດພາດທາງດ້ານຂໍ້ເທັດຈິງ.

ໃນການພິຈາລະນາການກະທຳຜິດທາງອາຍາ ແລະ ຄວາມຮັບຜິດຊອບທາງອາຍາຂອງບຸກຄົນທີ່ເກີດຈາກຄວາມຜິດພາດທາງດ້ານກົດໝາຍກໍຕ້ອງໄດ້ພິຈາລະນາໄປຕາມເຈດຕະນະຂອງບຸກຄົນຜູ້ນັ້ນວ່າມີຄວາມຮັບຮູ້ວ່າສິ່ງທີ່ຕົນກະທຳກົດໝາຍກຳນົດເປັນຄວາມຜິດ ຫຼື ບໍ່, ສ່ວນໃນການພິຈາລະນາການກະທຳຜິດທາງອາຍາ ແລະ ຄວາມຮັບຜິດຊອບທາງອາຍາຂອງບຸກຄົນທີ່ເກີດຈາກຄວາມຜິດພາດທາງດ້ານຂໍ້ເທັດຈິງ

ນີ້ຈຳເປັນຈະຕ້ອງໄດ້ພິຈາລະນາຂອບເຂດຂອງເຈດຕະນາຂອງຜູ້ກະທຳ ວ່າການກະທຳນັ້ນຄວາມຈິງທາງດ້ານພາວະວິໄສເປັນໄປຕາມເຈດຕະນາ ຂອງຜູ້ກະທຳ ຫຼື ບໍ່ ຊຶ່ງເປັນໄປຕາມເຈດຕະນາແຕ່ລະກໍລະນີໄປ ຊຶ່ງແຍກ ອອກເປັນກໍລະນີດັ່ງນີ້:

1. ການກະທຳໂດຍຜິດພາດທາງດ້ານກົດໝາຍ

ການກະທຳໂດຍຜິດພາດທາງດ້ານກົດໝາຍ ໝາຍເຖິງກໍລະນີທີ່ ຜູ້ກະທຳຮູ້ວ່າສິ່ງທີ່ຕົນເອງກະທຳນັ້ນກົດໝາຍຫ້າມບໍ່ໃຫ້ກະທຳ ຫຼື ການກະ ທຳຂອງຕົນນັ້ນເປັນການລະເມີດກົດໝາຍ ແຕ່ຄິດວ່າຕົນເອງມີອຳນາດ ກະທຳໄດ້ດັ່ງກໍລະນີສຶກສາຕົວຢ່າງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 1 : X ເປີດຮ້ານຂາຍຂອງທີ່ລະນຶກ ແລະ ຄິດຢາກເຮັດຂອງທີ່ລະນຶກເພື່ອໄວ້ແຈກຢາຍໃຫ້ລູກຄ້າດ້ວຍການຈ້ຳການທີ່ ເປັນໂລໂກ້ຊື່ຮ້ານຂອງຕົນໃສ່ເງິນໃບຮ້ອຍກີບ. ເຖິງຢ່າງໃດກໍຕາມກ່ອນທີ່ X ຈະເຮັດ ແລະ ແຈກຢາຍໃຫ້ລູກຄ້ານັ້ນ X ໄດ້ເອົາເງິນໃບຮ້ອຍກີບທີ່ໄດ້ ຈ້ຳການໂລໂກ້ຮ້ານຂອງຕົນໃສ່ທີ່ເປັນຕົວຢ່າງໃຫ້ B ໝູ່ຂອງຕົນ ຊຶ່ງເປັນເຈົ້າ ໜ້າທີ່ຕຳຫຼວດເບິ່ງ ແລະ ສອບຖາມກ່ອນແລ້ວວ່າການເຮັດໃນລັກສະນະ ດັ່ງກ່າວຈະມີບັນຫາຫຍັງບໍ. ເມື່ອ B ໄດ້ເບິ່ງເງິນໃບຮ້ອຍກີບແລ້ວຄິດວ່າ ມູນຄ່າຂອງເງິນນັ້ນມີຈຳນວນໜ້ອຍບໍ່ສາມາດໃຊ້ຈ່າຍຫຍັງໄດ້ກໍຄົງຈະບໍ່ມີ ບັນຫາຫຍັງຈຶ່ງໄດ້ແນະນຳ X ວ່າເຮັດແນວນີ້ບໍ່ຜິດ. ດັ່ງນັ້ນ, X ຈຶ່ງເຊື່ອຄຳ ເວົ້າຂອງ B ແລ້ວໃຊ້ເງິນໃບຮ້ອຍກີບມາຜະລິດເປັນຂອງທີ່ລະນຶກເປັນ ຈຳນວນຫຼວງຫຼາຍ. X ຈະມີຄວາມຜິດຖານທຳລາຍທະນະບັດ ຫຼື ເງິນ ຫຼຽນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 282 ຂອງປະມວນກົດໝາຍອາຍາ ຫຼື ບໍ່ ເພາະວ່າປະມວນກົດໝາຍອາຍາມາດຕາ 282 ໄດ້ກຳນົດໄວ້ວ່າ ບຸກຄົນ ຜູ້ໃດຫາກໄດ້ທຳລາຍທະນະບັດ ຫຼື ເງິນຫຼຽນດ້ວຍການຕັດ, ເຈາະ, ຈີກ,

ແຕ້ມ, ຂີດ, ຂຽນ, ພິມ, ຈໍ້າກາ, ຕິດກາໃສ່ທະນະບັດ ຫຼື ເງິນຫຼຽນດ້ວຍວິທີໃດກໍຕາມ ຊຶ່ງເຮັດໃຫ້ທະນະບັດ ຫຼື ເງິນຫຼຽນທີ່ນຳອອກຈໍລະຈອນນັ້ນ ຖືກເສຍຫາຍ ຫຼື ໃຊ້ບໍ່ໄດ້ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີສຶກສາຕົວຢ່າງດັ່ງກ່າວນີ້ຈະເຫັນວ່າ X ຮູ້ວ່າສິ່ງທີ່ຕົນເອງກະທຳນັ້ນເປັນການກະທຳທີ່ຜິດກົດໝາຍ ແລະ ເປັນສິ່ງທີ່ກົດໝາຍຫ້າມ ແຕ່ມີຄວາມເຂົ້າໃຈຜິດວ່າຕົນເອງມີອຳນາດກະທຳໄດ້ ເນື່ອງຈາກວ່າກ່ອນຈະກະທຳຕົນເອງໄດ້ເອົາຕົວຢ່າງໄປຖາມໝູ່ຂອງຕົນທີ່ເປັນເຈົ້າໜ້າທີ່ຕຳຫຼວດແລ້ວ ຊຶ່ງຄວາມເຂົ້າໃຈຜິດ ຫຼື ຄວາມຜິດພາດນີ້ເອີ້ນວ່າແມ່ນຄວາມຜິດພາດທາງດ້ານກົດໝາຍ ແຕ່ໃນຄວາມຈິງແລ້ວຕໍ່ກັບການກະທຳຂອງ X ນັ້ນເປັນການກະທຳຊຶ່ງປະມວນກົດໝາຍອາຍາມາດຕາ 282 ໄດ້ກຳນົດເປັນການກະທຳຜິດ. ດັ່ງນັ້ນ, ຄວາມເຂົ້າໃຈຜິດ ຫຼື ຄວາມຜິດພາດຂອງ X ຈະບໍ່ພາໃຫ້ພົ້ນຈາກຄວາມຮັບຜິດຊອບທາງອາຍາໄດ້. ຖືວ່າ X ມີຄວາມຜິດຖານທຳລາຍທະນະບັດ ຫຼື ເງິນຫຼຽນນັ້ນເອງ.

2. ການກະທຳຜິດໂດຍຜິດພາດທາງດ້ານຂໍເທັດຈິງ

ການກະທຳຜິດໂດຍຜິດພາດທາງດ້ານຂໍ້ເທັດຈິງ ໝາຍເຖິງການກະທຳຊຶ່ງຜູ້ກະທຳຜິດມີຄວາມຮັບຮູ້ວ່າການກະທຳຂອງຕົນເປັນການກະທຳທີ່ຜິດກົດໝາຍອາຍາ ແຕ່ຜົນທີ່ເກີດຂຶ້ນຕົວຈິງນັ້ນມີຄວາມຄາດເຄື່ອນກັບເຈດຕະນາໃນເບື້ອງຕົ້ນຂອງຜູ້ກະທຳ ຫຼື ຈະເວົ້າໃນຄວາມໝາຍໜຶ່ງກໍໝາຍຄວາມວ່າສິ່ງທີ່ຜູ້ກະທຳຮັບຮູ້ບໍ່ກົງກັບເຫດການຕົວຈິງທາງດ້ານພາວະວິໄສນັ້ນເອງ.

ການກະທຳຜິດໂດຍຜິດພາດທາງດ້ານຂໍ້ເທັດຈິງແຍກອອກເປັນ 2 ກໍລະນີຄື: ຄວາມຜິດພາດທີ່ກ່ຽວຂ້ອງກັບສະຖານດຽວກັນ ຫຼື ກວມເອົາມາດຕາດຽວກັນ ແລະ ຄວາມຜິດພາດທີ່ກ່ຽວຂ້ອງກັບຫຼາຍມາດຕາ ຫຼື ກວມເອົາຫຼາຍມາດຕາ.

2.1 ຄວາມຜິດພາດທີ່ກ່ຽວຂ້ອງກັບສະຖານດຽວກັນ ຫຼື ກວມເອົາມາດຕາດຽວກັນ

ຄວາມຜິດພາດທີ່ກ່ຽວຂ້ອງກັບສະຖານດຽວກັນ ຫຼື ກວມເອົາມາດຕາດຽວກັນ ໝາຍເຖິງຜູ້ກະທຳມີເຈດຕະນາກະທຳຕໍ່ສິ່ງໃດສິ່ງໜຶ່ງ ແລະ ເຂົ້າໃຈວ່າສິ່ງນັ້ນແມ່ນເປົ້າໝາຍທີ່ຕົນເອງມຸ່ງກະທຳຕໍ່ ແຕ່ຜົນທີ່ເກີດຂຶ້ນຕົວຈິງເປັນສິ່ງອື່ນ ຫຼື ຈະເວົ້າໃນຄວາມໝາຍໜຶ່ງກໍໝາຍຄວາມວ່າຜູ້ກະທຳມີເຈດຕະນາກະທຳຕໍ່ສິ່ງໜຶ່ງ ແຕ່ຜົນພັດໄປເກີດກັບອີກສິ່ງໜຶ່ງ ແຕ່ຄວາມຜິດພາດນີ້ເອີ້ນວ່າເປັນການກະທຳຜິດໃນສະຖານດຽວກັນ ແລະ ໄດ້ກຳນົດໄວ້ໃນມາດຕາດຽວກັນດັ່ງກໍລະນີສຶກສາຕົວຢ່າງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 2. X ມີເຈດຕະນາຂ້າ A ຈຶ່ງໃຊ້ປືນຍິງໃສ່ຜູ້ທີ່ຕົນຄິດວ່າແມ່ນ A ທີ່ພວມຍ່າງຢູ່ຂ້າງຖະໜົນແຫ່ງໜຶ່ງໃນເວລາກາງຄືນເປັນເຫດເຮັດໃຫ້ບຸກຄົນດັ່ງກ່າວເສຍຊີວິດ, ແຕ່ໃນຄວາມຈິງແລ້ວບຸກຄົນທີ່ X ຍິງນັ້ນບໍ່ແມ່ນ A, ແຕ່ແມ່ນ B.

ກໍລະນີສຶກສາຕົວຢ່າງທີ 3. X ມີເຈດຕະນາຂ້າ A ຈຶ່ງໃຊ້ປືນຍິງ A ທີ່ພວມຍ່າງຢູ່ຂ້າງຖະໜົນແຫ່ງໜຶ່ງໃນເວລາກາງຄືນ ແຕ່ລູກປືນທີ່ຍິງໄປນັ້ນພາດເປົ້າບໍ່ຖືກ A ແຕ່ໄປຖືກ B ທີ່ພວມຍ່າງຢູ່ບໍລິເວນໃກ້ຄຽງນັ້ນເປັນເຫດເຮັດໃຫ້ B ເສຍຊີວິດ.

ໃນກໍລະນີສຶກສາຕົວຢ່າງທີ 2 ແລະ 3 ນີ້ຈະເຫັນວ່າໃນເບື້ອງຕົ້ນ X ມີເຈດຕະນາຈະຂ້າ A ແຕ່ຄວາມຜິດພາດຄືຜົນທີ່ເກີດຂຶ້ນພັດເກີດຂຶ້ນ

ກັບ B ຄືເຮັດໃຫ້ B ເສຍຊີວິດ. ບັນຫາທີ່ຈະຕ້ອງພິຈາລະນາກໍຄື X ມີເຈດຕະນາກະທຳຕໍ່ B ຄືມີເຈດຈະນາຂ້າ B ຫຼື ບໍ່. ຕໍ່ກັບບັນຫາດັ່ງກ່າວ ເຮົາຕ້ອງຍຶດຖືທິດສະດີເຈດຕະນາທີ່ເປັນຮູບປະທຳເປັນຕົວກຳນົດການ ຮັບຜິດຊອບທາງອາຍາຂອງຜູ້ກະທຳ ໝາຍຄວາມວ່າເຖິງວ່າຜູ້ກະທຳມີ ເຈດຕະນາຈະຂ້າ A ແຕ່ຜົນພັດເກີດຂຶ້ນກັບ B ຍ້ອນຄວາມຜິດພາດ ກໍຕາມ, A ແລະ B ກໍແມ່ນຄົນເໝືອນກັນ ແລະ ຜົນທີ່ເກີດຂຶ້ນຈາກການ ກະທຳຂອງ X ກໍແມ່ນຄວາມຕາຍທີ່ເກີດຂຶ້ນກັບຄົນ ໃນເມື່ອ X ມີເຈດຕະ ນາກະທຳຕໍ່ຄົນກໍໃຫ້ຖືວ່າ X ມີເຈດຕະນາກະທຳຕໍ່ B. ດັ່ງນັ້ນ, X ຈຶ່ງມີ ຄວາມຜິດຖານຄາດຕະກຳ B ເຊັ່ນກັນ.

ກໍລະນີສຶກສາຕົວຢ່າງທີ 4. X ຄິດຢາກຈະຍາດເອົາປືນຂອງເຈົ້າ ໜ້າທີ່ຕຳຫຼວດ A ທີ່ພວມຍ່າງກວດກາຄວາມສະຫງົບຢູ່ ຈຶ່ງໄດ້ໃຊ້ປືນ ປະດິດທີ່ດັດແປງມາຈາກປືນຍິງຕະປູສຳລັບການກໍ່ສ້າງຍິງໃສ່ A ໂດຍມີ ເຈດຕະນາຂ້າ ຈຶ່ງເຮັດໃຫ້ A ໄດ້ຮັບບາດເຈັບສາຫັດ. ພ້ອມກັນນັ້ນ, ດ້ວຍຄວາມແຮງຂອງປືນຍິງຕະປູທີ່ດັດແປງຈຶ່ງເຮັດໃຫ້ລູກຕະປູຊອດອອກ ຈາກຮ່າງກາຍຂອງ A ແລ້ວໄປຖືກທາງຫຼັງຂອງ B ທີ່ຍ່າງຢູ່ຫ່າງຈາກ A ໄປ ປະມານ 30 ແມັດ, ເຮັດໃຫ້ B ໄດ້ຮັບບາດເຈັບສາຫັດເຊັ່ນກັນ. ຖືວ່າ X ມີເຈດຕະນາກະທຳຕໍ່ B ຫຼື ບໍ່.

ຕໍ່ກັບກໍລະນີສຶກສາຕົວຢ່າງທີ 4 ນີ້ຈະເຫັນວ່າມີລັກສະນະຄ້າຍຄື ກັນກັບກໍລະນີສຶກສາທີ 3 ເນື່ອງຈາກວ່າ X ມີເຈດຕະນາກະທຳຕໍ່ A ແຕ່ຍ້ອນຄວາມຜິດພາດຜົນຈຶ່ງໄປເກີດຂຶ້ນກັບ B. ຕໍ່ກັບການກະທຳຂອງ X ຈະບໍ່ມີບັນຫາເລື່ອງການພິຈາລະນາເພາະວ່າ X ມີເຈດຕະນາຈະຂ້າ A ແຕ່ A ບໍ່ເສຍຊີວິດກໍຖືວ່າມີຄວາມຜິດຖານພະຍາຍາມຄາດຕະກຳ ແຕ່ການ ພິຈາລະນາວ່າການກະທຳຂອງ X ຈະເປັນການກະທຳໂດຍເຈດຕະນາຕໍ່ B ຫຼື ບໍ່ ເຮົາກໍຕ້ອງຍຶດຖືທິດສະດີເຈດຕະນາທີ່ເປັນຮູບປະທຳຄືກັບກໍລະນີສຶກ

ສາຕົວຢ່າງທີ 3 ຂ້າງເທິງນັ້ນ ໝາຍຄວາມວ່າ A ແລະ B ກໍແມ່ນຄົນ, ໃນເມື່ອ X ມີເຈດຕະນາກະທຳຕໍ່ A ທີ່ເປັນຄົນແລ້ວ ຜົນທີ່ເກີດຂຶ້ນຈະເປັນ B ກໍຕາມກໍຖືວ່າເປັນຄົນເຊັ່ນກັນ. ດັ່ງນັ້ນ. ການກະທຳຂອງ X ຈຶ່ງຖືວ່າມີເຈດຕະນາກະທຳຕໍ່ B ແຕ່ B ບໍ່ເສຍຊີວິດ, X ກໍມີຄວາມຜິດຖານພະຍາຍາມຄາດຕະກຳ B ນັ້ນເອງ.

2.2. ຄວາມຜິດພາດທີ່ກ່ຽວຂ້ອງກັບຫຼາຍມາດຕາ ຫຼື ກວມເອົາຫຼາຍມາດຕາ

ຄວາມຜິດພາດທີ່ກ່ຽວຂ້ອງກັບຫຼາຍມາດຕາ ຫຼື ກວມເອົາຫຼາຍມາດຕາ ໝາຍເຖິງຜູ້ກະທຳມີເຈດຕະນາກະທຳຕໍ່ສິ່ງໃດສິ່ງໜຶ່ງ ແລະເຂົ້າໃຈວ່າສິ່ງນັ້ນແມ່ນເປົ້າໝາຍທີ່ຕົນເອງມຸ່ງກະທຳຕໍ່ ແຕ່ຜົນທີ່ເກີດຂຶ້ນຕົວຈິງເປັນສິ່ງອື່ນ ຫຼື ຈະເວົ້າໃນຄວາມໝາຍໜຶ່ງກໍໝາຍຄວາມວ່າຜູ້ກະທຳມີເຈດຕະນາກະທຳຕໍ່ສິ່ງໜຶ່ງ ແຕ່ຜົນພັດໄປເກີດກັບອີກສິ່ງໜຶ່ງ ແຕ່ຄວາມຜິດພາດນີ້ເອີ້ນວ່າເປັນການກະທຳຜິດພາດທີ່ກ່ຽວຂ້ອງກັບຫຼາຍສະຖານ ຫຼື ການກະທຳຜິດໄດ້ກຳນົດໄວ້ໃນຫຼາຍມາດຕາ.

ຄວາມຜິດພາດທີ່ກ່ຽວຂ້ອງກັບຫຼາຍມາດຕາ ຫຼື ກວມເອົາຫຼາຍມາດຕານີ້ຈະປະກອບມີຄວາມຜິດພາດທີ່ກ່ຽວຂ້ອງກັບຫຼາຍມາດຕາ ຫຼື ກວມເອົາຫຼາຍມາດຕາທີ່ມີຜົນປະໂຫຍດທາງດ້ານກົດໝາຍ ຫຼື ອົງປະກອບທາງດ້ານວັດຖຸກຳທັບຊ້ອນກັນ ແລະ ຄວາມຜິດພາດທີ່ກ່ຽວຂ້ອງກັບຫຼາຍມາດຕາ ຫຼື ກວມເອົາຫຼາຍມາດຕາທີ່ມີຜົນປະໂຫຍດທາງດ້ານກົດໝາຍ ຫຼື ອົງປະກອບທາງດ້ານວັດຖຸກຳບໍ່ທັບຊ້ອນກັນ.

2.2.1. ຄວາມຜິດພາດທີ່ກ່ຽວຂ້ອງກັບຫຼາຍມາດຕາ ຫຼື ກວມເອົາຫຼາຍມາດຕາທີ່ຜົນປະໂຫຍດທາງກົດໝາຍທັບຊ້ອນກັນ

ຄວາມຜິດພາດທີ່ກ່ຽວຂ້ອງກັບຫຼາຍມາດຕາ ຫຼື ກວມເອົາຫຼາຍມາດຕາທີ່ຜົນປະໂຫຍດທາງດ້ານກົດໝາຍ ຫຼື ອົງປະກອບທາງດ້ານວັດຖຸກຳທັບຊ້ອນກັນນີ້ ໝາຍເຖິງຜູ້ກະທຳມີເຈດຕະນາກະທຳຕໍ່ສິ່ງໜຶ່ງ ແຕ່ຜົນທາງພາວະວິໄສເປັນອີກສິ່ງໜຶ່ງແຕ່ກົດໝາຍກຳນົດເປັນການກະທຳຜິດໃນໝວດດຽວກັນ ຫຼື ມີອົງປະກອບທາງວັດຖຸກຳອັນດຽວກັນ ດັ່ງກໍລະນີສຶກສາຕົວຢ່າງດັ່ງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 4. X ມີເຈດຕະນານຳເຂົ້າຢາບ້າ ແລະຄິດວ່າສິ່ງທີ່ຕົນກຳລັງນຳເຂົ້າມານັ້ນເປັນຢາບ້າ ແຕ່ໃນຕົວຈິງແລ້ວສິ່ງທີ່ນຳເຂົ້າມາພັດແມ່ນເຮໂຣອິນ. X ຈະມີຄວາມຜິດຕາມມາດຕາ 314 ຫຼື ຈະມີຄວາມຜິດຕາມຕາມມາດຕາ 315 ຂອງປະມວນກົດໝາຍອາຍາ.

ໃນກໍລະນີສຶກສາຕົວຢ່າງດັ່ງກ່າວເຫັນວ່າຄວາມຜິດພາດທີ່ເກີດຂຶ້ນກັບ X ກໍຄື X ມີເຈດຕະນານຳເຂົ້າຢາບ້າມີຄວາມຜິດຕາມມາດຕາ 315 ຂອງປະມວນກົດໝາຍອາຍາ ແຕ່ຜົນຂອງການກະທຳທີ່ເປັນອົງປະກອບທາງດ້ານພາວະວິໄສພັດແມ່ນເຮໂຣອິນ ຊຶ່ງມີຄວາມຜິດຕາມຕາມມາດຕາ 314 ທີ່ມີໂທດໜັກກວ່າ. ເມື່ອພິຈາລະນາຜົນປະໂຫຍດທາງດ້ານກົດໝາຍ ຫຼື ອົງປະກອບທາງດ້ານວັດຖຸກຳແລ້ວຈະເຫັນວ່າແມ່ນອັນດຽວກັນ ໝາຍຄວາມວ່າຜູ້ກະທຳມີເຈດຕະນານຳເຂົ້າຢາເສບຕິດປະເພດຢາບ້າ ແຕ່ຄວາມຈິງພັດແມ່ນເຮໂຣອິນ. ຕໍ່ກັບກໍລະນີສຶກສາຕົວຢ່າງດັ່ງກ່າວເຫັນວ່າ X ມີເຈດຕະນາຈະກະທຳຜິດທາງອາຍາໃນສະຖານເບົາ ແຕ່ຄວາມເປັນຈິງທາງພາວະວິໄສພັດແມ່ນສິ່ງທີ່ກົດໝາຍກຳນົດການລົງໂທດໜັກກວ່ານັ້ນໂດຍອີງຕາມທິດສະດີການລົງໂທດໃຫ້ຖືຕາມເຈດຕະນາຂອງຜູ້ກະທຳ.

ດັ່ງນັ້ນ, X ຄວນຈະຖືກລົງໂທດໃນສະຖານນຳເຂົ້າຢາບ້າຕາມທີ່ໄດ້ກຳນົດໄວ້ໃນມາດຕ 315 ທີ່ມີໂທດເບົາກວ່າຈຶ່ງຈະເໝາະສົມ.

2.2.2. ຄວາມຜິດພາດທີ່ກ່ຽວຂ້ອງກັບຫຼາຍມາດຕາ ຫຼື ກວມເອົາຫຼາຍມາດຕາທີ່ຜົນປະໂຫຍດທາງກົດໝາຍບໍ່ທັບຊ້ອນກັນ

ຄວາມຜິດພາດທີ່ກ່ຽວຂ້ອງກັບຫຼາຍມາດຕາ ຫຼື ກວມເອົາຫຼາຍມາດຕາທີ່ຜົນປະໂຫຍດທາງກົດໝາຍ ຫຼື ອົງປະກອບທາງດ້ານວັດຖຸກຳບໍ່ທັບຊ້ອນກັນ ໝາຍເຖິງຜູ້ກະທຳມີເຈດຕະນາກະທຳຕໍ່ສິ່ງໜຶ່ງ ແຕ່ຜົນທາງພາວະວິໄສເປັນອີກສິ່ງໜຶ່ງແຕ່ກົດໝາຍກຳນົດເປັນການກະທຳຜິດຄົນລະໝວດ ຫຼື ມີອົງປະກອບທາງວັດຖຸກຳແຕກຕ່າງກັນ ດັ່ງກໍລະນີສຶກສາຕົວຢ່າງດັ່ງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 5. X ໃຈຮ້າຍ ແລະ ລຳຄານສຽງເຫ່ຳຂອງໝາຢູ່ເຮືອນຂອງ A ທີ່ຢູ່ຕິດກັບເຮືອນຂອງຕົນ ຈຶ່ງໄດ້ແກວ່ງກ້ອນຫີນໃສ່, ແຕ່ໃນຄວາມຈິງແລ້ວສິ່ງທີ່ X ຄິດວ່າແມ່ນໝາສີຂາວທີ່ຕົນແກວ່ງກ້ອນຫີນໃສ່ນັ້ນຊໍ້າພັດແມ່ນຫົວຂອງ A ທີ່ມີຜົມສີຂາວຄ້າຍຄືຂົນຂອງໝາ. ກ້ອນຫີນທີ່ X ແກວ່ງໄປນັ້ນຖືກຫົວຂອງ A ແລະ ເຮັດໃຫ້ A ໄດ້ຮັບບາດເຈັບສາຫັດ. X ຈະມີຄວາມຜິດຖານທຳຮ້າຍຮ່າງກາຍ ຫຼື ເຮັດໃຫ້ A ໄດ້ຮັບບາດເຈັບໂດຍເຈດຕະນາ ຫຼື ບໍ່.

ໃນກໍລະນີສຶກສາຕົວຢ່າງດັ່ງກ່າວນີ້ຈະເຫັນວ່າໃນເບື້ອງຕົ້ນ X ມີເຈດຕະນາຈະທຳຮ້າຍໝາ ແຕ່ຄວາມຜິດພາດທີ່ເກີດຂຶ້ນຄືສິ່ງທີ່ X ຄິດວ່າແມ່ນໝານັ້ນພັດແມ່ນຫົວຂອງ A ເມື່ອພິຈາລະນາຜົນປະ�โຫຍດທາງດ້ານກົດໝາຍ ຫຼື ອົງປະກອບທາງດ້ານວັດຖຸກຳແລ້ວຈະເຫັນວ່າມີຄວາມແຕກຕ່າງກັນ. ການທີ່ X ແກວ່ງກ້ອນຫີນໃສ່ໝາຈຶ່ງບໍ່ເປັນບັນຫາໃນການພິຈາລະນາດ້ານກົດໝາຍແຕ່ຢ່າງໃດເພາະວ່າ X ມີເຈດຕະນາແກວ່ງກ້ອນ

ຫີນໃສ່ໝາກໍຖືວ່າເປັນການທຳລາຍຊັບໂດຍເຈດຕະນາ, ແຕ່ໃນເມື່ອກ້ອນຫີນບໍ່ຖືກໝາກໍຄືຜົນບໍ່ເກີດຈຶ່ງມີຄວາມຜິດຖານພະຍາຍາມທຳລາຍ ຫຼື ເຮັດໃຫ້ຊັບເປ່ເພໂດຍເຈດຕະນາ. ບັນຫາຄື X ມີເຈດຕະນາທຳຮ້າຍ A ຫຼື ບໍ່ນັ້ນເຮົາຕ້ອງພິຈາລະນາເຈດຕະນາຂອງ X ເປັນຕົ້ນຕໍ. ໃນເມື່ອ X ມີເຈດຕະນາຈະກະທຳຕໍ່ໝາກໍຖືວ່າເຈດຕະນາຂອງ X ໄດ້ສິ້ນສຸດຢູ່ທີ່ການກະທຳຕໍ່ໝາແລ້ວ, ສ່ວນຜົນທີ່ເກີດຂຶ້ນໂດຍຜິດພາດໄປຖືກ A ບໍ່ຖືວ່າແມ່ນເກີດຈາກການກະທຳໂດຍເຈດຕະນາຂອງ X. ດັ່ງນັ້ນ, ການຮັບຜິດຊອບຕໍ່ຜົນຄືການບາດເຈັບສາຫັດຂອງ A ນັ້ນ, X ມີຄວາມຮັບຜິດຊອບພຽງແຕ່ເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບດ້ວຍຄວາມບໍ່ລະມັດລະວັງຕາມມາດຕາ 209 ຂອງປະມວນກົດໝາຍອາຍາເທົ່ານັ້ນ.

ບົດທີ 12
ການຮ່ວມກັນກະທຳຜິດ

ປະມວນກົດໝາຍອາຍາໄດ້ໃຫ້ຄວາມໝາຍຂອງການຮ່ວມກັນກະທຳຜິດໄວ້ໃນມາດຕາ 26 ว่า ການຮ່ວມກັນກະທຳຜິດແມ່ນການເຂົ້າຮ່ວມການກະທຳຜິດໂດຍເຈດຕະນາແຕ່ສອງຄົນຂຶ້ນໄປ. ການກະທຳອັນໃດຈະຖືວ່າເປັນການຮ່ວມກັນກະທຳຜິດໄດ້ກໍຕໍ່ເມື່ອການກະທຳນັ້ນຄົບຕາມເງື່ອນໄຂດັ່ງນີ້:

1). ຕ້ອງເປັນການກະທຳຜິດໂດຍເຈດຕະນາ;

2). ຕ້ອງມີການເຂົ້າຮ່ວມຕັ້ງແຕ່ສອງຄົນຂຶ້ນໄປ;

3). ຕ້ອງມີການຕົກລົງກັນລ່ວງໜ້າ ຫຼື ໃນເວລາການກະທຳຜິດຕົວຈິງໃນຖານດຽວກັນ ຫຼື ການກະທຳຜິດຍັງບໍ່ທັນສິ້ນສຸດ, ມີການເຂົ້າຮ່ວມໂດຍເຈດຕະນາ, ມີການສວຍໃຊ້ໂອກາດ ແລະ ເງື່ອນໄຂທີ່ຜູ້ອື່ນໄດ້ສ້າງຂຶ້ນໂດຍມາສືບຕໍ່ກະທຳຮ່ວມກັນ.

ນອກຈາກນັ້ນປະມວນກົດໝາຍອາຍາຍັງໄດ້ແບ່ງຜູ້ເຂົ້າຮ່ວມການກະທຳຜິດອອກເປັນ 4 ປະເພດດັ່ງນີ້:

1). ຕົວການ ໝາຍເຖິງຜູ້ວາງແຜນ, ຈັດຕັ້ງ ແລະ ບັນຊາການກະທຳຜິດ;

2). ຜູ້ປະຕິບັດ ໝາຍເຖິງຜູ້ລົງມືກະທຳຜິດໂດຍກົງ;

3). ຜູ້ຍຸຍົງ ໝາຍເຖິງຜູ້ຍຸແຍ່, ປຸກລະດົມ, ຊຸກຍູ້ຜູ້ອື່ນໃຫ້ກະທຳຜິດ;

4). ຜູ້ສົມຮູ້ຮ່ວມຄິດ ໝາຍເຖິງຜູ້ໃຫ້ການຊ່ວຍເຫຼືອໂດຍເຈດຕະນາໃນການກະທຳຜິດ ຫຼື ໃຫ້ຄຳໝັ້ນສັນຍາລ່ວງໜ້າວ່າຈະຊຸກເຊື່ອງ, ປົກປິດຜູ້ກະທຳຜິດ, ພາຫະນະ, ອຸປະກອນໃນການກະທຳຜິດ, ຈະລົບ

ລ້າງຮ່ອງຮອຍຂອງການກະທຳຜິດ ຫຼື ຊຸກເຊື່ອງສິ່ງຂອງທີ່ຈະໄດ້ມາຈາກການກະທຳຜິດ.

ການຮ່ວມກັນກະທຳຜິດເມື່ອນຳມາພິຈາລະນາກັບກໍລະນີສຶກສາຕົວຢ່າງແລ້ວເຮົາຈະເຫັນວ່າການກະທຳຜິດທາງອາຍາອັນໃດເປັນການຮ່ວມກັນກະທຳຜິດກໍຕໍ່ເມື່ອເຂົ້າກັບເງື່ອນໄຂດັ່ງທີ່ໄດ້ກ່າວໄວ້ຂ້າງເທິງ ດັ່ງກໍລະນີສຶກສາຕົວຢ່າງດັ່ງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 1. ໃນຂະນະທີ່ A ໄປຕະຫຼາດນຳ B (ອາຍຸ 6 ປີ) ເປັນລູກຊາຍຂອງຕົນນັ້ນໄດ້ເຫັນຮ້ານຂາຍເຄື່ອງຮ້ານໜຶ່ງ ຊຶ່ງຄົນເຝົ້າຮ້ານພວມນອນຫຼັບຢູ່ເລີຍເກີດມີແນວຄິດຢາກໄດ້ ຈຶ່ງໃຊ້ B ແລະເວົ້າກັບ B ວ່າ "ໄປຈັບເອົາໂມງທີ່ວາງໄວ້ຢູ່ບ່ອນນັ້ນມາໃຫ້ແດ່". B ກໍໄດ້ປະຕິບັດຕາມຄຳທີ່ A ບອກຄືຍ່າງເຂົ້າໄປໃນຮ້ານຂາຍເຄື່ອງແລ້ວຈັບເອົາໂມງທີ່ວາງໄວ້ຢູ່ນັ້ນມາໃຫ້ A. ກໍລະນີຕົວຢ່າງນີ້ຈະຖືວ່າ A ເປັນຜູ້ຮ່ວມກັນກະທຳຜິດຖານລັກຊັບ ຫຼື ບໍ່.

ກໍລະນີສຶກສາຕົວຢ່າງດັ່ງກ່າວນີ້ຈະເຫັນວ່າ B ອາຍຸພຽງ 6 ປີ, B ບໍ່ສາມາດມີແນວຄິດຢາກໄດ້, ບໍ່ສາມາດຮັບຮູ້ ຫຼື ຈຳແນກໄດ້ເຖິງຄວາມຜິດຖືກ ແລະ ຄວາມເປັນອັນຕະລາຍຕໍ່ສັງຄົມ ຊຶ່ງການກະທຳຂອງ B ແມ່ນປະຕິບັດຕາມເຈດຈຳນົງ ຫຼື ເປັນເຄື່ອງມືຂອງ A ເອງ. ການກະທຳຂອງ B ທີ່ມີອາຍຸພຽງແຕ່ 6 ປີຖືວ່າເປັນການກະທຳທີ່ຍັງບໍ່ທັນມີຄວາມຮູ້ສຶກຜິດຊອບຊົ່ວດີແຕ່ຢ່າງໃດ. ດັ່ງນັ້ນ, ການກະທຳຂອງ A ຈຶ່ງຖືວ່າເປັນການກະທຳຜິດດ່ຽວໂດຍຜ່ານ B ເປັນຜູ້ກະທຳແທນຕົນ. ດັ່ງນັ້ນ, A ຈຶ່ງບໍ່ເປັນຜູ້ຮ່ວມກັນກະທຳຜິດຖານລັກຊັບ ໝາຍຄວາມວ່າ A ກະທຳຜິດທາງອາຍາພຽງຄົນດຽວໃນຂໍ້ຫາລັກຊັບເທົ່ານັ້ນ.

ກໍລະນີສຶກສາຕົວຢ່າງທີ 2. A ຖືກ B (ອາຍຸ 13 ປີ) ຊຶ່ງເປັນລູກຊາຍຂອງຕົນຮ້ອງຂໍໃຫ້ຊື້ໂມງລາຄາແພງໃຫ້, ຈຶ່ງໄດ້ເວົ້າກັບລູກຊາຍວ່າ

"ຊິເອົາເງິນແຕ່ໃສມາຊື້, ຄົນຢາກໄດ້ກະໄປລັກເອົາເອງຢູ່ຮ້ານຂາຍໂມງ ນາງ C ຢູ່ຕະຫຼາດເຊົ້າຊົ້ນສອງເວລາ 12:00 ເດີເພາະວ່າເວລານີ້ພະນັກງານ ສ່ວນຫຼາຍອອກໄປກິນເຂົ້າສວາຍໄປລັກໄດ້ງ່າຍ" ຈາກນັ້ນ, B ກໍໄດ້ໄປລັກ ເອົາໂມງດັ່ງກ່າວມາ. ກໍລະນີຕົວຢ່າງນີ້ຈະຖືວ່າ A ຈະຖືເປັນຜູ້ຮ່ວມກັນກະ ທຳຜິດຖານລັກຊັບ ຫຼື ບໍ່.

ຈາກກໍລະນີສຶກສາຕົວຢ່າງນີ້ຈະເຫັນວ່າ B ອາຍຸ 13 ປີເຖິງວ່າຈະ ບໍ່ຄົບອົງປະກອບດ້ານເຈົ້າກຳຂອງການກະທຳຜິດກໍ່ຕາມ ແຕ່ຖ້າຫາກມີ ພຶດຕິກຳທາງດ້ານພາວະວິໃສທີ່ເປັນອັນຕະລາຍ ແລະ ມີອົງປະກອບດ້ານ ອັດຕະວິໃສຄືມີຄວາມຄິດເປັນຂອງຕົນເອງແລ້ວ, ເດັກໃນໄວກະສຽນອາຍຸ 13 ປີມີຄວາມສາມາດຮັບຮູ້ຜິດຊອບດີ, ຮູ້ເຖິງຜົນສະທ້ອນທີ່ຈະເກີດຂຶ້ນ ແລະ ມີແນວຄິດຢາກໄດ້ຂອງຄົນອື່ນແລ້ວເນື່ອງຈາກວ່າໄດ້ຜ່ານການ ສັ່ງສອນຈາກຄູ, ອາຈານຢູ່ໂຮງຮຽນ ແລະ ສະພາບແວດລ້ອມຂອງຄອບ ຄົວ ເຖິງວ່າການກະທຳນັ້ນຕາມກົດໝາຍເປັນການຂາດອົງປະກອບທາງ ດ້ານເຈົ້າກຳກຳຕາມ, ແຕ່ທາງດ້ານພາວະວິໄສ ຫຼື ການກະທຳຜິດຢູ່ນັ້ນໃຫ້ຖື ວ່າເປັນການກະທຳຜິດຮ່ວມກັນກະທຳຜິດ. ດັ່ງນັ້ນ, A ຈຶ່ງຖືວ່າເປັນຜູ້ ຮ່ວມກັນກະທຳຜິດຖານລັກຊັບນັ້ນໄດ້.

ກໍລະນີສຶກສາຕົວຢ່າງທີ 3. A ບັງເອີນໄປພົບເຫັນ B ທີ່ເປັນໝູ່ ຂອງຕົນຊຶ່ງພວມໃຊ້ກຳລັງທຳຮ້າຍ C ເພື່ອຫວັງປຸ້ນຊັບຢູ່ຈົນເປັນເຫດໃຫ້ C ລົ້ມລົງໝົດສະຕິ. ເມື່ອເຫັນແນວນັ້ນ A ຈຶ່ງໄດ້ລົມກັບ B ແລ້ວເຂົ້າໄປ ຮ່ວມໂດຍໄດ້ຄົ້ນຖົງເຄື່ອງຂອງ C ທີ່ພວມນອນໝົດສະຕິຢູ່ນັ້ນພ້ອມກັບ ໄດ້ດຶງເອົາກະເປົາເງິນຂອງ C ໄປ. ໃນກໍລະນີຕົວຢ່າງນີ້ຈະຖືວ່າ A ແລະ B ເປັນການຮ່ວມກັນກະທຳຜິດ ຫຼື ບໍ່.

ໃນກໍລະນີສຶກສາຕົວຢ່າງນີ້ຈະເຫັນວ່າ A ເຖິງວ່າຈະບໍ່ໄດ້ຕົກລົງ ກັບ B ກ່ອນຈະໄປປຸ້ນຊັບ C ກໍ່ຕາມ ແຕ່ກ່ອນທີ່ A ຈະເຂົ້າຮ່ວມນັ້ນ

ກໍໄດ້ຖາມ B ຄັກແນ່ວ່າເຮັດຫຍັງຢູ່ ແລະ ໄດ້ຮັບຮູ້ລ່ວງໜ້າກ່ອນຈະເຂົ້າຮ່ວມ ໝາຍຄວາມວ່າການທີ່ A ເຂົ້າຮ່ວມຊ່ວງເຄິ່ງກາງຂອງເຫດການປຸ້ນຊັບກໍຍັງແມ່ນຢູ່ໃນຂອບເຂດຂອງການຕົກລົງກັນລ່ວງໜ້າຢູ່ເນື່ອງຈາກວ່າການກະທຳຜິດຍັງບໍ່ທັນສິ້ນສຸດເທື່ອ. ດັ່ງນັ້ນ, ຈຶ່ງຖືວ່າ A ແລະ B ເປັນການຮ່ວມກັນກະທຳຜິດຖານປຸ້ນຊັບນັ້ນເອງ. A ມີຄວາມຜິດທາງອາຍາໃນຖານປຸ້ນຊັບຕາມມາດຕາ 230 ວັກ 1, ສ່ວນ B ມີຄວາມຜິດທາງອາຍາຖານປຸ້ນຊັບຕາມມາດຕາ 230 ວັກ 2 ຂອງປະມວນກົດໝາຍອາຍາ.

ກໍລະນີສຶກສາຕົວຢ່າງທີ 4. A ແລະ B ຄຽດຊັງ C ຈຶ່ງວາງແຜນຮ່ວມກັນທຳຮ້າຍຮ່າງກາຍ C. A ແລະ B ຈຶ່ງໄດ້ເອີ້ນ C ມາຫາ. ໃນລະຫວ່າງທີ່ A ກັບ B ຮ່ວມກັນທຳຮ້າຍຮ່າງກາຍ C ຢູ່ນັ້ນ, B ເຫັນວ່າ C ໄດ້ຂັດຂືນຈຶ່ງຮູ້ສຶກໃຈຮ້າຍຂຶ້ນກວ່າເກົ່າເລີຍຄິດຢາກຂ້າ C ຈຶ່ງໄດ້ໃຊ້ມີດທີ່ເຊື່ອງໄວ້ນັ້ນແທງ C ຈົນເສຍຊີວິດໂດຍທີ່ A ບໍ່ຮູ້ລ່ວງໜ້າມາກ່ອນ ເພາະວ່າ A ບໍ່ໄດ້ຄິດເຖິງຂັ້ນວ່າຈະຂ້າ C. ກໍລະນີຕົວຢ່າງນີ້ຈະຖືວ່າ A ເປັນຜູ້ຮ່ວມກັນກະທຳຜິດກັບ B ຖານຄາດຕະກຳ ຫຼື ບໍ່.

ຈາກກໍລະນີສຶກສາຕົວຢ່ງນີ້ຈະເຫັນວ່າ A ບໍ່ໄດ້ຄິດເຖິງຂັ້ນຈະຂ້າ C ຊຶ່ງ A ກັບ B ໃນເບື້ອງຕົ້ນໄດ້ຕົກລົງກັນພຽງແຕ່ໄປທຳຮ້າຍຮ່າງກາຍ C ເທົ່ານັ້ນ ແຕ່ທາງດ້ານພາວະວິໄສຂອງ B ແມ່ນໄດ້ກະທຳນອກເໜືອການຕົກລົງກັນນັ້ນກໍ່ຄືໃຊ້ມີດແທງ C ຈົນເສຍຊີວິດ ໝາຍຄວາມວ່າການທີ່ B ໃຊ້ມີດແທງ C ນັ້ນເປັນການກະທຳທີ່ບໍ່ໄດ້ຕົກລົງກັນມາກ່ອນ. ດັ່ງນັ້ນ, ຈຶ່ງຖືວ່າ A ແລະ B ເປັນຜູ້ຮ່ວມກັນກະທຳຜິດຖານທຳຮ້າຍຮ່າງກາຍຕາມມາດຕາ 194 ວັກ 2 ແລະ ນອກຈາກນັ້ນ B ຍັງຖືວ່າມີຄວາມຜິດຖານຄາດຕະກຳ ຊຶ່ງເປັນການກະທຳຜິດດ່ຽວອີກ.

ກໍລະນີສຶກສາຕົວຢ່າງທີ 5. A ຄິດຢາກໄດ້ເງິນຈຶ່ງໄດ້ວາງແຜນປຸ້ນຊັບແລ້ວໄດ້ຊັກຊວນ B ແລະ C ຊຶ່ງເປັນລຸ້ນນ້ອງເຂົ້າຮ່ວມ. A ຄິດວ່າ

ຖ້າໄປປຸ້ນຮ້ານແລກປ່ຽນເງິນຕາຂອງ D ກໍຄົງຈະໄດ້ເງິນຫຼາຍ, ຈຶ່ງໄດ້ສັ່ງ ໃຫ້ B ແລະ C ໄປປຸ້ນຮ້ານຂອງ D. ກ່ອນການລົງມື A ໄດ້ເອົາມີດໃຫ້ B ເພື່ອໄວ້ໃຊ້ນາບຂູ່ D. B ແລະ C ໄດ້ປະຕິບັດຕາມການສັ່ງການຂອງ A ໂດຍໄດ້ເຂົ້າໄປປຸ້ນຮ້ານຂອງ D ດ້ວຍການໄດ້ໃຊ້ມີດນາບຂູ່ D ແລະ ປຸ້ນ ໄດ້ເງິນສົດ 50.000.000 ກີບ ແລະ 10.000 ໂດລາ ແລ້ວກໍເອົາຕົວຫຼົບໜີ ໄປ. ຫຼັງຈາກນັ້ນ, B ແລະ C ກໍໄດ້ໄປເຮືອນຂອງ A ເພື່ອແຈ້ງຂ່າວວ່າການ ປຸ້ນຊັບນັ້ນສຳເລັດແລ້ວ. A ໄດ້ຮັບເອົາເງິນທີ່ B ແລະ C ປຸ້ນມາ, ຈາກນັ້ນ ກໍແບ່ງໃຫ້ B ແລະ C ຜູ້ລະ 10.000.000 ກີບ ແລະ 1.000 ໂດລາ ແລ້ວເອົາສ່ວນທີ່ເຫຼືອ 30.000.000 ກີບ ແລະ 8.000 ໂດລານັ້ນເກັບໄວ້ ເປັນຂອງຕົນເອງ. ກໍລະນີຕົວຢ່າງນີ້ຈະຖືວ່າ A, B ແລະ C ຢູ່ໃນຖານະ ໃດ (ຕົວການ, ຜູ້ປະຕິບັດ, ຜູ້ຍຸຍົງ ແລະ ຜູ້ສົມຮູ້ຮ່ວມຄິດ).

ໃນກໍລະນີສຶກສາຕົວຢ່າງນີ້ຈະເຫັນວ່າ A ເປັນຜູ້ວາງແຜນ ແລະ ສັ່ງການຊີ້ນຳໃຫ້ B ແລະ C ໃຫ້ໄປປຸ້ນຊັບ, ພ້ອມທັງເປັນຜູ້ແບ່ງ ຜົນປະ�โຫຍດກໍ່ຄືເງິນທີ່ລັກມາຈຳນວນ 50.000.000 ກີບ ແລະ 10.000 ໂດລາໃຫ້ B ແລະ C ຊຶ່ງ A ກໍ່ໄດ້ຜົນປະ�โຫຍດຫຼາຍກວ່າ B ແລະ C. ດັ່ງນັ້ນ, ຖືວ່າ A ເປັນຕົວການໃນການປຸ້ນຊັບຄັ້ງນີ້ ເຖິງຈະບໍ່ໄດ້ໄປຮ່ວມ ປຸ້ນກໍ່ຕາມ, ສ່ວນ B ແລະ C ມີຖານະເປັນຜູ້ປະຕິບັດຄືເຮັດຕາມການວາງ ແຜນຂອງ A. ດັ່ງນັ້ນ, A, B ແລະ C ເປັນການຮ່ວມກັນກະທຳຜິດປຸ້ນ ຊັບນັ້ນເອງ.

ກໍລະນີສຶກສາຕົວຢ່າງທີ 6. A ຄິດຢາກໄດ້ເງິນຈຶ່ງໄດ້ວາງແຜນປຸ້ນ ຊັບແລ້ວໄດ້ຊັກຊວນ B ແລະ C ຊຶ່ງເປັນລຸ້ນນ້ອງເຂົ້າຮ່ວມ. A ໄດ້ຕັດສິນ ໃຈວ່າຈະໄປປຸ້ນຮ້ານແລກປ່ຽນເງິນຕາຂອງ D ຈຶ່ງໄດ້ເດີນທາງໄປຮ້ານຂອງ D ພ້ອມກັນກັບ B ແລະ C. ເມື່ອໄປຮອດຮ້ານຂອງ D ແລ້ວ A ໄດ້ສັ່ງ ໃຫ້ C ເຝົ້າຢູ່ບໍລິເວນໜ້າຮ້ານຂອງ D, ສ່ວນຕົນກັບ B ໄດ້ເຂົ້າໄປໃນຮ້ານ

ຂອງ D ສອງຄົນ. ເມື່ອເຂົ້າໄປແລ້ວກໍເຫັນ D ຢູ່ໃນຮ້ານ, A ຈຶ່ງໄດ້ໃຊ້ມີດ ທີ່ກະກຽມມານັ້ນນາບຂູ່ D ແລະ ປຸ້ນໄດ້ເງິນ 50.000.000 ກີບ ແລະ 10.000 ໂດລາແລ້ວກໍຫຼົບໜີໄປພ້ອມກັບ B. ເມື່ອ A ແລະ B ໜີອອກ ມາຈາກຮ້ານຂອງ D ແລ້ວ, C ຊຶ່ງເຝົ້າຢູ່ບໍລິເວນດັ່ງກ່າວກໍໄດ້ແນມເຫັນຈຶ່ງ ໄດ້ເອົາຕົວຫຼົບໜີໄປພ້ອມກັບ A ແລະ B. ເມື່ອກັບໄປຮອດເຮືອນຂອງ ຕົນແລ້ວ A ກໍໄດ້ແບ່ງເງິນ 10.000.000 ກີບ ແລະ 1.000 ໂດລາໃຫ້ B, ແລະ ແບ່ງເງິນ 1.000.000 ກີບ ໃຫ້ C, ແລ້ວເອົາສ່ວນທີ່ເຫຼືອ 39.000.000 ກີບ ແລະ 9.000 ໂດລານັ້ນເກັບໄວ້ເປັນຂອງຕົນ. ກໍລະນີ ຕົວຢ່າງນີ້ຈະຖືວ່າ A, B ແລະ C ຢູ່ໃນຖານະໃດ (ຕົວການ, ຜູ້ປະຕິບັດ, ຜູ້ຍຸຍົງ ແລະ ຜູ້ສົມຮູ້ຮ່ວມຄິດ).

ກໍລະນີສຶກສາຕົວຢ່າງຂ້າງເທິງນີ້ຖ້າວ່າເບິ່ງອີກມຸມໜຶ່ງກໍລະນີ ປຸ້ນຊັບຜູ້ທີ່ມີພຶດຕິກຳບັງຄັບ, ນາບຂູ່ຈຶ່ງຖືວ່າເປັນຜູ້ປະຕິບັດໄດ້. ດັ່ງນັ້ນ, A ເປັນຕົວການ, B ເປັນຜູ້ປະຕິບັດ, ສ່ວນ C ທີ່ເຝົ້າປະຕູເປັນຜູ້ສົມຮູ້ຮ່ວມ ຄິດ.

ການແບ່ງລະຫວ່າງຜູ້ປະຕິບັດ ແລະ ຜູ້ສົມຮູ້ຮ່ວມຄິດຈະແບ່ງ ແນວໃດນັ້ນຕ້ອງໄດ້ພິຈາລະນາແຕ່ລະປະເດັນໄປ, ການກະທຳຜິດໄດ້ ປະກອບສ່ວນຫຼາຍປານໃດ, ໄດ້ໄປກວດການ່ອນມື້ເກີດເຫດແນວໃດ ແຕ່ກໍ່ຍັງບໍ່ສາມາດຕັດສິນໄດ້, ພິຈາລະນາແຕ່ລະຄົນມີສ່ວນຮ່ວມລະດັບ ໃດ, ມີການວາງແຜນຄືແນວໃດ, ຢູ່ໃນກຸ່ມກ້ອນມີບົດບາດແນວໃດ, ແບ່ງປັນຜົນປະ�โຫຍດກັນຄືແນວໃດອີກດ້ວຍ.

ຈາກກໍລະນີດັ່ງກ່າວນີ້ຈະເຫັນວ່າບຸກຄົນໃດທີ່ເຂົ້າຮ່ວມການກະ ທຳຜິດຈາກການວາງແຜນຂອງຄົນອື່ນເຖິງວ່າຕົນຈະບໍ່ໄດ້ຮ່ວມວາງແຜນ ຫຼື ບໍ່ເຄີຍຮັບຮູ້ແຜນການນັ້ນມາກ່ອນກໍຕາມ ແຕ່ເຂົ້າຮ່ວມໃນລັກສະນະຄື ກັນກັບການກະທຳ ຫຼື ການປະຕິບັດກໍ່ໃຫ້ຖືວ່າບຸກຄົນຜູ້ນັ້ນເປັນ

ຜູ້ປະຕິບັດ ຊຶ່ງເປັນການຮ່ວມກັນກະທຳຜິດນັ້ນເອງ, A ເປັນຕົວການ, B ແລະ C ເປັນຜູ້ປະຕິບັດຈະມີຄວາມຜິດທາງອາຍາໃນຂໍ້ຫາການປຸ້ນຊັບ ໄດ້ເຊັ່ນກັນ.

ກໍລະນີສຶກສາຕົວຢ່າງທີ 7. A ຄິດຢາກໄດ້ເງິນຈຶ່ງໄດ້ວາງແຜນປຸ້ນ ຊັບໂດຍໄດ້ຊັກຊວນ B ຊຶ່ງເປັນລຸ້ນນ້ອງຂອງຕົນໄປປຸ້ນຊັບຢູ່ຮ້ານ ແລກປ່ຽນເງິນຕາຂອງ D. ໃນມື້ກໍ່ເຫດ A ໄດ້ຮ້ອງຂໍໃຫ້ C ຊຶ່ງເປັນຄົນຮູ້ ຈັກຂອງຕົນຂັບລົດໄປສິ່ງຢູ່ຮ້ານຂອງ D. C ໄດ້ຟັງຈາກ A ກ່ຽວກັບ ແຜນການໄປປຸ້ນຊັບດັ່ງກ່າວ ແຕ່ເມື່ອຖືກ A ບອກວ່າໃຫ້ຂັບລົດພາໄປ ໃກ້ໆຮ້ານຂອງ D ເທົ່ານັ້ນກໍພໍແລ້ວຈະມອບເງິນໃຫ້ 200 ໂດລາ, ຈຶ່ງໄດ້ ຕົກລົງໃຫ້ການຮ່ວມມື. A ແລະ B ໄດ້ຂຶ້ນລົດທີ່ C ຂັບນັ້ນໄປຮອດ ບໍລິເວນໃກ້ໆ ຮ້ານຂອງ D, ຈາກນັ້ນກໍໄດ້ລົງຈາກລົດ, ແລ້ວ A ກໍໄດ້ບອກ ໃຫ້ C ລໍຖ້າ. ຫຼັງຈາກນັ້ນ, A ແລະ B ກໍໄດ້ເຂົ້າໄປຮ້ານຂອງ D ແລ້ວໃຊ້ ມີດທີ່ກະກຽມມານັ້ນນາບຂູ່ D ແລະ ປຸ້ນໄດ້ເງິນ 50.000.000 ກີບ ແລະ 10.000 ໂດລາແລ້ວກໍເອົາຕົວຫຼົບໜີໄປ. A ແລະ B ໄດ້ຫຼົບໜີໄປຮອດ ບ່ອນທີ່ C ຈອດລົດຖ້າຢູ່ແລ້ວກໍຂຶ້ນລົດໃຫ້ C ພາຂັບໜີໄປເຮືອນຂອງ A. ເມື່ອຮອດເຮືອນແລ້ວ A ກໍໄດ້ເອົາເງິນຄ່າຕອບແທນຈຳນວນ 200 ໂດລາ ໃຫ້ C. ພ້ອມກັນນັ້ນກໍໄດ້ແບ່ງເງິນທີ່ປຸ້ນໄດ້ມານັ້ນຈຳນວນ 10.000.000 ກີບ ແລະ 3.000 ໂດລາ ໃຫ້ B, ແລ້ວເອົາສ່ວນທີ່ເຫຼືອຈຳນວນ 40.000.000 ກີບ ແລະ 6.800 ໂດລານັ້ນເກັບໄວ້ເປັນຂອງຕົນ.

ໃນກໍລະນີສຶກສາຕົວຢ່າງນີ້ C ຊ່ວຍເຮັດໃຫ້ສຳເລັດ ໝາຍຄວາມ ວ່າ C ບໍ່ໄດ້ເປັນສ່ວນໜຶ່ງກັບ A, B ມາແຕ່ຕົ້ນ ພຽງແຕ່ເຂົ້າຮ່ວມຍ້ອນ A ຂໍຮ້ອງເຖິງວ່າມື້ກໍ່ເຫດ C ຂັບລົດໄປໃກ້ໜ້າຮ້ານ, ເຝົ້າໜ້າຮ້ານ C ກໍຍັງ ເປັນຜູ້ສົມຮູ້ຮ່ວມຄິດຢູ່ ແຕ່ຖ້າວ່າ C ຄິດຢາກປຸ້ນເອງເຂົ້າຮ່ວມນຳ A, C ແມ່ນຈະເປັນຜູ້ປະຕິບັດເລີຍ, ຖ້າ C ຄິດວ່າການກະທຳຂອງ B ເປັນ

ການກະທຳຂອງຕົນເອງແລ້ວ C ຈະເປັນຜູ້ປະຕິບັດ ຊຶ່ງ A ເປັນຕົວການ, B ເປັນຜູ້ປະຕິບັດ, C ເປັນຜູ້ສົມຮູ້ຮ່ວມຄິດເປັນການຮ່ວມກັນກະທຳຜິດ ຈະມີຄວາມຜິດທາງອາຍາໃນຂໍ້ຫາຮ່ວມກັນປຸ້ນຊັບ.

ກໍລະນີສຶກສາຕົວຢ່າງທີ 8. A ໄດ້ຖືກ B ຂໍຢືມເງິນ ແຕ່ຕົນເອງ ກໍບໍ່ມີເງິນພໍທີ່ຈະໃຫ້ຜູ້ໃດຢືມ. A ເຫັນວ່າຮ້ານແລກປ່ຽນເງິນຕາຂອງ D ຊຶ່ງຢູ່ໃກ້ເຮືອນຂອງຕົນນັ້ນມີເງິນຫຼາຍຈຶ່ງໄດ້ເວົ້າກັບ B ວ່າ "ຢາກໄດ້ເງິນກໍ ໄປປຸ້ນເອົາຢູ່ຮ້ານຂອງ D ຫັ້ນເດ, ຍາມກາງຄືນແມ່ນມີແຕ່ D ຢູ່ຮ້ານຄົນ ດຽວ ແລະ ອີກຢ່າງ D ກໍເຖົ້າຫຼາຍແລ້ວຖ້າພຽງແຕ່ໃຊ້ມີດຂົ່ມຂູ່ຊື່ໆ ກໍສາມາດໄດ້ເງິນມາງ່າຍໆ". ເມື່ອໄດ້ຟັງແນວນັ້ນ B ກໍໄດ້ປະຕິບັດຕາມຄຳ ເວົ້າຂອງ A ໂດຍໄດ້ເຂົ້າໄປຮ້ານຂອງ D ໃນເວລາກາງຄືນແລ້ວໃຊ້ມີດນາບ ຂູ່ D ແລະ ປຸ້ນໄດ້ເງິນຈຳນວນ 10.000.000 ກີບມາ. ພາຍຫຼັງທີ່ປຸ້ນເອົາ ເງິນມາໄດ້ແລ້ວ B ກໍໄດ້ມອບເງິນ 1.000.000 ກີບ ໃຫ້ A ເປັນການຕອບ ແທນ.

ກໍລະນີສຶກສາຕົວຢ່າງນີ້ຈະເຫັນວ່າ A ເປັນຜູ້ຍຸຍົງ ຊຶ່ງປຸກລະດົມ, ຊີ້ບອກບ່ອນໃຫ້ B ໄປກະທຳຜິດ ແລະ ຍັງໄດ້ຮັບຜົນປະໂຫຍດສ່ວນໃດ ສ່ວນໜຶ່ງອີກ. ການບອກຂອງ A ແມ່ນຂຶ້ນກັບ B ເປັນຜູ້ຕັດສິນໃຈເອງ. B ເປັນຜູ້ປະຕິບັດ. A ແລະ B ເປັນການຮ່ວມກັນກະທຳຜິດຈະມີ ຄວາມຜິດທາງອາຍາໃນຂໍ້ຫາການປຸ້ນຊັບ.

ເຖິງຢ່າງໃດກໍຕາມຖ້າເປັນກໍລະນີດັດແກ້ກໍລະນີສຶກສາຕົວຢ່າງວ່າ A ເປັນຜູ້ເອົາມີດໃຫ້ B ໄປປຸ້ນ.

A ກໍຍັງຖືວ່າເປັນຜູ້ຍຸຍົງເພາະວ່າເປັນຜູ້ປຸກລະດົມຄົນອື່ນ, ຫ້າງຫາກະກຽມອຸປະກອນເຄື່ອງມື, ຊີ້ຈຸດໃຫ້ ແລະ ຍັງໄດ້ຮັບ ຜົນປະໂຫຍດສ່ວນໃດສ່ວນໜຶ່ງອີກ. A ມອບມີດໃຫ້ B ຂຶ້ນກັບ B ເປັນ

ຜູ້ຕັດສິນໃຈເອງວ່າຈະປຸ້ນ ຫຼື ບໍ່. ດັ່ງນັ້ນ, B ເປັນຜູ້ປະຕິບັດ ຊຶ່ງ A ແລະ B ເປັນການຮ່ວມກັນກະທຳຜິດຖານປຸ້ນຊັບນັ້ນເອງ.

ກໍລະນີສຶກສາຕົວຢ່າງທີ 9. A ແລະ B ວາງແຜນລັກພາໂຕ C ໄປຂົ່ມຂືນໃນຂະນະທີ່ C ພວມຍ່າງຢູ່ນັ້ນ, A ກັບ B ໄດ້ຊ່ວຍກັນໃຊ້ເຊືອກມັດ C ແລ້ວເອົາຂຶ້ນລົດຂອງ B ແລ້ວຂັບອອກໄປຫາສະຖານທີ່ທີ່ບໍ່ມີຜູ້ຄົນເຫັນ. ໃນລະຫວ່າງທາງນັ້ນ, A ໄດ້ເຫັນ C ຮ້ອງໄຫ້ເຮັດໃຫ້ຮູ້ສຶກອິດເມື່ອຍສົງສານຈຶ່ງໄດ້ເວົ້າກັບ B ວ່າ “ເຊົາເຮັດເລື່ອງນີ້ສາເທາະ”, ແລ້ວກໍລົງລົດໄປ. ແນວໃດກໍຕາມ, B ແມ່ນໄດ້ເອົາ C ໄປຂົ່ມຂືນຕາມແຜນທີ່ວາງໄວ້ຈົນສຳເລັດ. A ຈະຖືວ່າເປັນຜູ້ລົງມືຮ່ວມກັນກະທຳຜິດ ຫຼື ບໍ່.

ຈາກກໍລະນີສຶກສາຕົວຢ່າງຂ້າງເທິງນີ້ຈະເຫັນວ່າການກະທຳຂອງ A ຄືການຖອນຕົວອອກຈາກການກະທຳຜິດນີ້ແມ່ນຍັງຖືວ່າບໍ່ທັນໄດ້ຕັດຂາດອອກຈາກຄວາມສຳພັນຂອງເຫດການດັ່ງກ່າວເທື່ອ ເພາະວ່າຜົນຂອງການຖືກຂົ່ມຂືນຍັງເກີດຂຶ້ນຢູ່ຈົນເຖິງຂັ້ນສຳເລັດຜົນ ຊຶ່ງ A ກໍ່ບໍ່ໄດ້ຕໍ່ສູ້ຊ່ວຍ C ແລະ ບໍ່ໄດ້ໄປແຈ້ງຕໍ່ເຈົ້າໜ້າທີ່ໃຫ້ມາຊ່ວຍຫຼຸດພົ້ນຈາກການຖືກຂົ່ມຂືນໃນຄັ້ງນີ້ ກໍ່ຖືວ່າຍັງເປັນເປັນການຮ່ວມກັນກະທຳຜິດໃນເບື້ອງຕົ້ນຢູ່. ດັ່ງນັ້ນ, A ຍັງເປັນຜູ້ຮ່ວມກັນກະທຳຜິດຖານຂົ່ມຂືນທຳຊຳເລົ້າຢູ່.

ບົດທີ 13
ຂອບເຂດການນຳໃຊ້ກົດໝາຍອາຍາທາງດ້ານພື້ນທີ່

ປະມວນກົດໝາຍອາຍາຂອງ ສປປ ລາວ ກຳນົດຂອບເຂດການນຳໃຊ້ກົດໝາຍອາຍາທາງດ້ານພື້ນທີ່ໄວ້ 2 ກໍລະນີຄື: ການກະທຳຜິດທາງອາຍາຢູ່ໃນດິນແດນຂອງ ສປປ ລາວ ແລະ ການກະທຳຜິດທາງອາຍາຢູ່ນອກດິນແດນຂອງ ສປປ ລາວ.

1. ການກະທຳຜິດທາງອາຍາຢູ່ໃນດິນແດນຂອງ ສປປ ລາວ

ການກະທຳຜິດທາງອາຍາຢູ່ໃນດິນແດນຂອງ ສປປ ລາວ ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາມາດຕາ 8 ວັກ 1 ว่า ກົດໝາຍອາຍານຳໃຊ້ຕໍ່ທຸກການກະທຳຜິດທາງອາຍາທີ່ເກີດຂຶ້ນໃນດິນແດນຂອງ ສປປ ລາວ.

ຈາກການກຳນົດຂອງກົດໝາຍດັ່ງກ່າວຈະເຫັນການກະທຳ ແລະ ຜົນຈາກການກະທຳຕ້ອງເກີດຂຶ້ນຢູ່ໃນດິນແດນຂອງ ສປປ ລາວ ເທົ່ານັ້ນ ຈຶ່ງຈະຢູ່ໃນການຄວບຄຸມຂອງກົດໝາຍໄດ້ ແຕ່ຖ້າຕີຄວາມໝາຍຂອງມາດຕາ 8 ວັກ 1 ເທິງນີ້ຈະເຮັດໃຫ້ການຕີຄວາມໝາຍມາດຕາດັ່ງກ່າວແຄບລົງ ແລະ ບໍ່ສາມາດນຳໃຊ້ກົດໝາຍອາຍາໃຊ້ບັງຄັບໃນບາງກໍລະນີທີ່ການກະທຳຜິດຢູ່ນອກດິນແດນຂອງ ສປປ ລາວ ແຕ່ຜົນເກີດຂຶ້ນຢູ່ໃນດິນແດນຂອງ ສປປ ລາວ ໄດ້ ຫຼື ຜູ້ກະທຳຜິດຫຼັກໄດ້ກະທຳຜິດຢູ່ໃນດິນແດນຂອງ ສປປ ລາວ ແຕ່ຜູ້ຮ່ວມມືກະທຳຜິດອື່ນຢູ່ນອກດິນແດນຂອງ ສປປ ລາວ ຫຼື ກໍລະນີກົງກັນຂ້າມກັນ.

ເຖິງຢ່າງໃດກໍຕາມການກະທຳໃດໜຶ່ງຈະມີຄວາມໝາຍວ່າເປັນການກະທຳຜິດທາງອາຍາໄດ້ນັ້ນກໍຕ້ອງລວມເອົາທັງການກະທຳ ແລະ ຜົນທີ່ເກີດຂຶ້ນຈາກການກະທຳນັ້ນ.

ດັ່ງນັ້ນ, ປະມວນກົດໝາຍອາຍາມາດຕາ 8 ວັກ 1 ຈຶ່ງຄວບຄຸມ ເອົາການກະທຳໃດໜຶ່ງວ່າເປັນການກະທຳຜິດທາງອາຍາໄດ້ກໍຕໍ່ເມື່ອການ ກະທຳດັ່ງກ່າວນອກຈາກຈະມີການກະທຳ ແລະ ຜົນເກີດຂຶ້ນຢູ່ໃນດິນແດນ ຂອງ ສປປ ລາວ ແລ້ວຍັງລວມເຖິງການກະທຳຢູ່ນອກດິນແດນຂອງ ສປປ ລາວ ແຕ່ຜົນມາເກີດຢູ່ໃນດິນແດນຂອງ ສປປ ລາວ ກໍໃຫ້ຖືວ່າເປັນການ ກະທຳຜິດທາງອາຍາຢູ່ໃນດິນແດນຂອງ ສປປ ລາວ ເຊັ່ນກັນ ດັ່ງກໍລະນີ ສຶກສາລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 1. A ມີເຈດຕະນາຈະຂ້າ B, ດັ່ງນັ້ນ A ຈຶ່ງໄດ້ວາງຢາພິດໃສ່ຈອກກະເຟຂອງ B ຊຶ່ງເຫດການດັ່ງກ່າວເກີດຂຶ້ນ ໃນປະເທດໄທກ່ອນທີ່ B ຈະຂຶ້ນຍົນເພື່ອເດີນທາງມາປະເທດລາວ. ໃນລະຫວ່າງທີ່ B ກຳລັງຂີ່ຍົນເດີນທາງມາຍັງປະເທດລາວນັ້ນ, ຢາພິດໃນ ຮ່າງກາຍຂອງ B ໄດ້ເລີ່ມອອກລິດ ແລະ ໃນທີ່ສຸດ B ກໍ່ໄດ້ເສຍຊີວິດລົງ ໃນປະເທດລາວ.

ຈາກກໍລະນີສຶກສາຕົວຢ່າງນີ້ສະແດງໃຫ້ເຫັນວ່າການກະທຳຂອງ A ທັງໝົດແມ່ນເກີດຂຶ້ນຢູ່ນອກດິນແດນຂອງ ສປປ ລາວ ແຕ່ຜົນຈາກ ການກະທຳນັ້ນມາເກີດຢູ່ໃນດິນແດນຂອງ ສປປ ລາວ. ເມື່ອອີງໃສ່ທິດສະ ດີທີ່ໄດ້ກ່າວມາຂ້າງເທິງທີ່ກຳນົດວ່າມີພຽງແຕ່ການກະທຳ ຫຼື ມີພຽງແຕ່ຜົນ ເສຍຫາຍເກີດຂຶ້ນຢູ່ໃນດິນແດນຂອງ ສປປ ລາວ ກໍໃຫ້ຖືວ່າເປັນການກະ ທຳຜິດທາງອາຍາຢູ່ໃນດິນແດນຂອງ ສປປ ລາວ. ດັ່ງນັ້ນ, ຈຶ່ງຖືໄດ້ວ່າການ ກະທຳຂອງ A ເປັນການກະທຳຜິດຢູ່ໃນດິນແດນຂອງ ສປປ ລາວ ຕາມ ມາດຕາ 8 ວັກ 1 ໄດ້ເນື່ອງຈາກວ່າຜົນຈາກການກະທຳຂອງ A ໄດ້ເກີດຢູ່ ໃນດິນແດນຂອງ ສປປ ລາວ.

ນອກຈາກນີ້ໃນກໍລະນີທີ່ຜູ້ກະທຳຜິດຫຼັກໄດ້ກະທຳຜິດຢູ່ໃນ ດິນແດນຂອງ ສປປ ລາວ ແຕ່ຜູ້ຮ່ວມມືກະທຳຜິດອື່ນຢູ່ນອກດິນແດນຂອງ

ສປປ ລາວ, ການກະທຳຂອງຜູ້ຮ່ວມມືກະທຳຜິດອື່ນກໍຖືວ່າເປັນການກະທຳໃນດິນແດນຂອງ ສປປ ລາວ ເຊັ່ນກັນ ດັ່ງກໍລະນີສຶກສາຕົວຢ່າງດັ່ງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 2. A ເປັນຄົນໄທ ແລະ ດຳລົງຊີວິດຢູ່ປະເທດໄທໄດ້ຖືກ B ທີ່ເປັນຄົນໄທ ແລະ ດຳລົງຊີວິດຢູ່ປະເທດໄທເໝືອນກັນຊວນເຂົ້າຮ່ວມການປຸ້ນຊັບຢູ່ປະເທດລາວ ແລະ A ກໍຕົກລົງວ່າຈະເຂົ້າຮ່ວມການກະທຳຜິດໃນຄັ້ງນີ້ໂດຍທີ່ A ໄດ້ຕົກລົງວ່າພາຍຫຼັງທີ່ B ເຂົ້າມາປຸ້ນຊັບຢູ່ປະເທດລາວສຳເລັດ ແລະ ກັບຄືນໄປປະເທດໄທແລ້ວ ຕົນຈະເປັນຜູ້ຊຸກເຊື່ອງລົດທີ່ໄດ້ນຳໃຊ້ເຂົ້າໃນການກະທຳຜິດຄັ້ງນີ້. ໃນມື້ກະທຳຜິດ B ໄດ້ເຂົ້າມາປຸ້ນຊັບຢູ່ລາວຈົນສຳເລັດ ແລະ ກັບຄືນໄປປະເທດໄທ, ເມື່ອຮອດປະເທດໄທແລ້ວ A ກໍໄດ້ຊຸກເຊື່ອງລົດຂອງ B ທີ່ນຳໃຊ້ເຂົ້າໃນການປຸ້ນຊັບຢູ່ລາວນັ້ນໄວ້ຕາມທີ່ໄດ້ຕົກລົງກັນ. ໃນກໍລະນີສຶກສາຕົວຢ່າງນີ້ເຫັນວ່າການກະທຳຂອງ A ຖືວ່າເປັນການກະທຳຜິດໃນດິນແດນຂອງ ສປປ ລາວ ເຊັ່ນກັນ.

ກໍລະນີກົງກັນຂ້າມ ຖ້າຜູ້ກະທຳຜິດຫຼັກໄດ້ກະທຳຜິດຢູ່ນອກດິນແດນຂອງ ສປປ ລາວ ແຕ່ຜູ້ຮ່ວມມືກະທຳຜິດອື່ນຢູ່ໃນດິນແດນຂອງ ສປປ ລາວ, ການກະທຳຂອງຜູ້ຮ່ວມມືກະທຳຜິດອື່ນກໍຖືວ່າເປັນການກະທຳໃນດິນແດນຂອງ ສປປ ລາວ ໄດ້ເຊັ່ນກັນດັ່ງກໍລະນີສຶກສາຕົວຢ່າງດັ່ງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 3. A ເປັນຄົນໄທ ແລະ ດຳລົງຊີວິດຊົ່ວຄາວຢູ່ປະເທດລາວໄດ້ຖືກ B ທີ່ເປັນຄົນໄທ ແລະ ດຳລົງຊີວິດຢູ່ປະເທດລາວຊົ່ວຄາວເໝືອນກັນຊັກຊວນໃຫ້ເຂົ້າຮ່ວມໃນການປຸ້ນຊັບຢູ່ປະເທດໄທ ແລະ A ກໍຕົກລົງວ່າຈະເຂົ້າຮ່ວມການກະທຳຜິດໃນຄັ້ງນີ້ໂດຍທີ່ A ໄດ້ຕົກລົງວ່າພາຍຫຼັງທີ່ B ເຂົ້າໄປປຸ້ນຊັບຢູ່ປະເທດໄທສຳເລັດ

ແລະ ກັບຄືນມາປະເທດລາວແລ້ວ ຕົນຈະເປັນຜູ້ຊຸກເຊື່ອງລົດທີ່ໄດ້ນຳໃຊ້ເຂົ້າໃນການກະທຳຜິດຄັ້ງນີ້. ໃນມື້ກະທຳຜິດ B ໄດ້ເຂົ້າໄປປຸ້ນຊັບຢູ່ປະເທດໄທຈີນສຳເລັດ ແລະ ກັບຄືນມາປະເທດລາວ. ເມື່ອກັບຄືນມາຮອດປະເທດລາວແລ້ວ A ກໍໄດ້ຊຸກເຊື່ອງລົດຂອງ B ທີ່ໄດ້ໃຊ້ເຂົ້າໃນການປຸ້ນຊັບຢູ່ປະເທດໄທນັ້ນໄວ້ຕາມທີ່ໄດ້ຕົກລົງກັນ. ໃນກໍລະນີສຶກສາຕົວຢ່າງນີ້ເຫັນວ່າການກະທຳຂອງ B ກໍຄືການປຸ້ນຊັບເປັນການກະທຳຜິດຫຼັກໄດ້ເກີດຂຶ້ນຢູ່ນອກດິນແດນຂອງ ສປປ ລາວ ກໍຕາມ ແຕ່ການກະທຳຂອງ A ກໍຖືວ່າເປັນການກະທຳຜິດໃນດິນແດນຂອງ ສປປ ລາວ ເຊັ່ນດຽວກັນ.

2. ການກະທຳຜິດທາງອາຍາຢູ່ນອກດິນແດນຂອງ ສປປ ລາວ

ການໃຫ້ຖືວ່າຄົນຕ່າງປະເທດທີ່ໄດ້ກະທຳຜິດຢູ່ນອກດິນແດນຂອງ ສປປ ລາວ ຈະມີຄວາມຮັບຜິດຊອບທາງອາຍາຕາມປະມວນກົດໝາຍອາຍາຂອງ ສປປ ລາວ ນັ້ນໄດ້ກຳນົດໄວ້ໃນມາດຕາ 9 ວັກ 3 ຂອງປະມວນກົດໝາຍອາຍາວ່າ ຄົນຕ່າງປະເທດທີ່ໄດ້ກະທຳຜິດຢູ່ນອກດິນແດນຂອງ ສປປ ລາວ ຊຶ່ງແຕະຕ້ອງເຖິງຜົນປະ�โຫຍດຂອງ ສປປ ລາວ, ສິດ ແລະ ຜົນປະโຫຍດອັນຊອບທຳຂອງພົນລະເມືອງລາວກໍຈະຮັບຜິດຊອບທາງອາຍາຕາມປະມວນກົດໝາຍອາຍາຂອງ ສປປ ລາວ ເຊັ່ນດຽວກັນ.

ຄົນຕ່າງປະເທດທີ່ໄດ້ກະທຳຜິດທາງອາຍາຢູ່ນອກດິນແດນຂອງ ສປປ ລາວ ແລະ ຈະຮັບຜິດຊອບທາງອາຍາຕາມປະມວນກົດໝາຍອາຍາຂອງ ສປປ ລາວ ໄດ້ນັ້ນຕ້ອງໄດ້ພິຈາລະນາ 1 ໃນ 2 ກໍລະນີດັ່ງນີ້:

1). ການກະທຳຜິດນັ້ນແຕະຕ້ອງເຖິງຜົນປະโຫຍດຂອງ ສປປ ລາວ ຫຼື ບໍ່;

2). ການກະທຳນັ້ນແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງລາວ ຫຼື ບໍ່ ດັ່ງກໍລະນີສຶກສາຕົວຢ່າງດັ່ງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 4. A ເປັນພະນັກງານລັດຄົນລາວ ໄດ້ເດີນທາງໄປປະເທດສິງກະ�โปแล้อได้ถืก B ທີ່ເປັນຄົນສິງກະ�โปร้อง ຂໍບໍ່ໃຫ້ປະຕິບັດໜ້າທີ່ໃດໜຶ່ງຂອງຕົນດ້ວຍການເອົາເງິນໃຫ້ຈຳນວນ 10.000 ໂດລາ (ໜຶ່ງໝື່ນໂດລາສະຫະລັດ) ເພື່ອເປັນຄ່າຕອບແທນ ແລະ A ກໍໄດ້ຮັບເອົາເງິນສິນບົນຈຳນວນດັ່ງກ່າວ.

ໃນກໍລະນີສຶກສາຕົວຢ່າງນີ້ເມື່ອພິຈາລະນາແລ້ວເຫັນວ່າການກະທຳຂອງ B ທີ່ເປັນຄົນຕ່າງປະເທດ ແລະ ໄດ້ກະທຳຜິດທາງອາຍາສະຖານດັ່ງກ່າວຢູ່ນອກດິນແດນຄືໄດ້ກະທຳຜິດທາງອາຍາຢູ່ປະເທດສິງກະ�โปถือว่าเป็นการกะทำที่แตะต้องเถิงผินปะโหยดของ ສປປ ລາວ. ດັ່ງນັ້ນ, ການກະທຳຂອງ B ຈຶ່ງຕ້ອງຮັບຜິດຊອບທາງອາຍາຕາມມາດຕາ 9 ວັກ 3 ຂອງປະມວນກົດໝາຍອາຍາຂອງ ສປປ ລາວ.

ເຖິງຢ່າງໃດກໍຕາມຄຳว่า “ຜົນປະ�โหยดของ ສປປ ลาว ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງລາວ” ທີ່ການກະທຳຜິດໄດ້ແຕະຕ້ອງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ວັກ 3 ຂອງປະມວນກົດໝາຍອາຍານີ້ເປັນບັນຫາທາງດ້ານກົດໝາຍທີ່ຈະຕ້ອງໄດ້ຕີຄວາມ ເພາະວ່າປະມວນກົດໝາຍອາຍາບໍ່ໄດ້ກຳນົດຈະແຈ້ງว่า “ຜົນປະໂຫຍດ ຂອງ ສປປ ລາວ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ລາວ” ລວມມີການກະທຳຜິດສະຖານໃດແດ່.

ດັ່ງນັ້ນ, ເພື່ອໃຫ້ເກີດຄວາມຊັດເຈນ ແລະ ການພິຈາລະນາ ລົງโทดผู้กะทำผิดได้ย่างถืกต้อง, เป็นทำนั้น, ถะนะถิ้นถอ้า ປະມວນກົດໝາຍອາຍາຈຶ່ງສະເໜີໃຫ້ອົງການທີ່ກ່ຽວຂ້ອງໃນການປັບປຸງ

ແກ້ໄຂກົດໝາຍໄດ້ເປັນບ່ອນອີງໃນການປັບປຸງແກ້ໄຂປະມວນກົດໝາຍອາຍາ ໃນອະນາຄົດວ່າການກະທຳຜິດອັນໃດທີ່ເປັນຜົນປະ�โຫຍດຂອງ ສປປ ລາວ ຫຼື ເປັນສິດ ແລະ ຜົນປະโຫຍດອັນຊອບທຳຂອງພົນລະເມືອງ ລາວນັ້ນ, ກົດໝາຍກໍຄວນກຳນົດໄວ້ໃຫ້ຊັດເຈນເລີຍ.

ບົດທີ 14
ອາຍຸຄວາມໃນການຮ້ອງຟ້ອງທາງອາຍາ

1. ຄວາມໝາຍຂອງອາຍຸຄວາມໃນການຮ້ອງຟ້ອງທາງອາຍາ

ອາຍຸຄວາມໃນການຮ້ອງຟ້ອງທາງອາຍຸແມ່ນການກຳນົດເວລາອັນແນ່ນອນໃດໜຶ່ງທີ່ລະບຸໄວ້ໃນປະມວນກົດໝາຍອາຍາເພື່ອໃຫ້ບຸກຄົນທີ່ກ່ຽວຂ້ອງ ຫຼື ໃຫ້ອົງການທີ່ມີສິດອຳນາດເຄື່ອນໄຫວດຳເນີນຄະດີອາຍາໄດ້ທຳການຮ້ອງຟ້ອງທາງອາຍາໃຫ້ຖືກຕ້ອງຕາມກຳນົດເວລາ. ຖ້າການກຳນົດເວລາດັ່ງກ່າວການຮ້ອງຟ້ອງທາງອາຍາຈະບໍ່ຖືກພິຈາລະນາ ແລະ ໃນກໍລະນີທີ່ໄດ້ມີການດຳເນີນຄະດີມາແລ້ວຄະດີອາຍາດັ່ງກ່າວກໍຈະຖືກຊັດມ້ຽນໄວ້ໄດ້.

ອາຍຸຄວາມໃນການຮ້ອງຟ້ອງທາງອາຍາແມ່ນກຳນົດເວລາທີ່ກົດໝາຍກຳນົດໄວ້ເພື່ອໃຫ້ຜູ້ກະທຳຜິດຮັບຮູ້ວ່າຕົນຈະຖືກດຳເນີນຄະດີໃນເວລາໃດ, ຜູ້ຖືກເສຍຫາຍຈະເລີ່ມຮ້ອງຟ້ອງ ແລະ ສິ້ນສຸດສິດໃນການຮ້ອງຟ້ອງຕໍ່ອົງການທີ່ມີສິດອຳນາດໃນການດຳເນີນຄະດີໃນເວລາໃດ ແລະ ເຈົ້າໜ້າທີ່ສືບສວນ-ສອບສວນຈະນຳເອົາຄະດີນັ້ນມາພິຈາລະນາໃນເວລາໃດ, ຖ້າການກຳນົດເວລາດັ່ງກ່າວແລ້ວຄະດີອາຍານັ້ນຈະບໍ່ຖືກນຳມາພິຈາລະນາ ແລະ ຈະບໍ່ສ້າງຄວາມຫຍຸ້ງຍາກໃຫ້ແກ່ເຈົ້າໜ້າທີ່ສືບສວນ-ສອບສວນ ໝາຍຄວາມວ່າຖ້າກົດໝາຍຫາກບໍ່ໄດ້ກຳນົດອາຍຸຄວາມໃນການຮ້ອງຟ້ອງທາງອາຍາເອົາໄວ້ຈະເຮັດໃຫ້ຜູ້ກະທຳຜິດບໍ່ມີຄວາມສະຫງົບສຸກໃນການດຳລົງຊີວິດເພາະວ່າຈະເກີດມີຄວາມກັງວົນວ່າຕົນຈະຖືກຮ້ອງຟ້ອງໄດ້ທຸກເວລາໃນຕະຫຼອດຊີວິດຂອງຕົນ ແລະ ຈະເປັນການສ້າງຄວາມຫຍຸ້ງຍາກ ແລະ ເຮັດໃຫ້ເຈົ້າໜ້າທີ່ຕ້ອງໄດ້ນຳເອົາຄະດີນັ້ນມາ

ພິຈາລະນາໂດຍບໍ່ມີມື້ສິ້ນສຸດຈັກເທື່ອໄດ້. ສະນັ້ນ, ກົດໝາຍຈຶ່ງໄດ້ກຳນົດອາຍຸຄວາມໃນການຮ້ອງຟ້ອງທາງອາຍາເອົາໄວ້.

2. ປະເພດຂອງອາຍຸຄວາມໃນການຮ້ອງຟ້ອງທາງອາຍາ

ປະມວນກົດໝາຍອາຍາໄດ້ກຳນົດອາຍຸຄວາມໃນການຮ້ອງຟ້ອງທາງອາຍາແຕ່ລະສະຖານຂອງການກະທຳຜິດ ເອົາໄວ້ດັ່ງນີ້:

1). ໜຶ່ງປີ ໃນສະຖານການກະທາຜິດລະຫຸໂທດ;

2). ເຈັດປີ ໃນສະຖານການກະທາຜິດໂທສານຸໂທດ;

3). ສິບຫ້າປີ ໃນສະຖານການກະທາຜິດຄະຣຸໂທດ.

ເຫັນວ່າກົດໝາຍໄດ້ກຳນົດອາຍຸຄວາມໃນການຮ້ອງຟ້ອງທາງອາຍາແມ່ນກຳນົດຕາມສະຖານຂອງການກະທຳຜິດ. ເຖິງຢ່າງໃດກໍ່ຕາມ ພາຍຫຼັງທີ່ອົງການໄອຍະການໄດ້ສັ່ງຟ້ອງຜູ້ຖືກຫາຂຶ້ນສານແລ້ວ, ອາຍຸຄວາມໃນການຮ້ອງຟ້ອງຈະຖືກຢຸດຕິໃນການນັບທັນທີ.

ບຸກຄົນໃດທີ່ໄດ້ກະທຳຜິດ ແລະ ບໍ່ໄດ້ຖືກຮ້ອງຟ້ອງ ຫຼື ບໍ່ໄດ້ຖືກນຳມາດຳເນີນຄະດີໃນກຳນົດເວລາດັ່ງກ່າວແລ້ວບຸກຄົນຜູ້ນັ້ນກໍ່ຈະບໍ່ຖືກນຳມາດຳເນີນຄະດີອີກຕໍ່ໄປ ຫຼື ໃນກໍລະນີທີ່ຄະດີໄດ້ດຳເນີນມາແລ້ວ ແລະ ຖ້າຫາກເຫັນວ່າ ກຳນົດເວລາດັ່ງກ່າວໄດ້ໝົດໄປແລ້ວຄະດີນັ້ນກໍ່ຈະຖືກຊັດມ້ຽນໄວ້ເຊັ່ນກັນ.

3. ການນັບອາຍຸຄວາມໃນການຮ້ອງຟ້ອງທາງອາຍາ

ຕາມປະມວນກົດໝາຍອາຍາແລ້ວ, ອາຍຸຄວາມໃນການຮ້ອງຟ້ອງທາງອາຍາແມ່ນໃຫ້ນັບຕາມແຕ່ລະກໍລະນີດັ່ງນີ້:

1). ນັບແຕ່ວັນທີ່ໄດ້ກະທາຜິດເປັນຕົ້ນໄປ;

2). ໃນກໍລະນີທີ່ໄດ້ມີການກະທາຜິດເທື່ອໃໝ່ພາຍໃນກຳນົດເວລາອາຍຸຄວາມຂອງການກະທຳຜິດເທື່ອກ່ອນນັ້ນ ອາຍຸຄວາມໃນການຮ້ອງຟ້ອງດັ່ງກ່າວໃຫ້ນັບແຕ່ວັນໄດ້ກະທຳຜິດເທື່ອໃໝ່ເປັນຕົ້ນໄປ;

3). ໃນກໍລະນີທີ່ໄດ້ຫຼົບຫຼີກຈາກການດາເນີນຄະດີຈະນັບແຕ່ວັນຜູ້ກະທຳຜິດໄດ້ເຂົ້າສະເໜີຕົວ ຫຼື ຖືກຈັບຕົວເປັນຕົ້ນໄປ.

3.1. ການນັບອາຍຸຄວາມໃນການຮ້ອງຟ້ອງທາງອາຍານັບແຕ່ວັນໄດ້ກະທຳຜິດເປັນຕົ້ນໄປ

ການນັບອາຍຸຄວາມໃນການຮ້ອງຟ້ອງທາງອາຍາໃຫ້ນັບແຕ່ວັນທີ່ໄດ້ກະທຳຜິດເປັນຕົ້ນໄປນີ້ໝາຍເຖິງວັນທີ, ເດືອນ, ປີຂອງບຸກຄົນໃດໜຶ່ງໄດ້ກະທຳຜິດທີ່ເປັນອັນຕະລາຍ ຫຼື ສ້າງຄວາມເສຍຫາຍໃຫ້ແກ່ບຸກຄົນອື່ນ ຫຼື ສັງຄົມຊຶ່ງການກະທຳຜິດດັ່ງກ່າວເປັນການກະທຳຜິດທີ່ສົ່ງຜົນສະທ້ອນໃນທັນທີທັນໃດ ແຕ່ການກະທຳຜິດທີ່ມີລັກສະນະແກ່ຍາວຕໍ່ເນື່ອງ ຫຼື ການກະທຳຜິດທີ່ສົ່ງຜົນສະທ້ອນປະກົດຂຶ້ນຊ້າ, ໃນກໍລະນີນີ້ໃຫ້ຖືວ່າວັນການກະທຳຜິດສິ້ນສຸດ ຫຼື ວັນກະທຳຜິດສຳເລັດຍັງເປັນວັນກະທຳຜິດຢູ່. ສະນັ້ນ, ອາຍຸຄວາມໃນການຮ້ອງຟ້ອງທາງອາຍາໃຫ້ນັບແຕ່ມື້ສິ້ນສຸດການກະທຳຜິດເປັນຕົ້ນໄປດັ່ງກໍລະນີສຶກສາຕົວຢ່າງດັ່ງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 1. A ມີຄຽດແຄ້ນຕໍ່ B ທີ່ມັກເວົ້າ ດູຖູກຕົນຈຶ່ງຄິດຢາກກັກຂັງ B ໄວ້ໃນສາງເກັບເຄື່ອງ. ດັ່ງນັ້ນ, ໃນວັນທີ 1 ກໍລະກົດ 2019, A ໄດ້ຈັບຕົວ B ແລ້ວໃຊ້ເຊືອກມັດໄວ້ແລ້ວນຳໄປຂັງໄວ້ໃນສາງເກັບເຄື່ອງຂອງຕົນໂດຍໄດ້ລ່ອກກະແຈໄວ້ ແຕ່ໃນລະຫວ່າງການກັກຂັງ A ໄດ້ເອົາເຂົ້າ ແລະ ນ້ຳໃຫ້ກັບ B ກິນ. ວັນທີ 1 ສິງຫາ 2019, B ໄດ້ກ່າວຂໍໂທດ A ແລະ ຂໍໃຫ້ A ປ່ອຍຕົນໄປ. A ຮູ້ສຶກເຊົ້າ

ຄຽດຕໍ່ B ຈຶ່ງໄດ້ປ່ອຍ B ໄປ. ອາຍຸຄວາມໃນຮ້ອງຟ້ອງທາງອາຍາຈະນັບແຕ່ວັນທີ, ເດືອນ, ປີ ໃດເປັນຕົ້ນໄປ.

ການກັກຂັງບຸກຄົນອື່ນໂດຍບໍ່ຖືກຕ້ອງຕາມກົດໝາຍເຫັນວ່າເປັນການກະທຳຜິດຕໍ່ປະມວນກົດໝາຍອາຍາ ມາດຕາ 217 ໃນສະຖານການຈັບຕົວ, ການກັກຕົວ ຫຼື ການກັກຂັງໂດຍບໍ່ຖືກຕ້ອງຕາມກົດໝາຍ ຖືວ່າເປັນການກະທຳທີ່ລະເມີດສິດ ແລະ ເສລີພາບຂອງບຸກຄົນອື່ນ, ການທີ່ A ມີຄວາມຄຽດແຄ້ນຕໍ່ B ທີ່ມັກເວົ້າດູຖູກຕົນຈຶ່ງໄດ້ໄປຈັບຕົວ B ແລ້ວໃຊ້ເຊືອກມັດໄວ້ ແລະ ນຳໄປຂັງໄວ້ໃນສາງເກັບເຄື່ອງຂອງຕົນໂດຍໄດ້ລ່ອກກະແຈໄວ້ຕັ້ງແຕ່ວັນທີ 1 ກໍລະກົດ 2019 ຈົນເຖິງວັນທີ 1 ສິງຫາ 2019 ຈຶ່ງໄດ້ປ່ອຍຕົວ B ນັ້ນເຫັນວ່າເຮັດໃຫ້ B ເສຍສິດ ແລະ ເສລີພາບໃນການດຳລົງຊີວິດຢູ່ໃນສັງຄົມ ນັບແຕ່ວັນທີ 1 ກໍລະກົດ 2019 ເຖິງວັນທີ 1 ສິງຫາ 2019 ຊຶ່ງການກະທາດັ່ງກ່າວເປັນການກະທາທີ່ມີລັກສະນະແກ່ຍາວຕໍ່ເນື່ອງລຽນຕິດເປັນເວລາ 31 ວັນ ແລ້ວປ່ອຍຜູ້ກ່ຽວໃນວັນທີ 1 ສິງຫາ 2019 ຊຶ່ງເປັນວັນສິ້ນສຸດການກະທາຜິດຂອງຕົນໃນການກັກຂັງ B.

ຕາມທີ່ໄດ້ອະທິບາຍໃນຂ້າງເທິງນັ້ນວ່າການກະທຳຜິດທີ່ມີລັກສະນະແກ່ຍາວຕໍ່ເນື່ອງວັນສິ້ນສຸດການກະທຳຜິດໃຫ້ຖືວ່າຍັງເປັນວັນກະທຳຜິດຢູ່. ສະນັ້ນ, ອາຍຸຄວາມໃນການຮ້ອງຟ້ອງທາງອາຍາຕໍ່ກັບ A ແມ່ນໃຫ້ນັບແຕ່ວັນທີ 1 ສິງຫາ 2019 ເປັນຕົ້ນ.

ກໍລະນີສຶກສາຕົວຢ່າງທີ 2. A ໄດ້ມີການໂຕ້ຖຽງກັບ B ໃນວັນທີ 10 ຕຸລາ 2020 ແລະ ມີການລົງມືຕີກັນ A ໄດ້ຕີ B ເຮັດໃຫ້ B ໄດ້ຮັບບາດເຈັບຮຸນແຮງຈົນຖືກນຳຕົວສົ່ງໂຮງໝໍ, ຕໍ່ມາອາການຂອງ B ຮ້າຍແຮງຂຶ້ນກ່ອນເກົ່າຈົນໃນທີ່ສຸດກໍໄດ້ເສຍຊີວິດລົງໃນວັນທີ 3 ພະຈິກ 2020. ອາຍຸຄວາມຮ້ອງຟ້ອງທາງອາຍາຈະນັບແຕ່ວັນທີ, ເດືອນ, ປີໃດເປັນຕົ້ນໄປ.

ການທີ່ A ໄດ້ມີການຜິດຖຽງກັນກັບ B ແລະ ມີການລົງມືຕີກັນ. A ໄດ້ຕີ B ເຮັດໃຫ້ B ໄດ້ຮັບບາດເຈັບຮຸນແຮງໃນວັນທີ 10 ຕຸລາ 2020 ຈົນຖືກນຳຕົວສົ່ງໂຮງໝໍຕໍ່ມາອາການຂອງ B ຮ້າຍແຮງກ່ອນເກົ່າແລ້ວເສຍຊີວິດໃນວັນທີ 3 ພະຈິກ 2020 ຕໍ່ມານັ້ນເຫັນວ່າການກະທຳຂອງ A ເປັນການກະທຳທີ່ເປັນອັນຕະລາຍ ແລະ ສ້າງຄວາມເສຍຫາຍໃຫ້ແກ່ສຸຂະພາບ ແລະ ຊີວິດຂອງ B ຊຶ່ງເປັນການກະທາຜິດຕາມມາດຕາ 194 ວັກ 3 ຂອງປະມວນກົດໝາຍອາຍາສະຖານການທຳຮ້າຍຮ່າງກາຍ ແລະ ລັກສະນະຂອງການກະທຳຜິດດັ່ງກ່າວເປັນການກະທຳທີ່ພາໃຫ້ເກີດຜົນຊ້າ ຫຼື ຜົນສະທ້ອນຂອງການກະທຳຜິດມີລັກສະນະແກ່ຍາວອອກໄປ.

ຕາມທີ່ໄດ້ອະທິບາຍມາໃນຂ້າງເທິງນັ້ນວ່າການກະທຳຜິດທີ່ຜົນສະທ້ອນປະກົດຂຶ້ນຊ້າ, ວັນສິ້ນສຸດ ຫຼື ວັນຜົນຂອງການກະທຳຜິດປະກົດຂຶ້ນນັ້ນໃຫ້ຖືວ່າຍັງເປັນວັນກະທຳຜິດຢູ່. ສະນັ້ນ, ການນັບອາຍຸຄວາມໃນການຮ້ອງຟ້ອງທາງອາຍາຕໍ່ກັບການກະທຳຜິດຂອງ A ຈຶ່ງໃຫ້ນັບຕັ້ງແຕ່ວັນທີ 3 ພະຈິກ 2020 ເປັນຕົ້ນໄປ ຊຶ່ງເປັນວັນທີ່ B ໄດ້ເສຍຊີວິດ ຫຼື ວັນທີ່ສິ້ນສຸດການກະທຳຜິດກໍຖືວ່າເປັນວັນກະທຳຜິດນັ້ນເອງ.

3.2. ການນັບອາຍຸຄວາມໃນການຮ້ອງຟ້ອງທາງອາຍາໃນກໍລະນີມີການກະທຳຜິດເທື່ອໃໝ່

ການນັບອາຍຸຄວາມໃນການຮ້ອງຟ້ອງໃນກໍລະນີທີ່ໄດ້ມີການກະທຳຜິດເທື່ອໃໝ່ພາຍໃນກຳນົດເວລາອາຍຸຄວາມຂອງການກະທຳຜິດເທື່ອກ່ອນນັ້ນ, ອາຍຸຄວາມໃນການຮ້ອງຟ້ອງດັ່ງກ່າວໃຫ້ນັບແຕ່ວັນທີ່ໄດ້ກະທຳຜິດເທື່ອໃໝ່ເປັນຕົ້ນໄປ. ການກະທຳຜິດເທື່ອໃໝ່ແມ່ນການກະທຳຂອງບຸກຄົນໃດໜຶ່ງທີ່ໄດ້ກະທຳຜິດມາກ່ອນແລ້ວ ແລະ ໄດ້ກະທຳຜິດອີກເທື່ອໃໝ່ ຊຶ່ງການກະທຳຜິດດັ່ງກ່າວອາດຈະເປັນການກະທຳຜິດ

ໃນສະຖານດຽວກັນ, ຄ້າຍຄືກັນ ຫຼື ສະຖານແຕກຕ່າງກັນກັບການກະທຳ ຜິດທີ່ເຄີຍກະທຳມາກ່ອນແລ້ວ.

ການນັບອາຍຸຄວາມໃນການຮ້ອງຟ້ອງທາງອາຍາຂອງການກະທຳ ຜິດເທື່ອໃໝ່ ເຖິງວ່າກົດໝາຍອາຍາໃຫ້ນັບແຕ່ວັນທີ່ໄດ້ກະທຳຜິດເທື່ອ ໃໝ່ເປັນຕົ້ນໄປພາຍໃນກຳນົດເວລາອາຍຸຄວາມຂອງການກະທຳຜິດເທື່ອ ກ່ອນກໍ່ຕາມ ແຕ່ເຫັນວ່າການກຳນົດດັ່ງກ່າວຍັງບໍ່ທັນຊັດເຊນ ແລະ ເກີດຂໍ້ ສົງໄສກ່ຽວກັບສະຖານຂອງການກະທຳຜິດ. ສະນັ້ນ, ເຮົາຕ້ອງໄດ້ໄຈ້ແຍກ ສະຖານຂອງການກະທຳຜິດວ່າເປັນການກະທຳຜິດສະຖານດຽວກັນ, ຄ້າຍຄືກັນ ຫຼື ແຕກຕ່າງກັນ. ການນັບອາຍຸຄວາມຂອງການກະທຳຜິດ ເທື່ອໃໝ່ທີ່ເປັນການກະທຳຜິດສະຖານດຽວກັນກັບການກະທຳຜິດເທື່ອ ກ່ອນໃຫ້ນັບແຕ່ວັນໄດ້ກະທຳຜິດເທື່ອໃໝ່ເປັນຕົ້ນໄປ. ຖ້າການກະທຳຜິດ ເທື່ອໃໝ່ຫາກເປັນການກະທຳຜິດໃນສະຖານແຕກຕ່າງກັນກັບສະຖານ ການກະທຳຜິດເທື່ອກ່ອນນັ້ນແມ່ນໃຫ້ແຍກນັບລະຫວ່າງການກະທຳຜິດ ເທື່ອໃໝ່ກັບການກະທຳຜິດເທື່ອກ່ອນໂດຍການນັບອາຍຸຄວາມຂອງການ ກະທຳຜິດເທື່ອໃໝ່ແມ່ນເລີ່ມນັບຕັ້ງແຕ່ວັນກະທຳຜິດເທື່ອໃໝ່ເປັນຕົ້ນໄປ ສ່ວນການກະທຳຜິດເທື່ອກ່ອນກໍ່ໃຫ້ນັບແຕ່ວັນໄດ້ກະທຳຜິດເປັນຕົ້ນໄປ ດັ່ງກໍລະນີສຶກສາຕົວຢ່າງດັ່ງລຸ່ມນີ້:

ກໍລະນີສຶກສາຕົວຢ່າງທີ 3.

1). A ໄດ້ລັກກະເປົ່າເງິນຂອງ B ໃນວັນທີ 1 ກໍລະກົດ 2019 ຊຶ່ງອາຍຸຄວາມໃນການຮ້ອງຟ້ອງຈະສິ້ນສຸດໃນວັນທີ 1 ກໍລະກົດ 2026;

2). ຕໍ່ມາ A ໄດ້ລັກເອົາກະເປົ່າເງິນຂອງ C ໃນວັນທີ 1 ມິຖຸນາ 2026 ຊຶ່ງອາຍຸຄວາມໃນການຮ້ອງຟ້ອງຈະສິ້ນສຸດໃນວັນທີ 1 ມິຖຸນາ 2033;

3). ມາຮອດໃນວັນທີ 1 ມັງກອນ 2033 ຈະສາມາດສັ່ງຟ້ອງ A ໃນຂໍ້ຫາລັກຊັບຄືລັກກະເປົາເງິນຂອງ B ໄດ້ ຫຼື ບໍ່.

ການທີ່ A ໄດ້ລັກກະເປົາເງິນຂອງ B ໃນວັນທີ 1 ກໍລະກົດ 2019. ຕໍ່ມາໃນວັນທີ 1 ມີຖຸນາ 2026, A ໄດ້ລັກກະເປົາເງິນຂອງ C ອີກ ນີ້ເຫັນວ່າການກະທຳຂອງ A ເປັນກະທຳຜິດສະຖານດຽວກັນ ແລະ ເປັນການກະທຳຜິດຕາມປະມວນກົດໝາຍອາຍາມາດຕາ 231. ສະນັ້ນ, ການນັບອາຍຸຄວາມໃນການຮ້ອງຟ້ອງທາງອາຍາຂອງ A ທີ່ກະທາຕໍ່ B ຕາມທຳມະດາໃຫ້ນັບແຕ່ວັນທີ່ໄດ້ກະທຳຜິດເປັນຕົ້ນໄປຄື: ໃຫ້ນັບຕັ້ງແຕ່ວັນທີ 1 ກໍລະກົດ 2019, ຕໍ່ມາໃນວັນທີ 1 ມີຖຸນາ 2026, A ໄດ້ລັກກະເປົາເງິນຂອງ C ອີກນີ້, ການນັບອາຍຸຄວາມໃນການຮ້ອງຟ້ອງທາງອາຍາຂອງ A ທີ່ກະທາຕໍ່ C ໃຫ້ນັບແຕ່ວັນທີ່ໄດ້ກະທຳຜິດຄື: ໃຫ້ນັບຕັ້ງແຕ່ວັນທີ 1 ມີຖຸນາ 2026. ໃນເມື່ອ A ຫາກໄດ້ມີການກະທຳຜິດເທື່ອໃໝ່ກໍ່ຄືການລັກຊັບຂອງ C ນັ້ນ ຊຶ່ງເປັນການກະຜິດທີ່ຢູ່ໃນກຳນົດເວລາຂອງອາຍຸຄວາມຂອງການກະທຳຜິດຕໍ່ B ແລະ ເປັນການກະທຳຜິດໃນສະຖານດຽວກັນຈຶ່ງສອດຄ່ອງຕາມປະມວນກົດໝາຍອາຍາມາດຕາ 31 ແລະ ເປັນການຍືດອາຍຸຄວາມໃນການຮ້ອງຟ້ອງທາງອາຍາຂອງ A ຍາວອອກໄປອີກ.

ສະນັ້ນ, ໃນວັນທີ 1 ມັງກອນ 2033 ຍັງສາມາດສັ່ງຟ້ອງ A ໃນຂໍ້ຫາລັກຊັບຂອງ B ໄດ້ ຍ້ອນວ່າອາຍຸຄວາມການຮ້ອງຟ້ອງຂອງ A ທີ່ກະທຳຕໍ່ກັບ B ແມ່ນຍັງບໍ່ທັນໝົດເທື່ອ ຊຶ່ງ A ໄດ້ໄປກະທຳຜິດເທື່ອໃໝ່ອີກຄື ໄດ້ໄປລັກເອົາກະເປົາເງິນຂອງ C, ວັນທີ 1 ມັງກອນ 2033 ຍັງສາມາດສັ່ງຟ້ອງ A ໃນຂໍ້ຫາລັກຊັບຂອງ B ໄດ້ ຊຶ່ງຍັງຢູ່ໃນໄລຍະເວລາອາຍຸຄວາມຂອງການກະທຳຜິດເທື່ອໃໝ່ຢູ່.

ກໍລະນີສຶກສາຕົວอย่างທີ 4.

1). A ໄດ້ຄາດຕະກຳ B ໃນວັນທີ 1 ກໍລະກົດ 2019 ຊຶ່ງອາຍຸຄວາມໃນການຮ້ອງຟ້ອງຈະສິ້ນສຸດໃນວັນທີ 1 ກໍລະກົດ 2034;

2). ຕໍ່ມາ A ໄດ້ເຮັດໃຫ້ C ໄດ້ຮັບບາດເຈັບດ້ວຍຄວາມບໍ່ລະມັດລະວັງ ໃນວັນທີ 1 ພຶດສະພາ 2034 ຊຶ່ງອາຍຸຄວາມໃນການຮ້ອງຟ້ອງຈະສິ້ນສຸດໃນວັນທີ 1 ພຶດສະພາ 2035;

3). ວັນທີ 1 ມັງກອນ 2035 ຈະສາມາດສັ່ງຟ້ອງ A ໃນຂໍ້ຫາຄາດຕະກຳໄດ້ ຫຼື ບໍ່.

ການທີ່ A ໄດ້ຄາດຕະກຳ B ໃນວັນທີ 1 ກໍລະກົດ 2019 ຊຶ່ງອາຍຸຄວາມໃນການຮ້ອງຟ້ອງທາງອາຍາມີກຳນົດ 15 ປີຄືຈະໄປສິ້ນສຸດໃນວັນທີ 1 ກໍລະກົດ 2034, ຕໍ່ມາ A ໄດ້ເຮັດໃຫ້ C ໄດ້ຮັບບາດເຈັບດ້ວຍຄວາມບໍ່ລະມັດລະວັງ ໃນວັນທີ 1 ພຶດສະພາ 2034 ຊຶ່ງອາຍຸຄວາມມີກຳນົດ 1 ປີຄືຈະໄປສິ້ນສຸດໃນວັນທີ 1 ພຶດສະພາ 2035.

ມາຮອດວັນທີ 1 ມັງກອນ 2035 ບໍ່ສາມາດສັ່ງຟ້ອງ A ໃນຂໍ້ຫາຄາດຕະກຳ B ໄດ້ຍ້ອນວ່າອາຍຸຄວາມການຮ້ອງຟ້ອງຂອງ A ທີ່ກະທຳຕໍ່ກັບ B ແມ່ນໝົດລົງແລ້ວໃນວັນທີ 1 ກໍລະກົດ 2034 ແລ້ວ ເຖິງວ່າ A ໄດ້ກະທຳຜິດໃໝ່ຄືການເຮັດໃຫ້ C ໄດ້ຮັບບາດເຈັບດ້ວຍຄວາມບໍ່ລະມັດລະວັງກໍຕາມ ຊຶ່ງເປັນການກະທຳຜິດໃນສະຖານທີ່ແຕກຕ່າງກັບການກະທຳຜິດທີ່ຜ່ານມາ. ສະນັ້ນ, ການນັບອາຍຸຄວາມໃນການຮ້ອງຟ້ອງທາງອາຍາຄວນແຍກນັບຕາມແຕ່ລະສະຖານຂອງການກະທຳຜິດຄື: A ຄາດຕະກຳ B ເປັນການກະທຳຜິດໃນສະຖານຄະຮຸໂທດ, ສ່ວນ A ເຮັດໃຫ້ C ໄດ້ຮັບບາດເຈັບດ້ວຍຄວາມບໍ່ລະມັດລະວັງເປັນການກະທຳຜິດ ໃນສະຖານລະຫຸໂທດ ຈຶ່ງເຫັນວ່າເປັນການກະທຳຜິດໃນສະຖານທີ່ແຕກຕ່າງກັນ ແລະ ມາຮອດວັນທີ 1 ມັງກອນ 2035 ອາຍຸຄວາມໃນການ

ຮ້ອງຟ້ອງທາງອາຍາຂອງການກະທຳຜິດໃນເທື່ອກ່ອນນັ້ນໄດ້ສິ້ນສຸດລົງແລ້ວ, ເຖິງ A ຈະມີການກະທາຜິດໃໝ່ກໍຕາມຈຶ່ງບໍ່ສາມາດຮ້ອງຟ້ອງທາງອາຍາອີກຕໍ່ໄປໄດ້.

ກໍລະນີສຶກສາຕົວຢ່າງທີ 5.

1). A ໄດ້ເຮັດໃຫ້ C ໄດ້ຮັບບາດເຈັບດ້ວຍຄວາມບໍ່ລະມັດລະວັງໃນວັນທີ 1 ກໍລະກົດ 2019 ຊຶ່ງອາຍຸຄວາມໃນການຮ້ອງຟ້ອງຈະສິ້ນສຸດໃນວັນທີ 1 ກໍລະກົດ 2020;

2). ຕໍ່ມາ A ໄດ້ຄາດຕະກຳ B ໃນວັນທີ 1 ພຶດສະພາ 2020 ຊຶ່ງອາຍຸຄວາມໃນການຮ້ອງຟ້ອງຈະສິ້ນສຸດໃນວັນທີ 1 ພຶດສະພາ 2035;

3). ວັນທີ 1 ມັງກອນ 2035 ຈະສາມາດສັ່ງຟ້ອງ A ໃນຂໍ້ຫາເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບດ້ວຍຄວາມບໍ່ລະມັດລະວັງໄດ້ ຫຼື ບໍ່.

ການທີ່ A ເຮັດໃຫ້ C ໄດ້ຮັບບາດເຈັບດ້ວຍຄວາມບໍ່ລະມັດລະວັງໃນວັນທີ 1 ກໍລະກົດ 2019 ນັ້ນອາຍຸຄວາມໃນການຮ້ອງຟ້ອງທາງອາຍາມີກຳນົດ 1 ປີຄືຈະໄປສິ້ນສຸດໃນວັນທີ 1 ກໍລະກົດ 2020, ຕໍ່ມາ A ໄດ້ຄາດຕະກຳ B ໃນວັນທີ 1 ພຶດສະພາ 2020 ອີກ ຊຶ່ງອາຍຸຄວາມໃນການຮ້ອງຟ້ອງທາງອາຍາມີກຳນົດ 15 ປີຄືຈະໄປສິ້ນສຸດໃນວັນທີ 1 ພຶດສະພາ 2035.

ວັນທີ 1 ມັງກອນ 2035 ບໍ່ສາມາດຮ້ອງຟ້ອງ A ໃນຂໍ້ຫາເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບດ້ວຍຄວາມບໍ່ລະມັດລະວັງໄດ້ເນື່ອງຈາກວ່າການທີ່ A ເຮັດໃຫ້ C ໄດ້ຮັບບາດເຈັບດ້ວຍຄວາມບໍ່ລະມັດລະວັງໃນວັນທີ 1 ກໍລະກົດ 2019 ແລະ ຕໍ່ມາ A ໄດ້ຄາດຕະກາ B ອີກໃນວັນທີ 1 ພຶດສະພາ 2020 ຊຶ່ງເປັນການກະທາຜິດເທື່ອໃໝ່ທີ່ເກີດຂຶ້ນຢູ່ໃນໄລຍະຂອງອາຍຸຄວາມຂອງການກະທຳຜິດໃນເທື່ອກ່ອນກໍ່ຕາມ ແຕ່ເປັນການກະທຳຜິດໃນສະຖານທີ່ແຕກຕ່າງກັນ. ດັ່ງນັ້ນ, ການນັບອາຍຸຄວາມ

ໃນການຮ້ອງຟ້ອງທາງອາຍາຄວນນັບແຍກອອກຈາກກັນ ແລະ ມາຮອດ ວັນທີ 1 ມັງກອນ 2035 ເຫັນວ່າກາຍການິດເວລາທີ່ຈະຮ້ອງຟ້ອງທີ່ A ກະທຳຕໍ່ C ແລ້ວຄືໝົດອາຍຸຄວາມໃນການຮ້ອງຟ້ອງທາງອາຍາແລ້ວ, ເຖິງວ່າ A ຈະມີການກະທາຜິດເທື່ອໃໝ່ກໍຕາມ. ສະນັ້ນ, ຈຶ່ງບໍ່ສາມາດ ຮ້ອງຟ້ອງທາງອາຍາຕໍ່ C ໄດ້.

ຈາກທັງໝົດທີ່ກ່າວມານັ້ນຈະເຫັນວ່າການກະທຳຜິດເທື່ອໃໝ່ ຫາກເປັນການກະທຳຜິດໃນສະຖານແຕກຕ່າງກັບສະຖານການກະທຳຜິດ ເທື່ອກ່ອນນັ້ນໃຫ້ແຍກນັບລະຫວ່າງການກະທຳຜິດເທື່ອໃໝ່ກັບການ ກະທຳຜິດເທື່ອກ່ອນໂດຍການນັບອາຍຸຄວາມຂອງການກະທຳຜິດເທື່ອໃໝ່ ແມ່ນເລີ່ມນັບແຕ່ວັນກະທຳຜິດໃໝ່ເປັນຕົ້ນໄປສ່ວນການກະທຳຜິດເທື່ອ ກ່ອນກໍໃຫ້ນັບແຕ່ວັນໄດ້ກະທຳຜິດເປັນຕົ້ນໄປເຊັ່ນດຽວກັນ.

3.3. ການນັບອາຍຸຄວາມໃນການຮ້ອງຟ້ອງທາງອາຍາກໍລະນີຫຼົບ ຫຼີກຈາກການດຳເນີນຄະດີ

ການນັບອາຍຸຄວາມໃນການຮ້ອງຟ້ອງທາງອາຍາໃນກໍລະນີທີ່ ຜູ້ກະທຳຜິດໄດ້ຫຼົບຫຼີກຈາກການດຳເນີນຄະດີນັ້ນ ອາຍຸຄວາມໃນການຮ້ອງ ຟ້ອງທາງອາຍາໃຫ້ນັບແຕ່ວັນທີ່ຜູ້ກ່ຽວໄດ້ເຂົ້າສະເໜີຕົວ ຫຼື ຖືກຈັບຕົວ ເປັນຕົ້ນໄປ. ການຫຼົບຫຼີກຈາກການດຳເນີນຄະດີໃຫ້ຖືວ່າແມ່ນຫຼົບຫຼີກ ຈາກການກະທຳຜິດທາງອາຍາຂອງບຸກຄົນໃດໜຶ່ງທີ່ໄດ້ກະທຳຜິດທີ່ເປັນ ອັນຕະລາຍ ແລະ ກໍ່ຄວາມເສຍຫາຍໃຫ້ແກ່ບຸກຄົນອື່ນ ຫຼື ສັງຄົມພາຍຫຼັງ ທີ່ເຈົ້າໜ້າທີ່ອອກຄຳສັ່ງເປີດການສືບສວນ-ສອບສວນແລ້ວຜູ້ກ່ຽວຈຶ່ງໄດ້ ລີ້ຊ່ອນ ຫຼື ໄດ້ຫຼົບຫຼີກຈາກການດຳນິນຄະດີ.

ການນັບອາຍຸຄວາມ ໃນການຮ້ອງຟ້ອງທາງອາຍາກໍລະນີຫຼົບຫຼີກ ຈາກການດຳເນີນຄະດີນີ້ໃຫ້ນັບແຕ່ວັນທີ່ຜູ້ກະທຳຜິດໄດ້ເຂົ້າສະເໜີຕົວ ຫຼື

ຖືກຈັບຕົວພາຍໃນກຳນົດເວລາຂອງອາຍຸຄວາມໃນການຮ້ອງຟ້ອງທາງ ອາຍາໃນສະຖານການກະທຳຜິດລະຫຸໂທດ ແລະ ໂທສານຸໂທດ ໝາຍຄວາມວ່າຖ້າການກຳນົດອາຍຸຄວາມໃນການຮ້ອງຟ້ອງທາງອາຍາ ຕາມທີ່ກົດໝາຍກຳນົດໄວ້ໃນສະຖານຂອງການກະທຳຜິດດັ່ງກ່າວແລ້ວ ໃຫ້ຖືວ່າອາຍຸຄວາມໃນການຮ້ອງຟ້ອງທາງອາຍາໄດ້ສິ້ນສຸດ, ສ່ວນການ ກະທຳຜິດໃນສະຖານຄະຣຸໂທດນັ້ນ, ອາຍຸຄວາມໃນການຮ້ອງຟ້ອງ ທາງອາຍາເຖິງຈະໝົດອາຍຸຄວາມຕາມທີ່ກົດໝາຍກຳນົດໄວ້ກໍຕາມຖ້າໄດ້ ຫຼົບຫຼີກຈາກການດຳເນີນຄະດີໃຫ້ນັບແຕ່ວັນທີ່ຜູ້ກະທຳຜິດໄດ້ເຂົ້າມາສະ ເໜີຕົວ ຫຼື ຖືກຈັບຕົວເປັນຕົ້ນໄປ ຫຼື ຈະເວົ້າໃນຄວາມໝາຍໜຶ່ງກໍໝາຍ ຄວາມວ່າອາຍຸຄວາມໃນການຮ້ອງຟ້ອງທາງອາຍາສະຖານຄະຣຸໂທດນັ້ນ ບໍ່ມີເວລາສິ້ນສຸດ.

4. ການຢຸດນັບອາຍຸຄວາມການຮ້ອງຟ້ອງທາງອາຍາ

ການຢຸດນັບອາຍຸຄວາມໃນການຮ້ອງຟ້ອງທາງອາຍາແມ່ນການຢຸດ ເຊົາບໍ່ສືບຕໍ່ນັບອາຍຸຄວາມໃນການຮ້ອງຟ້ອງທາງອາຍາຂອງຜູ້ກະທຳຜິດອີກ ຊຶ່ງການຢຸດນັບອາຍຸຄວາມໃນການຮ້ອງຟ້ອງທາງອາຍາໃຫ້ຢຸດແຕ່ວັນມີຄຳ ຖະແຫຼງ ແລະ ການສັ່ງຟ້ອງຜູ້ຖືກຫາຂຶ້ນສານຂອງອົງການໄອຍະການ ເປັນຕົ້ນໄປ.

ຈາກທັງໝົດທີ່ກ່າວມານັ້ນຈະເຫັນວ່າອາຍຸຄວາມຮ້ອງຟ້ອງທາງ ອາຍາແມ່ນການກຳນົດເວລາໃດໜຶ່ງເພື່ອໃຫ້ບຸກຄົນ ຫຼື ການຈັດຕັ້ງທີ່ ກ່ຽວຂ້ອງຕ້ອງສະແດງເຈດຈຳນົງຂອງຕົນໃນການໃຊ້ສິດຢ່າງຖືກຕ້ອງ ເພື່ອນຳເອົາຜູ້ກະທຳຜິດມາລົງໂທດຕາມກົດໝາຍ. ສະນັ້ນ, ການນັບອາຍຸ ຄວາມໃນການຮ້ອງຟ້ອງທາງອາຍາຈຶ່ງນັບແຕ່ວັນທີ່ໄດ້ລົງມືກະທຳຜິດ ເປັນຕົ້ນໄປ. ໃນກໍລະນີຂອງການກະທຳຜິດທີ່ສົ່ງຜົນສະທ້ອນໃນທັນທີ

ທັນໃດ, ອາຍຸຄວາມໃນການຮ້ອງຟ້ອງທາງອາຍາໃຫ້ນັບແຕ່ວັນສິ້ນສຸດການກະທຳຜິດເປັນຕົ້ນໄປ. ສ່ວນໃນກໍລະນີຂອງການກະທຳຜິດທີ່ມີລັກສະນະແກ່ຍາວຕໍ່ເນື່ອງ ຫຼື ການກະທຳຜິດທີ່ສົ່ງຜົນສະທ້ອນຊັກຊ້າໃຫ້ນັບແຕ່ວັນທີ່ຜົນສະທ້ອນຂອງການກະທຳຜິດນັ້ນໄດ້ເກີດຂຶ້ນເປັນຕົ້ນໄປ.

ກໍລະນີມີການກະທຳຜິດຄັ້ງໃໝ່ທີ່ເກີດຂຶ້ນໃນຊ່ວງໄລຍະເວລາຂອງອາຍຸຄວາມຂອງການກະທຳຜິດໃນເທື່ອກ່ອນນັ້ນແມ່ນກໍລະນີຂອງການກະທຳຜິດໃນສະຖານດຽວກັນ ຫຼື ຄ້າຍຄືກັນເທົ່ານັ້ນຈຶ່ງໃຫ້ນັບອາຍຸຄວາມຂອງການກະທຳຜິດໃນຄັ້ງກ່ອນໂດຍເລີ່ມແຕ່ວັນທີ່ມີການກະທຳຜິດຄັ້ງໃໝ່ເປັນຕົ້ນໄປ, ແຕ່ຖ້າເປັນການກະທຳຜິດໃນສະຖານທີ່ແຕກຕ່າງກັນ, ການນັບອາຍຸຄວາມໃນການຮ້ອງຟ້ອງໃຫ້ແຍກນັບລະຫວ່າງການກະທຳຜິດ ໃນຄັ້ງກ່ອນກັບການກະທຳຜິດໃໝ່.

ໃນກໍລະນີທີ່ຜູ້ກະທຳຜິດໄດ້ເອົາຕົວຫຼົບຫຼີກອອກຈາກການດຳເນີນຄະດີ ໝາຍຄວາມວ່າຜູ້ກ່ຽວຫຼົບຫຼີກຈາກການກະທຳຜິດ ຊຶ່ງເຮັດໃຫ້ການດຳເນີນຄະດີບໍ່ສາມາດປະຕິບັດໄດ້ຕາມຂັ້ນຕອນຂອງກົດໝາຍນັ້ນ, ການນັບອາຍຸຄວາມຮ້ອງຟ້ອງທາງອາຍາໃຫ້ເລີ່ມນັບໃໝ່ຄືນັບແຕ່ມື້ຜູ້ກະທຳຜິດຖືກຈັບຕົວ ຫຼື ມື້ເຂົ້າມອບຕົວເປັນຕົ້ນໄປນີ້ມີ 3 ຄວາມຄິດເຫັນຫຼັກໆ ຄືດັ່ງລຸ່ມນີ້:

ຄວາມຄິດເຫັນທີ 1 ມີຄຳເຫັນວ່າໃນກໍລະນີທີ່ຜູ້ກະທຳຜິດໄດ້ເອົາຕົວຫຼົບຫຼີກຈາກການດຳເນີນຄະດີອາຍາ, ອາຍຸຄວາມໃນການຮ້ອງຟ້ອງໃຫ້ນັບແຕ່ມື້ຜູ້ກະທຳຜິດເຂົ້າມາສະເໜີຕົວ ຫຼື ນັບແຕ່ມື້ຖືກຈັບຕົວເປັນຕົ້ນໄປນັ້ນໃຫ້ລວມທັງ 3 ສະຖານຂອງການກະທຳຜິດເຊັ່ນ: ສະຖານລະຫຸໂທດ, ສະຖານໂທສານຸໂທດ ແລະ ສະຖານຄະຮຸໂທດ ໝາຍຄວາມວ່າໃຫ້ລວມທຸກສະຖານຂອງການກະທຳຜິດທັງໝົດເລີຍ ແລະ ຄຳວ່າຫຼົບຫຼີກຈາກການດຳເນີນຄະດີອາຍານັ້ນໝາຍເຖິງຫຼົບໜີອອກຈາກບ່ອນຢູ່ປະຈຳຂອງ

ຜູ້ກ່ຽວພາຍຫຼັງທີ່ໄດ້ກະທຳຜິດແລ້ວບໍ່ວ່າຈະເປັນການຫຼົບໜີ ຫຼື ໄປລີ້ຊ່ອນຢູ່ພາຍໃນປະເທດ ຫຼື ຫຼົບໜີໄປຕ່າງປະເທດກໍຕາມ.

ຄວາມຄິດເຫັນທີ 2 ມີຄຳເຫັນວ່າໃນກໍລະນີທີ່ຜູ້ກະທຳຜິດໄດ້ເອົາຕົວຫຼົບຫຼີກຈາກການດຳເນີນຄະດີອາຍາ, ອາຍຸຄວາມໃນການຮ້ອງຟ້ອງໃຫ້ນັບແຕ່ມື້ຜູ້ກະທຳຜິດເຂົ້າມາສະເໜີຕົວ ຫຼື ນັບແຕ່ມື້ຖືກຈັບຕົວເປັນຕົ້ນໄປນັ້ນມີແຕ່ສະເພາະການກະທຳຜິດໃນສະຖານຄະຣຸ�โทດສະຖານດຽວເທົ່ານັ້ນ ໝາຍຄວາມວ່າມີແຕ່ສະເພາະການກະທຳຜິດໃນສະຖານໜັກເທົ່ານັ້ນ ແລະ ເຫັນວ່າໃນປັດຈຸບັນໃນທາງປະຕິບັດຕົວຈິງກໍໄດ້ປະຕິບັດກັນມາຄືແນວນັ້ນ, ສ່ວນຄຳວ່າຫຼົບຫຼີກຈາກການດຳເນີນຄະດີອາຍາກໍມີຄວາມເຫັນຄືກັນກັບຄວາມຄິດເຫັນທີ 1 ໝາຍຄວາມວ່າແມ່ນການຫຼົບໜີອອກຈາກບ່ອນຢູ່ປະຈຳຂອງຜູ້ກ່ຽວພາຍຫຼັງທີ່ໄດ້ກະທຳຜິດແລ້ວບໍ່ວ່າຈະເປັນການຫຼົບໜີ ຫຼື ໄປລີ້ຊ່ອນຢູ່ພາຍໃນປະເທດ ຫຼື ຫຼົບໜີໄປຕ່າງປະເທດກໍຕາມ.

ຄວາມຄິດເຫັນທີ 3 ມີຄວາມຄິດເຫັນວ່າໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ເອົາຕົວຫຼົບຫຼີກຈາກການດຳເນີນຄະດີອາຍາ, ອາຍຸຄວາມໃນການຮ້ອງຟ້ອງໃຫ້ນັບແຕ່ມື້ຜູ້ກະທຳຜິດເຂົ້າມາສະເໜີຕົວ ຫຼື ນັບແຕ່ມື້ຖືກຈັບຕົວເປັນຕົ້ນໄປນັ້ນໃຫ້ລວມທັງ 3 ສະຖານຂອງການກະທຳຜິດຄື: ສະຖານລະຫຸ�โทດ, ສະຖານโทສານุโทດ ແລະ ສະຖານຄະຣຸ�โทດຄືກັນກັບຄວາມຄິດເຫັນທີ 1 ແຕ່ຄຳວ່າຫຼົບຫຼີກຈາກການດຳເນີນຄະດີອາຍານັ້ນໃຫ້ໝາຍເຖິງສະເພາະການເອົາຕົວຫຼົບໜີໄປຕ່າງປະເທດ ຫຼື ບ່ອນທີ່ອຳນາດການສືບສວນ-ສອບສວນຂອງເຈົ້າໜ້າທີ່ບໍ່ສາມາດເຂົ້າເຖິງໄດ້ເທົ່ານັ້ນ, ສ່ວນການເອົາຕົວຫຼົບໜີ ຫຼື ໄປລີ້ຊ່ອນຢູ່ພາຍໃນປະເທດຈະບໍ່ຖືວ່າແມ່ນການຫຼົບຫຼີກຈາກການດຳເນີນຄະດີອາຍາ, ເນື່ອງຈາກວ່າຖ້າກະທຳຜິດແລ້ວແຕ່ຜູ້ກ່ຽວຍັງດຳລົງຊີວິດຢູ່ບ່ອນໃດບ່ອນໜຶ່ງພາຍໃນປະເທດກໍຖືວ່າ

ຍັງຢູ່ໃນອຳນາດການສືບສວນ-ສອບສວນຂອງເຈົ້າໜ້າທີ່ຢູ່. ຖ້າການກຳນົດອາຍຸຄວາມໃນການຮ້ອງຟ້ອງກໍລະນີດັ່ງກ່າວຕາມທີ່ກົດໝາຍອາຍາກຳນົດໄວ້ກໍຈະບໍ່ສາມາດເລີ່ມນັບໃໝ່ໄດ້ ຊຶ່ງຄວາມຄິດເຫັນດັ່ງກ່າວນີ້ມີຄວາມຄ້າຍຄືກັນກັບການກຳນົດອາຍຸຄວາມໃນການຮ້ອງຟ້ອງທາງອາຍາຂອງບາງປະເທດ.

ເຖິງຢ່າງໃດກໍຕາມ ອາຍຸຄວາມໃນການຮ້ອງຟ້ອງທາງອາຍານີ້ເຫັນວ່າກົດໝາຍຍັງກຳນົດບໍ່ຊັດເຈນ. ດັ່ງນັ້ນ, ກຸ່ມຄົ້ນຄວ້າປະມວນກົດໝາຍອາຍາຈຶ່ງສະເໜີໃຫ້ອີງການທີ່ກ່ຽວຂ້ອງໃນການປັບປຸງແກ້ໄຂກົດໝາຍໄດ້ເປັນບ່ອນອີງໃນການປັບປຸງແກ້ໄຂປະມວນກົດໝາຍອາຍາ ໃນອະນາຄົດ ວ່າປະມວນກົດໝາຍອາຍາຄວນກຳນົດອາຍຸຄວາມໃນການຮ້ອງຟ້ອງທາງອາຍາໃຫ້ມັນຊັດເຈນເລີຍ.

ຈັດພິມເພື່ອແຈກຢາຍ ຫ້າມ ຊື້ - ຂາຍ

ສະໜັບສະໜູນການພິມໂດຍ

ໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳ

<u>ພິມຄັ້ງທີ I:</u> ຈຳນວນ 7.000 ຫົວ, ທີ່ ໂຮງພິມ ເທບປັນຍາການພິມ.